# ທິດສະດີກົດໝາຍອາຍາ

## (ພາກສະເພາະ)

# The Theory of Penal Code

## (Specific Part)



2026

# ຄະນະຊີ້ນຳໂຄງການ

| | |
|---|---|
| 1. ທ່ານ ຄຳເຜີດ ສີນວໍລະຈິດ | ຮອງຫົວໜ້າອົງການໄອຍະການ<br>ປະຊາຊົນສູງສຸດ |
| 2. ທ່ານ ເກດສະໜາ ພົມມະຈັນ | ຮອງລັດຖະມົນຕີ<br>ກະຊວງຍຸຕິທຳ |
| 3. ທ່ານ ບຸນຂວາງ ທະວິສັກ | ຮອງປະທານສານ<br>ປະຊາຊົນສູງສຸດ |
| 4. ທ່ານ ຮສ.ປອ ອຸ່ນຫຼ້າ ສີວັນເພັງ | ຮອງຜູ້ອຳນວຍການໃຫຍ່<br>ມະຫາວິທະຍາໄລແຫ່ງຊາດ |

# ຄະນະບໍລິຫານໂຄງການ

| | |
|---|---|
| 1. ທ່ານ ບົວລີ ເພັດມີໄຊ | ຫົວໜ້າກົມຕິດຕາມກວດກາ<br>ຄ້າຍຄຸມຂັງ-ດັດສ້າງ<br>ອົງການໄອຍະການປະຊາຊົນສູງສຸດ |
| 2. ທ່ານ ນ.ລັດຕະນະພອນ ພະພັກດີ | ຮອງຫົວໜ້າກົມ<br>ຮ່ວມມືກັບຕ່າງປະເທດ<br>ອົງການໄອຍະການປະຊາຊົນສູງສຸດ |
| 3. ທ່ານ ນະຣົງລິດ ນໍລະສິງ | ຫົວໜ້າກົມສົ່ງເສີມລະບົບຍຸຕິທຳ<br>ກະຊວງຍຸຕິທຳ |
| 4. ທ່ານ ອານຸສິດ ສຸຂະທຳມະວົງ | ຫົວໜ້າກົມຮ່ວມມືສາກົນ<br>ສານປະຊາຊົນສູງສຸດ |
| 5. ທ່ານ ສັກກຸນາ ຍະພິຈິດ | ຫົວໜ້າຄະນະສານຄອບຄົວ<br>ສານປະຊາຊົນສູງສຸດ |
| 6. ທ່ານ ອຈ.ປອ ສົມເດດ ແກ້ວວົງສັກ | ຫົວໜ້າຄະນະວິຊາ<br>ຄະນະນິຕິສາດ ແລະ ລັດຖະສາດ<br>ມະຫາວິທະຍາໄລແຫ່ງຊາດ |

## ຜູ້ເຂົ້າໃຫ້ຄໍາເຫັນຝ່າຍລາວ

1. ທ່ານ ສຈ. ເກດ ກຽດຕິສັກ ທີ່ປຶກສາກົດໝາຍອາວຸໂສ
2. ທ່ານ ສຈ. ດາວອນ ຫວ່າງວິຈິດ ທີ່ປຶກສາກົດໝາຍອາວຸໂສ

## ຜູ້ເຂົ້າໃຫ້ຄໍາເຫັນຝ່າຍຍີ່ປຸ່ນ

1. Prof. Dr. Makoto IDA Chuo Univercity Law School
2. Mr. Hayato YAOITA JICA Expert
3. Advisory Group Members RTI, Ministry of Justice, Japan
4. ICD professors ICD, Ministry of Justice, Japan

## ຄົ້ນຄວ້າຮຽບຮຽງໂດຍ ກຸ່ມຄົ້ນຄວ້າປະມວນກົດໝາຍອາຍາ

1. ທ່ານ ເກດມະນີ ຈັນໄຕທິບ ອົງການໄອຍະການປະຊາຊົນສູງສຸດ
2. ທ່ານ ນາງ ບຸນມານີ ສະວົງລຽນຄໍາ ອົງການໄອຍະການປະຊາຊົນສູງສຸດ
3. ທ່ານ ສຸລິພອນ ແກ້ວສຸວັນ ອົງການໄອຍະການປະຊາຊົນສູງສຸດ
4. ທ່ານ ສຸລິດ ພັນທະວົງ ອົງການໄອຍະການປະຊາຊົນສູງສຸດ
5. ທ່ານ ໝູພິດ ໄຊສະຫວັນ ອົງການໄອຍະການປະຊາຊົນສູງສຸດ
6. ທ່ານ ບຸນມາ ດວງມາລາສິນ ອົງການໄອຍະການປະຊາຊົນສູງສຸດ
7. ທ່ານ ທອງວັນ ແກ້ວວິໄລ ອົງການໄອຍະການປະຊາຊົນສູງສຸດ
8. ທ່ານ ອັກສອນສິນ ວິໄຊຍະໄລ ສານປະຊາຊົນສູງສຸດ
9. ທ່ານ ນາລີສອນ ສາຍສຸລິຍາ ສານປະຊາຊົນສູງສຸດ
10. ທ່ານ ດາວເຮືອງ ວົງດາວັນ ສານປະຊາຊົນສູງສຸດ
11. ທ່ານ ນາງ ພັນທະມິດ ອິນທະວົງ ສານປະຊາຊົນສູງສຸດ
12. ທ່ານ ເພັດສະໝອນ ອິນທະວົງ ສານປະຊາຊົນສູງສຸດ

| | |
|---|---|
| 13. ທ່ານ ສີວັນ ບຸນທະລາ | ສານປະຊາຊົນສູງສຸດ |
| 14. ທ່ານ. ຢົວເຮີ ເຊ່ຍຢີ | ສານປະຊາຊົນສູງສຸດ |
| 15. ທ່ານ ສຸລິຍັນ ຈັນທະຈັກ | ສະຖາບັນຍຸຕິທຳແຫ່ງຊາດ<br>ກະຊວງຍຸຕິທຳ |
| 16. ທ່ານ ພູວັນ ສິງຫານາດ | ສະຖາບັນຍຸຕິທຳແຫ່ງຊາດ<br>ກະຊວງຍຸຕິທຳ |
| 17. ທ່ານ ກົງວິໄລ ບົວໄຊຍ໌ | ກະຊວງຍຸຕິທຳ |
| 18. ທ່ານ ເພັດນິກອນ ສີສະຍັນຕາ | ກະຊວງຍຸຕິທຳ |
| 19. ທ່ານ ນາງ ບຸດດີ ພູມມີໄຊ | ກະຊວງຍຸຕິທຳ |
| 20. ທ່ານ ນາງ ວັນຄຳ ສຸດາວັນ | ກະຊວງຍຸຕິທຳ |
| 21. ທ່ານ ອຈ.ປທ.ແສງທະວີ ອິນທະວົງ | ຄະນະນິຕິສາດ ແລະ ລັດຖະສາດ<br>ມະຫາວິທະຍາໄລແຫ່ງຊາດ |
| 22. ທ່ານ ອຈ.ປທ.ວິໄລ ລັງກາວົງ | ຄະນະນິຕິສາດ ແລະ ລັດຖະສາດ<br>ມະຫາວິທະຍາໄລແຫ່ງຊາດ |
| 23. ທ່ານ ເຂີງຄຳ ສີຫາລາດ | ຄະນະນິຕິສາດ ແລະ ລັດຖະສາດ<br>ມະຫາວິທະຍາໄລແຫ່ງຊາດ |
| 24. ທ່ານ ຊອ.ປທ.ບຸນລ້ຽງ ວົງສຳພັນ | ຄະນະນິຕິສາດ ແລະ ລັດຖະສາດ<br>ມະຫາວິທະຍາໄລແຫ່ງຊາດ |
| 25. ທ່ານ ຊອ.ປທ.ພັນທະສັກ ມິ່ງນະຄອນ | ຄະນະນິຕິສາດ ແລະ ລັດຖະສາດ<br>ມະຫາວິທະຍາໄລແຫ່ງຊາດ |
| 26. ພັທ ສຸກສະຫວັນ ວິລະວົງ | ກະຊວງປ້ອງກັນຄວາມສະຫງົບ |
| 27. ພັທ ບຸນຄ້ຳ ອິນທະວົງ | ກະຊວງປ້ອງກັນຄວາມສະຫງົບ |
| 28. ທ່ານ ປອ ເພັດ ແສງປັນຍາ | ສະພາທະນາຍຄວາມແຫ່ງ ສປປລາວ |

# ຄຳນຳ

ປຶ້ມທິດສະດີປະມວນກົດໝາຍອາຍາ (ພາກສະເພາະ) ນີ້ຖືກນຳມາຄົ້ນຄວ້າ ແລະ ຂຽນຂຶ້ນບົນພື້ນຖານຜົນງານຕໍ່ຍອດມາຈາກປຶ້ມທິດສະດີກົດໝາຍອາຍາ (ພາກທົ່ວໄປ) ຂອງບັນດານັກວິຊາການທີ່ມາຈາກພາກສ່ວນສານປະຊາຊົນ, ອົງການໄອຍະການປະຊາຊົນ, ກະຊວງຍຸຕິທຳ, ສະຖາບັນຍຸຕິທຳແຫ່ງຊາດ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະພາທະນາຍຄວາມຂອງ ສປປ ລາວ ທີ່ໄດ້ປະກອບເຂົ້າເປັນຄະນະຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ ພາຍໃຕ້ການສະໜັບສະໜູນຂອງໂຄງການໄຈກາປະເທດຍີ່ປຸ່ນ ຊຶ່ງຄະນະຄົ້ນຄວ້າໄດ້ສຶກສາ, ສົນທະນາແລກປ່ຽນຄວາມຄິດເຫັນ ແລະ ໄປຝຶກອົບຮົມຢູ່ປະເທດຍີ່ປຸ່ນ ແລ້ວນຳມາຂຽນເປັນປຶ້ມເຫຼັ້ມນີ້ອອກສູ່ສັງຄົມ ເພື່ອນຳໃຊ້ເຂົ້າໃນການສຶກສາ ແລະ ປະຕິບັດວຽກງານຕົວຈິງ.

ເຖິງວ່າປຶ້ມເຫຼັ້ມນີ້ຈະໄດ້ສຶກສາຄົ້ນຄວ້າ ແລະ ຂຽນລົງເລິກບາງສະຖານຄວາມຜິດໃນພາກສະເພາະຂອງປະມວນກົດໝາຍອາຍາເປັນຕົ້ນແມ່ນມາດຕາ 130, ມາດຕາ 145, ມາດຕາ 199, ມາດຕາ 215, ມາດຕາ 231, ມາດຕາ 233, ມາດຕາ 234, ມາດຕາ 248, ມາດຕາ 262, ມາດຕາ 288, ມາດຕາ 359 ແລະ ມາດຕາ 390 ຂອງປະມວນກົດໝາຍອາຍາກໍຕາມ ແຕ່ຫຼັກການ ແລະ ທິດສະດີຂອງການພິຈາລະນາການກະທຳຜິດທີ່ໄດ້ນຳມາຂຽນໄວ້ໃນປຶ້ມເຫຼັ້ມນີ້ ສາມາດປັບໃຊ້ກັບການກະທຳຜິດສະຖານອື່ນໆ ໃນປະມວນກົດໝາຍອາຍາພາກສະເພາະໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບການກະທຳຜິດທຸກສະຖານ.

ປຶ້ມທິດສະດີປະມວນກົດໝາຍອາຍາ (ພາກສະເພາະ) ປະກອບມີ: ກໍລະນີສຶກສາ, ເຫດຜົນການບັນຍັດມາດຕາ, ວັດຖຸປະສົງການບັນຍັດມາດຕາ, ເງື່ອນໄຂຂອງມາດຕາ, ຄຳຕອບກໍລະນີສຶກສາ ແລະ ຂໍ້ສະເໜີ ເພື່ອເຮັດໃຫ້ນັກກົດໝາຍ, ນັກວິຊາການ, ນັກຄົ້ນຄວ້າ, ນັກສຶກສາ ແລະ ຜູ້ທີ່ສົນໃຈຢາກສຶກສາກົດໝາຍອາຍາໄດ້ຮຽນຮູ້, ກຳແໜ້ນ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບການຕີໝາຍຄວາມໝາຍເນື້ອໃນຂອງແຕ່ລະມາດຕາດັ່ງກ່າວໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ສອດຄ່ອງກັບຫຼັກການຂອງກົດໝາຍ.

ປຶ້ມເຫຼັ້ມນີ້ອາດຈະປາສະຈາກບໍ່ໄດ້ເຖິງຂໍ້ຂາດຕົກບົກພ່ອງ, ເນື້ອໃນອາດຈະບໍ່ຄົບຖ້ວນຮັດກຸມ, ການອະທິບາຍ ແລະ ການໃຫ້ເຫດຜົນອາດຈະຍັງບໍ່ທັນຈະແຈ້ງຊັດເຈນ ແຕ່ກໍຫວັງວ່າຈະໄດ້ຮັບການຕໍານິຕິຊົມທີ່ເປັນປະໂຫຍດເພື່ອນໍາໄປປັບປຸງແກ້ໄຂໃນໂອກາດຂ້າງໜ້າໃຫ້ດີຍິ່ງຂຶ້ນ ແລະ ກໍຫວັງຢ່າງຍິ່ງວ່າປຶ້ມເຫຼັ້ມນີ້ຈະເປັນປະໂຫຍດໃຫ້ແກ່ອາຈານສອນກົດໝາຍ, ຜູ້ປະຕິບັດວຽກງານຕົວຈິງທາງດ້ານກົດໝາຍ ແລະ ຜູ້ທີ່ສົນໃຈສຶກສາຮຽນຮູ້ກົດໝາຍອາຍາບໍ່ຫຼາຍກໍໜ້ອຍ.

ຂໍຂອບໃຈ

**ກະຊວງຍຸຕິທໍາ**
**ຄະນະຊີ້ນໍາໂຄງການ**

ເກດສະໜາ ພົມມະຈັນ

# ສາລະບານ

**ເນື້ອໃນ** **ໜ້າ**


ບົດທີ 1 ບົດທົ່ວໄປ .................................................. 1
ບົດທີ 2 ການຟອກເງິນ .................................................. 8
ບົດທີ 3 ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ................. 18
ບົດທີ 4 ການແຜ່ເຊື້ອພະຍາດທີ່ຮ້າຍແຮງ ..................................... 30
ບົດທີ 5 ການຄ້າມະນຸດ .................................................. 38
ບົດທີ 6 ການລັກຊັບ .................................................. 51
ບົດທີ 7 ການສໍ້ໂກງຊັບ .................................................. 67
ບົດທີ 8 ການຍັກຍອກຊັບ .................................................. 78
ບົດທີ 9 ການຂົ່ມຂືນກະທຳຊຳເລົາ.............................................. 87
ບົດທີ 10 ການທ່ອງທ່ຽວທາງເພດເດັກ.......................................... 95
ບົດທີ 11 ການຜະລິດ, ຂາຍສິນຄ້າປອມ ...................................... 106
ບົດທີ 12 ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບ ຂອງລັດ,
ລວມໝູ່ ຫຼື ບຸກຄົນ .................................................. 117
ບົດທີ 13 ການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ ................................ 126

# ບົດທີ 1
# ບົດທົ່ວໄປ

ໃນໄລຍະຜ່ານມາກໍຄືປັດຈຸບັນ ການຮຽນການສອນວິຊາກົດໝາຍໂດຍສະເພາະແມ່ນວິຊາກົດໝາຍອາຍາຢູ່ຄະນະນິຕິສາດ ແລະ ລັດຖະສາດ, ສະຖາບັນການສຶກສາ ແລະ ການຈັດຝຶກອົບຮົມຕ່າງໆ ທາງດ້ານກົດໝາຍ ລວມທັງການວິນິດໄສການກະທຳຜິດທາງອາຍາຂອງອົງການປະຕິບັດກົດໝາຍ ມັກຈະມີການຮຽນການສອນ ແລະ ວິນິດໄສກັນຢູ່ສະເໝີວ່າ ການກະທຳໃດໜຶ່ງຈະເປັນການກະທຳຜິດທາງອາຍາໄດ້ກໍຕໍ່ເມື່ອການກະທຳນັ້ນຄົບ 4 ອົງປະກອບຂອງການກະທຳຜິດເຊັ່ນ: ອົງປະກອບດ້ານວັດຖຸກຳ, ອົງປະກອບດ້ານພາວະວິໄສ, ອົງປະກອບດ້ານອັດຕະວິໄສ ແລະ ອົງປະກອບດ້ານເຈົ້າກຳ ຊຶ່ງອົງປະກອບເຫຼົ່ານີ້ຖືເປັນຫຼັກການພິຈາລະນາການກະທຳຜິດທາງອາຍາ.

ເຖິງຢ່າງໃດກໍຕາມ ຫຼັກການພິຈາລະນາການກະທຳທີ່ຄົບ 4 ອົງປະກອບດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນບໍ່ແມ່ນຫຼັກການໃຫ້ພິຈາລະນາໄປຕາມລຳດັບຂັ້ນຕອນວ່າຕ້ອງພິຈາລະນາອົງປະກອບດ້ານໃດກ່ອນ ແລະ ອົງປະກອບດ້ານໃດໃນພາຍຫຼັງ (ປະເດັນນີ້ຈະບໍ່ໄດ້ນຳມາສະເໜີໄວ້ໃນປື້ມຫົວນີ້ ແລະ ຖ້າມີໂອກາດໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ ຫຼື JICA J-ROL ຈະນຳສະເໜີໃນພາຍຫຼັງ ເພື່ອເປັນແນວທາງໃນການບັນຍັດກົດໝາຍອາຍາຂອງ ສປປ ລາວ ໃນອະນາຄົດ) ແຕ່ສຳລັບປື້ມຫົວນີ້ຈະອະທິບາຍໄວ້ພຽງແຕ່ຫຼັກການ ແລະ ຂັ້ນຕອນການພິຈາລະນາການກະທຳຜິດ ແລະ ການລົງໂທດທາງອາຍາຕາມຫຼັກເຫດຜົນທາງຕັກກະສາດ 3 ຂັ້ນຂອງກໍລະນີສຶກສາຕາມທີ່ໄດ້ກຳນົດຂຶ້ນເທົ່ານັ້ນ.

ຫຼັກເຫດຜົນທາງຕັກກະສາດ 3 ຂັ້ນເປັນຫຼັກການພິຈາລະນາຊອກຫາຂໍ້ສະຫຼຸບເຫດການດ້ວຍເຫດຜົນ 3 ຂັ້ນຄື: 1. ພິຈາລະນາພື້ນຖານຫຼັກ ຫຼື ພື້ນຖານສຳຄັນ; 2. ພິຈາລະນາພື້ນຖານສຳຮອງ ແລະ 3. ຂໍ້ສະຫຼຸບ ຊຶ່ງຫຼັກເຫດຜົນທາງຕັກກະສາດ 3 ຂັ້ນນີ້ມີຄວາມສຳຄັນທີ່ສຸດຕໍ່ການພິຈາລະນາເຫດການຂອງການກະທຳ

ໃດໜຶ່ງວ່າເປັນການກະທຳຜິດທາງອາຍາ ຫຼື ບໍ່. ການພິຈາລະນາຊອກຫາຂໍ້ສະຫຼຸບນີ້ເອີ້ນວ່າການພິຈາລະນາໄປຕາມຫຼັກທາງຕັກກະສາດ 3 ຂັ້ນ.

ຕົວຢ່າງ: 1. ຄົນເຮົາທຸກຄົນເກີດມາແລ້ວກໍຕ້ອງຕາຍ (ອັນນີ້ເອີ້ນວ່າພື້ນຖານຫຼັກ ຫຼື ພື້ນຖານສຳຄັນ); 2. ທ່ານ Socrates ນັກປຣາດຊາວເກຣັກເປັນຄົນ (ອັນນີ້ເອີ້ນວ່າພື້ນຖານສຳຮອງ) ແລະ 3. ທ່ານ Socrates ເກີດມາແລ້ວກໍຕ້ອງຕາຍ (ອັນນີ້ເອີ້ນວ່າຂໍ້ສະຫຼຸບ). ຖ້ານຳຫຼັກການດັ່ງກ່າວມາພິຈາລະນາປຽບທຽບກັບການກະທຳຜິດທາງອາຍາສະຖານການຄາດຕະກຳຕາມມາດຕາ 188 ຂອງປະມວນກົດໝາຍອາຍາກໍຈະມີຄວາມໝາຍວ່າ: 1. ບຸກຄົນໃດຫາກໄດ້ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາ ຖືວ່າເປັນການກະທຳຜິດສະຖານຄາດຕະກຳ (ອັນນີ້ເອີ້ນວ່າພື້ນຖານຫຼັກ ຫຼື ພື້ນຖານສຳຄັນ); 2. X ເຮັດໃຫ້ຜູ້ອື່ນເສຍຊີວິດໂດຍເຈດຕະນາ (ອັນນີ້ເອີ້ນວ່າພື້ນຖານສຳຮອງ) ແລະ 3. X ມີຄວາມຜິດສະຖານຄາດຕະກຳ (ອັນນີ້ເອີ້ນວ່າຂໍ້ສະຫຼຸບ).

ນອກຈາກນຳຫຼັກການດັ່ງກ່າວມາພິຈາລະນາ ແລະ ອະທິບາຍພຶດຕິກຳໃດໜຶ່ງວ່າເປັນການກະທຳຜິດທາງອາຍາແລ້ວ ຍັງຍົກໃຫ້ເຫັນປະເດັນບັນຫາກ່ຽວກັບການບັນຍັດກົດໝາຍ, ຄຳສັບທີ່ໃຊ້ໃນການບັນຍັດກົດໝາຍ ແລະ ຊ່ອງວ່າງຂອງກົດໝາຍ ລວມທັງຂໍ້ສະເໜີວິທີບັນຍັດກົດໝາຍອາຍາຂອງ ສປປ ລາວ ໄວ້ໃນອະນາຄົດອີກ.

ຫຼັກການພິຈາລະນາການກະທຳຜິດທີ່ໄດ້ສະເໜີໄວ້ໃນປຶ້ມຫົວນີ້ເປັນການຍົກລະດັບການສຶກສາກົດໝາຍອາຍາໃຫ້ສູງຂຶ້ນອີກ ຊຶ່ງເລີ່ມຕົ້ນດ້ວຍການນຳສະເໜີກໍລະນີສຶກສາ, ການກຳນົດຂອງມາດຕາທີ່ກ່ຽວຂ້ອງ, ເຫດຜົນຂອງການບັນຍັດມາດຕາ, ຈຸດປະສົງຂອງການບັນຍັດມາດຕາ, ເງື່ອນໄຂຂອງມາດຕາທີ່ເປັນຕົວກຳນົດການກະທຳໃດໜຶ່ງວ່າເປັນການກະທຳຜິດທາງອາຍາ, ຄຳຕອບຂອງແຕ່ລະກໍລະນີສຶກສາເມື່ອນຳມາປຽບທຽບກັບເງື່ອນໄຂ ແລະ ສຸດທ້າຍກໍແມ່ນຂໍ້ສະເໜີໃນການບັນຍັດກົດໝາຍອາຍາໃນອະນາຄົດ ຊຶ່ງເນື້ອໃນ ແລະ ຄວາມໝາຍຂອງແຕ່ລະຂໍ້ມີຄວາມເຊື່ອມໂຍງສຳພັນກັນຢ່າງເປັນລະບົບດັ່ງນີ້:

## 1. ກໍລະນີສຶກສາ

ກໍລະນີສຶກສາທີ່ໄດ້ຍົກຂຶ້ນມານີ້ເປັນກໍລະນີສຶກສາຕົວຢ່າງທີ່ທາງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາໄດ້ສ້າງຂຶ້ນມາ ຊຶ່ງບາງເຫດການອາດຈະກົງກັບເຫດການທີ່ເກີດຂຶ້ນຈິງໃນສັງຄົມ, ຈຸດປະສົງເພື່ອຍົກໃຫ້ເຫັນວ່າຖ້າເຫດການດັ່ງກ່າວຫາກໄດ້ເກີດຂຶ້ນຕາມກໍລະນີສຶກສານີ້ ເຮົາຈະພິຈາລະນາເຫດການດັ່ງກ່າວຄືແນວໃດຈຶ່ງຈະຮູ້ໄດ້ວ່າພຶດຕິກໍານັ້ນເປັນການກະທໍາຜິດທາງອາຍາ ແລະ ສົມຄວນຖືກລົງໂທດ. ພ້ອມກັນນັ້ນຖ້າເຫດການໃນກໍລະນີສຶກສາດັ່ງກ່າວຫາກມີການດັດແກ້ໃຫ້ປ່ຽນແປງໄປເປັນຢ່າງອື່ນຫຼາຍໆ ກໍລະນີ ແຕ່ມີລັກສະນະຄ້າຍຄືກັນກັບພຶດຕິກໍາຕາມເຫດການໃນເບື້ອງຕົ້ນນັ້ນຢູ່ ແລ້ວຍັງຈະຖືວ່າພຶດຕິກໍາດັ່ງກ່າວເປັນການກະທໍາຜິດທາງອາຍາໃນສະຖານນັ້ນອີກຢູ່ ຫຼື ບໍ່, ເພາະເຫດໃດ ແລະ ຖ້າຍັງຖືວ່າເປັນການກະທໍາຜິດທາງອາຍາໃນສະຖານນັ້ນຢູ່, ພຶດຕິກໍານັ້ນມັນຄົບຕາມເງື່ອນໄຂຂອງມາດຕາທີ່ໄດ້ກໍານົດໄວ້ໃນຂໍ້ 5 ຄືແນວໃດ. ກົງກັນຂ້າມ ຖ້າເຫດການນັ້ນບໍ່ເປັນການກະທໍາຜິດມັນຂາດເງື່ອນໄຂຂອງມາດຕາໃນສ່ວນໃດ ຊຶ່ງການພິຈາລະນາຄໍາຕອບນີ້ໄດ້ອະທິບາຍໄວ້ໃນຫົວຂໍ້ທີ 6 ຂອງແຕ່ລະກໍລະນີສຶກສາ.

## 2. ມາດຕາກົດໝາຍ

ມາດຕາກົດໝາຍນີ້ເປັນການຍົກເອົາເນື້ອໃນ ແລະ ຂໍ້ຄວາມທັງໝົດຂອງປະມວນກົດໝາຍອາຍາຕາມທີ່ມາດຕາດັ່ງກ່າວໄດ້ບັນຍັດສະຖານຂອງການກະທໍາຜິດໄວ້ ລວມທັງຍົກໃຫ້ເຫັນວ່າການກະທໍາຜິດສະຖານນັ້ນໄດ້ກໍານົດໄວ້ໃນມາດຕາໃດ. ຖ້າຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າ ຂໍ້ນີ້ໄດ້ຈົດກ່າຍເອົາຂໍ້ຄວາມທັງໝົດຂອງມາດຕານັ້ນໆ ມາໄວ້ໃນຂໍ້ທີ 2 ນີ້ທັງໝົດ ທັງນີ້ກໍເພື່ອໃຫ້ຜູ້ອ່ານໄດ້ເຫັນ ແລະ ເຂົ້າໃຈເນື້ອໃນທັງໝົດຂອງກົດໝາຍຕາມທີ່ໄດ້ກໍານົດໄວ້ໃນມາດຕານັ້ນເພື່ອປະກອບໃນການພິຈາລະນາກ່ຽວກັບກໍລະນີສຶກສາຕາມທີ່ໄດ້ກໍານົດຂຶ້ນໃນຂໍ້ທີ 1 ຂ້າງເທິງນັ້ນ. ນອກຈາກນັ້ນຂໍ້ຄວາມໃນກົດໝາຍຂອງຂໍ້ນີ້ຍັງຈະໄດ້ເອົາໄປກໍານົດເປັນເງື່ອນໄຂຂອງມາດຕາໄວ້ໃນຂໍ້ທີ 5 ອີກດ້ວຍ.

## 3. ເຫດຜົນການບັນຍັດມາດຕາ

ເຫດຜົນການບັນຍັດມາດຕາຂອງກົດໝາຍເປັນການກຳນົດໃຫ້ເຫັນວ່າສະພາບສັງຄົມໃນປັດຈຸບັນຂອງ ສປປ ລາວ ວ່າມີຄວາມຈຳເປັນຄືແນວໃດທີ່ຈະຕ້ອງໄດ້ກຳນົດການກະທຳນັ້ນໃຫ້ເປັນການກະທຳຜິດ ແລະ ກຳນົດໂທດທາງອາຍາໄວ້. ນອກຈາກນັ້ນຍັງໄດ້ກຳນົດໃຫ້ເຫັນວ່າຖ້າຫາກບໍ່ກຳນົດພຶດຕິກຳດັ່ງກ່າວໃຫ້ເປັນການກະທຳຜິດ ແລະ ກຳນົດໂທດທາງອາຍາໄວ້ແລ້ວຈະເກີດຄວາມເສຍຫາຍແນວໃດຕໍ່ປະເທດຊາດ, ສ່ວນລວມ, ສັງຄົມ ແລະ ບຸກຄົນ. ຖ້າຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າການທີ່ກົດໝາຍກຳນົດພຶດຕິກຳນັ້ນໃຫ້ເປັນການກະທຳຜິດ ແລະ ກຳນົດການລົງໂທດທາງອາຍາເອົາໄວ້, ປະເທດຊາດ ແລະ ສັງຄົມຈະໄດ້ປະໂຫຍດຫຍັງ. ກົງກັນຂ້າມຖ້າບໍ່ກຳນົດເປັນການກະທຳຜິດ ແລະ ກຳນົດການລົງໂທດທາງອາຍາໄວ້ຈະເກີດຄວາມເສຍຫາຍຄືແນວໃດຕໍ່ປະເທດຊາດ, ສັງຄົມ ແລະປະຊາຊົນ.

## 4. ວັດຖຸປະສົງການບັນຍັດມາດຕາ

ທຸກໆ ມາດຕາຂອງປະມວນກົດໝາຍອາຍາໃນພາກສະເພາະລ້ວນແລ້ວແຕ່ບັນຍັດວັດຖຸປະສົງຂອງການບັນຍັດມາດຕາເອົາໄວ້ສະເໝີ. ວັດຖຸປະສົງຂອງການບັນຍັດມາດຕານີ້ກໍເພື່ອປົກປ້ອງຜົນປະໂຫຍດທາງກົດໝາຍສະເພາະອັນໃດອັນໜຶ່ງ. ດັ່ງນັ້ນ, ວັດຖຸປະສົງຂອງການບັນຍັດມາດຕາຈຶ່ງໝາຍເຖິງການທີ່ກົດໝາຍອາຍາມາດຕາດັ່ງກ່າວກຳນົດພຶດຕິກຳໃດໜຶ່ງໃຫ້ເປັນການກະທຳຜິດ ແລະ ກຳນົດການລົງໂທດທາງອາຍາໄວ້ນັ້ນ, ວັດຖຸປະສົງທີ່ແທ້ຈິງຂອງມາດຕານັ້ນກຳນົດໄວ້ເພື່ອປົກປ້ອງຫຍັງ, ການທີ່ກົດໝາຍອາຍາກຳນົດເປັນການກະທຳຜິດ ແລະ ກຳນົດການລົງໂທດທາງອາຍາໄວ້ນັ້ນກໍເພື່ອປົກປ້ອງຜົນປະໂຫຍດທາງກົດໝາຍບໍ່ໃຫ້ຖືກທຳລາຍຈາກການກະທຳຜິດ. ການກະທຳໃດໜຶ່ງຫາກໄປທຳລາຍສິ່ງທີ່ກົດໝາຍປົກປ້ອງຊຶ່ງເຮົາເອີ້ນວ່າຜົນປະໂຫຍດທາງກົດໝາຍນັ້ນແລ້ວ, ການກະທຳນັ້ນກໍຖືວ່າເປັນການກະທຳຜິດທາງອາຍາ. ດັ່ງນັ້ນ, ໃນຫົວຂໍ້ນີ້ຈຶ່ງເປັນການກຳນົດຜົນປະໂຫຍດທາງກົດໝາຍ ຫຼື ເອີ້ນຕາມກົດໝາຍຂອງ ສປປ ລາວ ວ່າແມ່ນອົງປະກອບດ້ານວັດຖຸກຳຂອງການກະທຳຜິດໃນມາດຕາດັ່ງກ່າວວ່າແມ່ນຫຍັງ. ການກຳນົດຜົນປະໂຫຍດທາງກົດ

ໝາຍມີຄວາມສຳຄັນຕໍ່ການພິຈາລະນາຄຳຕອບໃນຂໍ້ທີ 6 ຂອງແຕ່ລະສະຖານຂອງການກະທຳຜິດດັ່ງທີ່ໄດ້ນຳມາອະທິບາຍໄວ້ໃນປຶ້ມຫົວນີ້.

ເຫດຜົນຂອງການບັນຍັດມາດຕາໃນຂໍ້ທີ 3 ແລະ ວັດຖຸປະສົງຂອງການບັນຍັດມາດຕາໃນຂໍ້ທີ 4 ມີຄວາມແຕກຕ່າງກັນຄື: ເຫດຜົນການກຳນົດມາດຕາເປັນການກຳນົດວ່າດ້ວຍເຫດຜົນອັນໃດກົດໝາຍຈຶ່ງກຳນົດພຶດຕິກຳດັ່ງກ່າວນັ້ນເປັນການກະທຳຜິດ ແລະ ຖືກລົງໂທດທາງອາຍາ, ສ່ວນວັດຖຸປະສົງຂອງການກຳນົດມາດຕາແມ່ນອະທິບາຍວ່າຜົນປະໂຫຍດທາງກົດໝາຍທີ່ເປັນສິ່ງທີ່ກົດໝາຍອາຍາຢາກປົກປ້ອງ ຫຼື ເອີ້ນຕາມກົດໝາຍອາຍາຂອງ ສປປ ລາວ ແມ່ນອົງປະກອບທາງດ້ານວັດຖຸກຳນັ້ນແມ່ນຫຍັງ.

## 5. ເງື່ອນໄຂມາດຕາ

ທຸກໆ ການກະທຳຜິດຕາມທີ່ໄດ້ກຳນົດໄວ້ໃນພາກສະເພາະຂອງປະມວນກົດໝາຍອາຍາແຕ່ລະມາດຕາທີ່ໄດ້ນຳມາອະທິບາຍໄວ້ໃນປຶ້ມຫົວນີ້ ໄດ້ກຳນົດເງື່ອນໄຂຂອງມາດຕາໄວ້ໃນສະຖານການກະທຳຜິດດັ່ງກ່າວ. ເງື່ອນໄຂຂອງມາດຕາເປັນສິ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້ທີ່ຈະຕ້ອງໄດ້ກຳນົດໄວ້ໃນກົດໝາຍອາຍາ, ໝາຍຄວາມວ່າພຶດຕິກຳໃດໜຶ່ງຈະເປັນການກະທຳຜິດ ແລະ ຖືກລົງໂທດທາງອາຍາໄດ້ນັ້ນກໍ່ຕໍ່ເມື່ອການກະທຳນັ້ນມີເງື່ອນໄຂຕ່າງໆ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາດັ່ງກ່າວທຸກປະການ. ກົງກັນຂ້າມ ຖ້າການກະທຳນັ້ນຫາກຂາດເງື່ອນໄຂໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາດັ່ງກ່າວແລ້ວ ກໍຈະຖືວ່າບໍ່ເປັນການກະທຳຜິດທາງອາຍາໃນສະຖານນັ້ນໄດ້ ຫຼື ອາດຈະເປັນການກະທຳຜິດໃນສະຖານອື່ນແລ້ວແຕ່ເງື່ອນໄຂຂອງມາດຕາໃນສະຖານນັ້ນໄດ້ກຳນົດໄວ້.

ການທີ່ຈະສາມາດກຳນົດເປັນເງື່ອນໄຂຂອງມາດຕາແຕ່ລະການກະທຳຜິດໄດ້ແມ່ນກຳນົດຕາມເນື້ອໃນຂອງຄຳສັບໃນມາດຕາຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 2 ຂ້າງເທິງນັ້ນມາເປັນເງື່ອນໄຂຂອງມາດຕາຂອງການກະທຳຜິດ.

ການກະທຳຜິດແຕ່ລະສະຖານໃນພາກສະເພາະໄດ້ກຳນົດເງື່ອນໄຂໄວ້ແຕກຕ່າງກັນ ຊຶ່ງບາງການກະທຳຜິດອາດຈະກຳນົດເປັນ 3 ເງື່ອນໄຂ ແລະ ບາງການກະທຳຜິດອາດຈະກຳນົດເປັນ 4 ເງື່ອນໄຂແລ້ວແຕ່ເນື້ອໃນຂອງການກະທຳຜິດນັ້ນໆ ໄດ້ກຳນົດໄວ້. ເງື່ອນໄຂຂອງມາດຕາ ເປັນອົງປະກອບດ້ານພາວະວິໄສ ແລະ ອົງປະກອບ

ທາງດ້ານອັດຕະວິໄສຂອງການກະທຳຜິດ ໂດຍສະເພາະອີງປະກອບດ້ານພາວະວິໄສອາດຈະມີ 2 ຫຼື 3 ຂໍ້ ແລ້ວແຕ່ເງື່ອນໄຂຂອງການກະທຳຜິດໃນສະຖານນັ້ນໄດ້ກຳນົດໄວ້.

ນອກຈາກການກຳນົດແຕ່ລະເງື່ອນໄຂກຳກັບໄວ້ໃນແຕ່ລະສະຖານຂອງການກະທຳຜິດແລ້ວ ຍັງໄດ້ອະທິບາຍຄຳສັບ ແລະ ຕີຄວາມໝາຍຂອງແຕ່ລະເງື່ອນໄຂໄວ້ອີກວ່າການທີ່ກົດໝາຍກຳນົດເງື່ອນໄຂຂອງມາດຕາຄືດັ່ງກ່າວໄວ້ນັ້ນມັນມີຄວາມໝາຍຄືແນວໃດ.

## 6. ຄຳຕອບກໍລະນີສຶກສາ

ຄຳຕອບຂອງກໍລະນີສຶກສານີ້ເປັນການສະຫຼຸບຕາມຫຼັກເຫດຜົນທາງຕັກກະສາດ 3 ຂັ້ນດັ່ງທີ່ໄດ້ກ່າວໄວ້ຂ້າງເທິງເພື່ອໃຫ້ເຫັນຄຳຕອບວ່າຜ່ານການພິຈາລະນາແຕ່ລະກໍລະນີສຶກສາແລ້ວ ເມື່ອນຳມາປຽບທຽບກັບເງື່ອນໄຂຂອງມາດຕາຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ນີ້ແລ້ວ ຄົບ ຫຼື ບໍ່ຄົບຕາມເງື່ອນໄຂຂອງມາດຕານັ້ນຄືແນວໃດ, ຖ້າຄົບຕາມເງື່ອນໄຂຂອງມາດຕາແມ່ນຄົບຄືແນວໃດ ຫຼື ຖ້າໃນກໍລະນີບໍ່ຄົບແມ່ນບໍ່ຄົບເງື່ອນໄຂຂອງມາດຕາແນວໃດ ແລະ ສຸດທ້າຍຈຶ່ງສະຫຼຸບຄຳຕອບຂອງກໍລະນີສຶກສານັ້ນວ່າຜິດ ຫຼື ບໍ່ຜິດທາງອາຍາໃນສະຖານໃດໂດຍອີງໃສ່ເງື່ອນໄຂຂອງມາດຕາເປັນຕົວກຳນົດຕາມຫຼັກເຫດຜົນ 3 ຂັ້ນທາງຕັກກະສາດດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

ການພິຈາລະນາຄຳຕອບຂອງກໍລະນີສຶກສາເປັນການພິຈາລະນາ ຫຼື ວິນິດໄສໃຫ້ເຫັນເຖິງຄວາມສຳພັນລະຫວ່າງເຫດ ແລະ ຜົນຂອງການກະທຳໃນແຕ່ລະກໍລະນີສຶກສານັ້ນວ່າ ການກະທຳນັ້ນມັນເປັນການກະທຳຜິດໂດຍມີເງື່ອນໄຂຂອງມາດຕາທີ່ເປັນສາເຫດຄືແນວໃດ. ພ້ອມກັນນັ້ນຄຳຕອບຂອງກໍລະນີສຶກສາກໍຈະນຳມາອະທິບາຍເຊັ່ນດຽວກັນວ່າຖ້າການກະທຳນັ້ນບໍ່ເປັນການກະທຳຜິດທາງອາຍາເນື່ອງມາຈາກຂາດເງື່ອນໄຂຂອງມາດຕາດັ່ງກ່າວແມ່ນຂາດເງື່ອນໄຂທີ່ເປັນສາເຫດຄືແນວໃດ.

ເມື່ອພິຈາລະນາ ຫຼື ວິນິດໄສກໍລະນີສຶກສາໂດຍປຽບທຽບໃສ່ເງື່ອນໄຂຂອງມາດຕາທີ່ເປັນສາເຫດແລ້ວຈຶ່ງຫາຂໍ້ສະຫຼຸບຄຳຕອບວ່າ ກໍລະນີສຶກສາຕາມທີ່ໄດ້ກຳນົດຂຶ້ນໃນຂໍ້ທີ 1 ນັ້ນເປັນການກະທຳຜິດໃນສະຖານໃດ, ຂອງມາດຕາໃດໃນ

ປະມວນກົດໝາຍອາຍາ. ຄຳຕອບຂອງກໍລະນີສຶກສານີ້ເປັນຜົນຂອງການກະທຳທີ່ຄົບຕາມເງື່ອນໄຂຂອງມາດຕາທີ່ເປັນສາເຫດຕາມທີ່ໄດ້ກ່າວໄວ້ໃນຂ້າງເທິງນັ້ນ.

## 7. ຂໍ້ສະເໜີ

ຜ່ານການພິຈາລະນາຕາມລຳດັບແຕ່ຂໍ້ທີ 1 ທີ່ເປັນກໍລະນີສຶກສາ, ຂໍ້ທີ 2 ມາດຕາທີ່ບັນຍັດການກະທຳຜິດ, ຂໍ້ທີ 3 ກ່ຽວກັບເຫດຜົນການບັນຍັດມາດຕາ, ຂໍ້ທີ 4 ກ່ຽວກັບຈຸດປະສົງການບັນຍັດມາດຕາ, ຂໍ້ທີ 5 ກ່ຽວກັບການກຳນົດເງື່ອນໄຂມາດຕາ ແລະ ຂໍ້ທີ 6 ຊຶ່ງເປັນຄຳຕອບຂອງກໍລະນີສຶກສາແລ້ວເຫັນວ່າການບັນຍັດການກະທຳຜິດໃນປະມວນກົດໝາຍອາຍາໃນສະຖານດັ່ງກ່າວນີ້ ຍັງມີປະເດັນບັນຫາທີ່ບໍ່ຈະແຈ້ງ, ບໍ່ຊັດເຈນ ບໍ່ວ່າຈະເປັນຄຳສັບ, ຂໍ້ຄວາມ ຊຶ່ງຍາກແກ່ການເຂົ້າໃຈ ຫຼືອາດຈະເຂົ້າໃຈບໍ່ເປັນເອກະພາບກັນກ່ຽວກັບການຕີຄວາມໝາຍນັ້ນ, ຈຶ່ງໄດ້ນຳເອົາຜົນຈາກການສຶກສາດັ່ງກ່າວມານຳສະເໜີໄວ້ເພື່ອໃຫ້ອົງການທີ່ກ່ຽວຂ້ອງກັບການບັດຍັດກົດໝາຍໃຊ້ເປັນບ່ອນອີງໃນການບັນຍັດກົດໝາຍອາຍາຂອງ ສປປ ລາວໃນອະນາຄົດ.

# ບົດທີ 2
# ການຟອກເງິນ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ໄດ້ເງິນຈາກຮັບຈ້າງຂົນຢາເສບຕິດ. X ຄິດວ່າຖ້າຈະນຳເງິນດັ່ງກ່າວໄປນຳໃຊ້ຢ້ານເຈົ້າໜ້າທີ່ສົງໄສ, ຈຶ່ງນຳເງິນດັ່ງກ່າວໄປເປີດຮ້ານຊື້ຂາຍລົດຈັກມືສອງຮ່ວມກັບ Y ໂດຍອອກຊື່ Y. ພາຍຫຼັງດຳເນີນທຸລະກິດໄປແລ້ວ X ຈຶ່ງນຳເອົາເງິນດັ່ງກ່າວໄປລົງບັນຊີເປັນກຳໄລສຸດທິແລ້ວນຳເງິນໄປຝາກທະນາຄານ.

**ກໍລະນີສຶກສາທີ 1 ດັດແກ້:** ກໍລະນີ X ໄດ້ເງິນຈາກຮັບຈ້າງຂົນຢາເສບຕິດ. ພໍໄດ້ເງິນມາແລ້ວ X ນຳເອົາເງິນຈຳນວນດັ່ງກ່າວໄປເປີດບັນຊີເງິນຝາກຢູ່ທະນາຄານ ໂດຍອອກເປັນຊື່ຂອງຕົນ.

### 1.2 ກໍລະນີສຶກສາທີ 2

X ໄດ້ຮັບຄ່າຕອບແທນເປັນເງິນຈາກການສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນເຊັ່ນອະນຸມັດໂຄງການໃຫ້ບໍລິສັດຕ່າງຊາດສຳປະທານ. ເມື່ອໄດ້ເງິນມາແລ້ວຢ້ານເຈົ້າໜ້າທີ່ຂອງລັດສົງໄສວ່າຕົນສໍ້ລາດບັງຫຼວງຈຶ່ງນຳເງິນດັ່ງກ່າວໄປຝັງດິນໄວ້ຢູ່ກ້ອງຂັ້ນໄດເຮືອນຂອງຕົນ ແລະ ຄິດວ່າຈະເອົາອອກມານຳໃຊ້ເມື່ອມີໂອກາດ ຫຼື ໃນເວລາເຂົ້າບຳນານ.

**ກໍລະນີສຶກສາທີ 2 ດັດແກ້:** ເມື່ອ X ໄດ້ເງິນດັ່ງກ່າວມາແລ້ວຈຶ່ງນຳເງິນເອົາໄປຮັກສາໄວ້ໃນຕູ້ນິລະໄພປົນກັບເງິນເດືອນທີ່ຕົນສະສົມມາໄວ້ຫຼາຍປີກ່ອນໜ້ານີ້.

## 2. ມາດຕາ 130

ໂດຍອີງຕາມມາດຕາ 9 ແລະ ມາດຕາ 56 ຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງເລກທີ 64/ສພຊ, ລົງວັນທີ 1 ກໍລະກົດ 2024

ການຟອກເງິນ ແມ່ນ ການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງຂອງເງິນ ຫຼື ຊັບສິນອື່ນ ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ຊຶ່ງຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນ ມາຈາກການກໍ່ອາຊະຍາກຳ ຫຼື ການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ເຊື່ອງອຳພຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງ ຂອງຊັບສິນ.

ການກະທຳ ທີ່ເປັນການຟອກເງິນມີດັ່ງນີ້:

1. ການປ່ຽນຮູບ ຫຼື ການໂອນ ເງິນ ຫຼື ຊັບສິນອື່ນ ໂດຍມີຈຸດປະສົງປົກປິດ, ເງິນ ຫຼື ຊັບສິນ ທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເຊື່ອງອຳພົນຈາກການກະທຳຜິດຕົ້ນ ຫຼື ໃຫ້ການຊ່ວຍເຫຼືອຜູ້ກະທຳຜິດຕົ້ນ ເພື່ອຫຼົບຫຼີກຄວາມຮັບຜິດຊອບຈາກການກະທຳຜິດ;

2. ການປົກປິດ ຫຼື ເຊື່ອງອຳ ແຫຼ່ງ, ສະຖານທີ່, ການໂອນ, ການຄອບຄອງ, ການເຄື່ອນຍ້າຍ ຫຼື ການເປັນເຈົ້າຂອງ ຫຼື ກຳມະສິດ ທີ່ແທ້ຈິງຂອງເງິນ ຫຼື ຊັບສິນນັ້ນ;

3. ການໄດ້ມາ, ການຄອບຄອງ, ການນຳໃຊ້ທຶນ ທີ່ມາຈາກການກະທຳຜິດຕົ້ນ ເຊັ່ນ ການໃຫ້ກູ້ຢືມ ເງິນ ຫຼື ຊັບສິນອື່ນ, ການນຳໃຊ້ເງິນ ຫຼື ຊັບສິນນັ້ນ ເຂົ້າໃສ່ການລົງທຶນໂດຍກົງ;

4. ການກະທຳ ຫຼື ການຮ່ວມກັນກະທຳຜິດ ເປັນຕົ້ນການເຂົ້າຮ່ວມວາງແຜນ, ຊ່ວຍເຫຼືອ, ປະຕິບັດ, ສົ່ງເສີມ, ອຳນວຍຄວາມສະດວກ ຫຼື ໃຫ້ຄຳປຶກສາ ລວມທັງຄວາມພະຍາຍາມກໍ່ການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ມາດຕານີ້.

ນອກຈາກນີ້ ການຟອກເງິນຍັງສະແດງອອກ ດັ່ງນີ້:

1. ການຮັບຮູ້ໂດຍເຈດຕະນາກ່ຽວກັບການກະທຳ ທີ່ນຳໄປເຖິງການຟອກເງິນ;

2. ເຫດການ ຫຼື ຫຼັກຖານ ທີ່ຢັ້ງຢືນວ່າ ເງິນ ຫຼື ຊັບສິນນັ້ນ ໄດ້ມາຈາກກະທຳຜິດຕົ້ນ ໂດຍບໍ່ຈຳເປັນມີການຕັດສິນຂອງສານ.

ບຸກຄົນໃດ ທີ່ໄດ້ກະທຳຜິດໃນສະຖານການຟອກເງິນ:

1. ຕ່ຳກວ່າ 1,000,000,000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າ ທີ່ຟອກທັງຫມົດ ແລະ ຈະຖືກຮິບຊັບ;

2. ແຕ່ 1,000,000,000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບແຕ່ ເຈັດປີ ຫາ ສິບປີ ແລະ ຈະຖືກປັບໃໝ ເຈັດສິບສ່ວນຮ້ອຍ (70%) ຂອງມູນຄ່າທີ່ ຟອກທັງໝົດ ແລະ ຈະຖືກຮິບຊັບ.

ໃນກໍລະນີທີ່ມີການຈັດຕັ້ງເປັນກຸ່ມ ຫຼື ມີການກະທຳຜິດເປັນອາຈິນ ຈະຖືກ ລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ສິບຫ້າ ປີ ແລະ ຈະຖືກປັບໃໝ ເກົ້າສິບ ສ່ວນຮ້ອຍ (90%) ຂອງມູນຄ່າທີ່ຟອກທັງໝົດ ແລະ ຈະຖືກຮິບຊັບ.

## 3. ເຫດຜົນການບັນຍັດມາດຕາ

ສະພາບເສດຖະກິດຂອງປະເທດຕ່າງໆ ມີການຂະຫຍາຍຕົວ ແລະ ມີການ ພົວພັນກັນຫຼາຍຂຶ້ນ ຊຶ່ງເປັນຊ່ອງວ່າງໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດຟອກເງິນໄດ້ໃນຫຼາຍຮູບແບບ ຈຶ່ງຈຳເປັນຕ້ອງມີການສະກັດກັ້ນ ແລະ ຕ້ານບໍ່ ໃຫ້ຜູ້ກະທຳຜິດນຳໃຊ້ເງິນ ຫຼື ຊັບສິນທີ່ໄດ້ມາຈາກການກໍ່ອາຊະຍາກຳ ຫຼື ການກະທຳ ຜິດອື່ນ ພ້ອມທັງເປັນການສະກັດກັ້ນການກະທຳຜິດອື່ນ ແລະ ເປັນການສ້າງຄວາມ ເຊື່ອໝັ້ນໃຫ້ແກ່ພາກພື້ນ ແລະ ສາກົນ. ສະນັ້ນ, ຈຶ່ງໄດ້ກຳນົດການຟອກເງິນ ເປັນການ ກະທຳຜິດທາງອາຍາໄວ້ໃນມາດຕາ 130 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 130 ຂອງປະມວນກົດໝາຍອາຍາບັນຍັດໄວ້ເພື່ອປົກປ້ອງຜົນ ປະໂຫຍດຂອງລັດ, ຂອງບຸກຄົນ, ລະບົບເສດຖະກິດ - ການເງິນ, ຄວາມສະຫງົບຂອງ ຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອີງປະກອບທາງດ້ານວັດຖຸກຳ ຂອງການກະທຳຜິດທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທຳຜິດສະຖານຟອກເງິນຕ້ອງປະກອບດ້ວຍ 3 ເງື່ອນໄຂດັ່ງນີ້: 1. ຜົນຈາກການກະທຳຜິດຕົ້ນ; 2. ການກະທຳຂອງການຟອກເງິນ; 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ 2 ເປັນອົງປະກອບທາງດ້ານພາວະວິໄສຂອງການກະທຳຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບທາງດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

**5.1 ຜົນຈາກການກະທຳຜິດຕົ້ນ**

ການກະທຳຜິດຕົ້ນ ແມ່ນການກະທຳຜິດທາງອາຍາ ທີ່ເປັນຕົ້ນເຫດຂອງການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ເລກທີ 64/ສພຊ, ວັນທີ 1 ກໍລະກົດ ປີ 2024.

ຜົນຈາກການກະທຳຜິດຕົ້ນ ແມ່ນ ເງິນ ຫຼື ຊັບສິນທີ່ໄດ້ມາໂດຍທາງກົງ ຫຼື ທາງອ້ອມຈາກການກະທຳຜິດຕົ້ນ, ຊັບສິນທີ່ໄດ້ປ່ຽນຮູບ ຫຼື ປ່ຽນແປງທັງໝົດ ຫຼື ບາງສ່ວນ ເປັນຊັບສິນອື່ນ ລວມທັງຜົນຕອບແທນຈາກການລົງທຶນ.

**5.2 ການກະທຳຂອງການຟອກເງິນ**

ການກະທຳຂອງການຟອກເງິນປະກອບມີເນື້ອໃນດັ່ງນີ້:

1) ການປ່ຽນຮູບ ຫຼື ການໂອນເງິນ ຫຼື ຊັບສິນອື່ນໂດຍມີຈຸດປະສົງປົກປິດເງິນ ຫຼື ຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ເຊື່ອງອຳຜົນຈາກການກະທຳຜິດຕົ້ນ ຫຼື ໃຫ້ການຊ່ວຍເຫຼືອຜູ້ກະທຳຜິດຕົ້ນເພື່ອຫຼົບຫຼີກຄວາມຮັບຜິດຊອບຈາກການກະທຳຜິດ;

- ການປ່ຽນຮູບ ເງິນ ຫຼື ຊັບສິນອື່ນ ໝາຍເຖິງການປ່ຽນຈາກເງິນສະກຸນໜຶ່ງເປັນສະກຸນອື່ນ, ຈາກເງິນເປັນຊັບສິນ ຫຼື ຈາກຊັບສິນມາເປັນເງິນ ຫຼື ຈາກຊັບສິນ ໜຶ່ງເປັນຊັບສິນອື່ນ;

- ການໂອນເງິນ ຫຼື ຊັບສິນ ໝາຍເຖິງການເອົາເງິນ ຫຼື ຊັບສິນ ອອກຈາກການຄອບຄອງຂອງບຸກຄົນໜຶ່ງໄປຢູ່ໃນການຄອບຄອງຂອງບຸກຄົນອື່ນ;

ເຖິງຢ່າງໃດກໍຕາມ ການປ່ຽນຮູບ ຫຼື ການໂອນ ດັ່ງກ່າວຈະບໍ່ສາມາດເວົ້າໄດ້ວ່າເປັນການກະທຳຂອງການຟອກເງິນ, ຈະຖືວ່າເປັນການກະທຳຂອງການຟອກເງິນ

ໄດ້ຈະຕ້ອງໄດ້ເບິ່ງຈຸດປະສົງຂອງການປ່ຽນຮູບ ຫຼື ການໂອນດັ່ງກ່າວວ່າມີຈຸດປະສົງເພື່ອປົກປິດ ຫຼື ເຊື່ອງອຳ ເງິນ ຫຼື ຊັບສິນນັ້ນ ຫຼື ບໍ່.

ການກະທຳດັ່ງກ່າວອາດຈະແມ່ນຜູ້ກະທຳຜິດຕົ້ນ ຫຼື ບຸກຄົນອື່ນກະທຳກໍໄດ້ ຊຶ່ງມີຈຸດປະສົງເພື່ອປົກປິດ ຫຼື ເຊື່ອງອຳຜົນຈາກການກະທຳຜິດຕົ້ນ.

2) ການປົກປິດ ຫຼື ເຊື່ອງອຳ ແຫຼ່ງ, ສະຖານທີ່, ການໂອນ, ການຄອບຄອງ, ການເຄື່ອນຍ້າຍ ຫຼື ການເປັນເຈົ້າຂອງ ຫຼື ກຳມະສິດ ທີ່ແທ້ຈິງຂອງເງິນ ຫຼື ຊັບສິນນັ້ນ;

ການປົກປິດ ຫຼື ເຊື່ອງອຳ ໝາຍເຖິງການກະທຳດ້ວຍຮູບການຕ່າງໆເຊັ່ນ: ການສ້າງເອກະສານປອມເພື່ອຢັ້ງຢືນ, ຝັງດິນ, ຊຸກເຊື່ອງໄວ້ຕາມສະຖານທີ່ຕ່າງໆ ແລະ ການກະທຳດ້ວຍຮູບການອື່ນໆ ຈຸດປະສົງເພື່ອ ປິດບັງ ຫຼື ຊຸກເຊື່ອງແຫຼ່ງທີ່ມາ ຫຼື ຂໍ້ມູນທີ່ແທ້ຈິງຂອງເງິນ ຫຼື ຊັບສິນ ທີ່ຢູ່ໃນການຄອບຄອງຂອງຕົນ.

ການກະທຳດັ່ງກ່າວອາດຈະແມ່ນຜູ້ກະທຳຜິດຕົ້ນ ຫຼື ບຸກຄົນອື່ນກະທຳກໍໄດ້ ເພື່ອປົກປິດ ຫຼື ເຊື່ອງອຳການເປັນເຈົ້າຂອງ ຫຼື ກຳມະສິດ ທີ່ແທ້ຈິງຂອງເງິນ ຫຼື ຊັບສິນ.

3) ການໄດ້ມາ, ການຄອບຄອງ, ການນຳໃຊ້ທຶນ ທີ່ມາຈາກການກະທຳຜິດຕົ້ນ ເຊັ່ນ: ການໃຫ້ກູ້ຢືມເງິນ ຫຼື ຊັບສິນອື່ນ, ການນຳໃຊ້ເງິນ ຫຼື ຊັບສິນນັ້ນ ເຂົ້າໃສ່ການລົງທຶນໂດຍກົງ;

ການກະທຳດັ່ງກ່າວແມ່ນບຸກຄົນອື່ນເປັນຜູ້ກະທຳ ຊຶ່ງບໍ່ແມ່ນຜູ້ກະທຳຜິດຕົ້ນເປັນຜູ້ກະທຳ.

### 5.3 ໂດຍເຈດຕະນາ

ເຈດຕະນາ ໝາຍເຖິງຜູ້ກະທຳຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນໄດ້ມາຈາກການກະທຳຜິດຕົ້ນ ແລະ ຜູ້ກະທຳຕ້ອງການ ຫຼື ຈົງໃຈປົກປິດ ຫຼື ເຊື່ອງອຳຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງ ຂອງຊັບສິນດັ່ງກ່າວ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສານີ້ເຫັນວ່າເງິນທີ່ X ໄດ້ມານັ້ນແມ່ນໄດ້ມາຈາກການຂົນສົ່ງຢາເສບຕິດ. ການຂົນສົ່ງຢາເສບຕິດເປັນການກະທຳຜິດຕົ້ນ ຕາມທີ່ໄດ້ກຳນົດໄວ້

ໃນມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ດັ່ງນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.1 ແລ້ວເຫັນວ່າເງິນທີ່ X ໄດ້ມາຈາກການຂົນສົ່ງຢາເສບຕິດນັ້ນຈຶ່ງເປັນຜົນຈາກການກະທຳຜິດຕົ້ນ.

ການທີ່ X ນຳເອົາເງິນທີ່ໄດ້ຈາກການຂົນສົ່ງຢາເສບຕິດໄປເປີດຮ້ານຊື້ຂາຍລົດຈັກມືສອງຮ່ວມກັບ Y ໂດຍອອກຊື່ຂອງ Y ນັ້ນ, ເປັນການໂອນເງິນທີ່ໄດ້ຈາກການກະທຳຜິດຂອງ X ໄປຢູ່ໃນການຄອບຄອງຂອງ Y. ການໂອນເງິນຈາກການຄອບຄອງຂອງ X ໄປຢູ່ໃນການຄອບຄອງຂອງ Y ນັ້ນຈຶ່ງເປັນການໂອນເງິນອອກຈາກການຄອບຄອງຂອງບຸກຄົນໜຶ່ງໄປຢູ່ໃນການຄອບຄອງຂອງບຸກຄົນອື່ນ. ການທີ່ X ເອົາເງິນດັ່ງກ່າວໄປເປີດຮ້ານຊື້ຂາຍລົດຈັກມືສອງຮ່ວມກັບ Y ແຕ່ໃຫ້ອອກຊື່ຂອງ Y ແມ່ນຍ້ອນຄິດວ່າຖ້ານຳເງິນດັ່ງກ່າວໄປນຳໃຊ້ຢ້ານເຈົ້າໜ້າທີ່ຈະສົງໄສນັ້ນ, ຈຶ່ງຖືວ່າການກະທຳຂອງ X ມີຈຸດປະສົງເພື່ອປົກປິດ ຫຼື ເຊື່ອງອຳແຫຼ່ງທີ່ມາຂອງເງິນ. ດັ່ງນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.2 ແລ້ວເຫັນວ່າ ການກະທຳຂອງ X ຈຶ່ງເປັນການກະທຳຂອງການຟອກເງິນ.

ການທີ່ X ໄດ້ນຳເອົາເງິນທີ່ໄດ້ຈາກການຮັບຈ້າງຂົນສົ່ງຢາເສບຕິດແລ້ວເອົາເງິນດັ່ງກ່າວໄປເປີດຮ້ານຊື້ຂາຍລົດຈັກມືສອງຮ່ວມກັບ Y ໂດຍອອກຊື່ຂອງ Y ນັ້ນເປັນການກະທຳທີ່ຜູ້ກ່ຽວຮູ້ວ່າເປັນການນຳເອົາຜົນຂອງການກະທຳຜິດຕົ້ນໄປໂອນໃຫ້ແກ່ບຸກຄົນອື່ນເພື່ອປົກປິດ ຫຼື ເຊື່ອງອຳ ທີ່ມາຂອງເງິນ ແຕ່ກໍຍັງຈົງໃຈກະທຳ. ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂຂໍ້ 5.3 ການກະທຳຂອງ X ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 130 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້**

ຈາກກໍລະນີສຶກສາດັດແກ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າການກະທຳດັ່ງກ່າວຄົບຕາມເງື່ອນໄຂຂໍ້ 5.1 ຜົນຈາກການກະທຳຜິດຕົ້ນ. ເຖິງຢ່າງໃດກໍຕາມເຫັນວ່າ X ໄດ້ເງິນຈາກການຂົນສົ່ງຢາເສບຕິດແລ້ວເອົາໄປເປີດບັນຊີເປັນຊື່ຂອງຕົນໄວ້ໃນທະນາຄານໂດຍກົງນັ້ນ, ບໍ່ສາມາດເວົ້າໄດ້ວ່າ ມີຈຸດປະສົງເພື່ອປົກປິດ ຫຼື

ເຊື່ອງອຳເງິນ ຈຶ່ງບໍ່ເປັນການປ່ຽນຮູບ ຫຼື ໂອນເງິນ. ພ້ອມກັນນັ້ນ, ການກະທຳດັ່ງກ່າວ ບໍ່ເປັນການປິດບັງ, ຊຸກເຊື່ອງແຫຼ່ງທີ່ມາ ຫຼື ຂໍ້ມູນທີ່ແທ້ຈິງຂອງເງິນ ຈຶ່ງບໍ່ເປັນການປົກປິດ ຫຼື ເຊື່ອງອຳ ແລະ ການກະທຳດັ່ງກ່າວແມ່ນ X ເປັນຜູ້ກະທຳຜິດຕົ້ນເປັນຜູ້ກະທຳເອງ, ບໍ່ແມ່ນບຸກຄົນອື່ນເປັນຜູ້ກະທຳ ຈຶ່ງບໍ່ເປັນການໄດ້ມາ, ຄອບຄອງ, ນຳໃຊ້ທຶນທີ່ມາຈາກການກະທຳຜິດຕົ້ນ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຂອງການຟອກເງິນ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂກ່ຽວກັບການກະທຳຂອງການຟອກເງິນ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຟອກເງິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 130 ຂອງປະມວນກົດໝາຍອາຍາ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສານີ້ເຫັນວ່າເງິນທີ່ X ໄດ້ມານັ້ນແມ່ນໄດ້ມາຈາກການສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນ ໃນການເຊັນອະນຸມັດໂຄງການໃຫ້ບໍລິສັດຕ່າງຊາດສຳປະທານ. ການສວຍໃຊ້ໜ້າທີ່ຕຳແໜ່ງເປັນພຶດຕິກຳທີ່ເປັນການສໍ້ລາດບັງຫຼວງຊຶ່ງເປັນການກະທຳຜິດຕົ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ດັ່ງນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.1 ແລ້ວເຫັນວ່າເງິນທີ່ X ໄດ້ມາຈາກຄ່າຕອບແທນຈາກການເຊັນອະນຸມັດໂຄງການນັ້ນຈຶ່ງເປັນຜົນຂອງການກະທຳຜິດຕົ້ນ.

ການທີ່ X ໄດ້ຄ່າຕອບແທນເປັນເງິນຈາກການສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນເຊັນອະນຸມັດໂຄງການໃຫ້ບໍລິສັດຕ່າງຊາດສຳປະທານ ແລ້ວເອົາໄປຝັງດິນໄວ້ຢູ່ກ້ອງຂັ້ນໄດເຮືອນຂອງຕົນ ເປັນການປິດບັງ ຫຼື ຊຸກເຊື່ອງແຫຼ່ງທີ່ມາ ຫຼື ຂໍ້ມູນທີ່ແທ້ຈິງຂອງເງິນ ຫຼື ຊັບສິນ ທີ່ຢູ່ໃນການຄອບຄອງຂອງຕົນ. ການກະທຳດັ່ງກ່າວເປັນການປົກປິດ ຫຼື ເຊື່ອງອຳເງິນທີ່ໄດ້ຈາກການກະທຳຜິດ. ດັ່ງນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.2 ແລ້ວເຫັນວ່າ ການກະທຳຂອງ X ຈຶ່ງເປັນການກະທຳຂອງການຟອກເງິນ.

ການທີ່ X ນຳເອົາເງິນທີ່ໄດ້ຈາກການສວຍໃຊ້ໜ້າທີ່ຕຳແໜ່ງເຊັນອະນຸມັດໂຄງການໄປຝັງດິນໄວ້ຢູ່ກ້ອງຂັ້ນໄດເຮືອນຂອງຕົນນັ້ນເປັນການກະທຳທີ່ຜູ້ກ່ຽວຮູ້ວ່າເປັນການນຳເອົາຜົນຂອງການກະທຳຜິດຕົ້ນໄປປົກປິດ ຫຼື ເຊື່ອງອຳ ທີ່ມາຂອງເງິນ

ແຕ່ກໍຍັງຈິງໃຈກະທຳ. ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂຂໍ້ 5.3 ການກະທຳຂອງ X ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານການຟອກເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 130 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາດັດແກ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າການກະທຳດັ່ງກ່າວຄົບຕາມເງື່ອນໄຂຂໍ້ 5.1 ຜົນຈາກການກະທຳຜິດຕົ້ນ. ເຖິງຢ່າງໃດກໍຕາມເຫັນວ່າ X ໄດ້ເງິນຈາກການສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນເຊັນອະນຸມັດໂຄງການແລ້ວນຳເອົາໄປຮັກສາໄວ້ໃນຕູ້ນິລະໄພໃນເຮືອນຂອງຕົນ ບໍ່ສາມາດເວົ້າໄດ້ວ່າມີຈຸດປະສົງເພື່ອປົກປິດ ຫຼື ເຊື່ອງອຳເງິນ ຈຶ່ງບໍ່ເປັນການປ່ຽນຮູບ ຫຼື ໂອນເງິນ. ພ້ອມກັນນັ້ນ, ການກະທຳດັ່ງກ່າວ ບໍ່ເປັນການປິດບັງ, ຊຸກເຊື່ອງທີ່ມາ ຫຼື ຂໍ້ມູນທີ່ແທ້ຈິງຂອງເງິນ ຈຶ່ງບໍ່ເປັນການປົກປິດ ຫຼື ເຊື່ອງອຳ ແລະ ການກະທຳດັ່ງກ່າວແມ່ນ X ເປັນຜູ້ກະທຳຜິດຕົ້ນເປັນຜູ້ກະທຳເອງ, ບໍ່ແມ່ນບຸກຄົນອື່ນເປັນຜູ້ກະທຳ ຈຶ່ງບໍ່ເປັນການໄດ້ມາ, ຄອບຄອງ, ນຳໃຊ້ທຶນທີ່ມາຈາກການກະທຳຜິດຕົ້ນ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຂອງການຟອກເງິນ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂກ່ຽວກັບການກະທຳຂອງການຟອກເງິນ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຟອກເງິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 130 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດສະຖານການຟອກເງິນໃນມາດຕາ 130 ຂອງປະມວນກົດໝາຍອາຍາ ເຫັນວ່າການກະທຳຜິດສະຖານຟອກເງິນເປັນຜົນມາຈາກການກະທຳຜິດອື່ນ ຊຶ່ງກົດໝາຍເອີ້ນວ່າ "ການກະ

ທຳຜິດຕົ້ນ". ເຖິງຢ່າງໃດກໍຕາມ ມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ກຳນົດການກະທຳຜິດຕົ້ນໂດຍກວມເອົາທຸກສະຖານຂອງການກະທຳຜິດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍານັ້ນ ຈຶ່ງມີບັນຫາວ່າການກະທຳຜິດບາງສະຖານເປັນການກະທຳຜິດທີ່ກ່ຽວຂ້ອງກັບຄວາມເສຍຫາຍສ່ວນຕົວບຸກຄົນ, ເປັນການກະທຳຜິດທີ່ມີລັກສະນະເບົາບາງ, ເປັນການກະທຳຜິດທີ່ສາມາດຕົກລົງໄກ່ເກ່ຍກັນໄດ້ ຫຼື ເປັນການກະທຳຜິດທີ່ບໍ່ໄດ້ເກີດຄວາມເສຍຫາຍທີ່ເປັນເງິນ ຫຼື ວັດຖຸ. ຕົວຢ່າງ: ການຄາດຕະກຳ, ການທຳຮ້າຍຮ່າງກາຍ, ການເປັນນັກເລງອັນທະພານ, ການນິນທາ ແລະ ການໃສ່ຮ້າຍ, ການປ້ອຍດ່າ, ການລ່ວງລະເມີດເຄຫະສະຖານ, ການທຳມິດສະຈານ ແລະ ອື່ນໆ ຊຶ່ງບັນດາການກະທຳຜິດດັ່ງກ່າວເປັນການຍາກທີ່ຜູ້ກະທຳຜິດຈະໄດ້ຮັບຜົນປະໂຫຍດເປັນເງິນ ຫຼື ຊັບສິນ ແລະ ເຫັນວ່າບໍ່ມີຄວາມຈຳເປັນທີ່ກົດໝາຍດັ່ງກ່າວຈະເຂົ້າໄປດັດປັບບັນດາການກະທຳຜິດເຫຼົ່ານີ້.

ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງປະມວນກົດໝາຍອາຍາໃນອະນາຄົດວ່າ ການກຳນົດການກະທຳຜິດຕົ້ນຕາມມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະ ໜອງທຶນໃຫ້ແກ່ການກໍ່ການຮ້າຍນັ້ນ ຄວນກຳນົດເປັນກຸ່ມການກະທຳຜິດ ຊຶ່ງຜູ້ກະທຳຜິດສາມາດໄດ້ຮັບຜົນປະໂຫຍດທີ່ເປັນເງິນ ຫຼື ຊັບສິນຈາກການກະທຳຜິດນັ້ນເຊັ່ນ: ຄວນເປັນການກະທຳຜິດທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ການສໍ້ລາດບັງຫຼວງ, ການກະທຳຜິດກ່ຽວກັບການຄ້າອາວຸດ, ການກະທຳຜິດກ່ຽວກັບຢາເສບຕິດ, ການກະທຳຜິດກ່ຽວກັບການຄ້າມະນຸດ, ການກະທຳຜິດກ່ຽວກັບເພດ, ການກະທຳຜິດທີ່ເປັນອາຊະຍາກຳທາງດ້ານເສດຖະກິດ, ການກະທຳຜິດກ່ຽວກັບຊັບບາງປະເພດ ແລະ ອື່ນໆ ເພາະວ່າການກະທຳຜິດດັ່ງທີ່ໄດ້ກ່າວມາຂ້າງເທິງນີ້ ນອກຈາກຈະສ້າງຄວາມເສຍຫາຍແຕ່ຜົນປະໂຫຍດຂອງຊາດ ແລະ ຄວາມໝັ້ນຄົງແລ້ວ ຍັງເປັນການກະທຳຜິດທີ່ສ້າງລາຍໄດ້ທີ່ບໍ່ຖືກຕ້ອງຢ່າງມະຫາສານໃຫ້ແກ່ຜູ້ກະທຳຜິດ ພ້ອມທັງສ້າງຄວາມຫຍຸ້ງຍາກໃຫ້ແກ່ອົງການດຳເນີນຄະດີໃນການຊອກຫາພະຍານຫຼັກຖານເພື່ອມາລົງໂທດກັບຜູ້ກະທຳຜິດເຫຼົ່ານີ້ໄດ້.

# ແຜນວາດສະແດງໃຫ້ເຫັນການກະທຳຜິດສະຖານການ ຟອກເງິນ

ເງິນ ຫຼື ຊັບສິນ ຫຼື ຜົນປະໂຫຍດທີ່ໄດ້ ຈາກການກະທຳຜິດ ຕົ້ນ → ນຳເງິນ ຫຼື ຊັບສິນ ຫຼື ຜົນປະໂຫຍດໄປ ປິດບັງ ຫຼື ຊຸກເຊື່ອງ → ເພື່ອໃຫ້ເງິນ ຫຼື ຊັບສິນ ຫຼື ຜົນປະໂຫຍດກາຍ ເປັນສິ່ງທີ່ຖືກກົດໝາຍ

■ : ຂະບວນການດັ່ງກ່າວ ***ເປັນ*** ການກະທຳຜິດສະຖານຟອກເງິນ

ເງິນ ຫຼື ຊັບສິນ ຫຼື ຜົນປະໂຫຍດທີ່ໄດ້ ຈາກການກະທຳຜິດ ຕົ້ນ → ນຳເງິນ ຫຼື ຊັບສິນ ຫຼື ຜົນປະໂຫຍດນຳໄປ ໃຊ້ຈ່າຍ ຫຼື ໄປນຳໃຊ້

■ : ຂະບວນການດັ່ງກ່າວ ***ບໍ່ເປັນ*** ການກະທຳຜິດສະຖານຟອກເງິນ

# ບົດທີ 3
# ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ຂັບຂີ່ລົດກະບະໄປຕາມເສັ້ນທາງໃນຕົວເມືອງດ້ວຍຄວາມໄວປະມານ 80 ກິໂລແມັດຕໍ່ຊົ່ວໂມງ ໂດຍຄິດວ່າຂັບດ້ວຍຄວາມໄວປະມານນີ້ ຖ້າພົບອຸປະສັກຢູ່ຂ້າງໜ້າກໍຈະສາມາດຫຼົບຫຼີກໄດ້, ພໍຂັບຂີ່ລົດໄປໄດ້ໄລຍະໜຶ່ງ X ບໍ່ສາມາດຄວບຄຸມລົດຂອງຕົນເອງໄດ້ ເຮັດໃຫ້ລົດເສຍຫຼັກຂ້າມເລນໄປຕຳເອົາລົດເກັ່ງຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມກັນ ເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບຫົວແຕກ ແລະ ແຂນເບື້ອງຂວາຫັກ.

**ກໍລະນີສຶກສາທີ 1 ດັດແກ້:** ຖ້າກໍລະນີທີ່ລົດຂອງ X ຂ້າມເລນໄປຕຳລົດຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມກັນ ເຮັດໃຫ້ລົດທັງສອງຄັນເປ່ເພສິມຄວນ, ສ່ວນຜູ້ຂັບຂີ່ລົດທັງສອງຄົນບໍ່ມີຜູ້ໃດໄດ້ຮັບບາດເຈັບ.

### 1.2 ກໍລະນີສຶກສາທີ 2

X ຂັບຂີ່ລົດຈັກໄປຕາມເສັ້ນທາງໃນຕົວເມືອງ ຕາມທິດທາງຂອງຕົນດ້ວຍຄວາມໄວປະມານ 80 ກິໂລແມັດຕໍ່ຊົ່ວໂມງ, ພໍຂັບຂີ່ລົດໄປໄດ້ໄລຍະໜຶ່ງ X ຄິດວ່າບໍ່ມີລົດແລ່ນສວນທາງມາຈຶ່ງໄດ້ຊິງຂຶ້ນໜ້າລົດເກງທີ່ແລ່ນໄປໃນທິດທາງດຽວກັນແລ້ວໄປຕຳກັບລົດຈັກຂອງ A ທີ່ຂັບຂີ່ມາຕາມເສັ້ນທາງດ້ວຍຄວາມໄວປົກກະຕິ ເປັນເຫດເຮັດໃຫ້ລົດຈັກຂອງ X ຄໍຫັກ ແລະ ລົດຈັກຂອງ A ຂາດອອກຈາກກັນເປັນສອງທ່ອນ. ຈາກອຸບປະຕິເຫດຄັ້ງນີ້ X ໜ້າຜາກແຕກ ສ່ວນ A ຂາເບື້ອງຂວາຫັກ.

**ກໍລະນີສຶກສາທີ 2 ດັດແກ້:** X ຂັບຂີ່ລົດຈັກໄປຕາມເສັ້ນທາງໃນຕົວເມືອງ ຕາມທິດທາງຂອງຕົນດ້ວຍຄວາມໄວປະມານ 80 ກິໂລແມັດຕໍ່ຊົ່ວໂມງ, ພໍຂັບຂີ່ລົດໄປໄດ້ໄລຍະໜຶ່ງ X ຄິດວ່າບໍ່ມີລົດແລ່ນສວນທາງມາຈຶ່ງໄດ້ຊິງຂຶ້ນໜ້າລົດເກງ

ທີ່ແລ່ນໄປໃນທິດທາງດຽວກັນ ແລ້ວລົດເສຍຫຼັກໄປຕຳເອົາກັບຂອບທາງ ເປັນເຫດເຮັດໃຫ້ X ແຂນເບື້ອງຊ້າຍຫັກ.

**1.3 ກໍລະນີສຶກສາທີ 3**

X ດື່ມສິ່ງມືນເມົາ ແລ້ວຂັບຂີ່ລົດຈັກໂດຍມີ A ຊ້ອນທ້າຍໄປຕາມເສັ້ນທາງໃນຕົວເມືອງຕາມທິດທາງສັນຈອນຂອງຕົນດ້ວຍຄວາມໄວປົກກະຕິ, ພໍຂັບຂີ່ໄປໄດ້ໄລຍະໜຶ່ງ X ບໍ່ທັນໄດ້ສັງເກດວ່າທາງໜ້າມີສີ່ແຍກໄຟແດງຈຶ່ງໄດ້ຂັບຂ້າມເລນໄປຕຳກັບລົດຄັນອື່ນ ເປັນເຫດເຮັດໃຫ້ A ຕົກລົງຈາກລົດຫົວແຕກ ແລະ ຂາເບື້ອງຊ້າຍຫັກ.

**ກໍລະນີສຶກສາທີ 3 ດັດແກ້:** X ດື່ມສິ່ງມືນເມົາ ແລ້ວຂັບຂີ່ລົດຈັກໂດຍມີ A ຊ້ອນທ້າຍໄປຕາມເສັ້ນທາງໃນຕົວເມືອງຕາມທິດທາງສັນຈອນຂອງຕົນດ້ວຍຄວາມໄວປົກກະຕິ, ພໍຂັບຂີ່ໄປໄດ້ໄລຍະໜຶ່ງ X ບໍ່ທັນໄດ້ສັງເກດວ່າຂ້າງໜ້າມີສີ່ແຍກໄຟແດງຈຶ່ງໄດ້ຂັບລ່ວງໄຟແດງໄປຕຳກັບຂອບທາງ ເປັນເຫດເຮັດໃຫ້ບັງລົມໜ້າລົດແຕກອອກ ແຕ່ບໍ່ມີຜູ້ໃດໄດ້ຮັບບາດເຈັບ.

**1.4 ກໍລະນີສຶກສາທີ 4**

ໃນຂະນະທີ່ X ກຳລັງຂັບລົດໄປຕາມທິດທາງຂອງຕົນຢູ່ນັ້ນ ມີສຽງໂທລະສັບດັງຂຶ້ນ X ຈຶ່ງຮັບສາຍ ແລະ ສາຍຕາຈັບຈ້ອງຢູ່ກັບໂທລະສັບໂດຍບໍ່ທັນໄດ້ສັງເກດວ່າຂ້າງໜ້າເປັນເສັ້ນຫ້າມຊີງ, X ຈຶ່ງຂັບຊີງຂຶ້ນໜ້າລົດຄັນອື່ນ ແລ້ວໄປຕຳກັບລົດຂອງ A ທີ່ຂັບສວນທາງມາແຕ່ທິດທາງກົງກັນຂ້າມ ເປັນເຫດເຮັດໃຫ້ລົດທັງສອງຄັນກະໂປ່ງໜ້າຍຸບ, A ໄດ້ຮັບບາດເຈັບຫົວແຕກ ແລະ ຂາເບື້ອງຊ້າຍຫັກ ສ່ວນ X ບໍ່ໄດ້ຮັບບາດເຈັບແຕ່ຢ່າງໃດ.

**ກໍລະນີສຶກສາທີ 4 ດັດແກ້:** ໃນຂະນະທີ່ X ກຳລັງຂັບລົດໄປຕາມທິດທາງຂອງຕົນຢູ່ນັ້ນ ມີສຽງໂທລະສັບດັງຂຶ້ນ X ຈຶ່ງຮັບສາຍ ແລະ ສາຍຕາຈັບຈ້ອງຢູ່ກັບໂທລະສັບໂດຍບໍ່ທັນໄດ້ສັງເກດວ່າຂ້າງໜ້າເປັນເສັ້ນຫ້າມຊີງ, X ຈຶ່ງຂັບຊີງຂຶ້ນໜ້າລົດຄັນອື່ນ ແລ້ວໄປຕຳເອົາລົດຂອງ A ທີ່ຂັບສວນທາງມາແຕ່ທິດທາງກົງກັນຂ້າມກັນ ເປັນເຫດເຮັດໃຫ້ລົດທັງສອງຄັນກະໂປ່ງໜ້າຍຸບ, X ກັບ A ບໍ່ໄດ້ຮັບບາດເຈັບແຕ່ຢ່າງໃດ.

## 2. ມາດຕາ 145

ບຸກຄົນໃດ ຫາກໄດ້ລະເມີດກົດຈະລາຈອນ ແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ອື່ນຖືກບາດເຈັບ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາສາມປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000 .000 ກີບ.

## 3. ເຫດຜົນການບັນຍັດມາດຕາ

ເມື່ອພິຈາລະນາສະພາບການສັນຈອນບົນທ້ອງຖະໜົນໃນ ສປປ ລາວ ແລ້ວເຫັນວ່າການຂັບຂີ່ຍານພາຫະນະ ແລະ ການໃຊ້ລົດໃຊ້ຖະໜົນໂດຍບໍ່ຖືກຕ້ອງຕາມລະບຽບ ມີຄວາມສ່ຽງຈະເກີດອຸບປະຕິເຫດ, ສ້າງຄວາມເສຍຫາຍແກ່ຊີວິດ, ສຸຂະພາບຂອງປະຊາຊົນ. ດ້ວຍເຫດນີ້, ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດຈຶ່ງນຳມາກຳນົດເປັນຄວາມຜິດໄວ້ໃນມາດຕາ 145 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 145 ຂອງປະມວນກົດໝາຍອາຍາບັນຍັດໄວ້ເພື່ອປົກປ້ອງຄວາມເປັນລະບຽບຮຽບຮ້ອຍໃນການໃຊ້ລົດໃຊ້ຖະໜົນບໍ່ໃຫ້ເກີດອຸບປະຕິເຫດ. ດ້ວຍເຫດນີ້, ປະມວນກົດໝາຍອາຍາມາດຕາດັ່ງກ່າວຈຶ່ງປົກປ້ອງຄວາມເປັນລະບຽບຮຽບຮ້ອຍໃນການສັນຈອນ ແລະ ການຂັບຂີ່ຍານພາຫະນະບົນທ້ອງຖະໜົນ.

ວັດຖຸປະສົງທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາໄດ້ກຳນົດໄວ້.

## 5. ເງື່ອນໄຂມາດຕາ

ເງື່ອນໄຂຈະເປັນການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດຕ້ອງປະກອບມີ 4 ເງື່ອນໄຂ ຄື: 1. ການລະເມີດກົດຈະລາຈອນ; 2. ພາໃຫ້ເກີດອຸບປະຕິເຫດ, 3. ເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ ຫຼື ເສຍຊີວິດ ແລະ 4. ການກະທຳຜິດດ້ວຍຄວາມປະໝາດ.

ເງື່ອນໄຂ ຂໍ້ທີ 1, 2 ແລະ ຂໍ້ທີ 3 ເປັນອົງປະກອບດ້ານພາວະວິໄສ ແລະ ຂໍ້ທີ 4 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1 ລະເມີດກົດຈະລາຈອນ

ລະເມີດກົດຈະລາຈອນ ໝາຍເຖິງການລະເມີດລະບຽບການກ່ຽວກັບການຈະລາຈອນທາງບົກ ຕາມທີ່ກຳນົດໄວ້ໃນ ດຳລັດວ່າດ້ວຍກົດຈະລາຈອນທາງບົກ ເລກທີ 615/ລບ, ລົງວັນທີ 9 ທັນວາ 2020 ເຊັ່ນ: ຂັບຂີ່ຍານພາຫະນະໃນສະພາບມຶນເມົາເກີນກົດໝາຍກຳນົດ, ຂັບຂີ່ຍານພາຫະນະດ້ວຍຄວາມໄວເກີນກຳນົດ, ລະເມີດໄຟອຳນາດ, ລະເມີດປ້າຍສັນຍານ, ລະເມີດເຄື່ອງໝາຍຈະລາຈອນທາງບົກ, ຂັບຂີ່ລົດບໍ່ແນບເຂົ້າເບື້ອງຂວາມືຂອງຕົນ, ການຊ່ວງຊີງພາຫະນະອື່ນທີ່ບໍ່ຮັບປະກັນຄວາມປອດໄພ, ຂັບຂີ່ອອກຈາກທາງຮ່ອມໂດຍບໍ່ປ່ອຍທາງໃຫ້ລົດຢູ່ທາງໃຫຍ່ທີ່ໄປຊື່ໄດ້ໄປກ່ອນ, ນຳໃຊ້ໂທລະສັບໃນຂະນະຂັບຂີ່ລົດ ແລະ ອື່ນໆ.

ການລະເມີດກົດຈະລາຈອນສະແດງອອກຢ່າງໃດຢ່າງໜຶ່ງໃນ 2 ກໍລະນີ ຄື: ເຈດຕະນາໃນການລະເມີດກົດຈະລາຈອນ ຫຼື ປະໝາດໃນການລະເມີດກົດຈະລາຈອນ.

### 5.2 ພາໃຫ້ເກີດອຸບປະຕິເຫດ

ພາໃຫ້ເກີດອຸບປະຕິເຫດໝາຍເຖິງ ການລະເມີດນັ້ນເປັນຕົ້ນເຫດທີ່ເຮັດໃຫ້ອຸບປະຕິເຫດເກີດຂຶ້ນ ເນື່ອງມາຈາກການລະເມີດກົດຈະລາຈອນ. ອຸບປະຕິເຫດແມ່ນເຫດການທີ່ເກີດຂຶ້ນກັບຍານພາຫະນະທີ່ສັນຈອນບົນທ້ອງຖະໜົນດ້ວຍການໄປຕຳ

ຫຼື ດາດກັບຍານພາຫະນະ, ຄົນ, ສັດ, ວັດຖຸສິ່ງຂອງ, ສິ່ງປຸກສ້າງຕາມແຄມທາງ ຊຶ່ງພາໃຫ້ມີຄົນບາດເຈັບ, ເສຍອົງຄະ ຫຼື ເສຍຊີວິດ ຫຼື ຊັບສິນໄດ້ຮັບຄວາມເສຍຫາຍ.

### 5.3 ເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ

ເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ ຫຼື ພິການ, ເສຍຊີວິດ ໝາຍເຖິງການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດນັ້ນເປັນເຫດເຮັດໃຫ້ຜູ້ອື່ນ ເຊັ່ນ: ຄົນຍ່າງແຄມທາງ, ຄົນທີ່ໂດຍສານໄປນຳຜູ້ຂັບຂີ່, ຄົນທີ່ໃຊ້ລົດໃຊ້ຖະໜົນຮ່ວມກັນບໍ່ວ່າຈະຂັບຂີ່ໄປໃນທິດທາງດຽວກັນ ຫຼື ມາແຕ່ທິດທາງກົງກັນຂ້າມ ມີບາດແຜຕາມຕົນຕົວ, ແຂນ ຫຼື ຂາຫັກ, ສູນເສຍອະໄວຍະວະ, ອະໄວຍະວະໃດໜຶ່ງບໍ່ສາມາດກັບມາໃຊ້ງານໄດ້ເໝືອນເດີມ, ເສຍຊີວິດ ແລະ ອື່ນໆ.

### 5.4 ການກະທຳຜິດດ້ວຍຄວາມປະໝາດ

ການກະທຳຜິດດ້ວຍຄວາມປະໝາດ ແມ່ນການກະທຳທີ່ຂາດຄວາມລະມັດລະວັງ ຊຶ່ງຜູ້ກະທຳຜິດທີ່ຢູ່ໃນສະພາບການນັ້ນ ສາມາດຄາດຄະເນ, ເຊື່ອໝັ້ນ ແລະ ໝັ້ນໃຈວ່າການລະເມີດກົດຈະລາຈອນຂອງຕົນຈະບໍ່ເກີດອຸບປະຕິເຫດ ຫຼື ຖ້າເຫດການນັ້ນເກີດຂຶ້ນຕົນຈະສາມາດປ້ອງກັນ ຫຼື ຫຼີກລ້ຽງໄດ້.

## 6. ຄຳຕອບກໍລະນີສຶກສາ.

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ຂັບຂີ່ລົດໄປຕາມເສັ້ນທາງໃນຕົວເມືອງດ້ວຍຄວາມໄວປະມານ 80 ກິໂລແມັດຕໍ່ຊົ່ວໂມງ ໂດຍຄິດວ່າຂັບດ້ວຍຄວາມໄວປະມານນີ້ຖ້າພົບອຸປະສັກຢູ່ຂ້າງໜ້າກໍຈະສາມາດຫຼົບຫຼີກໄດ້ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າການຂັບລົດໃນຕົວເມືອງດ້ວຍຄວາມໄວປະມານນີ້ຖືວ່າເປັນການເຈດຕະນາລະເມີດກົດຈະລາຈອນ.

ການທີ່ X ບໍ່ສາມາດຄວບຄຸມລົດຂອງຕົນເອງໄດ້ ແລ້ວເຮັດໃຫ້ລົດເສຍຫຼັກຂ້າມເລນໄປຕຳກັບລົດເກັ່ງຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມກັນນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຍ້ອນວ່າຜູ້ກ່ຽວລະເມີດກົດຈະລາຈອນ ຈຶ່ງຖືວ່າຜູ້ກ່ຽວເປັນຕົ້ນເຫດພາໃຫ້ເກີດອຸບປະຕິເຫດ.

ຈາກການລະເມີດກົດຈະລາຈອນຂອງ X ໃນຄັ້ງນີ້ເປັນເຫດເຮັດໃຫ້ A ທີ່ຂັບມາແຕ່ທິດທາງກົງກັນຂ້າມກັນແລ້ວໄດ້ຮັບບາດເຈັບຫົວແຕກ ແລະ ແຂນເບື້ອງຂວາຫັກນັ້ນ ເມື່ອນໍາມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຍ້ອນວ່າຜູ້ໄດ້ຮັບບາດເຈັບແມ່ນ A ຈຶ່ງຖືວ່າເປັນການເຮັດໃຫ້ຜູ້ອື່ນຖືກບາດເຈັບ.

ການຂັບລົດຂອງ X ແລ້ວເກີດອຸບປະຕິເຫດໄປຕໍາກັບລົດຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມຈົນເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບນັ້ນ ເມື່ອນໍາມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.4 ຍ້ອນວ່າເປັນການກະທໍາທີ່ຂາດຄວາມລະມັດລະວັງ, ສາມາດຄາດຄະເນ, ເຊື່ອໝັ້ນ ແລະ ໝັ້ນໃຈວ່າການລະເມີດກົດຈະລາຈອນຂອງຕົນຈະບໍ່ເກີດອຸປະຕິເຫດ, ຄິດວ່າຂັບດ້ວຍຄວາມໄວປະມານນີ້ ຖ້າພົບອຸປະສັກຢູ່ຂ້າງໜ້າກໍຈະສາມາດຫຼົບຫຼີກໄດ້ ຈຶ່ງເປັນການກະທໍາໂດຍປະໝາດ.

ເມື່ອປຽບທຽບການກະທໍາຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກໍານົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທໍາຂອງ X ເປັນການກະທໍາຜິດໃນສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກໍານົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**ຄໍາຕອບກໍລະນີສຶກສາທີ 1 ດັດແກ້**

ຈາກກໍລະນີສຶກສາທີ່ດັດແກ້ນີ້ ເມື່ອນໍາມາປຽບທຽບກັບເງື່ອນໄຂ ຂໍ້ທີ 5 ແລ້ວເຫັນວ່າການກະທໍາຂອງ X ຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບການລະເມີດກົດຈະລາຈອນ ແລະ ຄົບຕາມເງື່ອນໄຂຂໍ້ 5.2 ກ່ຽວກັບພາໃຫ້ເກີດອຸບປະຕິເຫດ. ເຖິງຢ່າງໃດກໍຕາມການທີ່ X ຂັບລົດໄປຕໍາກັບລົດຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມເຖິງວ່າລົດທັງສອງຄັນຈະໄດ້ຄວາມເສຍຫາຍໂດຍກະໂປ່ງໜ້າຍຸບກໍຕາມແຕ່ອຸບປະຕິເຫດຄັ້ງນີ້ບໍ່ມີຜູ້ໃດໄດ້ຮັບບາດເຈັບ, ຈຶ່ງຖືວ່າຍັງບໍ່ແມ່ນການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ. ດັ່ງນັ້ນ, ເມື່ອນໍາມາປຽບທຽບແລ້ວຈຶ່ງບໍ່ກົງກັບເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກໍານົດໄວ້ໃນຂໍ້ 5 ແລ້ວເຫັນວ່າ ການກະທໍາຂອງ X ຂາດເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ. ການກະທໍາຂອງ X ຈຶ່ງບໍ່ເປັນການກະທໍາຜິດສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກໍານົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ຂັບຂີ່ລົດຈັກໄປຕາມເສັ້ນທາງໃນຕົວເມືອງດ້ວຍຄວາມໄວປະມານ 80 ກິໂລແມັດຕໍ່ຊົ່ວໂມງ ໂດຍຄິດວ່າບໍ່ມີລົດຄັນອື່ນແລ່ນສວນທາງມາຈຶ່ງໄດ້ຊີງຂຶ້ນໜ້າລົດເກງທີ່ແລ່ນໄປໃນທິດທາງດຽວກັນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າຜູ້ກ່ຽວຂັບລົດຈັກຊີງຂຶ້ນໜ້າດ້ວຍຄວາມໄວປະມານນີ້ໃນຕົວເມືອງໂດຍຄິດວ່າບໍ່ມີລົດຄັນອື່ນແລ່ນສວນທາງມານັ້ນ ຈຶ່ງເປັນການເຈດຕະນາລະເມີດກົດຈະລາຈອນ.

ການທີ່ X ຂັບລົດຈັກຊີງຂຶ້ນໜ້າລົດເກງທີ່ແລ່ນໄປໃນທິດທາງດຽວກັນແລ້ວໄປຕຳກັບລົດຈັກຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຍ້ອນວ່າການຂັບລົດຈັກຂອງ X ດ້ວຍໄວເກີນກຳນົດ ແລະ ບໍ່ສັງເກດທິດທາງການຈະລາຈອນໃຫ້ດີ ຈຶ່ງຖືວ່າເປັນຕົ້ນເຫດພາໃຫ້ເກີດອຸບປະຕິເຫດ.

ຈາກການລະເມີດກົດຈະລາຈອນຂອງ X ໃນຄັ້ງນີ້ເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບ ແລະ ເຖິງວ່າໃນກໍລະນີນີ້ X ໄດ້ຮັບບາດເຈັບນຳກໍຕາມ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຍ້ອນວ່າຜູ້ໄດ້ຮັບບາດເຈັບນຳຕົນເອງແມ່ນ A ຈຶ່ງຖືວ່າເປັນການເຮັດໃຫ້ຜູ້ອື່ນຖືກບາດເຈັບ.

ການຂັບລົດຂອງ X ແລ້ວເກີດອຸບປະຕິເຫດໄປຕຳກັບລົດຂອງ A ທີ່ແລ່ນມາແຕ່ທິດທາງກົງກັນຂ້າມໄດ້ຮັບບາດເຈັບນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.4 ຍ້ອນວ່າເປັນການກະທຳທີ່ບໍ່ຄິດໃຫ້ດີ, ຂາດຄວາມລະມັດລະວັງ, ສາມາດຄາດຄະເນ, ເຊື່ອໝັ້ນ ແລະ ໝັ້ນໃຈວ່າການລະເມີດກົດຈະລາຈອນຂອງຕົນຈະບໍ່ເກີດອຸປະຕິເຫດ, ຄິດວ່າຂັບລົດດ້ວຍຄວາມໄວປະມານນີ້ຈະບໍ່ເກີດອຸບປະຕິເຫດ ຈຶ່ງເປັນການກະທຳໂດຍປະໝາດ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາທີ່ດັດແກ້ນີ້ ເມື່ອນຳມາປຽບທຽບກັບເງື່ອນໄຂ ຂໍ້ທີ 5 ແລ້ວເຫັນວ່າການກະທຳຂອງ X ຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບການລະເມີດກົດຈະລາຈອນ ແລະ ຄົບຕາມເງື່ອນໄຂຂໍ້ 5.2 ກ່ຽວກັບພາໃຫ້ເກີດອຸບປະຕິເຫດ. ເຖິງຢ່າງໃດກໍຕາມການທີ່ X ຂັບລົດເສຍຫຼັກໄປຕຳເອົາກັບຂອບທາງ ເປັນເຫດເຮັດໃຫ້ແຂນເບື້ອງຊ້າຍຂອງ X ຫັກເອງ, ຈຶ່ງຖືວ່າຍັງບໍ່ແມ່ນການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ. ດັ່ງນັ້ນ, ເມື່ອນຳມາປຽບທຽບແລ້ວຈຶ່ງບໍ່ກົງກັບເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ດື່ມສິ່ງມຶນເມົາແລ້ວຂັບຂີ່ລົດດ້ວຍຄວາມໄວປົກກະຕິໄປໃນຕົວເມືອງ ໂດຍບໍ່ທັນໄດ້ສັງເກດວ່າທາງມີສີ່ແຍກໄຟແດງຈຶ່ງໄດ້ຂັບຂ້າມເລນໄປຕຳກັບລົດຂອງຄົນອື່ນນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າຜູ້ກ່ຽວຂັບລົດໃນສະພາບມຶນເມົາ ແລະ ບໍ່ທັນໄດ້ສັງເກດວ່າທາງໜ້າມີສີ່ແຍກໄຟແດງ ຈຶ່ງເປັນການເມີດກົດຈະລາຈອນດ້ວຍຄວາມປະໝາດ.

ການທີ່ X ຂັບລົດຈັກໃນສະພາບມຶນເມົາ ແລະ ຂັບຂີ່ລ່ວງໄຟແດງໄປຕຳກັບລົດຂອງຄົນອື່ນນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຍ້ອນວ່າການຂັບລົດຂອງ X ຢູ່ໃນສະພາບມຶນເມົາ ແລະ ບໍ່ສັງເກດທາງສີ່ແຍກມີໄຟແດງຈຶ່ງຖືວ່າຜູ້ກ່ຽວເປັນຕົ້ນເຫດພາໃຫ້ເກີດອຸບປະຕິເຫດ.

ຈາກການຂັບລົດຈັກຂອງ X ແລ້ວຂ້າມໄຟແດງໄປຕຳກັບລົດຂອງຄົນອື່ນໂດຍມີ A ຊ້ອນທ້າຍມານຳຄັ້ງນີ້ຈົນເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບນັ້ນເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຈຶ່ງຖືວ່າເປັນການເຮັດໃຫ້ຜູ້ອື່ນຖືກບາດເຈັບ.

ການລະເມີດກົດຈະລາຈອນຂອງ X ແລ້ວເກີດອຸບປະຕິເຫດໄປຕຳກັບລົດຂອງຄົນອື່ນຈົນເປັນເຫດເຮັດໃຫ້ A ທີ່ນັ່ງຊ້ອນທ້າຍມານຳຕົກລົງຈາກລົດແລ້ວຫົວແຕກ ແລະ ຂາເບື້ອງຊ້າຍຫັກ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.4 ຍ້ອນວ່າເປັນການຂັບລົດໃນສະພາບທີ່ມຶນເມົາ, ຂັບຂີ່ດ້ວຍຄວາມຂາດສະຕິ, ຂັບຂີ່ໂດຍບໍ່ສັງເກດໄຟຈະລາຈອນ ຈຶ່ງຖືວ່າເປັນການກະທຳໂດຍປະໝາດ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້**

ຈາກກໍລະນີສຶກສາທີ່ດັດແກ້ນີ້ ເມື່ອນຳມາປຽບທຽບກັບເງື່ອນໄຂ ຂໍ້ທີ 5 ແລ້ວເຫັນວ່າການກະທຳຂອງ X ຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບການລະເມີດກົດຈະລາຈອນ ແລະ ຄົບຕາມເງື່ອນໄຂຂໍ້ 5.2 ກ່ຽວກັບພາໃຫ້ເກີດອຸບປະຕິເຫດ. ເຖິງຢ່າງໃດກໍຕາມການທີ່ X ຂັບລົດລ່ວງໄຟແດງໄປຕຳເອົາກັບຂອບທາງ ເປັນເຫດເຮັດໃຫ້ບັງລົມໜ້າລົດແຕກອອກ ແຕ່ບໍ່ມີຜູ້ໃດໄດ້ຮັບບາດເຈັບ ນັ້ນ, ຈຶ່ງຖືວ່າຍັງບໍ່ແມ່ນການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ. ດັ່ງນັ້ນ, ເມື່ອນຳມາປຽບທຽບແລ້ວຈຶ່ງບໍ່ກົງກັບເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**6.4 ຄຳຕອບກໍລະນີສຶກສາທີ 4**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ລືມສາຍໂທລະສັບ ແລະ ສາຍຕາຈັບຈ້ອງຢູ່ກັບໂທລະສັບໃນເວລາຂັບລົດໂດຍບໍ່ທັນໄດ້ສັງເກດວ່າທາງໜ້າເປັນທາງຫ້າມຊີງຈຶ່ງໄດ້ຂັບລົດຊີງຂຶ້ນໜ້າໃນທາງຫ້າມຊີງນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າຜູ້ກ່ຽວຂັບລົດໃນຂະນະໃຊ້ໂທລະສັບ ແລະ ຊີງຂຶ້ນ

ໜ້າໂດຍບໍ່ສັງເກດເບິ່ງທາງຫ້າມຊີງ ຈຶ່ງເປັນການເມີດກົດຈະລາຈອນດ້ວຍຄວາມປະໝາດ.

ການທີ່ X ຂັບລົດຊີງຂຶ້ນໜ້າລົດຄັນອື່ນໃນຂະນະໃຊ້ໂທລະສັບ ແລະ ບໍ່ສັງເກດເບິ່ງທາງໜ້າເປັນທາງຫ້າມຊີງແລ້ວໄປຕຳກັບລົດຂອງ A ທີ່ຂັບສວນທາງມາແຕ່ທິດທາງກົງກັນຂ້າມນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຍ້ອນວ່າການຂັບລົດຂອງ X ຢູ່ໃນຂະນະໃຊ້ໂທລະສັບ ແລະ ບໍ່ສັງເກດທາງຫ້າມຊີງ ຈຶ່ງຖືວ່າຜູ້ກ່ຽວເປັນຕົ້ນເຫດພາໃຫ້ເກີດອຸບປະຕິເຫດ.

ຈາກການຂັບລົດຂອງ X ດ້ວຍການຊີງຂຶ້ນໜ້າແລ້ວໄປຕຳກັບລົດຂອງ A ທີ່ຂັບສວນທາງມາແຕ່ທິດທາງກົງກັນຂ້າມ ຈົນເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບຫົວແຕກ ແລະ ຂາເບື້ອງຊ້າຍຫັກນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຈຶ່ງຖືວ່າເປັນການເຮັດໃຫ້ຜູ້ອື່ນຖືກບາດເຈັບ.

ການລະເມີດກົດຈະລາຈອນຂອງ X ດ້ວຍການຊີງຂຶ້ນໜ້າແລ້ວເກີດອຸບປະຕິເຫດໄປຕຳກັບລົດຂອງ A ຈົນເປັນເຫດເຮັດໃຫ້ A ໄດ້ຮັບບາດເຈັບຫົວແຕກ ແລະ ຂາເບື້ອງຊ້າຍຫັກນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.4 ຍ້ອນວ່າເປັນການຂັບລົດໃນຂະນະໃຊ້ໂທລະສັບ, ຂັບຂີ່ດ້ວຍຄວາມຂາດສະຕິ, ຂັບຂີ່ໂດຍບໍ່ສັງເກດເສັ້ນທາງຫ້າມຊີງ ຈຶ່ງຖືວ່າເປັນການກະທຳໂດຍປະໝາດ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 4 ດັດແກ້**

ຈາກກໍລະນີສຶກສາທີ່ດັດແກ້ນີ້ ເມື່ອນຳມາປຽບທຽບກັບເງື່ອນໄຂ ຂໍ້ທີ 5 ແລ້ວເຫັນວ່າການກະທຳຂອງ X ຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບການລະເມີດກົດຈະລາຈອນ ແລະ ຄົບຕາມເງື່ອນໄຂຂໍ້ 5.2 ກ່ຽວກັບພາໃຫ້ເກີດອຸບປະຕິເຫດ. ເຖິງຢ່າງໃດກໍຕາມການທີ່ X ຂັບລົດໃນຂະນະໃຊ້ໂທລະສັບແລ້ວຂັບຊີງຂຶ້ນໜ້າລົດຄັນອື່ນ ແລ້ວໄປຕຳເອົາລົດຂອງ A ທີ່ຂັບສວນທາງມາແຕ່ທິດທາງກົງກັນຂ້າມກັນ ເປັນເຫດເຮັດໃຫ້ລົດທັງສອງຄັນກະໂປ່ງໜ້າຍຸບ, X ກັບ A ບໍ່ໄດ້ຮັບບາດເຈັບແຕ່ຢ່າງໃດນັ້ນ, ຈຶ່ງຖືວ່າຍັງບໍ່ແມ່ນການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ. ດັ່ງນັ້ນ, ເມື່ອນຳ

ມາປຽບທຽບແລ້ວຈຶ່ງບໍ່ກົງກັບເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂຂໍ້ 5.3 ກ່ຽວກັບເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ມາດຕາ 145 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດໃນສະຖານການລະເມີດກົດຈະລາ ຈອນທີ່ພາໃຫ້ເກີດອຸບປະຕິເຫດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 145 ຂອງປະ ມວນກົດໝາຍອາຍາ ຊຶ່ງໄດ້ບັນຍັດຂໍ້ຄວາມທີ່ສຳຄັນໄວ້ວ່າ: "ບຸກຄົນໃດຫາກໄດ້ລະເມີດກົດຈະລາຈອນແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ອື່ນຖືກບາດເຈັບ" ນີ້ຈຶ່ງມີຂໍ້ຄວນພິຈາລະນາວ່າຖ້າການລະເມີດກົດຈະລາຈອນນັ້ນ ຫາກບໍ່ໄດ້ເຈດຕະນາລະເມີດເຊັ່ນ: ລະເມີດປ້າຍຫ້າມໂດຍທົ່ວໄປແລ້ວບໍ່ມີໃຜຮູ້ໄດ້ວ່າມີປ້າຍຫ້າມ, ການຂັບຂີ່ລົດຜິດເລນໂດຍບໍ່ຮູ້ວ່າມີການປັບປ່ຽນທິດທາງຈະລາຈອນ ເພາະໂດຍທົ່ວໄປຜ່ານມາກໍເຄີຍຂັບຂີ່ໃນທິດທາງນີ້ມາກ່ອນ, ຂັບຂີ່ລົດອອກນອກເລນເນື່ອງຈາກເປັນລົມຊັກ ຫຼື ປະສາດກະຕຸກກະທັນຫັນ, ຂັບຂີ່ລົດລ່ວງໄຟແດງເນື່ອງຈາກຕື່ນຕົກໃຈຈາກສັດຮ້າຍ ຫຼື ມີງູພິດໃນລົດ ແລະ ອື່ນໆ ແລ້ວເກີດອຸບປະຕິເຫດ ແລະ ເຮັດໃຫ້ຄົນອື່ນຖືກບາດເຈັບ ຫຼື ເສຍອົງຄະ ຫຼື ເສຍຊີວິດ. ຖ້າກໍລະນີດັ່ງກ່າວ ກົດໝາຍກຳນົດໃຫ້ຜູ້ລະເມີດມີຄວາມຜິດ ແລະ ຖືກລົງໂທດເຫັນວ່າເປັນການບໍ່ເໝາະສົມ ແລະ ບໍ່ຍຸຕິທຳ.

ດັ່ງນັ້ນ, ຈຶ່ງສະເໜີວ່າການລະເມີດກົດຈະລາຈອນຕ້ອງເປັນການເຈດຕະນາລະເມີດ ຫຼື ດ້ວຍຄວາມປະໝາດເທົ່ານັ້ນຈຶ່ງຈະມີຄວາມຜິດໃນສະຖານນີ້. ດັ່ງນັ້ນ, ມາດຕາ 145 ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດຄວນຈະບັນຍັດຂໍ້ຄວາມໃໝ່ວ່າ: "ບຸກຄົນໃດຫາກໄດ້ເຈດຕະນາ ຫຼື ດ້ວຍຄວາມປະໝາດລະເມີດ

ກົດຈະລາຈອນແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ອື່ນຖືກບາດເຈັບ, ເສຍອົງຄະ, ພິການ ຫຼື ເສຍຊີວິດຈະຖືກລົງໂທດຕັດອິດສະລະພາບແຕ່......”.

## ແຜນວາດສະແດງໃຫ້ເຫັນການກະທຳຜິດສະຖານການ ລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ



# ບົດທີ 4
# ການແພ່ເຊື້ອພະຍາດທີ່ຮ້າຍແຮງ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ເຄີຍໄປມົ້ວສຸມກັບກຸ່ມຄົນທີ່ມີຄວາມສ່ຽງທີ່ຕິດເຊື້ອ HIV ຕໍ່ມາ X ໄດ້ໄປພົວພັນກັບ A ແບບຊູ້ສາວ ແລະ ຈະແຕ່ງດອງກັນ, X ຮູ້ຕົວວ່າຕົນມີຄວາມສ່ຽງອາດຈະຕິດເຊື້ອ HIV ເພາະເຄີຍພົວພັນກັບກຸ່ມສ່ຽງຜ່ານມາ ແຕ່ X ກໍບໍ່ໄດ້ບອກໃຫ້ A ຮູ້, ຕໍ່ມາ A ມີອາການບໍ່ສະບາຍຈຶ່ງໄປກວດ ແລະ ຜົນກວດອອກມາວ່າ A ຕິດເຊື້ອ HIV. A ໝັ້ນໃຈວ່າຕິດຈາກ X ແນ່ນອນເພາະຜ່ານມາຕົນບໍ່ເຄີຍມີເພດສໍາພັນກັບໃຜມາກ່ອນ.

### 1.2 ກໍລະນີສຶກສາທີ 2

A ໄປພົວພັນກັບ X ທີ່ເປັນພະນັກງານຂອງຮ້ານອາຫານແຫ່ງໜຶ່ງ ແລະ X ໄດ້ບອກກັບ A ວ່າຕົນເປັນສາວບໍລິສຸດທັງໆ ທີ່ X ຮູ້ວ່າຕົນຕິດເຊື້ອ HIV ມາກ່ອນແລ້ວ, X ແລະ A ມີເພດສໍາພັນກັນໂດຍບໍ່ໄດ້ປ້ອງກັນ, ຕໍ່ມາ A ຕິດເຊື້ອ HIV ແລະ A ໝັ້ນໃຈວ່າຕົນຕິດເຊື້ອມາຈາກ X ເນື່ອງຈາກວ່າຜ່ານມາທຸກໆຄັ້ງທີ່ມີເພດສໍາພັນກັບຄົນອື່ນ A ຈະປ້ອງກັນ.

**ກໍລະນີສຶກສາທີ 2 ດັດແກ້:** A ໄປພົວພັນກັບ X ແລະ Y ທີ່ເປັນພະນັກງານຂອງຮ້ານອາຫານແຫ່ງໜຶ່ງ, A ມີເພດສໍາພັນກັບ X ແລະ Y ໂດຍບໍ່ໄດ້ປ້ອງກັນ, ຕໍ່ມາ A ໄດ້ຕິດເຊື້ອ HIV ແຕ່ບໍ່ຮູ້ວ່າຕິດຈາກໃຜ. X ແລະ Y ກໍບໍ່ຮູ້ມາກ່ອນວ່າຕົນມີເຊື້ອພະຍາດດັ່ງກ່າວນີ້. A ຈຶ່ງບອກໃຫ້ X ແລະ Y ໄປກວດ ແລະ ຜົນກວດອອກມາວ່າ X ມີເຊື້ອ HIV. A ຈຶ່ງຮູ້ວ່າຕົນຕິດເຊື້ອຈາກ X.

### 1.3 ກໍລະນີສຶກສາທີ 3

X ຜະລິດເຊື້ອພະຍາດທີ່ຮ້າຍແຮງຊະນິດໜຶ່ງຂຶ້ນມາ ຊຶ່ງເປັນເຊື້ອພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້ ແຕ່ຢາກເອົາໄປແພ່ໃສ່ຄົນອື່ນ ຈຶ່ງບອກ A, B ແລະ C ວ່າຕົນເອງມີຢາວິຕາມິນເພື່ອບໍາລຸງຮ່າງກາຍ. ພວກກ່ຽວຫຼົງເຊື່ອວ່າເປັນຢາດີ, ຈຶ່ງ

ບອກ X ເອົາມາໃຫ້ກິນ. ພາຍຫຼັງກິນແລ້ວ ຈຶ່ງເຮັດໃຫ້ A, B ແລະ C ຕິດເຊື້ອພະຍາດດັ່ງກ່າວ.

**1.4 ກໍລະນີສຶກສາທີ 4**

A ມີອາການເຈັບທ້ອງຮຸນແຮງຈຶ່ງໄດ້ໄປໂຮງໝໍ ພາຍຫຼັງທີ່ໝໍກວດອາການແລ້ວຈຶ່ງຂຽນໃບສັ່ງຢາໃຫ້ X ຊຶ່ງເປັນພະຍາບານໃຫ້ເອົາໄປສັກໃຫ້ A. ຍ້ອນຄວາມມັກງ່າຍ ແລະ ຄິດວ່າໃຊ້ເຂັມສັກຢາທີ່ເຄີຍສັກໃຫ້ B ພຽງຄັ້ງດຽວມາກ່ອນມາສັກໃຫ້ A ຄືສິບໍ່ເປັນຫຍັງ ທັງໆ ທີ່ X ຮູ້ວ່າ B ເປັນຄົນເຈັບທີ່ມີເຊື້ອໄວຣັດຊະນິດຮ້າຍແຮງໃດໜຶ່ງ ແລະ ກໍເຄີຍມາຫາໝໍເປັນປະຈໍາ. ຕໍ່ມາ A ຕິດເຊື້ອພະຍາດນັ້ນ.

## 2. ມາດຕາ 199

ຜູ້ຕິດເຊື້ອພະຍາດທີ່ຮ້າຍແຮງ ຫາກນໍາເອົາເຊື້ອພະຍາດນັ້ນ ໄປແຜ່ຂະຫຍາຍສູ່ບຸກຄົນອື່ນ ໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ໂດຍເຈດຕະນາ ຫາກນໍາເອົາເຊື້ອພະຍາດທີ່ຮ້າຍແຮງ ໄປແຜ່ຂະຫຍາຍສູ່ບຸກຄົນອື່ນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝແຕ່ 30.000.000 ກີບ ຫາ 70.000.000 ກີບ.

ໃນກໍລະນີຜູ້ກະທໍາຜິດຫາກໄດ້ນໍາເອົາເຊື້ອພະຍາດທີ່ຮ້າຍແຮງ ໄປແຜ່ຂະຫຍາຍສູ່ບຸກຄົນອື່ນ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຈະຖືກລົງໂທດຕັດອິດສະລະພາບແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 50.000.000 ກີບ ຫາ 70.000.000 ກີບ.

## 3. ເຫດຜົນການບັນຍັດມາດຕາ

ເນື່ອງຈາກວ່າການແຜ່ເຊື້ອພະຍາດທີ່ຮ້າຍແຮງເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບ ແລະ ຈິດໃຈຂອງປະຊາຊົນ ແລະ ມີຄວາມສ່ຽງຈະເກີດການແຜ່ລະບາດຈາກຄົນໜຶ່ງໄປສູ່ຄົນອື່ນໆ ໃນສັງຄົມເປັນວົງກວ້າງອັນໄດ້ເຮັດໃຫ້ປະຊາຊົນຈໍານວນຫຼາຍຕິດພະຍາດຮ້າຍແຮງ, ພິການ ແລະ ເສຍຊີວິດ. ດ້ວຍເຫດນີ້, ການແຜ່ເຊື້ອພະຍາດທີ່ຮ້າຍແຮງຈຶ່ງໄດ້ກໍານົດເປັນການກະທໍາຜິດທາງອາຍາໄວ້ໃນມາດຕາ 199 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 199 ຂອງປະມວນກົດໝາຍອາຍາບັນຍັດໄວ້ເພື່ອປົກປ້ອງຊີວິດ, ສຸຂະພາບ ແລະ ຈິດໃຈຂອງປະຊາຊົນ. ດ້ວຍເຫດນີ້, ປະມວນກົດໝາຍອາຍາມາດຕາດັ່ງກ່າວຈຶ່ງປົກປ້ອງຊີວິດ, ສຸຂະພາບ, ຈິດໃຈຂອງຄົນ.

ວັດຖຸປະສົງຂອງມາດຕານີ້ ແມ່ນອົງປະກອບທາງດ້ານວັດຖຸກໍາຂອງການກະທໍາຜິດທີ່ປະມວນກົດໝາຍອາຍາກໍານົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທໍາຜິດສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງຈະຕ້ອງປະກອບດ້ວຍ 3 ເງື່ອນໄຂຄື: 1. ມີເຊື້ອພະຍາດທີ່ຮ້າຍແຮງ; 2. ນໍາເອົາໄປແຜ່ຂະຫຍາຍສູ່ບຸກຄົນອື່ນ; 3.ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ ທີ 2 ເປັນອົງປະກອບດ້ານພາວະວິໄສຂອງການກະທໍາຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທໍາຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1 ມີເຊື້ອພະຍາດທີ່ຮ້າຍແຮງ

ມີເຊື້ອພະຍາດທີ່ຮ້າຍແຮງ ໝາຍເຖິງການມີເຊື້ອພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້ຢູ່ໃນຮ່າງກາຍ ຫຼື ມີເຊື້ອພະຍາດໄວ້ໃນການຄອບຄອງ, ແມ່ນເຊື້ອພະຍາດທີ່ມີມາແລ້ວ ແລະ ເຊື້ອພະຍາດທີ່ເກີດຂຶ້ນໃໝ່ໃນທາງການແພດ ບໍ່ມີວິທີການ, ວັກຊິນເພື່ອປ້ອງກັນ ຫຼື ຢາເພື່ອປິ່ນປົວໃຫ້ຫາຍດີໄດ້ເຊັ່ນ: ພະຍາດອະຫິວາ (CHOLERA), ພະຍາດຊາສ໌ (SARS), ເຊື້ອເຮສໄອວີ ຫຼື ພະຍາດເອດສ (HIV/AIDS), ພະຍາດອີໂບລາ (Ebola), ພະຍາດເມີດສ໌ (MERS), ພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ (COVID-19) ເຫຼົ່ານີ້ເປັນຕົ້ນ ຖືວ່າເປັນເຊື້ອພະຍາດທີ່ຮ້າຍແຮງ ຊຶ່ງເປັນອັນຕະລາຍຕໍ່ຊີວິດ, ສຸຂະພາບ ແລະ ຈິດໃຈຂອງຄົນ. ເຊື້ອພະຍາດດັ່ງກ່າວສາມາດແຜ່ຂະຫຍາຍຈາກຄົນໜຶ່ງໄປສູ່ອີກຄົນອື່ນໄດ້ດ້ວຍຫຼາຍເສັ້ນທາງເຊັ່ນ: ທາງລົມຫາຍໃຈ, ຈາກການສໍາພັດ, ທາງເລືອດ, ທາງເພດສໍາພັນ, ຈາກແມ່ຫາລູກ ແລະ ອື່ນໆ.

**5.2 ນຳເອົາໄປແຜ່ຂະຫຍາຍສູ່ບຸກຄົນອື່ນ**

ນຳເອົາໄປແຜ່ຂະຫຍາຍສູ່ບຸກຄົນອື່ນ ໝາຍເຖິງຜູ້ຕິດເຊື້ອພະຍາດໄດ້ນຳເອົາເຊື້ອພະຍາດທີ່ຮ້າຍແຮງໄປແຜ່ກະຈາຍ ຫຼື ແຜ່ລະບາດໃສ່ຄົນອື່ນໆ ເຊັ່ນ: ທາງເພດສຳພັນ, ທາງເຂັມສັກຢາ, ທາງການສຳຜັດ, ທາງລົມຫາຍໃຈ ແລະ ທາງອື່ນໆ.

**5.3 ໂດຍເຈດຕະນາ**

ໝາຍເຖິງຜູ້ທີ່ນຳເອົາເຊື້ອພະຍາດທີ່ຮ້າຍແຮງໄປແຜ່ຂະຫຍາຍສູ່ບຸກຄົນອື່ນນັ້ນຮູ້ວ່າຕົນມີເຊື້ອພະຍາດທີ່ຮ້າຍແຮງ ແລະ ເປັນເຊື້ອພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້ ແລະ ການກະທຳຂອງຕົນເປັນການແຜ່ເຊື້ອພະຍາດໃຫ້ຄົນອື່ນ ແຕ່ກໍຍັງຈິງໃຈເຮັດ ຫຼື ປະປ່ອຍໃຫ້ເຊື້ອພະຍາດນັ້ນແຜ່ກະຈາຍໄປສູ່ຄົນອື່ນ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ເຄີຍໄປມົ້ວສຸມກັບກຸ່ມຄົນທີ່ມີຄວາມສ່ຽງທີ່ຕິດເຊື້ອ HIV ແລະ ຮູ້ວ່າຕົນມີຄວາມສ່ຽງຈະຕິດເຊື້ອດັ່ງກ່າວນັ້ນ ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5.1 ແລ້ວເຫັນວ່າ X ເປັນຜູ້ມີເຊື້ອພະຍາດທີ່ຮ້າຍແຮງນັ້ນແລ້ວ.

ຈາກທີ່ X ໄດ້ໄປພົວພັນກັບ A ແບບຊູ້ສາວ ແລະ ຈະແຕ່ງດອງກັບ A ໂດຍໄດ້ປິດບັງຂໍ້ມູນບໍ່ໃຫ້ A ຮູ້ນັ້ນ ເມື່ອປຽບທຽບກັບເງື່ອນໄຂຂໍ້ທີ 5.2 ແລ້ວເຫັນວ່າການກະທຳຂອງ X ຄົບຕາມເງື່ອນໄຂກ່ຽວກັບການນຳເອົາໄປແຜ່ຂະຫຍາຍສູ່ບຸກຄົນອື່ນ.

ການທີ່ X ຮູ້ວ່າຕົນມີຄວາມສ່ຽງ ແລະ ເປັນໄປໄດ້ວ່າຕົນຕິດເຊື້ອພະຍາດ HIV ເນື່ອງຈາກຕົນເຄີຍໄປມົ້ວສຸມກັບກຸ່ມສ່ຽງມາກ່ອນນັ້ນ ແຕ່ຍັງຈິງໃຈຄົບເປັນແຟນ ແລະ ມີເພດສຳພັນກັບ A ໂດຍບໍ່ໄດ້ປ້ອງກັນນັ້ນ ເມື່ອປຽບທຽບກັບເງື່ອນໄຂຂໍ້ທີ 5.3 ແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໂດຍເຈດຕະນາ.

ເມື່ອພິຈາລະນາການກະທຳຂອງ X ແລ້ວເຫັນວ່າຄົບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ສະນັ້ນ, ຈຶ່ງຖືວ່າການກະທຳຂອງ X ເປັນການກະທຳ

ຜິດໃນສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 199 ຂອງປະມວນກົດໝາຍອາຍາ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສານີ້ຈະເຫັນວ່າການທີ່ X ຕິດເຊື້ອ HIV ໃນເວລາທີ່ຕົນເຮັດວຽກຢູ່ຮ້ານອາຫານນີ້ ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5.1 ແລ້ວເຫັນວ່າ X ເປັນຜູ້ມີເຊື້ອພະຍາດທີ່ຮ້າຍແຮງ.

ການທີ່ X ມີເຊື້ອພະຍາດ HIV ມາກ່ອນແລ້ວໄປມີເພດສຳພັນກັບ A ໂດຍບໍ່ໄດ້ປ້ອງກັນນັ້ນ ເມື່ອປຽບທຽບກັບເງື່ອນໄຂຂໍ້ທີ 5.2 ແລ້ວເຫັນວ່າການກະທຳຂອງ X ຄົບຕາມເງື່ອນໄຂກ່ຽວກັບການນຳເອົາໄປແຜ່ຂະຫຍາຍສູ່ບຸກຄົນອື່ນ.

ການກະທຳຂອງ X ໂດຍຮູ້ວ່າຕົນຕິດເຊື້ອພະຍາດ HIV ມາກ່ອນນັ້ນ ແຕ່ຍັງຈົງໃຈມີເພດສຳພັນກັບ A ໂດຍບໍ່ໄດ້ປ້ອງກັນ ເມື່ອປຽບທຽບກັບເງື່ອນໄຂຂໍ້ທີ 5.3 ແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໂດຍເຈດຕະນາ.

ເມື່ອພິຈາລະນາການກະທຳຂອງ X ແລ້ວເຫັນວ່າຄົບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ສະນັ້ນ, ຈຶ່ງຖືວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 199 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາທີ່ດັດແກ້ນີ້ເຫັນວ່າການກະທຳຂອງ X ເມື່ອປຽບທຽບກັບເງື່ອນໄຂຂໍ້ທີ 5 ແລ້ວເຫັນວ່າການທີ່ A ມີເພດສຳພັນ ແລະ ແຜ່ເຊື້ອພະຍາດ HIV ໃຫ້ A ນັ້ນ ເປັນການກະທຳໂດຍທີ່ X ບໍ່ຮູ້ມາກ່ອນວ່າຕົນຕິດເຊື້ອພະຍາດ. ການກະທຳຂອງ A ເຖິງວ່າຈະເປັນການນຳເອົາເຊື້ອພະຍາດທີ່ຮ້າຍແຮງໄປແຜ່ໃສ່ຄົນອື່ນກໍຕາມ ແຕ່ການກະທຳດັ່ງກ່າວເປັນການກະທຳໂດຍບໍ່ມີເຈດຕະນາ.

ເມື່ອພິຈາລະນາປຽບທຽບກັບເງື່ອນໄຂແລ້ວເຫັນວ່າການກະທຳຂອງ X ຈຶ່ງເປັນການກະທຳຂາດເງື່ອນໄຂຂໍ້ທີ 5.3 ກ່ຽວກັບເຈດຕະນາ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 199 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

X ຜະລິດເຊື້ອພະຍາດທີ່ຮ້າຍແຮງຊະນິດໜຶ່ງຂຶ້ນມາ ຊຶ່ງເປັນເຊື້ອພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້ ແຕ່ຢາກເອົາໄປແຜ່ໃສ່ຄົນອື່ນ ຈຶ່ງບອກ A, B ແລະ C ວ່າຕົນເອງມີຢາວິຕາມິນເພື່ອບຳລຸງຮ່າງກາຍ. ພວກກ່ຽວຫຼົງເຊື່ອວ່າເປັນຢາດີ ຈຶ່ງບອກ X ເອົາມາໃຫ້ກິນ. ພາຍຫຼັງກິນແລ້ວຈຶ່ງເຮັດໃຫ້ A, B ແລະ C ຕິດເຊື້ອພະຍາດດັ່ງກ່າວ.

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ຜະລິດເຊື້ອພະຍາດທີ່ຮ້າຍແຮງແລ້ວເກັບໄວ້ໃນການຄອບຄອງຂອງຕົນນັ້ນເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5.1 ແລ້ວເຫັນວ່າ X ມີເຊື້ອພະຍາດທີ່ຮ້າຍແຮງ.

ເຫັນວ່າການທີ່ X ຜະລິດເຊື້ອພະຍາດທີ່ຮ້າຍແຮງ ແລະ ຄອບຄອງໄວ້ແລ້ວຕົວະໃຫ້ A, B ແລະ C ກິນໂດຍບອກວ່າເປັນຢາວິຕາມິນບຳລຸງຮ່າງກາຍ ແລະ ເຖິງວ່າການທີ່ A, B ແລະ C ກິນເຊື້ອພະຍາດນັ້ນເຂົ້າຮ່າງກາຍຕົນເອງດ້ວຍຄວາມສະໝັກໃຈກໍຕາມ ແຕ່ກິນເພາະເຂົ້າໃຈຜິດວ່າແມ່ນຢາດີຍ້ອນຖືກຕົວະຈາກ X. ການກະທຳຂອງ X ເມື່ອປຽບທຽບກັບເງື່ອນໄຂຂໍ້ 5.2 ແລ້ວເຫັນວ່າ X ເປັນຜູ້ແຜ່ເຊື້ອພະຍາດທີ່ຮ້າຍແຮງໃສ່ບຸກຄົນອື່ນ.

ການກະທຳຂອງ X ເປັນການກະທຳທີ່ຮູ້ວ່າສິ່ງທີ່ຕົນຜະລິດຂຶ້ນມາ ແລະ ກຳລັງຄອບຄອງຢູ່ນັ້ນເປັນເຊື້ອພະຍາດທີ່ຮ້າຍແຮງ ຖ້າເອົາໄປແຜ່ໃສ່ຄົນອື່ນ ຫຼື ໃຫ້ຄົນອື່ນກິນຕ້ອງຕິດເຊື້ອແນ່ນອນ ແຕ່ກໍຍັງຈົງໃຈຕົວະໃຫ້ A, B ແລະ C ເຊື່ອແລ້ວກິນເຂົ້າໄປ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ເຫັນວ່າການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້ແລ້ວ. ສະນັ້ນ, ຈຶ່ງຖືວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 199 ຂອງປະມວນກົດໝາຍອາຍາ.

**6.4 ຄຳຕອບກໍລະນີສຶກສາທີ 4**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ພະຍາບານ X ມີເຂັມສັກຢາທີ່ເຄີຍສັກໃຫ້ B ຊຶ່ງຕິດພະຍາດຮ້າຍແຮງມາກ່ອນຢູ່ໃນການຄອບຄອງນັ້ນ ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5.1 ແລ້ວເຫັນວ່າ X ມີເຊື້ອພະຍາດທີ່ຮ້າຍແຮງ.

ການທີ່ X ໃຊ້ເຂັມສັກຢາສັກໃຫ້ A ຊຶ່ງເຂັມສັກຢາດັ່ງກ່າວເຄີຍໃຊ້ສັກໃຫ້ B ຊຶ່ງເປັນຜູ້ຕິດເຊື້ອພະຍາດມາກ່ອນແລ້ວນັ້ນ ເຖິງແມ່ນວ່າຈະເຄີຍໃຊ້ສັກພຽງຄັ້ງດຽວກໍຕາມຈຶ່ງມີຄວາມເປັນໄປໄດ້ວ່າເຊື້ອພະຍາດທີ່ຄ້າງຢູ່ໃນເຂັ້ມທີ່ໄດ້ຮັບຈາກ B ຈະຕິດຕໍ່ ແລະ ແຜ່ຂະຫຍາຍໃສ່ A ໄດ້. ການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5.2 ແລ້ວເຫັນວ່າການກະທຳຂອງ X ເປັນການແຜ່ເຊື້ອພະຍາດສູ່ຜູ້ອື່ນ.

ການກະທຳຂອງ X ດ້ວຍການໃຊ້ເຂັມສັກຢາຮ່ວມກັບຄົນອື່ນສັກໃຫ້ A ຈຶ່ງເປັນການຮູ້ໃນລະດັບສົມຄວນວ່າເຂັມສັກຢານັ້ນອາດເປັນໄປໄດ້ສູງທີ່ຈະມີເຊື້ອພະຍາດອື່ນຕິດຄ້າງຢູ່ ແລະ ການກະທຳທີ່ຮູ້ດັ່ງກ່າວຈຶ່ງເປັນຄວາມສ່ຽງທີ່ຈະຕິດໃສ່ຄົນອື່ນໄດ້ ຈຶ່ງເປັນການກະທຳທີ່ຍອມຮັບເອົາຜົນທີ່ຈະເກີດຂຶ້ນຈາກການກະທຳຂອງຕົນ. ການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5.3 ແລ້ວເຫັນວ່າການກະທຳດັ່ງກ່າວເປັນການກະທຳຜິດໂດຍເຈດຕະນາ.

ເຫັນວ່າການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້ແລ້ວ. ສະນັ້ນ, ຈຶ່ງຖືວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 199 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງ ເຫັນວ່າປະມວນກົດໝາຍອາຍາມາດຕາ 3 ຂໍ້ທີ 17 ທີ່ກຳນົດພະຍາດຮ້າຍແຮງໄວ້ວ່າເປັນພະຍາດທີ່ບໍ່ສາມາດປິ່ນປົວໃຫ້ຫາຍດີໄດ້ນັ້ນ, ໄລຍະຜ່ານມາເຖິງແມ່ນວ່າບາງພະຍາດຈະມີການແຜ່ລະບາດຈາກຄົນໜຶ່ງໄປໃສ່ຄົນອື່ນຢ່າງໄວວາ ແລະ ກວ້າງຂວາງໃນເວລາອັນສັ້ນໆ ໄດ້ກໍຕາມ ແຕ່ບາງພະຍາດກໍສາມາດປິ່ນປົວໃຫ້ຫາຍດີໄດ້ ແລະ ບາງພະຍາດເຖິງວ່າບໍ່ສາມາດປິ່ນປົວໃຫ້ຫາຍດີໃນປັດຈຸບັນນີ້ໄດ້ ກໍອາດຈະປິ່ນປົວໃຫ້ຫາຍດີໃນອານາຄົດໄດ້ເຊັ່ນກັນ. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງປະມວນກົດໝາຍ

ອາຍາໃນອະນາຄົດວ່າຄວນໃຫ້ຄຳນິຍາມ ຫຼື ຄວາມໝາຍຂອງພະຍາດຮ້າຍແຮງໃໝ່ ວ່າ “*ພະຍາດຮ້າຍແຮງໝາຍເຖິງພະຍາດທີ່ສາມາດແຜ່ລະບາດຈາກຄົນໜຶ່ງໄປໃສ່ຄົນອື່ນຢ່າງໄວວາ ແລະ ກວ້າງໃນເວລາອັນສັ້ນ ຊຶ່ງອາດເຮັດໃຫ້ຄົນອື່ນໄດ້ຮັບບາດເຈັບ ຫຼື ເສຍຊີວິດໄດ້*” ເທົ່ານີ້ກໍເຫັນວ່າສາມາດຄວບຄຸມ ແລະ ເອົາຜິດກັບຜູ້ກະທຳດ້ວຍການແຜ່ເຊື້ອພະຍາດຕາມມາດຕາ 199 ຂອງປະມວນກົດໝາຍອາຍາໄດ້ແລ້ວ.

## ແຜນວາດສະແດງເຖິງການກະທຳຜິດສະຖານການແຜ່ເຊື້ອພະຍາດທີ່ຮ້າຍແຮງ

| | | | | | | |
|---|---|---|---|---|---|---|
| ເຊື້ອພະຍາດຮ້າຍແຮງ | + | ນຳເອົາໄປແຜ່ຂະຫຍາຍສູ່ບຸກຄົນອື່ນ | + | ເຈດຕະນາ | = | ແຜ່ເຊື້ອພະຍາດທີ່ຮ້າຍແຮງ |

# ບົດທີ 5
# ການຄ້າມະນຸດ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ໄດ້ຢ່າຮ້າງກັບຜົວຈຶ່ງມາເຊົ່າຫ້ອງແຖວຢູ່. ຢູ່ໄປໄລຍະໜຶ່ງ X ເຫັນວ່າ A ລູກສາວຂອງຕົນທີ່ກໍາລັງໃຫຍ່ເປັນສາວຈະສ້າງຜົນປະໂຫຍດໃຫ້ຕົນໄດ້ຈຶ່ງໄດ້ບອກ A ມາຢູ່ນໍາໂດຍບອກວ່າຈະຊື້ໂທລະສັບລຸ້ນໃໝ່ໃຫ້, A ຫຼົງເຊື່ອຈຶ່ງໄດ້ມາຢູ່ນໍາ X ແຕ່ກໍບໍ່ຊື້ໃຫ້ຈັກເທື່ອ. ນອກຈາກບໍ່ຊື້ໂທລະສັບໃໝ່ໃຫ້ແລ້ວ X ຍັງໄດ້ໃຫ້ A ມີເພດສໍາພັນກັບຜູ້ຊາຍຫຼາຍຄັ້ງເພື່ອເອົາເງິນມາໃຊ້ຈ່າຍສ່ວນຕົວໂດຍບອກວ່າຖ້າ A ບໍ່ຍອມຈະຖືກລ່າມໂສ້ ແລະ ຖືກທຸບຕີ.

**ກໍລະນີສຶກສາທີ 1 ດັດແກ້:** ກໍລະນີ A ມາຂໍຢູ່ນໍາ X. A ຢາກໄດ້ໂທລະສັບລຸ້ນໃໝ່ຈຶ່ງຮ້ອງຂໍໃຫ້ X ຊື້ໃຫ້ ແຕ່ X ບໍ່ມີເງິນຊື້ໃຫ້ຈຶ່ງບອກໃຫ້ A ໄປນອນກັບຜູ້ຊາຍເພື່ອຫາເງິນມາຊື້ເອງ.

### 1.2 ກໍລະນີສຶກສາທີ 2

X ເປັນເຈົ້າຂອງຮ້ານອາຫານໄດ້ໄປຊອກຫາຍິງສາວຈໍານວນໜຶ່ງໃຫ້ມາເຮັດວຽກນໍາຕົນໂດຍບອກວ່າຈະໃຫ້ເງິນເດືອນຫຼາຍ. ພ້ອມກັນນັ້ນ X ຈະເປັນຄົນຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ໃນໄລຍະເດີນທາງ ແລະ ຈະເອົາເງິນຈໍານວນໜຶ່ງໃຫ້ແກ່ຄອບຄົວຂອງຍິງສາວ. A ຫຼົງເຊື່ອຈຶ່ງໄດ້ມາເຮັດວຽກນໍາ X. ເມື່ອມາຮອດຮ້ານອາຫານ A ຈຶ່ງຖືກກັກຂັງ ແລະ ບັງຄັບໃຫ້ຂາຍບໍລິການທາງເພດ.

**ກໍລະນີສຶກສາທີ 2 ດັດແກ້ 1:** ກໍລະນີ A ເຮັດວຽກຢູ່ຮ້ານອາຫານໄດ້ໄລຍະໜຶ່ງ ແຕ່ຍ້ອນວ່າ A ຕິດໝູ່ ແລະ ຕິດຫຼິ້ນກິນຟຸມເຟືອຍ. ດັ່ງນັ້ນ, A ຈຶ່ງຫາລາຍໄດ້ພິເສດດ້ວຍການຂາຍບໍລິການທາງເພດໃຫ້ແຂກທີ່ມາໃຊ້ບໍລິການຢູ່ຮ້ານອາຫານດ້ວຍຕົນເອງ.

**ກໍລະນີສຶກສາທີ 2 ດັດແກ້ 2**: ກໍລະນີ A ເຮັດວຽກໄປໄດ້ໄລຍະໜຶ່ງແລ້ວເຫັນວ່າພົບຄວາມຫຍຸ້ງຍາກຈຶ່ງຢາກກັບບ້ານ ແຕ່ X ບໍ່ໃຫ້ກັບ, ພ້ອມກັບວາງເງື່ອນ ໄຂວ່າຖ້າຢາກກັບຕ້ອງຈ່າຍເງິນທີ່ຕົນໄດ້ອອກຄ່າເດີນທາງ ແລະ ຄ່າໃຊ້ຈ່າຍໃຫ້

ຄອບຄົວຂອງ A ກ່ອນໜ້ານັ້ນຄືນຫຼາຍເທົ່າ ແຕ່ A ບໍ່ມີເງິນ. ດັ່ງນັ້ນ, X ຈຶ່ງບັງຄັບໃຫ້ A ຂາຍບໍລິການທາງເພດເພື່ອເອົາເງິນມາສົ່ງຄືນແກ່ X.

**1.3 ກໍລະນີສຶກສາທີ 3**

A ເປັນຄົນທຸກຍາກຈຶ່ງຢາກຍົກລະດັບຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນ, A ຈຶ່ງໄດ້ປຶກສາ B ຊຶ່ງເປັນໝູ່ທີ່ອາໄສຢູ່ຕ່າງປະເທດເພື່ອຂໍຄວາມຊ່ວຍເຫຼືອ. ຈາກນັ້ນ B ຈຶ່ງບອກ A ມາຢູ່ນຳ ແລະ ບອກວ່າຈະແນະນຳຜູ້ບ່າວຕ່າງປະເທດໃຫ້. ດັ່ງນັ້ນ A ຈຶ່ງຕັດສິນໃຈໄປຢູ່ນຳ B. ຕໍ່ມາ B ຈຶ່ງໄດ້ແນະນຳໃຫ້ A ຮູ້ຈັກກັບ X. X ຄິດເຫັນວ່າເປັນໂອກາດດີທີ່ຕົນຈະຫາຜົນປະໂຫຍດຈາກ A. ດັ່ງນັ້ນ, X ຈຶ່ງໄດ້ສວຍໂອກາດໂອ້ລົມກັບ A ເລື່ອງການໝັ້ນໝາຍ ແລະ A ກໍຕົກລົງ. ເມື່ອເປັນແນວນັ້ນ X ຈຶ່ງມອບເງິນຈຳນວນໜຶ່ງໃຫ້ຄອບຄົວ A ເປັນຄ່າສູ່ຂໍຕາມການຕົກລົງກັນແລ້ວຕໍ່ມາ X ໄດ້ຮັບເອົາ A ໄປຢູ່ນຳ ແຕ່ພໍໄປຢູ່ໄດ້ໄລຍະໜຶ່ງ A ໄດ້ຖືກບັງຄັບໃຫ້ມີເພດສຳພັນກັບຜູ້ຊາຍຫຼາຍຄົນ, ຖ້າບໍ່ຍອມຈະຖືກລ່າມໂສ້ ແລະ ທຸບຕີ.

**ກໍລະນີສຶກສາທີ 3 ດັດແກ້ 1**: ຖ້າໃນກໍລະນີຢູ່ໄປໄດ້ໄລຍະໜຶ່ງ X ບັງຄັບໃຫ້ A ຖືພາກັບຄົນອື່ນເນື່ອງຈາກຢາກໄດ້ລູກສືບສະກຸນ, ຖ້າບໍ່ຍອມຈະຖືກລ່າມໂສ້ ແລະ ທຸບຕີ.

**ກໍລະນີສຶກສາທີ 3 ດັດແກ້ 2**: ຖ້າໃນກໍລະນີຢູ່ໄປໄດ້ໄລຍະໜຶ່ງ A ໄດ້ຕິດຜູ້ບ່າວ, X ສືບຮູ້ຈຶ່ງໄດ້ທຸບຕີ A ຫຼັງຈາກນັ້ນ A ຈຶ່ງໄດ້ລົບໜີໄປຢູ່ບ່ອນໃໝ່.

## 2. ມາດຕາ 215

ການຄ້າມະນຸດແມ່ນການຊອກຫາ, ລັກພາ, ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ, ຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນດ້ວຍການຂົນຂວາຍ ແນະນຳ, ຕົວະຍົວະຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງສວຍໃຊ້ອຳນາດ, ບັງຄັບ, ນາບຂູ່, ຜູກມັດດ້ວຍໜີ້ສິນ, ການເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ, ແຕ່ງດອງແອບແຝງ, ການໃຫ້ຖືພາ, ຂໍທານ ແລະ ການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ດ້ວຍຮູບການອື່ນ ເພື່ອຂູດຮີດແຮງງານ, ຂູດຮີດທາງເພດ, ເປັນຂ້າທາດ, ຄ້າປະເວນີຂອງຜູ້ອື່ນ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນໆ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນເພື່ອຫາຜົນປະໂຫຍດ.

ບຸກຄົນໃດຫາກກະທຳຜິດໃນສະຖານການຄ້າມະນຸດ ຈະຖືກລົງໂທດຕັດອິດສະລະພາບຕາມກໍລະນີດັ່ງນີ້:

1). ການຊອກຫາ, ລັກພາຕົວ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ;

2). ການເຄື່ອນຍ້າຍ, ການຂົນສົ່ງ ຫຼື ນຳສົ່ງ ຈະຖືກຕັດອິດສະລະພາບແຕ່ ຫ້າປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 70.000.000 ກີບ;

3). ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນຈະຖືກລົງໂທດ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ;

ສຳລັບການກະທຳຜິດຕໍ່ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ພຽງແຕ່ມີການກະທຳ ແລະ ຈຸດປະສົງຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້ເຖິງຈະມີການຍິນຍອມ ຫຼື ມີການສະໝັກໃຈກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

ບຸກຄົນໃດຫາກໄດ້ກະທຳຜິດໃນສະຖານຄ້າປະເວນີ ເຖິງວ່າຜູ້ຖືກເຄາະຮ້າຍຈະມີການຍິນຍອມ ຫຼື ມີຄວາມສະໝັກໃຈແຕ່ຖ້າຫາກນຳໃຊ້ເພື່ອຈຸດປະສົງໃດໜຶ່ງຕາມທີ່ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້ຖືວ່າເປັນການຄ້າມະນຸດ ແລະ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ;

ໃນກໍລະນີການກະທຳຜິດ ຫາກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ຜູ້ຖືກເຄາະຮ້າຍເປັນເດັກ, ຜູ້ຖືກເຄາະຮ້າຍມີຈຳນວນ ແຕ່ ສອງຄົນຂຶ້ນໄປ, ເປັນຍາດໃກ້ສິດຂອງຜູ້ກະທຳຜິດ, ຜູ້ຖືກເສຍຫາຍໄດ້ຮັບບາດເຈັບສາຫັດ, ເສຍອົງຄະ, ພິການ ຫຼື ເສຍຈິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີການກະທຳຜິດ ຫາກໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍ ພິການຕະຫຼອດຊີວິດ, ຕິດເຊື້ອ ເຮສໄອວີ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

## 3. ເຫດຜົນການບັນຍັດມາດຕາ

ໃນປັດຈຸບັນນີ້ພຶດຕິກຳການຄ້າມະນຸດເປັນໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງ ແລະ ເສລີພາບຂອງຄວາມເປັນມະນຸດ. ດ້ວຍເຫດນີ້ການຄ້າມະນຸດ ຈຶ່ງຖືກນຳມາບັນຍັດເປັນຄວາມຜິດໄວ້ໃນມາດຕາ 215 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 215 ຂອງປະມວນກົດໝາຍອາຍາ ບັນຍັດໄວ້ເພື່ອເປັນການປົກປ້ອງສັກສີ ແລະ ເສລີພາບຄວາມເປັນມະນຸດບໍ່ໃຫ້ຖືກທຳລາຍ

ວັດຖຸປະສົງທີ່ກ່າວມານີ້ເປັນອົງປະກອບ ແມ່ນອົງປະກອບທາງດ້ານວັດຖຸກຳທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທຳຜິດສະຖານການຄ້າມະນຸດ ຈະຕ້ອງປະກອບດ້ວຍ 3 ເງື່ອນໄຂ ຄື: 1. ການກະທຳ, 2. ວິທີການ, ແລະ 3. ຈຸດປະສົງ.

ເງື່ອນໄຂຂໍ້ທີ 1, ຂໍ້ທີ 2 ເປັນອົງປະກອບທາງດ້ານພາວະວິໄສຂອງການກະທຳຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1 ການກະທຳ

ຈະຖືວ່າເປັນການກະທຳຕ້ອງເປັນກໍລະນີຢ່າງໃດຢ່າງໜຶ່ງດັ່ງຕໍ່ໄປນີ້:

**- ການຊອກຫາ** ໝາຍເຖິງການຊອກຮູ້, ຕິດຕໍ່ພົວພັນ, ໄປມາຫາເປົ້າໝາຍ ຫຼື ກຸ່ມສ່ຽງ; **ຕົວຢ່າງ:** X ໄປສືບຫາແມ່ຍິງຢູ່ເຂດຊານເມືອງເພື່ອໄປສົ່ງໃຫ້ Y ຢູ່ຮ້ານອາຫານ;

**- ການລັກພາຕົວ** ໝາຍເຖິງການຈັບ, ການກັກຂັງ ຫຼື ຄຸມຂັງບຸກຄົນໃດໜຶ່ງເພື່ອຄ້າມະນຸດ; ຕົວຢ່າງ**:** X ເຫັນເດັກນ້ອຍຢູ່ຄົນດຽວຈຶ່ງໄດ້ຈັບຂຶ້ນລົດຕູ້ໄປກັກຂັງໄວ້;

**- ການເຄື່ອນຍ້າຍ** ໝາຍເຖິງການນຳສົ່ງ ຫຼື ຈັດສົ່ງ, ການພາໄປເພື່ອເຄື່ອນຍ້າຍບຸກຄົນ ຫຼື ກຸ່ມຄົນຈາກບ່ອນໄປອີກບ່ອນໜຶ່ງ;

**- ການຂົນສົ່ງ ຫຼື ນຳສົ່ງ** ໝາຍເຖິງການພາໄປ, ສົ່ງໄປ, ໃຫ້ຜູ້ອື່ນພາໄປ ຫຼື ໃຫ້ການຊ່ວຍເຫຼືອໃນດ້ານການເດີນທາງເພື່ອເຄື່ອນຍ້າຍບຸກຄົນ ຫຼື ກຸ່ມຄົນໃດໜຶ່ງຈາກຈຸດໜຶ່ງໄປຫາອີກຈຸດໜຶ່ງພາຍໃນປະເທດ ຫຼື ຈາກ ສປປ ລາວ ໄປຕ່າງປະເທດ ຫຼື ຈາກຕ່າງປະເທດມາ ສປປ ລາວ ຫຼື ນຳໃຊ້ ສປປ ລາວ ເປັນທາງຜ່ານເພື່ອການຄ້າມະນຸດ; ຕົວຢ່າງ**:** X ໄດ້ເອົາ A ໃຫ້ໄປເຮັດວຽກຢູ່ຮ້ານອາຫານແຫ່ງໜຶ່ງ.

- **ການຮັບເອົາຄົນຢູ່ພາຍໃນ ແລະ ຕ່າງປະເທດ** ໝາຍເຖິງການເອົາບຸກຄົນໃດໜຶ່ງຢູ່ພາຍໃນ ຫຼື ຕ່າງປະເທດມາເຮັດວຽກດ້ວຍການຕົວະຍົວະ, ຫຼອກລວງ, ບັງຄັບ, ນາບຂູ່, ກັກຂັງ ຫຼື ນຳໃຊ້ວິທີການອື່ນ ເພື່ອຄ້າມະນຸດ; ຕົວຢ່າງ**:** X ໄດ້ຈັດຫ້ອງນອນໃຫ້ A ເພື່ອອາໃສໃນໄລຍະລໍຖ້າເຮັດວຽກ;

- **ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ** ໝາຍເຖິງການໃຫ້ທີ່ອາໄສ, ຊຸກເຊື່ອງບຸກຄົນໃດໜຶ່ງຊຶ່ງຜູ້ເປັນເຈົ້າຂອງ ຫຼື ຜູ້ຮັບຜິດຊອບບ່ອນດັ່ງກ່າວຮູ້ວ່າການເຂົ້າມາພັກເຊົານັ້ນເພື່ອການຄ້າມະນຸດ. ຕົວຢ່າງ: X ໃຫ້ບ່ອນພັກເຊົາແກ່ A ໃນໄລຍະເດີນທາງໄປເຮັດວຽກຢູ່ຕ່າງປະເທດ;

**5.2 ວິທີການ**

ການກະທຳ ໃນຂໍ້ 5.1 ຈະຕ້ອງເປັນການກະທຳດ້ວຍວິທີການ ຢ່າງໃດຢ່າງໜຶ່ງດັ່ງຕໍ່ໄປນີ້:

**- ການຂົນຂວາຍ** ໝາຍເຖິງການໂຄສະນາ, ຊັກຊວນ ຫຼື ຊວນເຊື່ອເພື່ອໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງ ຫຼົງເຊື່ອ ແລະ ປະຕິບັດຕາມ. ຕົວຢ່າງ: X ໂຄສະນາເພື່ອສ້າງແຮງຈູງໃຈແມ່ຍິງຢູ່ໃນໝູ່ບ້ານແຫ່ງໜຶ່ງເພື່ອໄປເຮັດວຽກນຳ Y;

- **ການແນະນຳ** ໝາຍເຖິງການບົ່ງບອກ, ໃຫ້ຂໍ້ມູນແກ່ເປົ້າໝາຍ ຫຼື ກຸ່ມສ່ຽງ. ຕົວຢ່າງ: X ບອກໃຫ້ແມ່ຍິງຢູ່ໝູ່ບ້ານ ໃຫ້ໄປເຮັດວຽກກັບ Y;

**- ການຕົວະຍົວະຫຼອກລວງ** ໝາຍເຖິງການໃຊ້ກົນອຸບາຍ, ເລ່ລ່ຽມ ຫຼື ວິທີການໃດໜຶ່ງເພື່ອໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງຫຼົງເຊື່ອ ແລະ ປະຕິບັດຕາມ. ຕົວຢ່າງ:

X ໄດ້ແອບອ້າງວ່າສາມາດຊອກວຽກໃຫ້ A ໄດ້ໂດຍອ້າງວ່າຈະໃຫ້ຮັບຄ່າຕອບແທນເປັນເງິນຈຳນວນຫຼາຍ;

- **ການຊື້ຈ້າງ** ໝາຍເຖິງການໃຫ້ເງິນ, ຄຳ, ວັດຖຸສິ່ງຂອງ ແລະ ຜົນປະໂຫຍດອື່ນ ແກ່ເປົ້າໝາຍ ຫຼື ກຸ່ມສ່ຽງ;

- **ການຈອບອອຍ** ໝາຍເຖິງການໃຊ້ຄຳເວົ້າເພື່ອດຶງດູດຈິດໃຈຂອງເປົ້າໝາຍ ຫຼື ກຸ່ມສ່ຽງໃຫ້ຫຼົງເຊື່ອ ແລະ ປະຕິບັດຕາມ;

- **ການຍຸຍົງ** ໝາຍເຖິງການຍຸແຍ່, ຊຸກຍູ້ໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງປະຕິບັດຕາມ. ຕົວຢ່າງ: X ໄດ້ຍຸຍົງໃຫ້ A ໄປເຮັດວຽກນຳ;

- **ການສວຍໃຊ້ອຳນາດ** ໝາຍເຖິງການໃຊ້ອຳນາດ, ອິດທິພົນ, ຕຳແໜ່ງ , ໜ້າທີ່ ໂດຍບໍ່ຖືກຕ້ອງເພື່ອຫາຜົນປະໂຫຍດການການຄ້າມະນຸດ.

- **ການບັງຄັບ** ໝາຍເຖິງການໃຊ້ກຳລັງ, ອາວຸດ ເພື່ອໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງມີຄວາມຢ້ານກົວ ແລະ ປະຕິບັດຕາມ;

- **ການນາບຂູ່** ໝາຍເຖິງການກະທຳ ຫຼື ການໃຊ້ວາຈາໃຫ້ເປົ້າໝາຍ ຫຼື ກຸ່ມສ່ຽງມີຄວາມຢ້ານກົວ ແລະ ປະຕິບັດຕາມເຈດຈຳນົງຂອງຜູ້ນາບຂູ່;

- **ການຜູກມັດດ້ວຍໜີ້ສິນ** ໝາຍເຖິງການເອົາໃຫ້, ສະເໜີໃຫ້ເງິນ, ຄຳ, ວັດຖຸສິ່ງຂອງ ແລະ ປະໂຫຍດອື່ນໃຫ້ແກ່ເປົ້າໝາຍ ຫຼື ກຸ່ມສ່ຽງ ເພື່ອການຄ້າມະນຸດ; ຕົວຢ່າງ: A ເປັນໜີ້ X. X ຈຶ່ງໄດ້ບັງຄັງໃຫ້ A ໄປ ເຮັດວຽກນຳ;

- **ການແອບແຝງ** ໝາຍເຖິງການປົກປິດ, ເຊື່ອງອຳຈຸດປະສົງທີ່ແທ້ຈິງຂອງການກະທຳຜິດໃດໜຶ່ງ ເຊັ່ນ: ການເອົາເດັກມາເປັນລູກລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ການໝັ້ນໝາຍແອບແຝງ, ການແຕ່ງດອງແອບແຝງເພື່ອນຳເອົາໄປຂາຍ, ຂູດຮີດທາງເພດ, ຂູດຮີດແຮງງານ, ເອົາໄປຂໍທານ ຫຼື ຜົນປະໂຫຍດອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ. ຕົວຢ່າງ: X ເປັນຄົນຕ່າງປະເທດໄດ້ມາສູ່ຂໍ A ໃຫ້ໄປຢູ່ຕ່າງປະເທດນຳ;

- **ການໃຫ້ຖືພາ** ໝາຍເຖິງການບັງຄັບ, ຕົວະຍົວະຫຼອກລວງ ຫຼື ສະໝັກໃຈຖືພາ, ອອກລູກໃຫ້ຜູ້ອື່ນ ເພື່ອການຄ້າມະນຸດ. ຕົວຢ່າງ: X ໄດ້ຊັກຊວນ A ເພື່ອໃຫ້ມາຖືພາດ້ວຍການປະສົມພັນທຽມໂດຍ X ຈະເປັນຄົນຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ;

- **ການຂໍທານ** ໝາຍເຖິງການບັງຄັບ, ນາບຂູ່, ໃຊ້ກຳລັງໃຫ້ການເອົາບຸກຄົນອື່ນໄປຂໍທານເພື່ອຜົນປະໂຫຍດຂອງຕົນເອງ;

- **ການຖ່າຍຮູບ, ສະແດງ, ເຜີຍແຜ່ສິ່ງລາມົກ** ໝາຍເຖິງການບັງຄັບ, ນາບຂູ່, ໃຊ້ກຳລັງໃຫ້ບຸກຄົນອື່ນຖ່າຍຮູບພາບ, ສະແດງສິ່ງລາມົກດ້ວຍຄວາມບໍ່ສະໝັກໃຈເພື່ອຜົນປະໂຫຍດຂອງຕົນ;

**5.3 ຈຸດປະສົງຂອງການກະທຳຜິດ**

**ຈຸດປະສົງຂອງການກະທຳຜິດ** ແມ່ນເພື່ອສະແຫວງຫາຜົນປະໂຫຍດໃດໜຶ່ງ ຊຶ່ງຜູ້ກະທຳຮູ້ດີວ່າການກະທຳດັ່ງກ່າວຂອງຕົນເປັນການກະທຳຜິດໂດຍເຈດຕະນາທີ່ຂັດກົດໝາຍ ແຕ່ຜູ້ກະທຳຜິດມີຄວາມຈິງໃຈ ຫຼື ເຈຕະນາເຄື່ອນໄຫວກະທຳຜິດ ແລະ ຈະຕ້ອງເພື່ອສະແຫວງຫາຜົນປະໂຫຍດໃດໜຶ່ງດັ່ງຕໍ່ໄປນີ້:

- **ເພື່ອຂູດຮີດແຮງງານ** ໝາຍເຖິງ ເພື່ອບັງຄັບໃຫ້ອອກແຮງງານ, ເພື່ອໃຫ້ເຮັດວຽກເກີນແຮງງານ ຫຼື ເກີນເວລາໂດຍບໍ່ຈ່າຍຄ່າແຮງງານ ຫຼື ຈ່າຍບໍ່ຄົບຕາມຕົກລົງກັນ;

- **ເພື່ອຂູດຮີດທາງເພດ** ໝາຍເຖິງ ເພື່ອການບັງຄັບໃຫ້ບຸກຄົນອື່ນເປັນທາດທາງເພດໂດຍການໃຫ້ເປັນໂສເພນີ, ເພື່ອກະທຳສິ່ງລາມົກ ຫຼື ເພື່ອສະໜອງຄວາມຕ້ອງການທາງເພດດ້ວຍຮູບການອື່ນ;

- **ເພື່ອເປັນຂ້າທາດ** ໝາຍເຖິງ ເພື່ອການບໍ່ໃຫ້ສິດທິພື້ນຖານຂອງມະນຸດຍ້ອນຢູ່ໃຕ້ການຄວບຄຸມ ແລະ ການຊີ້ຂາດຂອງຜູ້ຂູດຮີດ;

- **ເພື່ອບັງຄັບໃຫ້ເປັນໂສເພນີ** ໝາຍເຖິງ ເພື່ອການບັງຄັບ ຫຼື ເພື່ອຂົ່ມຂູ່ແມ່ຍິງໃຫ້ແມ່ຍິງຕ້ອງທຳມາຫາກິນໂດຍການຂາຍປະເວນີໃຫ້ຜູ້ອື່ນເສບສົມ;

- **ເພື່ອເອົາອະໄວຍະວະຕ່າງໆ ຂອງຮ່າງກາຍໄປຂາຍ** ໝາຍເຖິງ ເພື່ອຕັດເອົາອະໄວຍະຍະຕ່າງໆຂອງຮ່າງກາຍຄົນ ເພື່ອເອົາໄປຄ້າຂາຍ ຫຼື ແລກປ່ຽນ;

# 6. ຄຳຕອບກໍລະນີສຶກສາ

## 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ໄດ້ໄປເຊົ່າຫ້ອງແຖວແລ້ວເອົາ A ຊຶ່ງເປັນລູກຂອງຕົນມາຢູ່ນຳນັ້ນຄວາມໝາຍຈຶ່ງເປັນການຮັບເອົາຄົນອື່ນມາພັກເຊົາ ຫຼື ມາອາໄສຢູ່ນຳຕົນ. ການທີ່ X ໃຫ້ A ມາພັກເຊົາ ຫຼື ມາອາໄສຢູ່ນຳຕົນນັ້ນ ຈຶ່ງເຂົ້າເງື່ອນໄຂເປັນການກະທຳດ້ວຍການໃຫ້ບ່ອນພັກເຊົາແກ່ບຸກຄົນອື່ນ ເຖິງວ່າ A ຈະເປັນລູກຂອງຕົນກໍຕາມ.

ການທີ່ X ບອກໃຫ້ A ມາຢູ່ນຳໂດຍຕົວະວ່າຈະຊື້ໂທລະສັບລຸ້ນໃໝ່ໃຫ້ນັ້ນຈຶ່ງເປັນການຕົວະຍົວະຫຼອກລວງເພື່ອໃຫ້ A ຫຼົງເຊື່ອ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງວິທີການໃນການຕົວະຍົວະຫຼອກລວງ.

ການທີ່ X ໄດ້ໃຫ້ A ມີເພດສຳພັນກັບຜູ້ຊາຍຫຼາຍຄັ້ງເພື່ອເອົາເງິນມາໃຊ້ຈ່າຍສ່ວນຕົວໂດຍບອກວ່າຖ້າ A ບໍ່ຍອມຈະຖືກລ່າມໂສ້ ແລະ ຖືກທຸບຕີນັ້ນແມ່ນຖືວ່າເປັນການບັງຄັບໃຫ້ບຸກຄົນອື່ນເປັນທາດທາງເພດໂດຍການໃຫ້ເປັນໂສເພນີ. ການກະທຳດັ່ງກ່າວຂອງ X ນັ້ນຈຶ່ງເຂົ້າເງື່ອນໄຂຂອງຈຸດປະສົງໃນການບັງຄັບໃຫ້ເປັນໂສເພນີ.

ພ້ອມກັນນັ້ນການທີ່ X ຮູ້ວ່າ ການໃຫ້ບ່ອນພັກເຊົາແກ່ລູກຂອງຕົນເອງ, ການຕົວະວ່າຈະຊື້ໂທລະສັບລຸ້ນໃໝ່ ແລະ ການບັງຄັບໃຫ້ເປັນໂສເພນີ ນັ້ນ ຈຸດປະສົງເພື່ອຫາຜົນປະໂຫຍດຈາກການກະທຳຂອງຕົນ. ສະນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຄ້າມະນຸດຕາມມາດຕາ 215 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເຫັນວ່າການກະທຳຂອງ X ເມື່ອທຽບໃສ່ເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ແລ້ວເຫັນວ່າບໍ່ຄົບຕາມເງື່ອນໄຂຂໍ້ 5.3 ກ່ຽວກັບຈຸດປະສົງຂອງການກະທຳຜິດ ເນື່ອງຈາກວ່າ X ບໍ່ມີຈຸດປະສົງໃນການສະແຫວງຫາຜົນປະໂຫຍດ ຈາກການກະທຳຂອງຕົນ.

ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດໃນສະຖານການຄ້າມະນຸດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 215 ຂອງປະມວນກົດໝາຍອາຍາ, ແຕ່ເປັນການກະທຳຜິດໃນສະຖານການຄ້າປະເວນີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 254.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ໄດ້ໄປຊອກຫາຍິງສາວຈຳນວນໜຶ່ງເພື່ອໃຫ້ມາເຮັດວຽກນຳ ໂດຍທີ່ X ເປັນຜູ້ຈ່າຍຄ່າເດີນທາງ ແລະ ໄດ້ເອົາເງິນຈຳນວນໜຶ່ງໃຫ້ແກ່ຄອບຄົວ. ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂເປັນການກະທຳດ້ວຍການຊອກຫາ.

ການທີ່ X ໄດ້ອ້າງເຫດຜົນວ່າຈະໄດ້ຮັບຄ່າຕອບແທນເປັນເງິນຈຳນວນຫຼາຍໃນແຕ່ລະເດືອນ, ພ້ອມດຽວກັນນັ້ນ X ຈະເປັນຄົນຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນໄລຍະເດີນທາງ ແລະ ໄດ້ເອົາເງິນຈຳນວນໜຶ່ງໃຫ້ແກ່ຄອບຄົວ ຈຶ່ງເຮັດໃຫ້ A ຫຼົງເຊື່ອແລ້ວມາເຮັດວຽກນຳ. ການກະທຳຂອງ X ຈຶ່ງເຂົ້າກັບເງື່ອນໄຂຂອງວິທີການຕົວະຍົວະຫຼອກລວງ.

ການທີ່ X ໄດ້ກັກຂັງ ແລະ ບັງຄັບໃຫ້ຂາຍບໍລິການທາງເພດເພື່ອໃຫ້ຜູ້ອື່ນເສບສົມພາຍຫຼັງທີ່ A ມາຮອດຮ້ານອາຫານນັ້ນຈຶ່ງຖືວ່າເປັນການບັງຄັບໃຫ້ຜູ້ອື່ນຕ້ອງເປັນໂສເພນີ. ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງຈຸດປະສົງໃນການບັງຄັບໃຫ້ເປັນໂສເພນີ.

ພ້ອມດຽວກັນນັ້ນການທີ່ X ຊອກຫາຍິງສາວເພື່ອໃຫ້ມາເຮັດວຽກນຳ, ການອ້າງເຫດຜົນວ່າຈະໄດ້ຮັບຄ່າຕອບແທນເປັນເງິນຈຳນວນຫຼາຍໃນແຕ່ລະເດືອນ ເພື່ອໃຫ້ A ຫຼົງເຊື່ອ ແລະ ການບັງຄັບໃຫ້ຂາຍບໍລິການທາງເພດເພື່ອໃຫ້ຜູ້ອື່ນເສບສົມນັ້ນ. ຈຸດປະສົງເພື່ອຫາຜົນປະໂຫຍດຈາກການກະທຳຂອງຕົນ. ສະນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ຂ້າງເທິງແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຄ້າມະນຸດຕາມມາດຕາ 215 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້ທີ 1**

ຈາກກໍລະນີສຶກສາດັດແກ້ນີ້ເຫັນວ່າການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ແລ້ວເຫັນວ່າການກະທຳດັ່ງ

ກ່າວຂາດຂໍ້ 5.3 ກ່ຽວກັບຈຸດປະສົງຂອງການກະທຳຜິດ. ເນື່ອງຈາກວ່າ X ບໍ່ມີຈຸດປະສົງໃນການ ສະແຫວງຫາຜົນປະໂຫຍດ ຈາກການກະທຳຂອງຕົນ.

ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດໃນສະຖານການຄ້າມະນຸດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 215 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້ທີ 2**

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ເປັນເຈົ້າຂອງຮ້ານອາຫານ ແລະ ໃຫ້ A ຢູ່ນຳຕົນນັ້ນ ຄວາມໝາຍຈຶ່ງເປັນການຮັບເອົາຄົນອື່ນມາພັກເຊົາ ຫຼື ມາອາໄສຢູ່ນຳຕົນ. ການທີ່ A ມາພັກເຊົາ ຫຼື ມາອາໄສຢູ່ນຳ X ນັ້ນ ຈຶ່ງເຂົ້າເງື່ອນໄຂເປັນການກະທຳດ້ວຍການໃຫ້ບ່ອນພັກເຊົາແກ່ບຸກຄົນອື່ນ.

ການທີ່ X ອາງເງື່ອນໄຂວ່າຖ້າຢາກກັບຕ້ອງຈ່າຍເງິນທີ່ຕົນໄດ້ອອກຄ່າເດີນທາງ ແລະ ຄ່າໃຊ້ຈ່າຍໃຫ້ຄອບຄົວຂອງ A ກ່ອນໜ້ານັ້ນຄືນຫຼາຍເທົ່າ ຈຶ່ງເປັນການຜູກມັດ ດ້ວຍໜີ້ສິນ. ການກະທຳຂອງ X ຈຶ່ງເຂົ້າກັບເງື່ອນໄຂຂອງວິທີການຜູກມັດດ້ວຍໜີ້ສິນ.

ການທີ່ X ບັງຄັບໃຫ້ A ຂາຍບໍລິການທາງເພດເພື່ອເອົາເງິນມາສົ່ງຄືນແກ່ X ນັ້ນ. ກໍເພື່ອເປັນການຫາຜົນຈາກການຂາຍບໍລິການທາງເພດຈາກ A. ສະນັ້ນ, ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງຈຸດປະສົງການບັງຄັບໃຫ້ເປັນໂສເພນີ.

ພ້ອມດຽວກັນນັ້ນ, ການທີ່ X ຮູ້ວ່າການໃຫ້ A ຢູ່ນຳຕົນ, ການຜູກມັດດ້ວຍໜີ້ສິນ, ການບັງຄັບໃຫ້ A ເປັນໂສເພນີ ຈຸດປະສົງເພື່ອຫາຜົນປະໂຫຍດຈາກການກະທຳຂອງຕົນ. ການກະທຳຂອງ X ຈຶ່ງເປັນການກະທຳໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຄ້າມະນຸດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 215 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ໄດ້ຮັບເອົາ A ມາຢູ່ນຳຕົນນັ້ນ ຄວາມໝາຍຈຶ່ງເປັນການຮັບເອົາຄົນອື່ນມາພັກເຊົາ ຫຼື ມາອາໄສຢູ່ນຳຕົນ. ການທີ່ X ມາພັກເຊົາ ຫຼື ມາອາໄສຢູ່ນຳຕົນນັ້ນ ຈຶ່ງເຂົ້າເງື່ອນໄຂເປັນການກະທຳດ້ວຍການໃຫ້ບ່ອນພັກເຊົາແກ່ບຸກຄົນອື່ນ.

ການທີ່ X ຄິດເຫັນວ່າເປັນໂອກາດດີທີ່ຕົນຈະຫາຜົນປະໂຫຍດຈາກ A ດັ່ງນັ້ນ, X ຈຶ່ງໄດ້ສວຍໂອກາດໂອ້ລົມກັບ A ເລື່ອງການໝັ້ນໝາຍ ແລະ A ກໍຕົກລົງ. ເມື່ອເປັນແນວນັ້ນ X ຈຶ່ງມອບເງິນຈຳນວນໜຶ່ງໃຫ້ຄອບຄົວ A ເປັນຄ່າສູ່ຂໍຕາມການຕົກລົງກັນຈຶ່ງເປັນການແອບແຝງ. ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງວິທີການແອບແຝງ.

ການທີ່ X ໄດ້ບັງຄັບ A ໃຫ້ມີເພດສຳພັນກັບຜູ້ຊາຍຫຼາຍຄົນ. ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງຈຸດປະສົງການຂູດຮີດທາງເພດ.

ພ້ອມດຽວກັນນັ້ນ, ການທີ່ X ຮູ້ວ່າການຮັບເອົາ A ມາຢູ່ນຳຕົນ, ການແອບແຝງດ້ວຍການສວຍໂອກາດໂອ້ລົມເລື່ອງການໝັ້ນໝາຍ ແລະ ການຂູດຮີດທາງເພດດ້ວຍການໄດ້ບັງຄັບ A ໃຫ້ມີເພດສຳພັນກັບຜູ້ຊາຍຫຼາຍຄົນ. ຈຸດປະສົງເພື່ອຫາຜົນປະໂຫຍດຈາກການກະທຳຂອງຕົນ. ການກະທຳຂອງ X ຈຶ່ງເປັນການກະທຳໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ຈຶ່ງເປັນການກະທຳຜິດໃນສະຖານການຄ້າມະນຸດຕາມມາດຕາ 215 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້ທີ 1**

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ໄດ້ຮັບເອົາ A ມາຢູ່ນຳຕົນນັ້ນຄວາມໝາຍຈຶ່ງເປັນການຮັບເອົາຄົນອື່ນມາພັກເຊົາ ຫຼື ມາອາໄສຢູ່ນຳຕົນ. ການທີ່ X ມາພັກເຊົາ ຫຼື ມາອາໄສຢູ່ນຳຕົນນັ້ນ ຈຶ່ງເຂົ້າເງື່ອນໄຂເປັນການກະທຳດ້ວຍການໃຫ້ບ່ອນພັກເຊົາແກ່ບຸກຄົນອື່ນ.

ການທີ່ X ຄິດເຫັນວ່າເປັນໂອກາດດີທີ່ຕົນຈະຫາຜົນປະໂຫຍດຈາກ A ດັ່ງນັ້ນ, X ຈຶ່ງໄດ້ສວຍໂອກາດໂອ້ລົມກັບ A ເລື່ອງການໝັ້ນໝາຍ ແລະ A ກໍຕົກລົງ. ເມື່ອເປັນແນວນັ້ນ X ຈຶ່ງມອບເງິນຈຳນວນໜຶ່ງໃຫ້ຄອບຄົວ A ເປັນຄ່າສູ່ຂໍຕາມການຕົກລົງກັນຈຶ່ງເປັນການແອບແຝງ. ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງວິທີການແອບແຝງ.

ການທີ່ X ບັງຄັບ A ຖືພາກັບຄົນອື່ນເນື່ອງຈາກຢາກໄດ້ລູກສືບສະກຸນນັ້ນຈຸດປະສົງກໍ່ເພື່ອສວຍໃຊ້ເພດຂອງຄົນອື່ນເພື່ອຫາຜົນປະໂຫຍດຈາກການມີລູກຂອງ A. ການກະທຳຂອງ X ຈຶ່ງເຂົ້າເງື່ອນໄຂຂອງຈຸດປະສົງການຂູດຮີດທາງເພດ.

ພ້ອມກັນນັ້ນ, ການທີ່ X ຮູ້ວ່າການຮັບເອົາ A ມາຢູ່ນຳຕົນ, ການແອບແຝງດ້ວຍການສວຍໂອກາດໂອ້ລົມເລື່ອງການໝັ້ນໝາຍ ແລະ ການຂູດຮີດທາງເພດດ້ວຍການໄດ້ບັງຄັບ A ຖືພາກັບຄົນອື່ນເນື່ອງຈາກຢາກໄດ້ລູກສືບສະກຸນນັ້ນ. ຈຸດປະສົງເພື່ອຫາຜົນປະໂຫຍດຈາກການກະທຳຂອງຕົນ. ການກະທຳຂອງ X ຈຶ່ງເປັນການກະທຳໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ຈຶ່ງເປັນການກະທຳຜິດໃນສະຖານການຄ້າມະນຸດຕາມມາດຕາ 215 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້ທີ 2**

ຈາກກໍລະນີສຶກສາດັດແກ້ນີ້ເຫັນວ່າການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ແລ້ວເຫັນວ່າການກະທຳດັ່ງກ່າວຂາດຂໍ້ 5.3 ກ່ຽວກັບຈຸດປະສົງຂອງການກະທຳຜິດ ເນື່ອງຈາກວ່າ X ບໍ່ມີຈຸດປະສົງໃນການ ສະແຫວງຫາຜົນປະໂຫຍດຈາກການກະທຳຂອງຕົນ.

ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດໃນສະຖານການຄ້າມະນຸດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 215 ຂອງປະມວນກົດໝາຍອາຍາ.

ການກະທຳດັ່ງກ່າວຂອງ X ເປັນການກະທຳຜິດທາງອາຍາໃນສະຖານການທຳຮ້າຍຮ່າງກາຍຕາມມາດຕາ 194 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II ( JICA J-ROL II ) ກ່ຽວກັບການກະທຳຜິດຖານຄ້າມະນຸດທີ່ໄດ້ກຳນົດໄວ້ໃນມາດຕາ 215 ຂອງປະມວນກົດໝາຍອາຍາ ເຫັນວ່າຮູບແບບການບັນຍັດກົດໝາຍແມ່ນມີລັກສະນະກວ້າງ ແລະ ກວມການກະທຳຜິດຫຼາຍມາດຕາເປັນຕົ້ນ: ການຂາຍຄົນ ຕາມມາດຕາ 213, ການຂາຍ ຫຼື ລັກອະໄວຍະວະ ຫຼື ເນື້ອເຍື່ອຂອງຄົນ ຕາມມາດຕາ 214, ການລັກພາໂຕ ຕາມມາດ 216, ການບັງຄັບໃຫ້ເປັນໂສເພນີ ຕາມມາດຕາ 253, ການຄ້າປະເວນີຂອງບຸກຄົນອື່ນ ຕາມມາດຕາ 254 ແລະ ມາດຕາອື່ນໆ ຂອງປະມວນກົດໝາຍອາຍາ. ດັ່ງນັ້ນ, ກຸ່ມຄົ້ນຄວ້າປະມວນ

ກົດໝາຍອາຍາ ຈຶ່ງສະເໜີວ່າຄວນລວບລວມເອົາບັນດາມາດຕາເຫຼົ່ານີ້ເຂົ້າມາເປັນ ການກະທຳຜິດສະຖານການຄ້າມະນຸດທັງໝົດ.

## ແຜນວາດສະແດງເຖິງການກະທຳຜິດສະຖານ ການຄ້າມະນຸດ

ການກະທຳ + ວິທີການ + ຈຸດປະສົງຂອງການກະທຳ = ການຄ້າມະນຸດ

# ບົດທີ 6
# ການລັກຊັບ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ຢາກໄດ້ຕີນລົດໃໝ່ເພື່ອມາປ່ຽນຕີນລົດຂອງຕົນທີ່ເກົ່າແລ້ວ ແຕ່ບໍ່ມີເງິນຊື້. ທ່ຽງຄືນມື້ໜຶ່ງ X ຂັບລົດຄັນທີ່ຈະປ່ຽນຕີນເກົ່າອອກນັ້ນໄປຈອດຢູ່ແຄມທາງໄກຈາກຮ້ານຂາຍຕີນລົດປະມານ 30 ແມັດ ແລ້ວປີນຮົ້ວເຂົ້າໄປເອົາຕີນລົດຢູ່ຮ້ານຂອງ A ທີ່ບໍ່ມີຄົນເຝົ້າຍາມອອກມາ 1 ເສັ້ນ ແຕ່ປາກົດວ່າຕີນລົດໃໝ່ທີ່ເອົາມານັ້ນໃສ່ບໍ່ໄດ້ເພາະວ່າຂະໜາດແຕກຕ່າງກັນ. X ຈຶ່ງໄດ້ໂຍນຕີນລົດນັ້ນຖິ້ມລົງຂ້າງທາງແລ້ວຂັບລົດໜີໄປ.

**- ກໍລະນີສຶກສາທີ 1 ດັດແກ້ທີ 1:** ຖ້າກໍລະນີ X ບໍ່ສາມາດປ່ຽນຕີນລົດໃໝ່ໃສ່ລົດຂອງຕົນໄດ້ ຈຶ່ງເອົາຕີນລົດກັບຄືນໄປອີງໄວ້ຂ້າງຮົ້ວຂອງຮ້ານ ຫຼື ເອົາຕີນລົດກັບຄືນໄປໄວ້ບ່ອນເກົ່າແລ້ວຂັບລົດໜີໄປ.

**- ກໍລະນີສຶກສາທີ 1 ດັດແກ້ທີ 2:** ຖ້າກໍລະນີ X ກຳລັງຈະປີນຮົ້ວເຂົ້າໄປນັ້ນ ໄດ້ເຫຼືອບຕາໄປເຫັນຕີນລົດຕົກຢູ່ຂ້າງທາງ ຊຶ່ງເປັນຕີນລົດທີ່ເຈົ້າຂອງຮ້ານຈະເອົາໄປສົ່ງໃຫ້ລູກຄ້າ ແຕ່ລືມໄວ້ຢູ່ນອກບ່ອນຖິ້ມຂີ້ເຫຍື້ອຂອງຮ້ານ. X ຈຶ່ງຈັບເອົາຕີນລົດນັ້ນຂຶ້ນລົດແລ້ວຂັບໜີໄປ.

### 1.2 ກໍລະນີສຶກສາທີ 2

ໃນເວລາ A ແຈ້ງອອກຈາກໂຮງແຮມ ແຕ່ດ້ວຍຄວາມຟ້າວຈຶ່ງລືມແຫວນຄຳໄວ້ຫົວຕຽງນອນ. ເວລາຕໍ່ມາ X ໄດ້ເຂົ້າພັກໂຮງແຮມຫ້ອງດັ່ງກ່າວຈຶ່ງໄດ້ຈັບເອົາແຫວນຄຳນັ້ນໄປເປັນຂອງຕົນ.

**- ກໍລະນີສຶກສາທີ 2 ດັດແກ້:** ໃນກໍລະນີ A ແຈ້ງອອກຈາກໂຮງແຮມແລ້ວຈຶ່ງໄດ້ແວ່ກິນເຂົ້າຢູ່ຮ້ານອາຫານແຫ່ງໜຶ່ງ ຊຶ່ງມີລູກຄ້າ ແລະ ບຸກຄົນອື່ນຫຼາຍຄົນສາມາດເຂົ້າອອກໄດ້. A ອອກໄປຈຶ່ງລືມແຫວນຄຳນັ້ນໄວ້ໜ້າໂຕະຂອງຮ້ານອາຫານ. X ເຂົ້າໄປເຫັນຈຶ່ງຈັບເອົາແຫວນຄຳນັ້ນໄປເປັນຂອງຕົນ.

**1.3 ກໍລະນີສຶກສາທີ 3**

X ເຫັນກະເປົາເງິນຂອງ A ຕົກອອກຈາກຖົງໂສ້ງ. X ຢາກໄດ້ ຖ້າຈະກົ້ມຈັບເອົາຢ້ານ A ຮູ້ ແລະ ຢ້ານຄົນອື່ນຢູ່ອ້ອມແອ້ມແຖວນັ້ນເຫັນ. X ຈຶ່ງໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນນັ້ນໄວ້ແລ້ວອອກໄປຢູ່ບ່ອນທີ່ສາມາດຫຼຽວເຫັນໄດ້ໂດຍຄິດວ່າຖ້າໃຫ້ A ອອກຈາກສະຖານທີ່ນັ້ນ ແລະ ຫ່າງຈາກສາຍຕາຄົນອື່ນແລ້ວຈຶ່ງຈະກັບໄປເອົາ.

**- ກໍລະນີສຶກສາທີ 3 ດັດແກ້ທີ 1:** ຖ້າກໍລະນີໃນເວລາ A ກໍາລັງຊອກຫາກະເປົາເງິນຂອງຕົນຢູ່ນັ້ນ, X ຄິດຢ້ານຄົນອື່ນຮູ້ວ່າຕົນເປັນຜູ້ໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນນັ້ນ ຈຶ່ງທໍາທ່າຊອກກະເປົາເງິນຊ່ວຍ A ໂດຍໃຊ້ໄມ້ເຂ່ຍດິນ ແລະ ຫຍ້າທີ່ຖົມກະເປົາເງິນອອກແລ້ວບອກໃຫ້ A ມາເອົາ.

**- ກໍລະນີສຶກສາທີ 3 ດັດແກ້ທີ 2:** ຖ້າໃນກໍລະນີ X ຍ່າງອອກໄປລໍຖ້າຢູ່ບ່ອນທີ່ສາມາດຫຼຽວເຫັນ ແລະ ຈະກັບມາເອົາກະເປົາເງິນໃນພາຍຫຼັງ ແຕ່ໃນເວລານັ້ນ Y ຊຶ່ງຍ່າງຫຼິ້ນຢູ່ແຖວນັ້ນບັງເອີນເຫຼືອບຕາໄປເຫັນຈຶ່ງເອົາໄມ້ເຂ່ຍເບິ່ງ ເຫັນວ່າແມ່ນກະເປົາເງິນຈຶ່ງຈັບເອົາມາເປັນຂອງຕົນ.

**1.4 ກໍລະນີສຶກສາ 4**

A ນັ່ງຫຼິ້ນຢູ່ສວນສາທາລະນະແຫ່ງໜຶ່ງ, ໃນເວລາລຸກອອກຈາກສະຖານທີ່ນັ້ນເພື່ອຈະໄປຂຶ້ນລົດເມຈຶ່ງຮູ້ສຶກຕົວວ່າລືມກະເປົາເງິນໄວ້ຕັ່ງນັ່ງ ຊຶ່ງຫ່າງອອກໄປປະມານ 5 ແມັດ. A ຈຶ່ງໄດ້ຍ່າງກັບຄືນມາເອົາກະເປົາເງິນນັ້ນ ແຕ່ປາກົດວ່າ X ໄດ້ຈັບເອົາກະເປົາເງິນນັ້ນໄປກ່ອນແລ້ວ.

**- ກໍລະນີສຶກສາທີ 4 ດັດແກ້:** ຖ້າກໍລະນີເວລາ A ຮູ້ສຶກຕົວວ່າລືມກະເປົາເງິນໄວ້ຕັ່ງນັ່ງນັ້ນເປັນເວລາທີ່ A ໄດ້ຂຶ້ນລົດເມ ແລະ ລົດເມກໍກໍາລັງເຄື່ອນຕົວອອກໄປແລ້ວ, X ຈຶ່ງໄດ້ຈັບເອົາກະເປົາເງິນນັ້ນໄປ.

**1.5 ກໍລະນີສຶກສາທີ 5**

X ຮູ້ວ່າຕົນບໍ່ມີເງິນຈະຊື້ເສື້ອໃໝ່ ຈຶ່ງເຂົ້າໄປຮ້ານຂາຍເສື້ອຂອງ A ແລ້ວຕົວະວ່າມາຊື້ເສື້ອ ແຕ່ຂໍໃສ່ລອງເບິ່ງກ່ອນວ່າຈະພໍດີກັບຕົວ ຫຼື ບໍ່. A ຈຶ່ງອະນຸຍາດໃຫ້ X ເອົາເສື້ອຈໍານວນໜຶ່ງໄປໃສ່ລອງຢູ່ຫ້ອງລອງເສື້ອທີ່ຢູ່ພາຍໃນຮ້ານຂອງ A ເອງ. ໃນເວລາເຈົ້າຂອງຮ້ານເຜີ X ຈຶ່ງສວຍໂອກາດຈັບເອົາເສື້ອຈໍານວນໜຶ່ງຫຼົບໜີອອກຈາກຮ້ານໄປ.

- **ກໍລະນີສຶກສາທີ 5 ດັດແກ້:** ຖ້າກໍລະນີ X ຂໍເອົາເສື້ອໄປໄວ້ລົດທີ່ຈອດຢູ່ຂ້າງນອກໄກຈາກຮ້ານປະມານ 30 ກວ່າແມັດກ່ອນ ແລ້ວຈະມາຈ່າຍເງິນໃນພາຍຫຼັງ ແລະ A ກໍອະນຸຍາດໃຫ້ X ເອົາໄປ. X ຈຶ່ງສວຍໂອກາດເອົາເສື້ອນັ້ນຂຶ້ນລົດແລ້ວຂັບຫຼົບໜີໄປ.

## 2. ມາດຕາ 231

ບຸກຄົນໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ;

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ລັກດ້ວຍການງັດແງະ, ມ້າງເພຮົ້ວຮາວ, ປະຕູ, ຫີບ, ຕູ້ ແລະ ອື່ນໆ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ;

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ເອົາການລັກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ;

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

## 3. ເຫດຜົນການບັນຍັດມາດຕາ

ເມື່ອພິຈາລະນາຈາກສະພາບສັງຄົມຂອງ ສປປ ລາວ ໃນປັດຈຸບັນແລ້ວເຫັນວ່າການລັກຊັບເປັນໄພອັນຕະລາຍຕໍ່ຊັບສິນຂອງປະຊາຊົນ, ຕໍ່ກຳມະສິດ ແລະ ການຄອບຄອງຊັບຂອງພົນລະເມືອງ. ດ້ວຍເຫດນີ້, ການລັກຊັບຈຶ່ງຖືກນຳມາບັນຍັດເປັນຄວາມຜິດໄວ້ໃນມາດຕາ 231 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 231 ຂອງປະມວນກົດໝາຍອາຍານີ້ ບັນຍັດໄວ້ມີວັດຖຸປະສົງເພື່ອປົກປ້ອງກຳມະສິດ ແລະ ການຄອບຄອງຊັບບໍ່ໃຫ້ຖືກທຳລາຍ. ດ້ວຍເຫດນີ້, ປະມວນ

ກົດໝາຍອາຍາມາດຕາດັ່ງກ່າວຈຶ່ງປົກປ້ອງກໍາມະສິດ ແລະ ການຄອບຄອງຊັບຂອງບຸກຄົນ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກໍາຂອງການກະທໍາຜິດທີ່ປະມວນກົດໝາຍອາຍາກໍານົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທໍາຜິດສະຖານລັກຊັບຈະຕ້ອງປະກອບດ້ວຍ 3 ເງື່ອນໄຂຄື: 1. ເອົາຊັບຂອງຜູ້ອື່ນມາ; 2. ເປັນຂອງຕົນໂດຍບໍ່ຖືກຕ້ອງ; ແລະ 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ ຂໍ້ທີ 2 ເປັນອົງປະກອບດ້ານພາວະວິໄສຂອງການກະທໍາຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທໍາຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1 ເອົາຊັບຂອງຜູ້ອື່ນມາ

ຄໍາວ່າ "ເອົາຊັບຂອງຜູ້ອື່ນມາ" ສາມາດພິຈາລະນາອອກເປັນ 2 ສ່ວນປະກອບຄື: 1). ຊັບຂອງຜູ້ອື່ນ ຫຼື ຜູ້ອື່ນຄອບຄອງຢູ່ ແລະ 2). ເອົາຊັບມາ;

1). ຊັບຂອງຜູ້ອື່ນ ຫຼື ຜູ້ອື່ນຄອບຄອງຢູ່ ໝາຍເຖິງຊັບນັ້ນຜູ້ອື່ນຍັງບໍ່ໄດ້ສູນເສຍການຄອບຄອງ, ຖ້າສູນເສຍການຄອບຄອງແລ້ວຈະບໍ່ຖືວ່າເປັນການລັກຊັບ. ຕົວຢ່າງ: ລືມກະເປົາເງິນໄວ້ບ່ອນໃດບ່ອນໜຶ່ງແລ້ວຕົນເອງບໍ່ສາມາດກັບມາເອົາໃນທັນທີທັນໃດໄດ້ເຊັ່ນ: ລືມເຄື່ອງຢູ່ຕຶກຊັ້ນ 4 ຫຼື ຊັ້ນ 5 ແຕ່ເຈົ້າຂອງຢູ່ຊັ້ນ 1, ອະນຸຍາດໃຫ້ຄົນອື່ນເອົາຊັບອອກໄປຈາກສະຖານທີ່ຂອງຕົນເຊັ່ນ: ອະນຸຍາດໃຫ້ເອົາເສື້ອອອກນອກຮ້ານ, ອະນຸຍາດໃຫ້ທົດລອງຂັບລົດອອກໄປຂ້າງນອກຫຼາຍຊົ່ວໂມງ. ພຶດຕິກໍາເຫຼົ່ານີ້ຖືວ່າເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບໄດ້ສູນເສຍການຄອບຄອງໄປແລ້ວ.

2). ເອົາຊັບມາ ໝາຍເຖິງເອົາຊັບນັ້ນໄປຈາກການຄອບຄອງຂອງຄົນອື່ນ ແລະ ຜູ້ເອົາມາໄດ້ເຂົ້າໄປຍາດແຍ່ງເອົາການຄອບຄອງຊັບນັ້ນແທນ. ຄໍາວ່າ "ເອົາຊັບມາ" ບໍ່ໄດ້ໝາຍຄວາມວ່າຜູ້ກະທໍາໄດ້ເຄື່ອນຍ້າຍ ຫຼື ນໍາເອົາຊັບອອກໄປຈາກສະຖານທີ່ຕັ້ງເດີມຂອງຊັບນັ້ນໄປໄວ້ບ່ອນອື່ນສະເໝີໄປ, ໝາຍຄວາມວ່າເຖິງວ່າຊັບນັ້ນຍັງບໍ່ໄດ້ເຄື່ອນຍ້າຍອອກຈາກທີ່ຕັ້ງໃດໜຶ່ງກໍຕາມ ຫາກຜູ້ກະທໍາໄດ້ເຮັດໃຫ້ເຈົ້າ

ຂອງຊັບ ຫຼື ຜູ້ຄອບຄອງຊັບເສຍການຄອບຄອງ ແລະ ຜູ້ກະທຳໄດ້ເຂົ້າໄປຍາດແຍ່ງເອົາການຄອບຄອງຊັບນັ້ນແທນແລ້ວ ກໍມີຄວາມໝາຍວ່າເອົາຊັບນັ້ນມາແລ້ວ. ຕົວຢ່າງ: ເຫັນຊັບຂອງຄົນອື່ນວາງຢູ່ສະຖານທີ່ໃດໜຶ່ງແລ້ວຜູ້ກະທຳໃຊ້ຕີນຢຽບໄວ້ ຫຼື ເອົາວັດຖຸສິ່ງຂອງອື່ນມາວາງທັບ ຫຼື ຖົມໄວ້;

ເຖິງຢ່າງໃດກໍຕາມຈະບໍ່ຖືວ່າແມ່ນການສູນເສຍການຄອບຄອງຊັບນັ້ນເທື່ອ ຖ້າຫາກວ່າຊັບນັ້ນຍັງຢູ່ໃນຂອບເຂດ ຫຼື ສະຖານທີ່ຂອງຜູ້ຄອບຄອງຢູ່ເຊັ່ນ: ອະນຸຍາດໃຫ້ເອົາເສື້ອອອກຈາກບ່ອນວາງຂາຍ ແລ້ວໄປໃສ່ລອງຢູ່ບ່ອນລອງເສື້ອຂອງຮ້ານ, ແຕ່ກົງກັນຂ້າມຖ້າລັກເຄື່ອງທີ່ວາງຂາຍຢູ່ຊັ້ນວາງເຄື່ອງແລ້ວເອົາໄປເຊື່ອງໄວ້ໃນຫ້ອງນໍ້າຂອງຮ້ານກໍຖືວ່າຊັບນັ້ນໄດ້ສູນເສຍການຄອບຄອງໄປແລ້ວ.

ການຄອບຄອງຊັບ ໝາຍເຖິງການຄອບຄອງ ຊຶ່ງຜູ້ຄອບຄອງຊັບສາມາດຄວບຄຸມຊັບນັ້ນໄດ້ບໍ່ວ່າຊັບນັ້ນຈະຢູ່ໃນການຄອບຄອງທີ່ຕິດຕົວ ຫຼື ໃນສະຖານທີ່ທີ່ຢູ່ໃນການຄວບຄຸມຂອງຜູ້ຄອບຄອງຊັບເຊັ່ນ: ສາຍຄໍ, ສາຍແຂນ, ໂມງ, ກະເປົາເງິນ, ເຄື່ອງຂອງຕ່າງໆ ທີ່ຢູ່ໃນເຮືອນ ຊຶ່ງເຈົ້າຂອງຍັງດຳລົງຊີວິດໃນເຮືອນນັ້ນ ຫຼື ເຈົ້າຂອງອັດປະຕູໄວ້ແລ້ວໄປຕ່າງແຂວງ ຫຼື ໄປຕ່າງປະເທດ ຫຼື ການຄອບຄອງຊັບນັ້ນໂດຍທົ່ວໄປໃນຊີວິດປະຈຳວັນຂອງສັງຄົມ ຕົວຢ່າງ: 1). ຈອດລົດປະໄວ້ແຄມທາງແລ້ວເຂົ້າໄປໃນຮ້ານຊັບພະສິນຄ້າ ຫຼື ເຂົ້າໄປເຮັດວຽກຢູ່ຫ້ອງການ, ກໍຖືວ່າລົດ ແລະ ຊັບສິນທັງໝົດທີ່ຢູ່ໃນລົດຍັງຢູ່ໃນການຄອບຄອງຂອງຜູ້ເປັນເຈົ້າຂອງຢູ່ ເພາະວ່າຜູ້ຄອບຄອງສາມາດຄວບຄຸມຊັບທັງໝົດນັ້ນໄດ້ຢູ່; 2). ລືມຊັບໄວ້ຢູ່ສະຖານທີ່ໃດໜຶ່ງໃນຮ້ານສັບພະສິນຄ້າທີ່ມີພະນັກງານຂອງຮ້ານຢືນຄວບຄຸມຢູ່ກໍຖືວ່າຊັບນັ້ນຢູ່ໃນການຄອບຄອງຂອງຮ້ານ ແຕ່ກົງກັນຂ້າມຖ້າລືມຊັບໄວ້ໃນສະຖານທີ່ທີ່ຄົນສາມາດເຂົ້າອອກໄດ້ຈະຖືວ່າເຈົ້າຂອງຊັບໄດ້ສູນເສຍການຄອບຄອງຊັບນັ້ນ.

### 5.2 ເປັນຂອງຕົນໂດຍບໍ່ຖືກຕ້ອງ

ເປັນຂອງຕົນໂດຍບໍ່ຖືກຕ້ອງ ໝາຍເຖິງຜູ້ກະທຳໄດ້ເຂົ້າໄປຍາດແຍ່ງເອົາການຄອບຄອງຊັບທີ່ຢູ່ໃນການຄອບຄອງຂອງຄົນອື່ນມາໄວ້ໃນການຄອບຄອງຂອງຕົນໂດຍຜູ້ຄອບຄອງຊັບບໍ່ອະນຸຍາດໃຫ້ເອົາໄປ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າຜູ້ກະທຳເອົາຊັບໄປນັ້ນ ເປັນການເຮັດໃຫ້ຜູ້ຄອບຄອງຊັບສູນເສຍການຄອບຄອງຊັບນັ້ນໄປໂດຍຜູ້ຄອບຄອງຊັບນັ້ນບໍ່ໄດ້ຍິນຍອມ.

ການເອົາຊັບຂອງຜູ້ອື່ນມານັ້ນ ຜູ້ກະທຳມີຈິດໃຈໂລບຢາກໄດ້ ຫຼື ຢາກເອົາມາເປັນຂອງຕົນ. ຖ້າບໍ່ມີຈິດໃຈໂລບຢາກໄດ້ ຫຼື ບໍ່ຢາກເອົາມາເປັນຂອງຕົນເຊັ່ນ: ມີຄວາມອິດສາທີ່ເຫັນຄົນອື່ນມີຊັບຈຶ່ງເອົາຊັບຂອງຄົນອື່ນມາທຳລາຍຖິ້ມ; ຢາກໄປຢູ່ຄ້າຍຄຸມຂັງດັດສ້າງໂດຍຄິດວ່າຈະມີຄວາມສະດວກສະບາຍເພາະມີເຂົ້າໃຫ້ກິນໂດຍບໍ່ຕ້ອງອອກແຮງງານ ຈຶ່ງໄປເອົາຊັບຢູ່ຮ້ານສັບພະສິນຄ້າມາເພື່ອໃຫ້ຕົວເອງຖືກດຳເນີນຄະດີ. ກໍລະນີເຫຼົ່ານີ້ບໍ່ຖືວ່າເປັນການລັກຊັບ;

**5.3 ໂດຍເຈດຕະນາ**

ໂດຍເຈດຕະນາ ໝາຍເຖິງຜູ້ກະທຳຮູ້ວ່າການກະທຳຂອງຕົນເປັນການເອົາຊັບຂອງຄົນອື່ນ ຫຼື ຄົນອື່ນຄອບຄອງຢູ່ມາໂດຍບໍ່ຖືກຕ້ອງ ແລະ ຮູ້ວ່າຕົນບໍ່ມີສິດເອົາຊັບນັ້ນມາຄອບຄອງ ຫຼື ເອົາມາເປັນຂອງຕົນ ແຕ່ຜູ້ກະທຳຍັງຈິງໃຈເອົາຊັບນັ້ນມາຄອບຄອງ ຫຼື ຍາດແຍ່ງເອົາການຄອບຄອງຊັບນັ້ນແທນຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຊັບນັ້ນ.

# 6. ຄຳຕອບກໍລະນີສຶກສາ

**6.1 ຄຳຕອບກໍລະນີສຶກສາທີ 1**

ຈາກກໍລະນີສຶກສານີ້ເຫັນວ່າໃນເວລາທີ່ X ປີນຮົ້ວເຂົ້າໄປໃນຮ້ານເພື່ອເອົາຕີນລົດອອກມານັ້ນ, ຕີນລົດເຖິງວ່າຈະຢູ່ໃນຮ້ານທີ່ເຈົ້າຂອງອັດປະຕູໄວ້ໂດຍບໍ່ມີຄົນເຝົ້າຍາມກໍຕາມ ກໍຖືວ່າຊັບດັ່ງກ່າວຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງເຈົ້າຂອງຮ້ານຢູ່, ໝາຍຄວາມວ່າເຈົ້າຂອງຊັບຍັງບໍ່ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນແຕ່ຢ່າງໃດ. ການກະທຳຂອງ X ດ້ວຍການເອົາຊັບທີ່ຜູ້ອື່ນຄອບຄອງຢູ່ ຫຼື ຜູ້ອື່ນຄວບຄຸມຢູ່ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ເປັນການເອົາຊັບຂອງຄົນອື່ນມາ.

ໃນເມື່ອຊັບນັ້ນຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງຄົນອື່ນຢູ່, ການທີ່ X ເອົາຊັບນັ້ນອອກມາຈຶ່ງເປັນການເຂົ້າໄປຍາດແຍ່ງເອົາການຄອບຄອງຊັບຂອງຄົນອື່ນມາໄວ້ໃນການຄອບຄອງ ຫຼື ຄວບຄຸມຂອງຕົນ ເຖິງວ່າພາຍຫຼັງ X ຈະບໍ່ໄດ້ເອົາຊັບນັ້ນຕິດຕົວໄປນຳກໍຕາມ ກໍຖືວ່າຜູ້ກະທຳໄດ້ເຂົ້າຄອບຄອງຊັບນັ້ນແທນຜູ້ເປັນເຈົ້າຂອງແລ້ວ. ການກະທຳດັ່ງກ່າວຂອງ X ຈຶ່ງເປັນການເຮັດໃຫ້ຜູ້ເປັນເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນໄປແລ້ວ ແລະ ການກະທຳນັ້ນ

ກໍບໍ່ໄດ້ຮັບອະນຸຍາດຈາກຜູ້ເປັນເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບນັ້ນແຕ່ຢ່າງໃດ. ການກະທຳດັ່ງກ່າວຂອງ X ນັ້ນ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຈຶ່ງຖືວ່າເປັນການເອົາຊັບມາເປັນຂອງຕົນໂດຍບໍ່ຖືກຕ້ອງ.

ການກະທຳດັ່ງກ່າວ X ກໍຮູ້ວ່າຕົນລົດຢູ່ໃນຮ້ານຂອງຄົນອື່ນ ແລະ ຮູ້ວ່າຄົນອື່ນບໍ່ອະນຸຍາດໃຫ້ເອົາຊັບນັ້ນໄປ ແຕ່ X ຍັງຈິງໃຈເອົາຊັບນັ້ນມາເປັນຂອງຕົນ ຫຼື ມາໄວ້ໃນການຄອບຄອງຂອງຕົນ ຈຶ່ງຖືວ່າການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາກໍລະນີສຶກສາດັ່ງກ່າວໂດຍປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ນັ້ນແລ້ວ ຈຶ່ງຖືວ່າການກະທຳຂອງ X ເປັນການກະທຳຜິດສະຖານລັກຊັບສຳເລັດຕາມມາດຕາ 231 ຂອງປະມວນກົດໝາຍອາຍາແລ້ວ ເຖິງວ່າ X ຈະບໍ່ໄດ້ນຳເອົາຊັບນັ້ນຕິດຕົວໄປນຳກໍຕາມ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້ທີ 1**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອທຽບກັບເງື່ອນໄຂໃນຂໍ້ທີ 5 ແລ້ວ ເຫັນວ່າການທີ່ X ມີເຈດຕະນາເອົາຕົນລົດທີ່ຢູ່ໃນການຄອບຄອງຂອງຄົນອື່ນ ຫຼື ຄົນອື່ນເປັນເຈົ້າຂອງຢູ່ໄປນັ້ນ ເປັນການກະທຳດ້ວຍການເຂົ້າໄປຍາດແຍ່ງເອົາການຄອບຄອງຊັບນັ້ນແທນຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຊັບນັ້ນແລ້ວ. ການກະທຳດັ່ງກ່າວຈຶ່ງເປັນການເຮັດໃຫ້ຜູ້ເປັນເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບສູນເສຍການຄອບຄອງຊັບນັ້ນແລ້ວ ແລະ ເຖິງວ່າພາຍຫຼັງ X ຈະເອົາຕົນລົດທີ່ຕົນເອົາມານັ້ນໄປອີງໄວ້ຮົ້ວຂອງຮ້ານຄືນ ຫຼື ປີນຂ້າມຮົ້ວເອົາຕົນລົດກັບຄືນໄປໄວ້ບ່ອນເກົ່າຄືນກໍຕາມ, ກໍຖືວ່າການກະທຳຂອງ X ເປັນການກະທຳຕໍ່ຊັບທີ່ຢູ່ໃນການຄອບຄອງຂອງຜູ້ອື່ນ ແລະ ຜູ້ກະທຳໄດ້ເຂົ້າຄອບຄອງຊັບນັ້ນແທນຜູ້ເປັນເຈົ້າຂອງແລ້ວ. ການກະທຳຂອງ X ກໍຍັງຖືວ່າເປັນການເອົາຊັບຂອງຄົນອື່ນມາ.

ດັ່ງນັ້ນ, ຈຶ່ງເຫັນວ່າການກະທຳຂອງ X ຄົບຖ້ວນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ ແລະ ການກະທຳຂອງ X ຈຶ່ງເປັນການກະທຳຜິດສະຖານລັກຊັບສຳເລັດຕາມມາດຕາ 231 ຂອງປະມວນກົດໝາຍອາຍາເຊັ່ນກັນ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້ທີ 2**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອທຽບກັບເງື່ອນໄຂໃນຂໍ້ທີ 5 ແລ້ວ ເຫັນວ່າຕົນລົດທີ່ເຈົ້າຂອງກໍຄື A ໄດ້ລືມໄວ້ຢູ່ນອກຮົ້ວບ່ອນຖິ້ມຂີ້ເຫຍື້ອຂອງຮ້ານ

ນັ້ນ ຄວາມໝາຍຄືເຈົ້າຂອງຊັບໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນໄປແລ້ວ. ໃນເມື່ອ A ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນໄປແລ້ວຈຶ່ງຖືວ່າຊັບນັ້ນບໍ່ໄດ້ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ແລ້ວ. ການທີ່ X ເອົາເງິນລົດນັ້ນໄປຈຶ່ງເປັນການກະທຳຕໍ່ຊັບທີ່ບໍ່ໄດ້ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ແຕ່ຢ່າງໃດ ເມື່ອນຳມາປຽບທຽບແລ້ວເຫັນວ່າບໍ່ກົງກັບເງື່ອນໄຂຂໍ້ 5.2.

ໃນເມື່ອ X ເອົາຊັບທີ່ບໍ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ໄປ ຈຶ່ງສາມາດແຍກອອກເປັນ 2 ກໍລະນີຄື:

1). ຖ້າ X ຄິດວ່າເງິນລົດນັ້ນເຈົ້າຂອງລືມໄວ້ໃນສະຖານທີ່ດັ່ງກ່າວ, ການກະທຳຂອງ X ບໍ່ເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ແຕ່ເປັນການກະທຳຜິດສະຖານການຄອບຄອງຊັບຢ່າງຜິດກົດໝາຍຕາມມາດຕາ 240 ຂອງປະມວນກົດໝາຍອາຍາ;

2). ເຖິງຢ່າງໃດກໍຕາມ ຖ້າໂດຍອັດຕະວິໄສຂອງ X ເຂົ້າໃຈວ່າສິ່ງທີ່ຕົນເອງເອົາໄປແມ່ນຂີ້ເຫຍື້ອ ຫຼື ແມ່ນຊັບທີ່ຄົນອື່ນຖິ້ມແລ້ວ, ການກະທຳຂອງ X ບໍ່ຜິດທາງອາຍາໃນສະຖານໃດເລີຍ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ A ລືມແຫວນຄຳໄວ້ຫົວຕຽງນອນໃນເວລາແຈ້ງອອກຈາກຫ້ອງພັກຂອງໂຮງແຮມນັ້ນເປັນການລືມຊັບໄວ້ໃນສະຖານທີ່ສະເພາະຂອງບຸກຄົນກໍຄືສະຖານທີ່ຂອງເຈົ້າຂອງໂຮງແຮມ ຊຶ່ງບຸກຄົນອື່ນຈະສາມາດເຂົ້າໄປໄດ້ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກເຈົ້າຂອງເທົ່ານັ້ນ. ການລືມແຫວນຄຳໄວ້ໃນຫ້ອງພັກຂອງໂຮງແຮມ ຊຶ່ງເປັນສະຖານທີ່ສະເພາະນັ້ນ, ສິດໃນການຄອບຄອງແຫວນຄຳຂອງ A ຈຶ່ງໄດ້ໂອນໄປຫາເຈົ້າຂອງໂຮງແຮມໃນທັນທີໂດຍປະລິຍາຍໝາຍຄວາມວ່າໃນເວລານັ້ນແຫວນຄຳດັ່ງກ່າວໄດ້ໂອນການຄອບຄອງໄປຫາເຈົ້າຂອງໂຮງແຮມແລ້ວ. ໃນເມື່ອ X ເອົາແຫວນຄຳທີ່ A ລືມໄວ້ຢູ່ຫ້ອງພັກຂອງໂຮງແຮມ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຈຶ່ງເປັນການເອົາຊັບຂອງຜູ້ອື່ນມາ.

ການທີ່ X ເຂົ້າໄປພັກໂຮງແຮມຫ້ອງດັ່ງກ່າວໃນພາຍຫຼັງ ແລ້ວໄດ້ຈັບເອົາແຫວນຄຳນັ້ນໄປເປັນຂອງຕົນ ຈຶ່ງເປັນການເອົາຊັບທີ່ຢູ່ໃນການຄອບຄອງຂອງຄົນອື່ນກໍຄືຢູ່ໃນການຄອບຄອງຂອງເຈົ້າຂອງໂຮງແຮມໄປ. ການກະທຳຂອງ X ເມື່ອນຳ

ມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຈຶ່ງເປັນການເອົາຊັບມາໂດຍບໍ່ຖືກຕ້ອງ.

ການກະທຳຂອງ X ດ້ວຍການເອົາແຫວນຄຳຢູ່ຫ້ອງພັກຂອງໂຮງແຮມໄປນັ້ນເປັນການກະທຳໂດຍຮູ້ວ່າຄົນອື່ນລືມແຫວນຄຳໄວ້ຫົວຕຽງນອນ ແລະ ຮູ້ວ່າຕົນບໍ່ມີສິດເອົາຊັບນັ້ນໄປ ແຕ່ X ກໍຍັງຈິງໃຈເອົາແຫວນນັ້ນມາເປັນຂອງຕົນ. ດັ່ງນັ້ນ, ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາການກະທຳດັ່ງກ່າວໂດຍສົມທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ຂ້າງເທິງນັ້ນແລ້ວຈຶ່ງເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານລັກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 231 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂໃນຂໍ້ທີ 5 ແລ້ວເຫັນວ່າການທີ່ A ລືມແຫວນຄຳໄວ້ໜ້າໂຕະໃນຮ້ານອາຫານທີ່ລູກຄ້າ ແລະ ທຸກຄົນສາມາດເຂົ້າອອກໄດ້ນັ້ນ ຈຶ່ງຖືວ່າ A ໄດ້ສູນເສຍການຄອບຄອງຊັບນັ້ນໄປແລ້ວ ໝາຍຄວາມວ່າການລືມຊັບໄວ້ໃນຮ້ານອາຫານທີ່ເປັນສະຖານທີ່ທົ່ວໄປ ຊຶ່ງລູກຄ້າ ແລະ ຄົນອື່ນສາມາດເຂົ້າອອກໄດ້ນັ້ນ, ຊັບນັ້ນຈຶ່ງບໍ່ສາມາດໂອນການຄອບຄອງໄປໃຫ້ເຈົ້າຂອງຮ້ານອາຫານ ຫຼື ຜູ້ຈັດການໂດຍປະລິຍາຍແຕ່ຢ່າງໃດ. ໃນເມື່ອ X ເຂົ້າໄປເຫັນຈຶ່ງໄດ້ຈັບເອົາແຫວນຄຳນັ້ນໄປ ເມື່ອນຳມາປຽບທຽບແລ້ວເຫັນວ່າບໍ່ກົງກັບເງື່ອນໄຂຂໍ້ 5.2 ໝາຍຄວາມວ່າເປັນການເອົາຊັບທີ່ບໍ່ຢູ່ໃນການຄອບຄອງຂອງບຸກຄົນອື່ນໄປ.

ໃນເມື່ອ X ເອົາຊັບກໍຄືແຫວນຄຳທີ່ບໍ່ໄດ້ຢູ່ໃນການຄອບຄອງຂອງບຸກຄົນອື່ນໄປ ຈຶ່ງບໍ່ເປັນການກະທຳຜິດໃນສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ແຕ່ເປັນການກະທຳຜິດໃນສະຖານຄອບຄອງຊັບຢ່າງຜິດກົດໝາຍຕາມມາດຕາ 240 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

ຈາກກໍລະນີສຶກສານີ້ເຫັນວ່າກະເປົາເງິນທີ່ຕົກອອກຈາກຖົງໂສ້ງຢູ່ໃກ້ກັບ A ຫຼາຍທີ່ສຸດ ຊຶ່ງເຈົ້າຂອງກໍຄື A ສາມາດຈັບເອົາຄືນມາເມື່ອໃດກໍໄດ້ນັ້ນ, ຄວາມໝາຍ

ຈຶ່ງຖືວ່າກະເປົາເງິນຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຢູ່. ດັ່ງນັ້ນ, ເຈົ້າຂອງກະເປົາເງິນກໍຄື A ຍັງບໍ່ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນເທື່ອ. ໃນເມື່ອ X ຈັບເອົາກະເປົາເງິນນັ້ນໄປ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຈຶ່ງເປັນການເອົາຊັບຂອງຜູ້ອື່ນມາ.

ການທີ່ X ໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນຂອງ A ນັ້ນ ຄວາມໝາຍກໍເປັນການເຂົ້າຄອບຄອງ ຫຼື ຄວບຄຸມຊັບແທນຄົນອື່ນແລ້ວ. ຖ້າຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າການກະທຳຂອງ X ເປັນການທຳລາຍການຄອບຄອງຊັບຂອງ A ແລະ ພ້ອມກັນນັ້ນ X ກໍໄດ້ເຂົ້າຄອບຄອງຊັບນັ້ນແທນ A ແລ້ວ. ການກະທຳຂອງ X ດ້ວຍການໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນໄວ້ນັ້ນຄວາມໝາຍຈຶ່ງເປັນການເຂົ້າໄປຄອບຄອງ ຫຼື ຄວບຄຸມຊັບຂອງຄົນອື່ນແລ້ວ. ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຈຶ່ງເປັນການເອົາຊັບມາໂດຍບໍ່ຖືກຕ້ອງ.

ການກະທຳຂອງ X ທີ່ໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນນັ້ນເປັນການກະທຳໂດຍຮູ້ວ່າກະເປົາເງິນນັ້ນຕົກອອກຈາກຖົງໂສ້ງຂອງຄົນອື່ນ ແລະ ຮູ້ວ່າຕົນບໍ່ມີສິດເອົາກະເປົາເງິນນັ້ນມາ ແຕ່ຍັງຈິງໃຈໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມໄວ້ເພື່ອຈຸດປະສົງຈະເອົາກະເປົາເງິນນັ້ນມາຄອບຄອງ ຫຼື ເອົາມາເປັນຂອງຕົນ ຈຶ່ງຖືວ່າການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ການກະທຳຂອງ X ດ້ວຍການເອົາຊັບທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງຄົນອື່ນມາ ຈຶ່ງເປັນການກະທຳຜິດສະຖານລັກຊັບສຳເລັດຕາມມາດຕາ 231 ຂອງປະມວນກົດໝາຍອາຍາແລ້ວ ເຖິງວ່າ X ຈະບໍ່ໄດ້ຈັບເອົາກະເປົາເງິນນັ້ນຕິດຕົວໄປນຳກໍຕາມ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້ທີ 1**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ທີ 5 ແລ້ວກໍມີເຫດຜົນຄືກັນກັບກໍລະນີສຶກສາຂ້າງເທິງຄືກະເປົາເງິນທີ່ຕົກອອກຈາກຖົງໂສ້ງທີ່ຢູ່ໃກ້ກັບຜູ້ເປັນເຈົ້າຂອງຫຼາຍທີ່ສຸດ ຊຶ່ງສາມາດຈັບເອົາຄືນມາເມື່ອໃດກໍໄດ້ນັ້ນຈຶ່ງຖືວ່າຊັບຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຢູ່. ການກະທຳຂອງ X

ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຈຶ່ງເປັນການເອົາຊັບຂອງຄົນອື່ນມາ.

ການທີ່ X ໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນຂອງ A ນັ້ນຄວາມໝາຍກໍເປັນການກະທຳຕໍ່ຊັບທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງຄົນອື່ນຢູ່. ພ້ອມກັນນັ້ນຜູ້ກະທຳກໍໄດ້ເຂົ້າໄປຍາດແຍ່ງເອົາການຄອບຄອງຊັບນັ້ນຈາກຜູ້ຄອບຄອງ ຫຼື ຜູ້ເປັນເຈົ້າຂອງຊັບແລ້ວ. ການກະທຳດັ່ງກ່າວຂອງ X ຈຶ່ງເປັນການກະທຳຕໍ່ຊັບທີ່ບຸກຄົນອື່ນຍັງບໍ່ໄດ້ສູນເສຍການຄອບຄອງ ຫຼື ບໍ່ໄດ້ສູນເສຍການຄວບຄຸມຊັບນັ້ນ. ການເອົາຊັບທີ່ຍັງຢູ່ໃນການຄອບຄອງ ຫຼື ຍັງຢູ່ໃນການຄວບຄຸມຂອງຄົນອື່ນຢູ່ໄປ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຄວາມໝາຍຈຶ່ງເປັນການເອົາຊັບມາໂດຍບໍ່ຖືກຕ້ອງ.

ດັ່ງນັ້ນ, ການກະທຳຂອງ X ຕໍ່ຊັບທີ່ຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງຄົນອື່ນຢູ່ ເຖິງວ່າພາຍຫຼັງມາຈະໃຊ້ໄມ້ເຂ່ຍດິນ ແລະ ຫຍ້າອອກແລ້ວບອກໃຫ້ເຈົ້າຂອງກໍຄື A ມາເອົາຄືນກໍຕາມ, ການກະທຳຂອງ X ຈຶ່ງເປັນການກະທຳຜິດສະຖານລັກຊັບສຳເລັດຕາມມາດຕາ 231 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້ທີ 2**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອທຽບກັບເງື່ອນໄຂຂໍ້ທີ 5 ແລ້ວເຫດຜົນກໍເຊັ່ນກັນ. ການທີ່ X ໃຊ້ຕີນເຂ່ຍດິນ ແລະ ຫຍ້າຖົມກະເປົາເງິນ ຈຶ່ງເປັນການກະທຳສຳເລັດຕາມທີ່ໄດ້ໃຫ້ຄຳຕອບໄວ້ຂ້າງເທິງນັ້ນແລ້ວ. ໃນກໍລະນີຕໍ່ມາ Y ບັງເອີນໄປເຫັນຈຶ່ງໄດ້ໃຊ້ໄມ້ເຂ່ຍດິນ ແລະ ຫຍ້າອອກແລ້ວຈັບເອົາກະເປົາເງິນນັ້ນໄປ, ໂດຍພາວະວິໄສແລ້ວການກະທຳຂອງ Y ເປັນການເອົາຊັບທີ່ຢູ່ໃນການຄອບຄອງຂອງຄົນອື່ນໄປ ແຕ່ໂດຍອັດຕະວິໄສແລ້ວ Y ບໍ່ຮູ້ວ່າຊັບນັ້ນຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ X ຢູ່. ການທີ່ Y ເອົາຊັບກໍຄືກະເປົາເງິນນັ້ນໄປໂດຍຄິດວ່າຊັບນັ້ນບໍ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງໃຜ ແຕ່ຄວາມຈິງແລ້ວຊັບນັ້ນ X ໄດ້ຄອບຄອງ ຫຼື ຄວບຄຸມຢູ່ ຈຶ່ງຖືວ່າ Y ໄດ້ກະທຳຜິດດ້ວຍຄວາມເຂົ້າໃຈຜິດ ແຕ່ເປັນຄວາມເຂົ້າໃຈຜິດໃນຂໍ້ເທັດຈິງ. ເຖິງຢ່າງໃດກໍຕາມ ເຖິງວ່າການກະທຳຜິດຂອງ Y ເປັນການກະທຳຜິດດ້ວຍຄວາມເຂົ້າໃຈຜິດໃນຂໍ້ເທັດຈິງກໍຕາມ ແຕ່ກໍຖືວ່າເປັນຄວາມເຂົ້າໃຈຜິດຕໍ່ຜົນປະໂຫຍດທາງກົດໝາຍທີ່ທັບຊ້ອນກັນຄືຕໍ່ກຳມະສິດ ແລະ ການ

ຄອບຄອງຊັບ. ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງໄດ້ພິຈາລະນາຄວາມຜິດຕາມເຈດຕະນະຂອງ Y ເທົ່ານັ້ນ.

ໃນເມື່ອ Y ກະທຳຜິດໂດຍເຂົ້າໃຈຜິດຕໍ່ຜົນປະໂຫຍດທາງກົດໝາຍທີ່ທັບຊ້ອນກັນນີ້ ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຈຶ່ງຖືວ່າ Y ບໍ່ມີເຈດຕະນາເອົາຊັບທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ X ໄປ. ໃນເມື່ອ Y ບໍ່ມີເຈດຕະນາເອົາຊັບທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ X ໄປ, ຈຶ່ງຖືວ່າ Y ບໍ່ມີຄວາມຜິດສະຖານລັກຊັບແຕ່ຢ່າງໃດ.

ເຖິງຢ່າງໃດກໍຕາມ Y ເອົາຊັບໂດຍບໍ່ຮູ້ວ່າຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ X ໄປ ໂດຍຄິດວ່າຊັບນັ້ນບໍ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງໃຜ ຈຶ່ງຖືເອົາຕາມຄວາມເຂົ້າໃຈຂອງ Y ຄື: ມີເຈດຕະນາເອົາຊັບທີ່ຕົກຊອກໄດ້ ຫຼື ເກັບໄດ້ໄປເທົ່ານັ້ນ. ໃນເມື່ອ Y ມີເຈດຕະນາເອົາຊັບໂດຍຄິດວ່າເປັນຊັບທີ່ຕົກຊອກໄດ້ ຫຼື ເກັບໄດ້ໄປ ຈຶ່ງບໍ່ມີຄວາມຜິດສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ແຕ່ເປັນການກະທຳຜິດໃນສະຖານການຄອບຄອງຊັບຢ່າງຜິດກົດໝາຍຕາມມາດຕາ 240 ຂອງປະມວນກົດໝາຍອາຍາ, ສ່ວນການກະທຳຂອງ X ເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາດັ່ງທີ່ໄດ້ກ່າວໄວ້ໃນຂ້າງເທິງນັ້ນ.

### 6.4 ຄຳຕອບກໍລະນີສຶກສາທີ 4

ຈາກກໍລະນີສຶກສານີ້, ການທີ່ X ຈັບເອົາກະເປົາເງິນທີ່ A ລືມໄວ້ໃນສວນສາທາລະນະໃນຊ່ວງໄລຍະເວລາທີ່ A ລຸກອອກຈາກສະຖານທີ່ນັ້ນເພື່ອຈະໄປຂຶ້ນລົດເມ ຊຶ່ງຢູ່ຫ່າງອອກໄປພຽງແຕ່ປະມານ 5 ແມັດເທົ່ານັ້ນ ຈຶ່ງເຫັນວ່າເປັນໄລຍະທີ່ບໍ່ຫ່າງໄກລະຫວ່າງເຈົ້າຂອງ ແລະ ກະເປົາເງິນ, ພ້ອມກັນນັ້ນເປັນໄລຍະເວລາທີ່ A ສາມາດຫຼຽວເຫັນ ແລະ ກັບຄືນມາເອົາກະເປົາເງິນນັ້ນໄດ້ໃນທັນທີທັນໃດ, ກໍຖືວ່າກະເປົາເງິນນັ້ນຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຢູ່. ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຈຶ່ງເປັນການເອົາຊັບຂອງຄົນອື່ນມາ.

ການທີ່ X ຈັບເອົາກະເປົາເງິນນັ້ນໄປຈຶ່ງເປັນການກະທຳຕໍ່ຊັບທີ່ຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ແລະ ເປັນການເຂົ້າໄປຍາດແຍ່ງເອົາຄອບຄອງຊັບນັ້ນແທນຜູ້ເປັນເຈົ້າຂອງແລ້ວ ຄວາມໝາຍຈຶ່ງເປັນການເອົາຊັບທີ່ຢູ່ໃນການຄອບ

ຄອງ ຫຼື ຄວບຄຸມຂອງຄົນອື່ນ, ຈຶ່ງຖືວ່າການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຈຶ່ງເປັນການເອົາຊັບມາໂດຍບໍ່ຖືກຕ້ອງ.

ການທີ່ X ຈັບເອົາກະເປົາເງິນທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຢູ່ນັ້ນ ຈຶ່ງເປັນການກະທຳທີ່ຮູ້ວ່າກະເປົາເງິນເປັນຂອງຄົນອື່ນລືມໄວ້ ແລະ ຮູ້ວ່າເຈົ້າຂອງກະເປົາຢູ່ຫ່າງກະເປົາປະມານ 5 ແມັດນັ້ນ ເຈົ້າຂອງສາມາດກັບຄືນມາເອົາໃນເວລາໃດກໍໄດ້ ແຕ່ຜູ້ກ່ຽວຍັງຈິງໃຈເອົາຊັບນັ້ນມາຄອບຄອງ ຫຼື ເອົາມາເປັນຂອງຕົນ ຈຶ່ງຖືວ່າການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາກໍລະນີສຶກສາດັ່ງກ່າວນີ້ທຽບກັບເງື່ອນໄຂແລ້ວ ຈຶ່ງເຫັນວ່າການກະທຳຂອງ X ດ້ວຍການເອົາຊັບທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງຄົນອື່ນຢູ່ມານັ້ນ ເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 4 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້, ການທີ່ X ຈັບເອົາກະເປົາເງິນທີ່ A ລືມໄວ້ໃນສວນສາທາລະນະ ຊຶ່ງເປັນຊ່ວງໄລຍະເວລາທີ່ A ຂຶ້ນລົດເມ ແລະ ລົດເມກໍກຳລັງເຄື່ອນຕົວອອກໄປແລ້ວນັ້ນ ເຫັນວ່າເປັນໄລຍະທາງທີ່ຫ່າງຈາກບ່ອນລືມກະເປົາເງິນ ແລະ ກໍເປັນໄລຍະເວລາທີ່ A ບໍ່ສາມາດກັບຄືນມາເອົາກະເປົາເງິນນັ້ນໄດ້ໃນທັນທີທັນໃດ, ຈຶ່ງຖືວ່າກະເປົາເງິນນັ້ນບໍ່ໄດ້ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ແລ້ວ ຫຼື ຈະເວົ້າໃນຄວາມໝາຍໜຶ່ງກໍໝາຍຄວາມວ່າ A ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນໄປແລ້ວ. ການທີ່ X ຈັບເອົາກະເປົາເງິນນັ້ນໄປຈຶ່ງເປັນການກະທຳຕໍ່ຊັບທີ່ບໍ່ໄດ້ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຫຼື ເອີ້ນວ່າໃນເວລານີ້ A ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນໄປແລ້ວ. ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າບໍ່ກົງກັບເງື່ອນໄຂຂໍ້ 5.2 ຈຶ່ງບໍ່ເປັນການເອົາຊັບຂອງຄົນອື່ນມາ.

ດັ່ງນັ້ນ, ການກະທຳຂອງ X ຕໍ່ຊັບທີ່ຄົນອື່ນໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມໄປແລ້ວ ຈຶ່ງບໍ່ເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ແຕ່ເປັນການກະທຳຜິດໃນສະຖານຄອບຄອງຊັບຢ່າງຜິດກົດໝາຍຕາມມາດຕາ 240 ຂອງປະມວນກົດໝາຍອາຍາ.

**6.5 ຄຳຕອບກໍລະນີສຶກສາທີ 5**

ຈາກກໍລະນີສຶກສານີ້, ການທີ່ X ຮູ້ແຕ່ເບື້ອງຕົ້ນແລ້ວວ່າຕົນເອງບໍ່ມີເງິນຊື້ເສື້ອໃໝ່ ຈຶ່ງໄດ້ເຂົ້າໄປຮ້ານຂາຍເສື້ອໂດຍມີເຈດຕະນາຕົວະເພື່ອໃຫ້ເຈົ້າຂອງຮ້ານກໍຄື A ອະນຸຍາດໃຫ້ X ເອົາເສື້ອຈຳນວນໜຶ່ງໄປໃສ່ລອງຢູ່ຫ້ອງລອງເສື້ອທີ່ຢູ່ພາຍໃນຮ້ານຂອງ A ນັ້ນ, ຈຶ່ງຖືວ່າເສື້ອຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຢູ່. ໝາຍຄວາມວ່າ A ຍັງບໍ່ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນແຕ່ຢ່າງໃດ. ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຈຶ່ງເປັນການເອົາຊັບຂອງຄົນອື່ນມາ.

ການທີ່ X ສວຍໂອກາດເອົາເສື້ອນັ້ນຫຼົບໜີອອກຈາກຮ້ານໄປຈຶ່ງເປັນການກະທຳຕໍ່ຊັບທີ່ຍັງຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ຢູ່ໄປ, ຈຶ່ງຖືວ່າ X ໄດ້ເຂົ້າໄປຍາດແຍ່ງເອົາຄອບຄອງຊັບນັ້ນແທນ A ແລ້ວ. ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ຈຶ່ງເປັນການເອົາຊັບມາໂດຍບໍ່ຖືກຕ້ອງ.

ການທີ່ X ສວຍໂອກາດເອົາເສື້ອນັ້ນຫຼົບໜີອອກຈາກຮ້ານໄປຈຶ່ງເປັນການກະທຳທີ່ຮູ້ວ່າຊັບນັ້ນຍັງຢູ່ໃນຂອບເຂດຂອງຮ້ານ ຊຶ່ງເຈົ້າຂອງຮ້ານໄດ້ຄວບຄຸມຢູ່ ແລະ ຮູ້ວ່າເຈົ້າຂອງຮ້ານບໍ່ອະນຸຍາດໃຫ້ເອົາໄປ ແຕ່ກໍຍັງຈິງໃຈເອົາຊັບນັ້ນມາຄອບຄອງ ຫຼື ເອົາມາເປັນຂອງຕົນ, ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ການກະທຳຂອງ X ດ້ວຍການສວຍໂອກາດເອົາເສື້ອທີ່ຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງ A ໄປ ຈຶ່ງເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 5 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້, ການທີ່ X ຮູ້ແຕ່ເບື້ອງຕົ້ນແລ້ວວ່າຕົນບໍ່ມີເງິນຊື້ເສື້ອໃໝ່ໄ ຈຶ່ງໄດ້ເຂົ້າໄປຮ້ານຂາຍເສື້ອຂອງ A ແລ້ວມີເຈດຕະນາຕົວະເຈົ້າຂອງຮ້ານເພື່ອຂໍເອົາເສື້ອໄປໄວ້ໃນລົດທີ່ຈອດຢູ່ຂ້າງນອກ ຊຶ່ງໄກຈາກຮ້ານປະມານ 30 ກວ່າແມັດກ່ອນແລ້ວຈຶ່ງຈະມາຈ່າຍເງິນໃຫ້ A ໂດຍທີ່ A ກໍອະນຸຍາດໃຫ້ເອົາໄປ. X ຈຶ່ງສວຍໂອກາດເອົາເສື້ອຂຶ້ນລົດແລ້ວຂັບຫຼົບໜີໄປນັ້ນ ເຫັນວ່າໃນເວລານັ້ນເສື້ອໄດ້ຢູ່ຂ້າງນອກ ແລະ ໄກຈາກຮ້ານແລ້ວ ຈຶ່ງຖືວ່າຊັບກໍຄືເສື້ອບໍ່ໄດ້ຢູ່ໃນການຄອບຄອງ

ຫຼື ບໍ່ໄດ້ຢູ່ໃນການຄວບຄຸມຂອງ A ແລ້ວ, ໝາຍຄວາມວ່າ A ໄດ້ສູນເສຍການຄອບຄອງ ຫຼື ຄວບຄຸມຊັບນັ້ນໄປແລ້ວ. ການກະທຳຂອງ X ເມື່ອນຳມາປຽບທຽບແລ້ວເຫັນວ່າບໍ່ກົງກັບເງື່ອນໄຂຂໍ້ 5.1 ຈຶ່ງບໍ່ເປັນການເອົາຊັບຂອງຄົນອື່ນມາ.

ການທີ່ X ສວຍໂອກາດເອົາເສື້ອຂຶ້ນລົດແລ້ວຂັບຫຼົບໜີອອກໄປນັ້ນ ຈຶ່ງເປັນການກະທຳໂດຍເຈດຕະນາຕໍ່ຊັບທີ່ບໍ່ຢູ່ໃນການຄອບຄອງ ຫຼື ບໍ່ຢູ່ໃນການຄວບຄຸມຂອງ A ແລ້ວ. ການກະທຳຂອງ X ດ້ວຍການເອົາຊັບທີ່ບໍ່ຢູ່ໃນການຄອບຄອງ ຫຼື ບໍ່ຢູ່ໃນການຄວບຄຸມຂອງ A ໄປ ຈຶ່ງບໍ່ເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ແຕ່ເປັນການກະທຳຜິດສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດຖານລັກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 231 ຂອງປະມວນກົດໝາຍອາຍາ ຊຶ່ງໄດ້ບັນຍັດຂໍ້ຄວາມທີ່ສຳຄັນໄວ້ວ່າ: "*ບຸກຄົນໃດຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງ*" ເຫັນວ່າມາດຕາດັ່ງກ່າວເປັນປະເດັນບັນຫາໃຫ້ພິຈາລະນາຢູ່ 2 ປະການຄື:

1). ຄຳວ່າ "*ຊັບຂອງຜູ້ອື່ນ*" ອາດຈະຕີຄວາມໝາຍວ່າຊັບນັ້ນເປັນກຳມະສິດຢ່າງຖືກຕ້ອງຕາມກົດໝາຍຂອງຜູ້ອື່ນ ຖ້າມີຄົນເອົາໄປຈຶ່ງຈະຖືວ່າເປັນການກະທຳຜິດຖານລັກຊັບໄດ້ ແຕ່ເຖິງຢ່າງໃດກໍຕາມຖ້າຊັບນັ້ນບໍ່ໄດ້ເປັນກຳມະສິດຂອງຜູ້ອື່ນ ຫຼື ເປັນກຳມະສິດໂດຍບໍ່ຖືກຕ້ອງຕາມກົດໝາຍຂອງຜູ້ອື່ນ ດ້ວຍການທີ່ບຸກຄົນໃດ ໜຶ່ງຄອບຄອງ ຫຼື ຄວບຄຸມໄວ້ເທົ່ານັ້ນ ແລ້ວມີຄົນເອົາໄປໂດຍບໍ່ຖືກຕ້ອງ ຈະຖືວ່າເປັນການກະທຳຜິດຖານລັກຊັບ ຫຼື ບໍ່;

2). ຄຳວ່າ "*ເອົາມາເປັນຂອງຕົນ*" ອາດຈະຕີຄວາມໝາຍວ່າຜູ້ກະທຳໄດ້ລັກຊັບມາແລ້ວເພື່ອຈະເອົາມາເປັນກຳມະສິດຂອງຕົນເທົ່ານັ້ນຈຶ່ງຈະຜິດ ແຕ່ຖ້າເອົາມາແລ້ວບໍ່ໄດ້ເອົາມາເປັນກຳມະສິດຂອງຕົນເຊັ່ນ: ເບື້ອງຕົ້ນຄິດວ່າຈະເອົາມາເປັນຂອງຕົນ ແຕ່ພາຍຫຼັງເອົາມາແລ້ວປ່ຽນໃຈໂຍນຊັບນັ້ນຖິ້ມ ຫຼື ທຳລາຍຖິ້ມ ຫຼື ເອົາກັບໄປ

ສິ່ງຄືນ ຫຼື ກັບເອົາໄປໄວ້ບ່ອນເກົ່າຄືນແລ້ວຍັງຈະຖືວ່າຜູ້ກະທຳໄດ້ເອົາຊັບນັ້ນມາເປັນກຳມະສິດຂອງຕົນຢູ່ ຫຼື ບໍ່ ແລະ ຍັງຈະຖືວ່າເປັນການກະທຳຜິດຖານລັກຊັບຢູ່ ຫຼື ບໍ່.

ດ້ວຍເຫດ ແລະ ຜົນທີ່ກ່າວມາຂ້າງເທິງນັ້ນ, ຈຶ່ງມີຂໍ້ສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງປະມວນກົດໝາຍອາຍາໃນອະນາຄົດວ່າມາດຕາດັ່ງກ່າວຄວນບັນຍັດຂໍ້ຄວາມ ໃໝ່ວ່າ: *"ບຸກຄົນຜູ້ໃດຫາກເອົາຊັບຂອງຜູ້ອື່ນ ຫຼື ຜູ້ອື່ນເປັນເຈົ້າຂອງຮ່ວມ ຫຼື ຜູ້ອື່ນຄອບຄອງ ຫຼື ຄວບຄຸມຢູ່ໄປໂດຍບໍ່ຖືກຕ້ອງ"* ເທົ່ານີ້ກໍເຫັນວ່າສາມາດຄວບຄຸມຕໍ່ກັບພຶດຕິກຳກ່ຽວກັບການເອົາຊັບຂອງຜູ້ອື່ນໄປໂດຍບໍ່ຖືກຕ້ອງທີ່ເປັນການກະທຳຜິດຖານລັກຊັບໄດ້.

## ຮູບພາບສະແດງເຖິງການກະທຳຜິດສະຖານການລັກຊັບ




 : ຊັບຢູ່ໃນການຄອບຄອງຂອງຜູ້ຖືກເສຍຫາຍ, ເປັນການລັກຊັບ

 : ຊັບຢູ່ນອກການຄອບຄອງຂອງຜູ້ຖືກເສຍຫາຍ, ບໍ່ເປັນການລັກຊັບ

# ບົດທີ 7
# ການສໍ້ໂກງຊັບ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ຮູ້ວ່າ A ຕ້ອງການຂາຍທີ່ດິນ ແລະ ຕົນເອງບໍ່ມີເງິນທີ່ຈະຊື້ ຈຶ່ງໄດ້ໄປຕົວະເຮັດສັນຍາຊື້-ຂາຍທີ່ດິນກັບ A ພ້ອມທັງຈ່າຍເງິນມັດຈຳສ່ວນໜຶ່ງເພື່ອໃຫ້ A ເຊື່ອໃຈໃນການໂອນກຳມະສິດທີ່ດິນມາເປັນຂອງຕົນກ່ອນ ແລ້ວຈຶ່ງຈະຈ່າຍເງິນສ່ວນທີ່ເຫຼືອໃຫ້, ແຕ່ພາຍຫຼັງໄດ້ກຳມະສິດທີ່ດິນແລ້ວ X ກໍບໍ່ນຳເງິນມາຈ່າຍສ່ວນທີ່ຍັງເຫຼືອອີກເລີຍ.

**ກໍລະນີສຶກສາທີ 1 ດັດແກ້ 1**: ກໍລະນີ X ເຮັດສັນຍາຊື້-ຂາຍທີ່ດິນກັບ A ແລະ ຄິດວ່າອີກສອງເດືອນຈະສາມາດຫາເງິນມາຊຳລະໃຫ້ A ໄດ້, ແຕ່ໃນຊ່ວງເວລາທີ່ A ກຳລັງດຳເນີນການໂອນກຳມະສິດທີ່ດິນໃຫ້ X ຢູ່ນັ້ນ, X ເກີດມີບັນຫາທາງການເງິນ ແລະ ຮູ້ວ່າຕົນຈະບໍ່ສາມາດນຳເງິນມາຊຳລະສ່ວນທີ່ເຫຼືອໄດ້ອີກຕໍ່ໄປ ແຕ່ X ກໍບໍ່ແຈ້ງໃຫ້ A ຮັບຊາບ ແລະ ປ່ອຍໃຫ້ A ໂອນກຳມະສິດທີ່ດິນມາໃຫ້ຕົນຈົນສຳເລັດ.

**ກໍລະນີສຶກສາທີ 1 ດັດແກ້ 2**: ກໍລະນີ X ເຮັດສັນຍາຊື້-ຂາຍທີ່ດິນກັບ A ແລະ ຄິດວ່າອີກສອງເດືອນຈະສາມາດຫາເງິນມາຊຳລະໃຫ້ A ໄດ້. ໃນຊ່ວງເວລາທີ່ A ກຳລັງດຳເນີນການໂອນກຳມະສິດທີ່ດິນໃຫ້ X ຢູ່ນັ້ນ, X ເກີດມີບັນຫາທາງການເງິນ ແລະ ຮູ້ວ່າຕົນຈະບໍ່ສາມາດນຳເງິນມາຊຳລະສ່ວນທີ່ເຫຼືອໄດ້ອີກຕໍ່ໄປ ແຕ່ X ກໍໄດ້ແຈ້ງບັນຫາດັ່ງກ່າວໃຫ້ A ຊາບແລ້ວ ແຕ່ A ກໍຍັງສືບຕໍ່ດຳເນີນການໂອນກຳມະສິດທີ່ດິນຈົນສຳເລັດ.

### 1.2 ກໍລະນີສຶກສາທີ 2

X ຢາກໄດ້ລົດມາຂັບຂີ່ແຕ່ບໍ່ມີເງິນຊື້ ຈຶ່ງເຮັດທຳທ່າເປັນລູກຄ້າເຂົ້າໄປຖາມລາຄາ ແລະ ກວດເບິ່ງສະພາບຂອງລົດຢູ່ຮ້ານຂອງ A ພ້ອມທັງຂໍເອົາລົດໄປທົດລອງຂັບຢູ່ຖະໜົນນອກຮ້ານເບິ່ງກ່ອນແລ້ວຈຶ່ງຈະຕັດສິນໃຈຊື້ ແລະ A ກໍໄດ້ອະນຸຍາດໃຫ້ເອົາລົດໄປທົດລອງຂັບ, ໃນເວລາທົດລອງຂັບລົດຢູ່ນັ້ນ X ກໍສວຍໂອກາດຂັບໜີໄປ.

**ກໍລະນີສຶກສາທີ 2 ດັດແກ້**: ກໍລະນີ X ໄດ້ຂໍເອົາລົດໄປທົດລອງຂັບຢູ່ເດີ່ນທີ່ຢູ່ໃນບໍລິເວນຂອງຮ້ານເບິ່ງກ່ອນ ຊຶ່ງ A ກໍອະນຸຍາດໃຫ້ X ເອົາລົດໄປທົດລອງຂັບພ້ອມທັງເຝົ້າຕິດຕາມຢູ່ບໍລິເວນດັ່ງກ່າວ, ເມື່ອໄດ້ໂອກາດທີ່ A ເຜີຕົວ X ກໍໄດ້ຂັບລົດນັ້ນໜີໄປ.

**1.3 ກໍລະນີສຶກສາ 3**

X ປອມຕົວເປັນພະນັກງານທະນາຄານໄປຫາ A ຢູ່ເຮືອນ ແລະ ບອກວ່າບັດ ATM ຂອງ A ມີບັນຫາ ບໍ່ໃຫ້ນຳໃຊ້ບັດນັ້ນໃນໄລຍະໜຶ່ງກ່ອນ ແລະ ໄດ້ບອກໃຫ້ A ເອົາບັດ ATM ພ້ອມລະຫັດມອບໃຫ້ຕົນ ເພື່ອນຳໄປກວດແກ້ຢູ່ທະນາຄານກ່ອນ ແລະ ຈະສົ່ງໃຫ້ A ຄືນພາຍຫຼັງທີ່ທາງທະນາຄານແກ້ໄຂບັນຫາໃຫ້ສຳເລັດ. A ຈຶ່ງໄດ້ມອບບັດ ATM ພ້ອມລະຫັດໃຫ້ X. ຫຼັງຈາກນັ້ນ X ກໍໄດ້ເອົາບັດ ATM ຂອງ A ໄປ.

**ກໍລະນີສຶກສາທີ 3 ດັດແກ້**: ກໍລະນີ X ບອກໃຫ້ A ໄປເອົາຊອງມາໃສ່ບັດ ແລະ ລະຫັດເພື່ອເກັບຮັກສາໄວ້ເອງກ່ອນ ເພື່ອລໍຖ້າການກວດກາຢູ່ໃນລະບົບຂອງທະນາຄານ. ໃນເວລາທີ່ A ອອກໄປເອົາຊອງມາໃສ່ບັດນັ້ນ, X ໄດ້ສວຍໂອກາດເອົາບັດ ATM ປອມທີ່ຕົນກຽມມານັ້ນສັບປ່ຽນເອົາບັດ ATM ຂອງ A ໄປ.

**1.4 ກໍລະນີສຶກສາ 4**

X ຮູ້ຕັ້ງແຕ່ທຳອິດແລ້ວວ່າຕົນບໍ່ມີເງິນແຕ່ຢາກກິນອາຫານຟຣີ ຈຶ່ງເຂົ້າໄປສັ່ງອາຫານຢູ່ໃນຮ້ານອາຫານ ແລະ ຫຼັງຈາກກິນອີ່ມແລ້ວ X ຈຶ່ງໄດ້ບອກພະນັກງານຮ້ານອາຫານວ່າຕົນລືມກະເປົາເງິນຢູ່ເຮືອນ ຈະຂໍກັບໄປເອົາແລ້ວຈະກັບມາຈ່າຍຕາມພາຍຫຼັງ, ພະນັກງານຮ້ານອາຫານກໍອະນຸຍາດໃຫ້ກັບໄປ. ຫຼັງຈາກນັ້ນ X ກໍໄດ້ອອກໄປໂດຍບໍ່ນຳເງິນມາຈ່າຍຄ່າອາຫານເລີຍ.

**ກໍລະນີສຶກສາທີ 4 ດັດແກ້**: ກໍລະນີ X ກິນອາຫານອີ່ມແລ້ວ ຈຶ່ງຮູ້ພາຍຫຼັງວ່າຕົນລືມກະເປົາເງິນ ແລະ ຄິດຈະຫຼົບໜີອອກຈາກຮ້ານໂດຍບໍ່ຈ່າຍຄ່າອາຫານນັ້ນ. X ຈຶ່ງໄດ້ບອກພະນັກງານຮ້ານອາຫານວ່າຕົນລືມກະເປົາເງິນຢູ່ເຮືອນ ຈະຂໍກັບໄປເອົາກ່ອນແລ້ວຈະກັບມາຈ່າຍຕາມພາຍຫຼັງ, ພະນັກງານຮ້ານອາຫານຈຶ່ງອະນຸຍາດໃຫ້ອອກໄປ. ຫຼັງຈາກນັ້ນ X ກໍອອກໄປໂດຍບໍ່ກັບມາຈ່າຍຄ່າອາຫານເລີຍ.

## 2. ມາດຕາ 233

ບຸກຄົນໃດຫາກໄດ້ໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ ດ້ວຍວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ ຈະຖືກລົງໂທດຕັດອິດສະລະພາບແຕ່ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີເອົາການສໍ້ໂກງຊັບເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ.

## 3. ເຫດຜົນການບັນຍັດມາດຕາ

ການສໍ້ໂກງຊັບເປັນໄພອັນຕະລາຍຕໍ່ກັບກຳມະສິດ ຫຼື ຊັບສິນຂອງຜູ້ອື່ນ ຊຶ່ງການກະທຳຜິດດັ່ງກ່າວເກີດຂຶ້ນຫຼາຍໃນສັງຄົມປັດຈຸບັນ ແລະ ມີການພັດທະນາຮູບແບບ, ວິທີການໄປຢ່າງຫຼາກຫຼາຍ, ແນບນຽນ ແລະ ສະລັບສັບຊ້ອນຂຶ້ນເລື່ອຍໆ ຊຶ່ງໄດ້ສ້າງຄວາມເສຍຫາຍຕໍ່ກຳມະສິດ ຫຼື ຊັບສິນຂອງບຸກຄົນ. ດ້ວຍເຫດນີ້, ການສໍ້ໂກງຊັບຈຶ່ງຖືກນຳມາບັນຍັດເປັນຄວາມຜິດໄວ້ໃນປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 233 ຂອງປະມວນກົດໝາຍອາຍານີ້ບັນຍັດໄວ້ເພື່ອປົກປ້ອງກຳມະສິດຂອງລັດ, ລວມໝູ່ ຫຼື ຂອງບຸກຄົນບໍ່ໃຫ້ຖືກທຳລາຍ ຫຼື ສູນເສຍໄປ.
ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອີງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການສໍ້ໂກງຊັບຕາມມາດຕາ 233 ຂອງປະມວນກົດໝາຍອາຍາໄດ້ຕ້ອງປະກອບດ້ວຍ 3 ເງື່ອນໄຂຄື: 1. ການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ; 2. ການເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ; ແລະ 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ ຂໍ້ທີ 2 ເປັນອົງປະກອບດ້ານພາວະວິໄສຂອງການກະທຳຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

**5.1 ການໃຊ້ເລ່ຫຼ່ຽມຕົວະຍົວະຫຼອກລວງ**

ການໃຊ້ເລ່ຫຼ່ຽມຕົວະຍົວະຫຼອກລວງ ໝາຍເຖິງການໃຊ້ຄວາມໄວ້ເນື້ອເຊື່ອໃຈ, ຄວາມໄວ້ວາງໃຈ ດ້ວຍວິທີການ, ຮູບການ, ສະຖານະການ, ການໂຄສະນາຊວນເຊື່ອ ຫຼື ການໃຫ້ຄຳແນະນຳທີ່ບໍ່ມີຈິງ, ການປົດບັງຂໍ້ມູນທີ່ຖືກຕ້ອງ ແລະ ເປັນຈິງ, ການໃຫ້ຂໍ້ມູນທີ່ເປັນເທັດ ຫຼື ບໍ່ຖືກຕ້ອງ, ການປອມແປງເອກະສານ ຫຼື ປອມເປັນເຈົ້າໜ້າທີ່ ເພື່ອເຮັດໃຫ້ຜູ້ຖືກກະທຳຫຼົງເຊື່ອ ແລະ ປະຕິບັດຕາມ.

ການໃຊ້ເລ່ຫຼ່ຽມຕົວະຍົວະຫຼອກລວງທີ່ຖືວ່າເປັນການສໍ້ໂກງໄດ້ກໍຕໍ່ເມື່ອວ່າການຕົວະຍົວະຫຼອກລວງເປັນເນື້ອໃນຂອງການໄດ້ຊັບນັ້ນມາ ແຕ່ໃນກໍລະນີການຕົວະເພື່ອໃຫ້ເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບຫ່າງອອກຈາກຊັບ ຫຼື ເຮັດໃຫ້ການຄອບຄອງຊັບນັ້ນໜ້ອຍລົງເພື່ອສະດວກແກ່ການເອົາຊັບນັ້ນໄປຈະບໍ່ຖືວ່າເປັນການໃຊ້ເລ່ຫຼ່ຽມຕົວະຍົວະຫຼອກລວງ ຕົວຢ່າງ: ຕົວະວ່າໄຟໄໝ້ຕຶກເພື່ອໃຫ້ຜູ້ອື່ນແລ່ນໜີອອກຈາກຫ້ອງແລ້ວປະຄອມພິວເຕີໄວ້ ຈຶ່ງສວຍໂອກາດເອົາຄອມພິວເຕີຂອງຜູ້ອື່ນທີ່ປະໄວ້ໃນຫ້ອງນັ້ນໄປ.

**5.2 ການເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ**

ຄຳວ່າ "ເພື່ອເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ" ສາມາດພິຈາລະນາແຍກອອກເປັນ 2 ສ່ວນຄື: 1). ເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບໄດ້ມອບຊັບໃຫ້ຜູ້ກະທຳຜິດຄອບຄອງ ແລະ 2). ເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບໄດ້ມອບຊັບໃຫ້ຜູ້ກະທຳຜິດດ້ວຍຄວາມຫຼົງເຊື່ອ.

1). ເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບໄດ້ມອບຊັບໃຫ້ຜູ້ກະທຳຜິດຄອບຄອງ ໝາຍເຖິງການມອບຊັບນັ້ນ, ເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບໄດ້ສູນເສຍການຄອບຄອງຊັບໄປແລ້ວ. ໝາຍຄວາມວ່າຊັບນັ້ນຕົກໄປຢູ່ໃນການຄອບຄອງ ຫຼື ຄວບຄຸມຂອງຜູ້ກະທຳຜິດແລ້ວ. ຕົວຢ່າງ: ເຈົ້າຂອງຮ້ານຂາຍເສື້ອຜ້າໄດ້ມອບເສື້ອໃຫ້ຜູ້ກະທຳຜິດເອົາໄປໄວ້ໃນລົດທີ່ຈອດຢູ່ໄກຈາກຮ້ານປະມານ 30 ກວ່າແມັດ; ເຈົ້າຂອງຮ້ານຂາຍລົດໄດ້ມອບລົດໃຫ້ຜູ້ກະທຳຜິດໄປທົດລອງຂັບຢູ່ຖະໜົນ.

ເຖິງຢ່າງໃດກໍຕາມ ຈະບໍ່ຖືວ່າເປັນການສູນເສຍການຄອບຄອງຊັບນັ້ນເທື່ອ ຖ້າຫາກວ່າຊັບຍັງຢູ່ໃນຂອບເຂດ ຫຼື ສະຖານທີ່ຂອງຜູ້ຄອບຄອງຊັບ, ຖ້າຫາກຜູ້ກະທຳຜິດເອົາຊັບນັ້ນໄປຈະບໍ່ເປັນການສໍ້ໂກງຊັບ ແຕ່ເປັນການລັກຊັບ. ຕົວຢ່າງ: ອະນຸຍາດໃຫ້ເອົາເສື້ອອອກຈາກບ່ອນວາງຂາຍແລ້ວໄປລອງໃສ່ຢູ່ບ່ອນລອງເສື້ອຂອງຮ້ານ; ອະນຸຍາດໃຫ້ເອົາລົດໄປທົດລອງຂັບຢູ່ບໍລິເວນຮ້ານ ແລະ ເຈົ້າຂອງເຝົ້າຕິດຕາມເບິ່ງຢູ່.

ການຄອບຄອງຊັບ ໝາຍເຖິງການຄອບຄອງ ຊຶ່ງຜູ້ຄອບຄອງຊັບສາມາດຄວບຄຸມຊັບນັ້ນໄດ້ບໍ່ວ່າຊັບນັ້ນຈະຢູ່ໃນການຄອບຄອງທີ່ຕິດຕົວ ຫຼື ໃນສະຖານທີ່ທີ່ຢູ່ໃນການຄວບຄຸມຂອງຜູ້ນັ້ນ ເຊັ່ນ: ສາຍຄໍ, ສາຍແຂນ, ໂມງ, ກະເປົາເງິນ, ເຄື່ອງຂອງຕ່າງໆທີ່ຢູ່ໃນເຮືອນພັກໃນເວລາເຈົ້າຂອງຍັງດຳລົງຊີວິດໃນເຮືອນ ຫຼື ເຈົ້າຂອງອັດປະຕູໄວ້ແລ້ວໄປນອກ ຫຼື ໄປສະຖານທີອື່ນ ຫຼື ການຄອບຄອງຊັບໂດຍທົ່ວໄປໃນຊີວິດປະຈຳວັນຂອງສັງຄົມ ເຊັ່ນ: ຈອດລົດປະໄວ້ແຄມທາງແລ້ວເຂົ້າໄປໃນຮ້ານຊັບພະສິນຄ້າ ຫຼື ເຂົ້າໄປເຮັດວຽກຢູ່ຫ້ອງການ, ກໍຖືວ່າລົດ ແລະ ຊັບທັງໝົດທີ່ຢູ່ໃນລົດຍັງຢູ່ໃນການຄອບຄອງຂອງຜູ້ເປັນເຈົ້າຂອງຊັບຢູ່ ເພາະວ່າຜູ້ຄອບຄອງສາມາດຄວບຄຸມຊັບທັງໝົດນັ້ນໄດ້.

2). ເຈົ້າຂອງຊັບ ຫຼື ຜູ້ຄອບຄອງຊັບໄດ້ມອບຊັບໃຫ້ຜູ້ກະທຳຜິດດ້ວຍຄວາມຫຼົງເຊື່ອ ໝາຍເຖິງການມອບຊັບໃຫ້ຍ້ອນຜູ້ກະທຳຜິດໄດ້ຕົວະຍົວະຫຼອກລວງໃຫ້ຫຼົງເຊື່ອວ່າຈະປະຕິບັດອັນໃດໜຶ່ງຕາມທີ່ໄດ້ຕົກລົງກັນໄວ້. ຕົວຢ່າງ: ມອບເງິນໃຫ້ບຸກຄົນໃດໜຶ່ງຍ້ອນຜູ້ກະທຳຜິດອ້າງວ່າສາມາດວິ້ງເຕັ້ນເອົາຄົນເຂົ້າເຮັດວຽກໄດ້ ແຕ່ຕົວຈິງບໍ່ປະຕິບັດຕາມການກ່າວອ້າງນັ້ນເລີຍ.

ເຖິງຢ່າງໃດກໍຕາມ, ຖ້າໃນກໍລະນີການມອບຊັບໃຫ້ໂດຍບໍ່ໄດ້ຫຼົງເຊື່ອຈະບໍ່ຖືວ່າເປັນການສໍ້ໂກງຊັບ. ຕົວຢ່າງ: ຮູ້ຢູ່ວ່າການມາຂໍກູ້ຢືມເປັນການມາຕົວະເອົາເງິນ ແຕ່ດ້ວຍຄວາມສົງສານຄິດວ່າຖ້າເອົາເງິນໃຫ້ກູ້ຢືມແລ້ວເຖິງວ່າຈະບໍ່ໃຊ້ຄືນກໍບໍ່ເປັນຫຍັງ ຈຶ່ງໄດ້ເອົາເງິນໃຫ້ຜູ້ກະທຳຜິດກູ້ຢືມ.

### 5.3 ໂດຍເຈດຕະນາ

ໂດຍເຈດຕະນາ ໝາຍເຖິງຜູ້ກະທຳຜິດຮູ້ວ່າການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງໃຫ້ຜູ້ອື່ນຫຼົງເຊື່ອ ຫຼື ໄວ້ວາງໃຈແລ້ວມອບຊັບໃຫ້ຕົນ ແລະ ຜູ້ກະທຳຜິດມີຈຸດປະສົງເພື່ອໃຫ້ໄດ້ຊັບຂອງຄົນອື່ນມາໄວ້ໃນການຄອບຄອງ ຫຼື ການຄວບຄຸມຂອງຕົນ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ບໍ່ມີເງິນທີ່ຈະຊື້ທີ່ດິນແຕ່ໄປຕົວະເຮັດສັນຍາຊື້-ຂາຍທີ່ດິນກັບ A ພ້ອມທັງຈ່າຍເງິນມັດຈຳສ່ວນໜຶ່ງ ໃຫ້ A ນັ້ນແມ່ນການໃຊ້ຄວາມໄວ້ເນື້ອເຊື່ອໃຈ, ຄວາມໄວ້ວາງໃຈດ້ວຍການປິດບັງຂໍ້ມູນທີ່ຖືກຕ້ອງ ແລະ ເປັນຈິງ ເພື່ອເຮັດໃຫ້ A ຫຼົງເຊື່ອ. ການກະທຳ X ຈຶ່ງຖືວ່າເປັນການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ.

ການທີ່ X ໄດ້ກຳມະສິດທີ່ດິນຈາກການເຮັດສັນຍາຊື້-ຂາຍກັບ A ແລະ A ໄດ້ໂອນກຳມະສິດທີ່ດິນໃຫ້ X ຈົນສຳເລັດນັ້ນ ໝາຍຄວາມວ່າຊັບນັ້ນຕົກຢູ່ໃນຄອບຄອງ ຫຼື ການຄວບຄຸມຂອງ X ແລ້ວ ແລະ ກໍແມ່ນການມອບຊັບໂດຍ A ເອງ ຍ້ອນຄວາມຫຼົງເຊື່ອວ່າຈະໄດ້ຮັບເງິນຫຼັງຈາກໂອນກຳມະສິດທີ່ດິນແລ້ວ. ການກະທຳດັ່ງກ່າວຂອງ X ຈຶ່ງຖືວ່າເປັນການເຮັດໃຫ້ຜູ້ອື່ນມອບຊັບໃຫ້ ດ້ວຍຄວາມຫຼົງເຊື່ອ.

X ຮູ້ດີວ່າບໍ່ມີເງິນຊື້ທີ່ດິນແຕ່ກໍໃຊ້ເລ່ລ່ຽມຕົວະຍົວະຫຼອກລວງໃຫ້ A ຫຼົງເຊື່ອແລ້ວມອບຊັບໃຫ້ ແລະ ຈຸດປະສົງຂອງ X ກໍເພື່ອໃຫ້ໄດ້ຊັບນັ້ນມາຢູ່ໃນການຄອບຄອງ ຫຼື ການຄຸ້ມຄອງຂອງຕົນ. ສະນັ້ນ, ການກະທຳຂອງ X ຈຶ່ງຖືວ່າເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

### ຄຳຕອບກໍລະນີສຶກສາທີ 1 ດັດແກ້ 1

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເຫັນວ່າການທີ່ X ເຮັດສັນຍາຊື້-ຂາຍກຳມະສິດທີ່ດິນກັບ A ແລະ ໄດ້ຈ່າຍເງິນມັດຈຳສ່ວນໜຶ່ງກ່ອນ ເພື່ອໃຫ້ເກີດຄວາມເຊື່ອໃຈທັງໆ ທີ່ຮູ້ວ່າຕົນບໍ່ສາມາດຊຳລະເງິນສ່ວນທີ່ເຫຼືອໄດ້ ແຕ່ X ກໍບໍ່ແຈ້ງໃຫ້ A ຮັບຊາບ ແລະ ປ່ອຍໃຫ້ A ໂອນກຳມະສິດທີ່ດິນຈົນສຳເລັດນັ້ນ ໝາຍຄວາມວ່າການກະທຳຂອງ X ເປັນການປິດບັງຂໍ້ມູນທີ່ຖືກຕ້ອງ ແລະ ເປັນຈິງ ທີ່ເຮັດໃຫ້ A ຫຼົງເຊື່ອວ່າຈະໄດ້ເງິນຈາກການຂາຍຊັບນັ້ນ. ການກະທຳຂອງ X ຖືວ່າເປັນການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ.

ການທີ່ X ໄດ້ກຳມະສິດທີ່ດິນຈາກ A ໂດຍຜ່ານການເຮັດສັນຍາຊື້-ຂາຍກຳມະສິດນຳໃຊ້ທີ່ດິນ ແຕ່ພາຍຫຼັງເຮັດສັນຍາຊື້-ຂາຍ X ໄດ້ປິດບັງຂໍ້ມູນທີ່ຖືກຕ້ອງ ແລະ ເປັນຈິງ ພ້ອມທັງປ່ອຍໃຫ້ A ໂອນກຳມະສິດທີ່ດິນໃຫ້ຕົນຈົນສຳເລັດນັ້ນ ໝາຍຄວາມວ່າຊັບນັ້ນຕົກຢູ່ໃນຄອບຄອງ ຫຼື ການຄວບຄຸມຂອງ X ແລ້ວ ແລະ ກໍແມ່ນການມອບຊັບໂດຍ A ເອງຍ້ອນຄວາມຫຼົງເຊື່ອ. ການກະທຳຂອງ X ຈຶ່ງເປັນການເຮັດໃຫ້ຜູ້ອື່ນມອບຊັບໃຫ້ຍ້ອນຄວາມຫຼົງເຊື່ອ.

ການກະທຳຂອງ X ທີ່ເຮັດສັນຍາຊື້-ຂາຍທີ່ດິນກັບ A ແລະ ບໍ່ແຈ້ງບັນຫາທາງການເງິນຂອງຕົນໃຫ້ A ຮັບຊາບ ແລະ ປ່ອຍໃຫ້ A ໂອນກຳມະສິດທີ່ດິນຈົນສຳເລັດນັ້ນ ໝາຍຄວາມວ່າ X ມີຈຸດປະສົງເພື່ອໃຫ້ໄດ້ກຳມະສິດທີ່ດິນນັ້ນມາຢູ່ໃນການຄອບຄອງຂອງຕົນໂດຍທີ່ບໍ່ມີຄວາມສາມາດຈ່າຍເງິນ. ສະນັ້ນ, ການກະທຳຂອງ X ຈຶ່ງຖືວ່າເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອປຽບທຽບການກະທຳຂອງ X ໃສ່ກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ຈຶ່ງເຫັນວ່າການກະທຳ ຂອງ X ເປັນການກະທຳຜິດໃນສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້ 2**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອປຽບທຽບໃສ່ເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 5 ເຫັນວ່າການທີ່ X ປະສົບບັນຫາທາງດ້ານການເງິນ ແລະ ບໍ່ສາມາດນຳເງິນສ່ວນທີ່ຍັງເຫຼືອມາຈ່າຍໃຫ້ A ໄດ້ຕາມກຳນົດເວລາ ແລະ X ກໍໄດ້ແຈ້ງໃຫ້ A ຊາບແລ້ວ, ແຕ່ A ກໍຍັງສືບຕໍ່ໂອນກຳມະສິດທີ່ດິນຈົນສຳເລັດ ຖືວ່າການໄດ້ກຳມະສິດທີ່ດິນຂອງ X ບໍ່ແມ່ນການໄດ້ມາຍ້ອນການຕົວະຍົວະຫຼອກລວງ ແລະ ບໍ່ໄດ້ເຮັດໃຫ້ຜູ້ອື່ນຫຼົງເຊື່ອ. ສະນັ້ນ, ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດໃນສະຖານການສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ, ແຕ່ການກະທຳຂອງ X ເປັນການລະເມີດສັນຍາຊື້-ຂາຍທີ່ດິນຊຶ່ງເປັນຂໍ້ຜູກພັນທາງແພ່ງ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ຢາກໄດ້ລົດມາຂັບຂີ່ແຕ່ບໍ່ມີເງິນຊື້ຈຶ່ງເຮັດທຳທ່າເປັນລູກຄ້າເຂົ້າໄປຖາມລາຄາ ແລະ ກວດເບິ່ງສະພາບຂອງລົດ ພ້ອມທັງບອກວ່າຈະຊື້ລົດພາຍຫຼັງທີ່ໄດ້ທົດລອງຂັບນັ້ນແລ້ວ ຊຶ່ງເຮັດໃຫ້ A ເຊື່ອວ່າ X

ຈະຊື້ລົດແທ້ຈຶ່ງໄດ້ມອບລົດໃຫ້ໄປທົດລອງຂັບ. ການກະທຳຂອງ X ຈຶ່ງຖືວ່າເປັນການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ.

ການທີ່ A ໄດ້ອະນຸຍາດໃຫ້ X ເອົາລົດໄປລອງຂັບຢູ່ຖະໜົນນອກຮ້ານຊຶ່ງເປັນໄລຍະທີ່ໄກ ແລະ ຍາກໃນການຕິດຕາມນັ້ນ ໝາຍຄວາມວ່າໃນເວລານັ້ນ A ບໍ່ສາມາດຄວບຄຸມລົດນັ້ນໄດ້ ຈຶ່ງຖືວ່າເປັນການສູນເສຍການຄອບຄອງລົດນັ້ນ ແລະ ລົດນັ້ນໄດ້ມາຢູ່ໃນການຄອບຄອງຂອງ X ແລ້ວ ຊຶ່ງການໄດ້ລົດມານັ້ນຍ້ອນການຕົວະໃຫ້ A ຫຼົງເຊື່ອວ່າ X ຈະຊື້ລົດຫຼັງຈາກທີ່ໄດ້ທົດລອງຂັບ. ການກະທຳຂອງ X ຈຶ່ງຖືວ່າເປັນການເຮັດໃຫ້ຜູ້ອື່ນມອບຊັບໃຫ້ດ້ວຍຄວາມຫຼົງເຊື່ອ.

X ຮູ້ຕັ້ງແຕ່ທຳອິດແລ້ວວ່າບໍ່ມີເງິນທີ່ຈະຊື້ລົດ ແຕ່ໄດ້ຕົວະວ່າຈະຊື້ລົດພາຍຫຼັງທີ່ໄດ້ທົດລອງຂັບ ແລ້ວສວຍໂອກາດຂັບລົດໜີໄປນັ້ນ ຈຸດປະສົງເພື່ອໃຫ້ໄດ້ການຄອບຄອງລົດນັ້ນມາເປັນຂອງຕົນ. ສະນັ້ນ, ການກະທຳຂອງ X ຈຶ່ງຖືວ່າເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານສໍ້ໂກງຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອປຽບທຽບໃສ່ກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 5.2 ກ່ຽວກັບການເຮັດໃຫ້ຜູ້ອື່ນມອບຊັບໃຫ້ດ້ວຍຄວາມຫຼົງເຊື່ອ ເຫັນວ່າການທີ່ X ໄດ້ຂໍເອົາລົດໄປທົດລອງຂັບຢູ່ເດີ່ນທີ່ຢູ່ບໍລິເວນຂອງຮ້ານຊຶ່ງ A ກໍອະນຸຍາດໃຫ້ເອົາລົດໄປທົດລອງຂັບພ້ອມທັງເຝົ້າຕິດຕາມຢູ່ບໍລິເວນດັ່ງກ່າວ ຊຶ່ງຖືວ່າ A ຍັງບໍ່ໄດ້ສູນເສຍການຄອບຄອງ ຫຼື ການຄວບຄຸມລົດນັ້ນເທື່ອ ເພາະລົດດັ່ງກ່າວຍັງຢູ່ບໍລິເວນຮ້ານ ແລະ ຍັງຢູ່ພາຍໃຕ້ການຄວບຄຸມຂອງ A. ສະນັ້ນ, ການທີ່ X ສວຍໂອກາດທີ່ A ເຜີຕົວ ແລ້ວຂັບລົດໜີໄປນັ້ນບໍ່ຖືວ່າເປັນການກະທຳຜິດໃນສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ, ແຕ່ເປັນການກະທຳຜິດໃນສະຖານລັກຊັບ ຕາມມາດຕາ 231 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ປອມຕົວເປັນພະນັກງານທະນາຄານແລ້ວແຈ້ງວ່າບັດ ATM ຂອງ A ມີບັນຫານຳໃຊ້ບໍ່ໄດ້ ແລະ ຈະນຳໄປກວດກາຢູ່

ທະນາຄານ ເປັນການໃຫ້ຂໍ້ມູນທີ່ເປັນເທັດ ຫຼື ບໍ່ຖືກຕ້ອງ ຊຶ່ງເຮັດໃຫ້ A ເຊື່ອວ່າ X ເປັນພະນັກງານທະນາຄານ ແລະ ບັດ ATM ຂອງຕົນມີບັນຫາແທ້ ຈຶ່ງມອບບັດພ້ອມລະຫັດໃຫ້ໄປກວດກາດ້ວຍຄວາມຫຼົງເຊື່ອ. ການກະທຳຂອງ X ຈຶ່ງຖືວ່າເປັນການໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ.

ການທີ່ X ປອມຕົວເປັນພະນັກງານທະນາຄານ ແລ້ວບອກໃຫ້ A ມອບບັດ ATM ພ້ອມລະຫັດໃຫ້ ເພື່ອນຳໄປແກ້ໄຂ ແລະ A ຫຼົງເຊື່ອວ່າບັດຂອງຕົນໃຊ້ບໍ່ໄດ້ແທ້ ແລະ ໄດ້ມອບບັດດັ່ງກ່າວໃຫ້ X ແລ້ວ, ໝາຍຄວາມວ່າ A ໄດ້ສູນເສຍການຄອບຄອງຊັບນັ້ນໄປແລ້ວ. ການກະທຳຂອງ X ຈຶ່ງຖືວ່າເປັນການກະທຳທີ່ເຮັດໃຫ້ຜູ້ອື່ນມອບຊັບໃຫ້ຕົນດ້ວຍຄວາມຫຼົງເຊື່ອ.

X ຮູ້ດີວ່າຕົນບໍ່ແມ່ນພະນັກງານທະນາຄານ ແຕ່ຈິງໃຈປອມຕົວໄປຕົວະຜູ້ອື່ນໃຫ້ຫຼົງເຊື່ອແລ້ວມອບຊັບໃຫ້ຈຸດປະສົງເພື່ອໃຫ້ໄດ້ການຄອບຄອງຊັບນັ້ນມາເປັນຂອງຕົນ. ການກະທຳຂອງ X ຈຶ່ງຖືວ່າເປັນການກະທຳໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອປຽບທຽບໃສ່ກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ທີ່ໄດ້ຕົວະວ່າບັດ ATM ໃຊ້ງານບໍ່ໄດ້ ແລ້ວໃຫ້ A ໄປເອົາຊອງເອກະສານມາໃສ່ບັດເພື່ອເກັບຮັກສາໄວ້ກ່ອນ ແລ້ວສວຍໂອກາດສັບປ່ຽນເອົາບັດ ATM ຂອງ A ໄປນັ້ນ ບໍ່ຖືວ່າເປັນການສໍ້ໂກງ ເພາະ A ບໍ່ໄດ້ມອບບັດນັ້ນໃຫ້ X ໝາຍຄວາມວ່າ ບັດຍັງຢູ່ໃນການຄອບຄອງຊັບນັ້ນ ເຖິງວ່າຈະມີການໃຊ້ເລ່ລ່ຽມຕົວະຍົວະ ແລ້ວສວຍໂອກາດສັບປ່ຽນເອົາບັດຂອງ A ໄປແລ້ວກໍຕາມ ແຕ່ການຕົວະນັ້ນກໍເພື່ອໃຫ້ A ອອກຫ່າງຈາກບັດ ແລະ ສະດວກໃນການສັບປ່ຽນເອົາບັດທີ່ແທ້ຈິງນັ້ນໄປ. ສະນັ້ນ, ການກະທຳຂອງ X ຈຶ່ງບໍ່ຖືວ່າເປັນການກະທຳຜິດໃນສະຖານການສໍ້ໂກງຊັບຕາມທີ່ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ, ແຕ່ເປັນການກະທຳຜິດໃນສະຖານລັກຊັບ ຕາມມາດຕາ 231 ຂອງປະມວນກົດໝາຍອາຍາ.

**6.4 ຄຳຕອບກໍລະນີສຶກສາທີ 4**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ບໍ່ມີເງິນ ແຕ່ໄດ້ເຮັດທຳທ່າເປັນລູກຄ້າເຂົ້າໄປສັ່ງອາຫານກິນນັ້ນ ເປັນການສວຍໃຊ້ຄວາມໄວ້ເນື້ອເຊື່ອໃຈ ແລະ ການປົດບັງຂໍ້ມູນທີ່ຖືກຕ້ອງ ເພື່ອເຮັດໃຫ້ຜູ້ອື່ນຫຼົງເຊື່ອ. ການກະທຳຂອງ X ຈຶ່ງເຂົ້າກັບເງື່ອນໄຂການໃຊ້ເລ່ຫຼ່ຽມຕົວະຍົວະຫຼອກລວງ.

ການທີ່ X ໄດ້ເຂົ້າໄປສັ່ງອາຫານກິນໂດຍທີ່ບໍ່ມີເງິນຈ່າຍ ແລະ ຮ້ານອາຫານກໍເຂົ້າໃຈວ່າ X ເປັນລູກຄ້າຂອງຮ້ານອາຫານຄືກັບບຸກຄົນທົ່ວໄປ ແລະ ຮ້ານອາຫານກໍໄດ້ບໍລິການອາຫານໃຫ້ X. ການກະທຳຂອງ X ຈຶ່ງເປັນການເຮັດໃຫ້ຜູ້ອື່ນມອບຊັບໃຫ້ຍ້ອນຄວາມຫຼົງເຊື່ອ.

X ຮູ້ດີຕັ້ງແຕ່ທຳອິດແລ້ວວ່າຕົນບໍ່ມີເງິນ ແຕ່ຕັ້ງໃຈເຂົ້າໄປສັ່ງອາຫານມາກິນເມື່ອກິນອີ່ມແລ້ວບໍ່ຢາກຈ່າຍຄ່າອາຫານ. ສະນັ້ນ, ການກະທຳຂອງ X ຈຶ່ງຖືວ່າເປັນການກະທຳຜິດໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 4 ດັດແກ້**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ເມື່ອປຽບທຽບກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 5.2 ກ່ຽວກັບການເຮັດໃຫ້ຜູ້ອື່ນມອບຊັບໃຫ້ດ້ວຍຄວາມຫຼົງເຊື່ອນັ້ນ ເຫັນວ່າ ພາຍຫຼັງ X ກິນອາຫານອີ່ມແລ້ວຈຶ່ງຮູ້ວ່າຕົນເອງລືມກະເປົາເງິນຢູ່ເຮືອນ ແລະ ຄິດຈະຫຼົບໜີອອກຈາກຮ້ານໂດຍບໍ່ຈ່າຍຄ່າອາຫານ ຈຶ່ງໄດ້ບອກພະນັກງານຮ້ານອາຫານວ່າຕົນລືມກະເປົາ ແລະ ຈະຂໍກັບໄປເອົາແລ້ວຈະກັບມາຈ່າຍຕາມພາຍຫຼັງ. ການທີ່ພະນັກງານຮ້ານອາຫານອະນຸຍາດໃຫ້ອອກໄປໂດຍທີ່ ບໍ່ທັນໄດ້ຈ່າຍຄ່າອາຫານນັ້ນເປັນການມອບຜົນປະໂຫຍດຂອງຊັບ ກໍຄືການທີ່ບໍ່ໄດ້ຈ່າຍເງິນຄ່າອາຫານທີ່ຈະໄດ້ຈາກການຂາຍອາຫານນັ້ນ. ສະນັ້ນ, ການກະທຳຂອງ X ທີ່ໄດ້ຮັບຈາກການກະທຳຄືການຕົວະຂອງຕົນນັ້ນບໍ່ແມ່ນຊັບ, ການກະທຳດັ່ງກ່າວຂອງ X ຈຶ່ງບໍ່ຄົບຕາມເງື່ອນໄຂກ່ຽວກັບການເຮັດໃຫ້ຜູ້ອື່ນມອບຊັບໃຫ້ຕົນດ້ວຍຄວາມຫຼົງເຊື່ອ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ກຳນົດໄວ້ໃນຂໍ້ 5 ເຫັນວ່າການກະທຳຂອງ X ບໍ່ເປັນການກະທຳຜິດໃນສະຖານສໍ້ໂກງຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການ ສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນ ຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດຖານສໍ້ໂກງຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 233 ຂອງປະມວນກົດໝາຍອາຍາ ໄດ້ບັນຍັດຂໍ້ຄວາມ ທີ່ສຳຄັນໄວ້ວ່າ: "*ບຸກຄົນໃດ ຫາກໄດ້ໃຊ້ເລ່ລ່ຽມຕົວະຍົວະຫຼອກລວງ ດ້ວຍວິທີໃດກໍ ຕາມ ເພື່ອເຮັດໃຫ້ຜູ້ອື່ນເອົາຊັບໃຫ້ຕົນ......*" ເຫັນວ່າ ມາດຕາດັ່ງກ່າວ ເປັນປະເດັນ ໃຫ້ພິຈາລະນາ ຄຳວ່າ "ຊັບ" ອາດຈະຕີຄວາມໝາຍວ່າ ຊັບນັ້ນເປັນຮູບປະທຳ ຫຼື ຊັບທີ່ ມີຕົວຕົນສາມາດຈັບ ຫຼື ຖືເອົາໄປໄດ້ ບໍ່ໝາຍຄວາມວ່າ ເປັນຜົນປະໂຫຍດທີ່ເກີດຈາກ ຊັບນັ້ນ ແຕ່ເຖິງຢ່າງໃດກໍຕາມຖ້າບຸກຄົນໜຶ່ງຫາກໄດ້ຕົວະຍົວະເອົາຜົນປະໂຫຍດຂອງ ຊັບນັ້ນໄປໂດຍບໍ່ຖືກຕ້ອງ ຈະຖືວ່າເປັນການກະທຳຜິດຖານສໍ້ໂກງຊັບ ຫຼື ບໍ່.

ດ້ວຍເຫດ ແລະ ຜົນທີ່ກ່າວມາຂ້າງເທິງນັ້ນ, ຈິ່ງສະເໜີມາຍັງພາກສ່ວນທີ່ ກ່ຽວຂ້ອງກັບການສ້າງ ແລະ ປັບປຸງປະມວນກົດໝາຍອາຍາໃນອະນາຄົດວ່າ ມາດຕາ ດັ່ງກ່າວຄວນບັນຍັດຂໍ້ຄວາມໃໝ່ວ່າ: "*ບຸກຄົນຜູ້ໃດຫາກໄດ້ໃຊ້ເລ່ລ່ຽມຕົວະຍົວະຫຼອກ ລວງ ດ້ວຍວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ອື່ນເອົາຊັບ ຫຼື ຜົນປະໂຫຍດຂອງຊັບນັ້ນໃຫ້ຕົນ* ......" ເພື່ອໃຫ້ສາມາດຄວບຄຸມຕໍ່ກັບພຶດຕິກຳກ່ຽວກັບການເອົາຊັບ ແລະ/ຫຼື ຜົນ ປະໂຫຍດຂອງຜູ້ອື່ນໄປໂດຍບໍ່ຖືກຕ້ອງໃຫ້ເປັນການກະທຳຜິດຖານສໍ້ໂກງຊັບ.

### ຮູບພາບສະແດງເຖິງການກະທຳຜິດສະຖານການສໍ້ໂກງຊັບ




**<< ເປັນການສໍ້ໂກງຊັບ >>**




**<< ບໍ່ເປັນການສໍ້ໂກງຊັບ >>**

# ບົດທີ 8
# ການຍັກຍອກຊັບ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ເປັນພະນັກງານຄຸ້ມຄອງເງິນສົດຖືກມອບໝາຍໃຫ້ນຳເງິນໄປເຂົ້າບັນຊີຂອງບໍລິສັດຢູ່ທະນາຄານ ແຕ່ຜູ້ກ່ຽວໄດ້ນຳເອົາເງິນຈຳນວນທັງໝົດໄປໃຊ້ຈ່າຍສ່ວນຕົວກ່ອນແລ້ວຈຶ່ງໄດ້ນຳເງິນມາເຂົ້າບັນຊີທົດແທນຄືນໃຫ້ແກ່ບໍລິສັດໃນພາຍຫຼັງ.

**ກໍລະນີສຶກສາ 1 ດັດແກ້**: X ເປັນພະນັກງານຄຸ້ມຄອງເງິນສົດຖືກມອບໝາຍໃຫ້ນຳເງິນໄປເຂົ້າບັນຊີຂອງບໍລິສັດຢູ່ທະນາຄານ ແຕ່ເນື່ອງຈາກການຈະລາຈອນແອອັດຈຶ່ງເຮັດໃຫ້ X ໄປບໍ່ທັນເວລາທີ່ທະນາຄານເປີດໃຫ້ບໍລິການ. ດັ່ງນັ້ນ, ຜູ້ກ່ຽວຈຶ່ງນຳເອົາເງິນຈຳນວນທັງໝົດໄປຮັກສາໄວ້ໃນຕູ້ນິລະໄພຢູ່ເຮືອນຂອງຕົນ ແລະ ຄິດວ່າມື້ໃໝ່ຈຶ່ງຈະເອົາໄປເຂົ້າທະນາຄານ.

### 1.2 ກໍລະນີສຶກສາທີ 2

X ເປັນພະນັກງານຂັບລົດຕູ້ຂອງບໍລິສັດທ່ອງທ່ຽວແຫ່ງໜຶ່ງ ແລະ ໄດ້ຖືກມອບໝາຍຈາກບໍລິສັດໃຫ້ນຳເອົາລົດໄປກວດສະພາບເຕັກນິກ ແລະ ທຳຄວາມສະອາດ ພ້ອມທັງນຳໄປຮັກສາໄວ້ຢູ່ເຮືອນຂອງຕົນ ເພື່ອກະກຽມນຳໃຊ້ຮັບແຂກໃນວັນຕໍ່ໄປ. ໃນເວລາທີ່ X ຄຸ້ມຄອງຮັກສາລົດຢູ່ນັ້ນ ຜູ້ກ່ຽວໄດ້ສວຍໂອກາດຫາລາຍໄດ້ດ້ວຍການເອົາລົດໄປຮັບ-ສົ່ງຜູ້ໂດຍສານ.

**ກໍລະນີສຶກສາທີ 2 ດັດແກ້:** X ເປັນພະນັກງານຂັບລົດຕູ້ຂອງບໍລິສັດທ່ອງທ່ຽວແຫ່ງໜຶ່ງ ແລະ ໄດ້ຖືກມອບໝາຍຈາກບໍລິສັດໃຫ້ນຳເອົາລົດໄປກວດສະພາບເຕັກນິກ ແລະ ພ້ອມທັງອະນາໄມທຳຄວາມສະອາດ ແລ້ວໃຫ້ນຳໄປຮັກສາໄວ້ຢູ່ເຮືອນຂອງຕົນ ເພື່ອກະກຽມ ນຳໃຊ້ຮັບແຂກໃນວັນຕໍ່ໄປ. ໃນເວລາທີ່ X ຄຸ້ມຄອງຮັກສາລົດຢູ່ນັ້ນ ຜູ້ກ່ຽວໄດ້ສວຍ ໂອກາດເອົາລົດໄປຮັບ-ສົ່ງເມຍໄປຕະຫຼາດ ຊຶ່ງຢູ່ແຖວໃກ້ເຮືອນຂອງຕົນ.

**1.3 ກໍລະນີສຶກສາທີ 3**

X ໄດ້ຮັບມອບໝາຍຈາກເຈົ້າຂອງຮ້ານຂາຍເຄື່ອງປະດັບໃຫ້ເປັນຜູ້ຈັດການ ໂດຍມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງ ແລະ ຮັກສາຊັບສິ່ງຂອງທັງໝົດພາຍໃນຮ້ານ. ໃນເວລາທີ່ X ເປັນຜູ້ຈັດການຮ້ານນັ້ນ ໄດ້ເອົາເຄື່ອງປະດັບໃນຮ້ານຈຳນວນໜຶ່ງໄປຊວດຈຳເພື່ອເອົາເງິນມາໃຊ້ຈ່າຍສ່ວນຕົວ.

**ກໍລະນີສຶກສາທີ 3 ດັດແກ້:** X ເປັນພະນັກງານຂາຍຂອງຮ້ານຂາຍເຄື່ອງປະດັບຖືກມອບໝາຍຈາກເຈົ້າຂອງຮ້ານໃຫ້ເຝົ້າຮ້ານໃນຊ່ວງເວລາທ່ຽງ ເພາະວ່າເຈົ້າຂອງຮ້ານຈະອອກໄປກິນເຂົ້າຢູ່ຂ້າງນອກ. ໃນເວລາເຈົ້າຂອງຮ້ານອອກໄປກິນເຂົ້າຢູ່ຂ້າງນອກນັ້ນ, X ໄດ້ແກະເອົາເຄື່ອງປະດັບ ແລະ ຂອງມີຄ່າຈຳນວນໜຶ່ງມາເປັນຂອງຕົນ.

## 2. ມາດຕາ 234

ບຸກຄົນໃດ ຫາກໄດ້ສວຍໃຊ້ຄວາມເຊື່ອໃຈ ເພື່ອຫຼັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບທີ່ ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີເອົາການຍັກຍອກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ຄວາມເສຍຫາຍ ຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

## 3. ເຫດຜົນການບັນຍັດມາດຕາ

ການຍັກຍອກຊັບເປັນການທຳລາຍຄວາມເຊື່ອໃຈ, ການລະເມີດຕໍ່ກຳມະສິດຂອງບຸກຄົນ, ນິຕິບຸກຄົນ. ໂດຍຜູ້ຖືກຮັບມອບໝາຍໃຫ້ຮັກສາ ຫຼື ຜູ້ດູແລຊັບສິນຂອງຜູ້ອື່ນ ຊຶ່ງໄດ້ເອົາຊັບນັ້ນໄປເປັນຂອງຕົນເອງ ຫຼື ຂອງຜູ້ອື່ນ ດ້ວຍເຫດນີ້, ຈຶ່ງໄດ້ກຳນົດການຍັກຍອກຊັບເປັນການກະທຳຜິດທາງອາຍາໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 234 ຂອງປະມວນກົດໝາຍອາຍາ ບັນຍັດໄວ້ເພື່ອປົກປ້ອງກຳມະສິດ ແລະ ຄວາມເຊື່ອໃຈ ຂອງບຸກຄົນ, ນິຕິບຸກຄົນ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການຍັກຍອກຊັບຕາມມາດຕາ 234 ຂອງປະມວນກົດໝາຍອາຍາໄດ້ຕ້ອງປະກອບດ້ວຍ 3 ເງື່ອນໄຂຄື: 1. ຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ, 2. ຫຼັກໂລບເອົາ, ຕັດຮອນເອົາ, ສັບປ່ຽນເອົາ, ແລະ 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ ຂໍ້ທີ 2 ເປັນອົງປະກອບດ້ານພາວະວິໄສຂອງການກະທຳຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1. ຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ

ຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ ໝາຍເຖິງຊັບໃດໜຶ່ງທີ່ເຈົ້າຂອງຊັບໄດ້ມອບການຄອບຄອງໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງດ້ວຍຄວາມເຊື່ອໃຈ. ຊັບໃດທີ່ຜູ້ກະທຳບໍ່ໄດ້ຄອບຄອງຖືວ່າບໍ່ແມ່ນຊັບທີ່ໄດ້ຮັບມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ.

### 5.2. ຫຼັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາ

- ຫຼັກໂລບເອົາ ໝາຍເຖິງການເອົາຊັບທັງໝົດທີ່ຕົນຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງມາເປັນຂອງຕົນ.

- ຕັດຮອນເອົາ ໝາຍເຖິງການເອົາຊັບສ່ວນໃດສ່ວນໜຶ່ງທີ່ຕົນຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງມາເປັນຂອງຕົນ ຫຼື ເອົາຊັບໄປສະແຫວງຫາຜົນປະໂຫຍດ ຊຶ່ງເປັນຜົນປະໂຫຍດທີ່ເຈົ້າຂອງຊັບເທົ່ານັ້ນຄວນຈະໄດ້. ເຖິງຢ່າງໃດກໍຕາມ, ການເອົາຊັບໄປສະແຫວງຫາຜົນປະໂຫຍດທີ່ເອີ້ນວ່າເປັນການຕັດຮອນເອົານັ້ນ ຕ້ອງເປັນຜົນປະໂຫຍດທີ່ມີລັກສະນະເປັນຊັບສິນທີ່ເປັນຮູບປະທຳ

ເທົ່ານັ້ນ, ສ່ວນຜົນປະໂຫຍດອື່ນທີ່ຕິດພັນກັບຊັບທີ່ມີລັກສະນະນາມມະທຳຈະບໍ່ຖືວ່າເປັນການຕັດຮອນເອົາ. ຕົວຢ່າງ: ເອົາໂມງທີ່ຄົນອື່ນມອບໃຫ້ຮັກສາໄປໃຫ້ຄົນອື່ນເຊົ່າເພື່ອຕົນເອງຈະໄດ້ເງິນຕອບແທນຖືວ່າເປັນການຕັດຮອນເອົາ. ກົງກັນຂ້າມເອົາໂມງທີ່ຄົນອື່ນມອບໃຫ້ຮັກສາໃສ່ໄປອວດໝູ່ ຫຼື ໃສ່ໄວ້ເບິ່ງໃຫ້ຮູ້ເວລາຈະບໍ່ຖືວ່າແມ່ນການຕັດຮອນເອົາ.

- ສັບປ່ຽນເອົາ ໝາຍເຖິງການເອົາຊັບອື່ນທີ່ຄືກັນ ຫຼື ຄ້າຍຄືກັນມາປ່ຽນແທນເອົາຊັບທີ່ຕົນຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງມາເປັນຂອງຕົນ. ເຖິງຢ່າງໃດກໍຕາມ, ການສັບປ່ຽນເອົາຈະຖືວ່າເປັນການລະເມີດຄວາມເຊື່ອໃຈຂອງຜູ້ມອບຊັບ ຫຼື ຜູ້ເປັນເຈົ້າຂອງຊັບກໍຕໍ່ເມື່ອການສັບປ່ຽນໄປລະເມີດເນື້ອໃນຂອງການມອບ.

ການກະທຳທີ່ເປັນການຫຼັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາເປັນການລະເມີດຕໍ່ກຳມະສິດທຸກກໍລະນີ ແຕ່ຈະຖືວ່າເປັນການຍັກຍອກຊັບກໍຕໍ່ເມື່ອການກະທຳດັ່ງກ່າວໄປລະເມີດຄວາມເຊື່ອໃຈຂອງຜູ້ມອບຊັບ ຫຼື ຜູ້ເປັນເຈົ້າຂອງຊັບ.

### 5.3 ໂດຍເຈດຕະນາ

ໂດຍເຈດຕະນາ ໝາຍເຖິງຜູ້ກະທຳຮູ້ດີວ່າ ຊັບທີ່ຕົນຮັກສາຢູ່ນັ້ນເປັນກຳມະສິດຂອງບຸກຄົນອື່ນ ຊຶ່ງຕົນບໍ່ມີສິດທີ່ຈະຫຼັກໂລບເອົາ, ຕັດຮອນເອົາ ຫຼື ຊັບປ່ຽນເອົາ ແຕ່ຜູ້ກ່ຽວມີຄວາມຕັ້ງໃຈ ຫຼື ຈິງໃຈກະທຳ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສານີ້ ເຫັນວ່າເງິນທີ່ X ຄຸ້ມຄອງຢູ່ນັ້ນແມ່ນເງິນຂອງບໍລິສັດທີ່ມອບໝາຍໃຫ້ X ນຳເງິນໄປເຂົ້າບັນຊີຂອງບໍລິສັດຢູ່ທະນາຄານ. ດັ່ງນັ້ນ, ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າເງິນທີ່ X ນຳໄປເຂົ້າບັນຊີຢູ່ທະນາຄານນັ້ນ ເປັນເງິນທີ່ເຈົ້າຂອງຊັບມອບໝາຍໃຫ້ເພື່ອຈຸດປະສົງໃດໜຶ່ງດ້ວຍຄວາມເຊື່ອໃຈ.

ການທີ່ X ໄດ້ນຳເອົາເງິນຈຳນວນທັງໝົດໄປໃຊ້ຈ່າຍສ່ວນຕົວນັ້ນ ຈຶ່ງເປັນການເອົາຊັບທັງໝົດທີ່ຕົນຖືກມອບໝາຍໃຫ້ເພື່ອຈຸດປະສົງໃດໜຶ່ງມາເປັນຂອງຕົນ. ການທີ່ X ນຳເງິນໄປໃຊ້ສ່ວນຕົວເປັນການລະເມີດຄວາມເຊື່ອໃຈຂອງຜູ້ມອບຊັບ ຫຼື

ຜູ້ເປັນເຈົ້າຂອງຊັບແລ້ວ ເຖິງວ່າຈະສາມາດນຳເອົາເງິນຈຳນວນດັ່ງກ່າວມາທົດແທນຄືນໃຫ້ແກ່ບໍລິສັດກໍຕາມ. ດັ່ງນັ້ນ, ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.2 ກ່ຽວກັບການຫຼັກໂລບເອົາຊັບ.

X ຮູ້ວ່າເງິນທີ່ຕົນນຳເອົາໄປໃຊ້ຈ່າຍສ່ວນຕົວນັ້ນເປັນເງິນຂອງບໍລິສັດທີ່ມອບໝາຍໃຫ້ເອົາໄປເຂົ້າທະນາຄານ ແຕ່ກໍຍັງຈິງໃຈເອົາມາເປັນຂອງຕົນ. ດັ່ງນັ້ນ, ເມື່ອນຳເອົາມາປຽບທຽບກັບເງື່ອນໄຂຂໍ້ 5.3 ຈຶ່ງເຫັນວ່າການກະທຳຂອງ X ເປັນການກະທຳໂດຍເຈດຕະນາ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານຍັກຍອກຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້ ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າ ການກະທຳດັ່ງກ່າວຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບຊັບສິນທີ່ X ໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ. ເຖິງຢ່າງໃດກໍຕາມ, ຍ້ອນວ່າສະພາບການຈະລາຈອນແອອັດຈຶ່ງເຮັດໃຫ້ X ໄປບໍ່ທັນເວລາທະນາຄານເປີດໃຫ້ບໍລິການ ຈຶ່ງນຳເອົາເງິນຈຳນວນດັ່ງກ່າວໄປຮັກສາໄວ້ໃນຕູ້ນິລະໄພຢູ່ເຮືອນຂອງຕົນ ແລະ ຄິດວ່າມື້ໃໝ່ຈຶ່ງຈະເອົາໄປເຂົ້າທະນາຄານນັ້ນ, ຖືວ່າຍັງບໍ່ເປັນການເອົາຊັບມາເປັນຂອງຕົນ ແລະ ບໍ່ເປັນການລະເມີດຄວາມເຊື່ອໃຈຂອງຜູ້ເປັນເຈົ້າຂອງຊັບ ຫຼື ຜູ້ມອບຊັບ, ການກະທຳຂອງ X ຈຶ່ງບໍ່ເປັນການຫຼັກໂລບເອົາຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ. ດັ່ງນັ້ນ, ເມື່ອນຳມາປຽບທຽບແລ້ວຈຶ່ງບໍ່ກົງກັບເງື່ອນໄຂຂໍ້ 5.2 ກ່ຽວກັບຫຼັກໂລບເອົາຊັບ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂຂໍ້ 5.2 ກ່ຽວກັບການຫຼັກໂລບເອົາຊັບ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຍັກຍອກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ.

### 6.2 ຄຳຕອບກໍລະນີສຶກສາທີ 2

ຈາກກໍລະນີສຶກສານີ້ ເຫັນວ່າລົດຕູ້ທີ່ X ຄຸ້ມຄອງຢູ່ນັ້ນແມ່ນຊັບທີ່ບໍລິສັດເປັນເຈົ້າຂອງໄດ້ມອບໝາຍໃຫ້ເອົາໄປກວດສະພາບເຕັກນິກ ແລະ ທຳຄວາມສະອາດພ້ອມທັງນຳໄປຮັກສາໄວ້ຢູ່ເຮືອນຂອງຕົນ. ດັ່ງນັ້ນ, ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າລົດຕູ້ທີ່ X ຄຸ້ມຄອງຢູ່ນັ້ນແມ່ນຊັບຂອງບໍລິສັດມອບໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງດ້ວຍຄວາມເຊື່ອໃຈ.

ການທີ່ X ໄດ້ນຳເອົາລົດຕູ້ທີ່ບໍລິສັດເປັນເຈົ້າຂອງໄປສວຍໂອກາດຫາລາຍໄດ້ດ້ວຍການເອົາລົດໄປຮັບ-ສົ່ງຜູ້ໂດຍສານນັ້ນ ເປັນການສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນ ຊຶ່ງເປັນຜົນປະໂຫຍດດັ່ງກ່າວມີແຕ່ເຈົ້າຂອງຊັບເທົ່ານັ້ນຄວນຈະໄດ້ຮັບ. ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.2 ຍ້ອນວ່າການກະທຳຂອງ X ເປັນການຕັດຮອນເອົາຊັບ.

X ຮູ້ວ່າລົດຕູ້ທີ່ຕົນນຳເອົາໄປຮັບ-ສົ່ງຜູ້ໂດຍສານນັ້ນ ເປັນຊັບຂອງບໍລິສັດແຕ່ກໍຍັງຈົງໃຈເອົາໄປສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນ. ດັ່ງນັ້ນ, ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.3 ຈຶ່ງເຫັນວ່າການກະທຳຂອງ X ເປັນການກະທຳໂດຍເຈດຕະນາ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານຍັກຍອກຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ.

### ຄຳຕອບກໍລະນີສຶກສາທີ 2 ດັດແກ້

ຈາກກໍລະນີສຶກສາດັດແກ້ນີ້ ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າ ການກະທຳດັ່ງກ່າວຂອງ X ຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບຊັບສິນທີ່ຕົນໄດ້ຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ. ເຖິງຢ່າງໃດກໍຕາມໃນເວລາທີ່ X ຄຸ້ມຄອງຮັກສາລົດຕູ້ຢູ່ ຜູ້ກ່ຽວໄດ້ສວຍໂອກາດເອົາລົດດັ່ງກ່າວໄປຮັບ-ສົ່ງເມຍໄປຕະຫຼາດຢູ່ແຖວໃກ້ເຮືອນຂອງຕົນນັ້ນ ບໍ່ຖືວ່າເປັນການຕັດຮອນເອົາຊັບທີ່ຕົນຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງມາເປັນຂອງຕົນ ເພາະວ່າການນຳໃຊ້ລົດໄປຮັບ-ສົ່ງເມຍໄປຕະຫຼາດນັ້ນມັນເປັນຜົນປະໂຫຍດທີ່ຕິດພັນກັບຊັບ

ທີ່ມີລັກສະນະນາມມະທຳ. ດັ່ງນັ້ນ, ການກະທຳຂອງ X ບໍ່ຄົບຕາມເງື່ອນໄຂຂໍ້ 5.2 ກ່ຽວກັບການຕັດຮອນເອົາຊັບ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຍັກຍອກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

ຈາກກໍລະນີສຶກສານີ້ ເຫັນວ່າຊັບສິ່ງຂອງທັງໝົດພາຍໃນຮ້ານທີ່ X ເປັນຜູ້ຈັດການນັ້ນແມ່ນຊັບຂອງເຈົ້າຂອງຮ້ານມອບໃຫ້ເປັນຜູ້ຄຸ້ມຄອງ ແລະ ຮັກສາ. ດັ່ງນັ້ນ, ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.1 ຍ້ອນວ່າຊັບສິ່ງຂອງທັງໝົດທີ່ X ຄຸ້ມຄອງຢູ່ນັ້ນແມ່ນຊັບຂອງເຈົ້າຂອງຮ້ານມອບໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງດ້ວຍຄວາມເຊື່ອໃຈ.

ການທີ X ໄດ້ນຳເອົາເຄື່ອງປະດັບໃນຮ້ານຈຳນວນໜຶ່ງໄປຊວດຈຳເພື່ອເອົາເງິນມາໃຊ້ສ່ວນຕົວນັ້ນ, ເປັນການເອົາຊັບສ່ວນໃດສ່ວນໜຶ່ງທີ່ຕົນຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງມາເປັນຂອງຕົນ. ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.2 ຍ້ອນວ່າການກະທຳຂອງ X ເປັນການຕັດຮອນເອົາຊັບ.

X ຮູ້ວ່າຊັບສິ່ງຂອງທັງໝົດເປັນຂອງເຈົ້າຂອງຮ້ານທີ່ມອບໃຫ້ຕົນຄຸ້ມຄອງ ແລະ ຮັກສາ ແຕ່ກໍຍັງຈິງໃຈຕັດຮອນເອົາໄປຊວດຈຳເອົາເງິນມາເປັນຂອງຕົນເອງ. ດັ່ງນັ້ນ,  ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.3 ຈຶ່ງເຫັນວ່າການກະທຳຂອງ X ເປັນການກະທຳໂດຍເຈດຕະນາ.

ສະນັ້ນ, ເມື່ອພິຈາລະນາແລ້ວເຫັນວ່າ ການກະທຳຂອງ X ແມ່ນຄົບຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ສະນັ້ນ, ຈຶ່ງຖືວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຍັກຍອກຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້ ເຫັນວ່າການທີ່ເຈົ້າຂອງຮ້ານມອບໝາຍໃຫ້ X ເຝົ້າຮ້ານໃນຊ່ວງເວລາທີ່ເຈົ້າຂອງອອກໄປກິນເຂົ້າຢູ່ຂ້າງນອກນັ້ນ ບໍ່ຖືວ່າເປັນການມອບໝາຍໃຫ້ X ເປັນຜູ້ຄຸ້ມຄອງຊັບ ເນື່ອງຈາກວ່າ X ເປັນພຽງພະນັກງານຂາຍທີ່ເປັນຜູ້ຊ່ວຍເຈົ້າຂອງຮ້ານໃນການຄຸ້ມຄອງຊັບເທົ່ານັ້ນ, ໝາຍຄວາມວ່າຊັບນັ້ນບໍ່ໄດ້ຢູ່ໃນການ

ຄຸ້ມຄອງຂອງ X. ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.1 ແລ້ວເຫັນວ່າຊັບດັ່ງກ່າວບໍ່ເປັນຊັບສິນທີ່ຕົນໄດ້ຖືກມອບໝາຍໃຫ້ປົກປັກຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຍັກຍອກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ແຕ່ເປັນການກະທຳຜິດສະຖານລັກຊັບຕາມມາດຕາ 231 ຂອງປະມວນກົດໝາຍອາຍາ ເນື່ອງຈາກວ່າ X ເອົາຊັບຢູ່ໃນຮ້ານໄປເປັນຂອງຕົນນັ້ນ ເປັນການເອົາຊັບຢູ່ໃນການຄອບຄອງຂອງຄົນອື່ນໄປ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດຖານຍັກຍອກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 234 ຂອງປະມວນກົດໝາຍອາຍາ ໄດ້ບັນຍັດຂໍ້ຄວາມທີ່ສຳຄັນໄວ້ວ່າ: “ບຸກຄົນໃດ ຫາກໄດ້ສວຍໃຊ້ຄວາມເຊື່ອໃຈ ເພື່ອຫຼັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງດ້ວຍວິທີໃດກໍຕາມ ເພື່ອເອົາຊັບຂອງຄົນອື່ນ.......” ເຫັນວ່າມີເປັນປະເດັນໃຫ້ພິຈາລະນາກ່ຽວກັບຄຳວ່າ “ຊັບ” ຊຶ່ງອາດຈະຕີຄວາມໝາຍວ່າເປັນຊັບທີ່ມີຕົວຕົນໃນເວລາທີ່ເຈົ້າຂອງຊັບໄດ້ມອບການຄອບຄອງໃຫ້ບຸກຄົນອື່ນເພື່ອໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງດ້ວຍຄວາມເຊື່ອໃຈ. ຢ່າງໃດກໍຕາມ ຖ້າຜູ້ຄອບຄອບໄດ້ເອົາຊັບທີ່ຕົນຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງໄປສ້າງປະໂຫຍດທີ່ມີຕົວຕົນທີ່ເກີດຈາກຊັບດັ່ງກ່າວ, ຕົວຢ່າງ: ມອບໝາຍລົດໃຫ້ຮັກສາ ແລ້ວນຳລົດນັ້ນໄປແລ່ນຮັບສົ່ງຜູ້ໂດຍສານເພື່ອເອົາເງິນຈະຖືວ່າເປັນການຍັກຍອກຊັບຕາມຄວາມໝາຍຂອງມາດຕານີ້ ຫຼື ບໍ່.

ດ້ວຍເຫດ ແລະ ຜົນທີ່ກ່າວມາຂ້າງເທິງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງໃນການສ້າງ ແລະ ປັບປຸງປະມວນກົດໝາຍອາຍາໃນອະນາຄົດເພື່ອພິຈາລະນາ ແລະ ປັບປຸງບັນຍັດຂໍ້ຄວາມໃນກົດໝາຍມາດຕານີ້ໃໝ່ວ່າ: “ບຸກຄົນໃດຫາກໄດ້ສວຍໃຊ້ຄວາມເຊື່ອໃຈ ເພື່ອຫຼັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງ ໂດຍລວມເຖິງຜົນ

ປະໂຫຍດທີ່ມີຕົວຕົນທີ່ໄດ້ສ້າງຈາກຊັບນັ້ນໃຫ້ແກ່ຕົນ ຫຼື ຜູ້ອື່ນໂດຍບໍ່ຖືກຕ້ອງຈະຖືກລົງໂທດຕັດອິດສະລະພາບ......”. ທັງນີ້ກໍເພື່ອໃຫ້ບົດບັນຍັດຂອງກົດໝາຍມາດຕາດັ່ງກ່າວສາມາດຄວບຄຸມພຶດຕິກຳກ່ຽວກັບການນຳຊັບຂອງຜູ້ອື່ນທີ່ມອບໝາຍໃຫ້ຮັກສາ ຫຼື ເພື່ອຈຸດປະສົງໃດໜຶ່ງໄປໃຊ້ໂດຍບໍ່ຖືກຕ້ອງ ກໍຖືວ່າເປັນການກະທຳຜິດຖານຍັກຍອກຊັບໄດ້ເຊັ່ນກັນ.

## ຮູບພາບສະແດງເຖິງການກະທຳຜິດສະຖານຍັກຍອກຊັບ




: ຊັບຢູ່ໃນການຄອບຄອງຂອງຜູ້ກະທຳຜິດ, ເປັນການຍັກຍອກຊັບ

: ຊັບຢູ່ນອກການຄອບຄອງຂອງຜູ້ກະທຳຜິດ, ບໍ່ເປັນການຍັກຍອກຊັບ

# ບົດທີ 9
# ການຂົ່ມຂືນທຳຊຳເລົາ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ຮູ້ວ່າຖ້າມີແອວກໍຮໍ ຫຼື ທາດເຫຼົ້າໃນຮ່າງກາຍຂອງ A ແລ້ວ ຈະເຮັດໃຫ້ A ເກີດມີອາລົມທາງເພດຂຶ້ນມາທັນທີ ແລະ X ກໍມີຄວາມຕ້ອງການຢາກຮ່ວມເພດກັບ A ຢູ່ແລ້ວ ຖ້າຈະໃຊ້ຄວາມຮຸນແຮງຮ່ວມເພດກັບ A ກໍຢ້ານບໍ່ສຳເລັດ. X ຈຶ່ງຊວນ A ໄປດື່ມເບຍຢູ່ຮ້ານອາຫານແຫ່ງໜຶ່ງ. ເມື່ອ A ດື່ມເບຍເຂົ້າໄປແລ້ວ, A ຈຶ່ງເກີດມີອາລົມທາງເພດຂຶ້ນມາຈົນບໍ່ສາມາດຄວບຄຸມຕົນເອງໄວ້ໄດ້, A ຈຶ່ງຊວນ X ເຂົ້າບ້ານພັກ. X ໄດ້ຮ່ວມເພດກັບ A ໜຶ່ງຄັ້ງຈົນສຳເລັດ.

### 1.2 ກໍລະນີສຶກສາທີ 2

X ຮູ້ກັບ A ທາງເຟສບຸກມາໄດ້ໄລຍະໜຶ່ງ ຈຶ່ງນັດກັນໄປກິນເບຍຢູ່ຮ້ານອາຫານແຫ່ງໜຶ່ງ. ຫຼັງຈາກເມົາແລ້ວ X ຈຶ່ງໄປສົ່ງ A ຢູ່ຫ້ອງນອນຂອງ A. ພໍຮອດຫ້ອງນອນ X ຂໍເຂົ້າໄປໃນຫ້ອງນອນຂອງ A ແລະ A ກໍອະນຸຍາດໃຫ້ເຂົ້າ. ພໍທັງສອງເຂົ້າຫ້ອງນອນ A ໄດ້ລົ້ມຕົວລົງນອນເທິງຕຽງໃນທ່າຂວ້ຳໜ້າໃນລັກສະນະທ່າທາງອິດເມື່ອຍ, X ເຫັນແນວນັ້ນຈຶ່ງເຂົ້າໄປນອນເຕັງ A ໃນທາງຫຼັງແລ້ວກົ້ມລົງຈູບກ້ານຄໍ. ເມື່ອເຫັນ A ບໍ່ຂັດຂືນ X ຈຶ່ງຈູບລົງມາແຜ່ນຫຼັງ, A ຈຶ່ງຝືດອອກໜ້ອຍໜຶ່ງແຕ່ X ກໍຍັງສືບຕໍ່ຈູບ A. ເມື່ອເຫັນ A ບໍ່ຂັດຂືນຫຍັງ. X ຈຶ່ງໄດ້ຮ່ວມເພດກັບ A ໃນທ່ານອນຂວ້ຳນັ້ນຈົນສຳເລັດໜຶ່ງຄັ້ງ.

### 1.3 ກໍລະນີສຶກສາທີ 3

X, Y, Z ຮູ້ຈັກກັບ A ທີ່ເຊົ່າຫ້ອງພັກຢູ່ໃກ້ກັນ. X, Y, Z ວາງແຜນຮ່ວມເພດກັບ A ໂດຍວາງແຜນໃຫ້ X ເປັນຜູ້ຊວນ A ມາກິນເຂົ້າຢູ່ເຮືອນນຳພວກຕົນ. ໃນເວລາກິນເຂົ້າໄດ້ຊັກຊວນໃຫ້ A ດື່ມເຫຼົ້າປະສົມກັບຢານອນຫຼັບທີ່ພວກຕົນກຽມມາໂດຍບໍ່ໃຫ້ A ຮູ້ ຈົນເປັນເຫດໃຫ້ A ຫຼັບຄາໂຕະ. ຈາກນັ້ນ Y ແລະ Z ຈຶ່ງໄດ້ຜັດປ່ຽນກັນຮ່ວມເພດກັບ A ຄົນລະຄັ້ງຈົນສຳເລັດ. X ຮູ້ສຶກສົງສານ ຈຶ່ງປ່ຽນໃຈບໍ່

ຮ່ວມເພດກັບ A ພ້ອມກັບໃຫ້ການຊ່ວຍເຫຼືອຈົນ A ຮູ້ສຶກຕົວ ແລະ ຊ່ວງຈາກອາການເມົາ.

## 2. ມາດຕາ 248

ບຸກຄົນໃດຫາກໄດ້ໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫຼົບ,ໃຊ້ສິ່ງມຶນເມົາ ຫຼື ໃຊ້ວິທີອື່ນທີ່ເຮັດໃຫ້ຜູ້ອື່ນຕົກໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ສວຍໂອກາດເພື່ອທຳຊຳເລົາດ້ວຍການຂືນໃຈຂອງຜູ້ກ່ຽວ ຈະຖືກລົງໂທດຕັດອິດສະລະພາບແຕ່ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາຜູ້ຍິງທີ່ມີອາຍຸແຕ່ ສິບຫ້າປີ ຫາ ຕໍ່າກວ່າສິບແປດປີທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ຫຼື ໃນການປິ່ນປົວຂອງຕົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝແຕ່ 7.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາດ້ວຍວິທີ່ປ່ຽນຜຽນກັນ, ຂົ່ມຂືນທຳຊຳເລົາເດັກທີ່ມີອາຍຸຕໍ່າກວ່າ ສິບຫ້າປີ, ໄດ້ທຳຮ້າຍຮ່າງກາຍຜູ້ຍິງໃນເວລາຂົ່ມຂືນ ຫຼື ເຮັດໃຫ້ຜູ້ຍິງພິການຕະຫຼອດຊີວິດ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 70.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດກໍຈະຖືກລົງໂທດ

## 3. ເຫດຜົນການບັນຍັດມາດຕາ

ໃນສະພາບສັງຄົມໂດຍທົ່ວໄປ ລວມທັງ ສປປ ລາວ ການຂົ່ມຂືນທຳຊຳເລົາເປັນໄພອັນຕະລາຍທີ່ຄຸກຄາມຕໍ່ເສລີພາບທາງເພດ ແລະ ຕໍ່ຄວາມປອດໄພຂອງບຸກຄົນ ໂດຍສະເພາະແມ່ນຜູ້ຍິງ ແລະ ເດັກນ້ອຍ. ການຖືກຂົ່ມຂືນທຳຊຳເລົາອາດນຳໄປສູ່ບັນຫາທາງສັງຄົມອື່ນໆ ຕາມມາເຊັ່ນ: ຖືກບາດເຈັບ ຫຼື ອາດຈະເສຍຊີວິດ, ເປັນໂລກຊຶມເສົ້າ, ບໍ່ສາມາດເຂົ້າກັບສັງຄົມໄດ້, ຂ້າຕົວຕາຍ ແລະ ບັນຫາອື່ນໆ ທາງດ້ານຈິດໃຈ. ດ້ວຍເຫດນີ້, ການຂົ່ມຂືນທຳຊຳເລົາຈຶ່ງຖືກນຳມາບັນຍັດເປັນຄວາມຜິດໄວ້ໃນມາດຕາ 248 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 248 ຂອງປະມວນກົດໝາຍອາຍານີ້ ບັນຍັດໄວ້ມີວັດຖຸປະສົງເພື່ອປົກປ້ອງເສລີພາບທາງເພດ ແລະ ສະພາບຈິດໃຈຂອງຄົນ. ດ້ວຍເຫດນີ້, ປະມວນກົດໝາຍອາຍາມາດຕາດັ່ງກ່າວຈຶ່ງປົກປ້ອງເສລີພາບທາງເພດ ແລະ ສະພາບຈິດໃຈຂອງຄົນບໍ່ໃຫ້ຖືກທຳລາຍຈາກການກະທຳຜິດ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການຂົ່ມຂືນທຳຊຳເລົາຈະຕ້ອງປະກອບດ້ວຍ 3 ເງື່ອນໄຂດັ່ງນີ້: 1. ເຮັດໃຫ້ຜູ້ອື່ນບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ສວຍໂອກາດ; 2. ທຳຊຳເລົາດ້ວຍການຂືນໃຈ; 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ 2 ເປັນອົງປະກອບທາງດ້ານພາວະວິໄສຂອງການກະທຳຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບທາງດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1 ເຮັດໃຫ້ຜູ້ອື່ນບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ສວຍໂອກາດ

ເຮັດໃຫ້ຜູ້ອື່ນບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ໝາຍເຖິງການກະທຳຕ່າງໆ ທີ່ເຮັດໃຫ້ຜູ້ອື່ນບໍ່ສາມາດຄວບຄຸມ ຫຼື ເຄື່ອນເໜັງຮ່າງກາຍຂອງຕົນເອງໄດ້ຢ່າງອິດສະລະ ຫຼື ເຮັດໃຫ້ຄົນອື່ນບໍ່ສາມາດຄວບຄຸມທາງດ້ານອາລົມ ຫຼື ຈິດໃຈໄວ້ໄດ້.

ການທີ່ຈະຖືວ່າເປັນການເຮັດໃຫ້ຜູ້ອື່ນບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື ສວຍໂອກາດນັ້ນ ຕ້ອງມາຈາກຢ່າງໃດຢ່າງໜຶ່ງຂອງ 2 ກໍລະນີດັ່ງນີ້: 1). ເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ຫຼື 2). ສວຍໂອກາດໃນເວລາເຫັນຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

1). ເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້

ການເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ໝາຍເຖິງ ການເຮັດໃຫ້ຜູ້ອື່ນບໍ່ສາມາດຄວບຄຸມ ຫຼື ເຄື່ອນເໜັງຮ່າງກາຍຂອງຕົນໄດ້ຢ່າງ

ອິດສະລະ, ບໍ່ສາມາດຄວບຄຸມທາງດ້ານຈິດໃຈ ຫຼື ບໍ່ສາມາດມີແນວຄິດກົງກັນຂ້າມໄດ້ ເນື່ອງຈາກມີບາງສິ່ງມາບັງຄັບ ຊຶ່ງສະແດງອອກເຖິງການກະທຳດັ່ງນີ້:

**- ໃຊ້ກຳລັງ** ໝາຍເຖິງການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ, ເຮັດໃຫ້ບຸກຄົນອື່ນບໍ່ສາມາດປ້ອງກັນ ຫຼື ຂັດຂືນໄດ້ເຊັ່ນ: ກອດ, ກຸມ, ປ້ຳ, ເຕະ, ຕີ, ດຶງ, ມັດ.

**- ໃຊ້ອາວຸດນາບຂູ່** ໝາຍເຖິງການໃຊ້ອາວຸດທີ່ເປັນອັນຕະລາຍ, ເຮັດໃຫ້ຜູ້ອື່ນມີຄວາມຢ້ານກົວ ແລະ ຕົກຢູ່ໃນສະພາບບໍ່ສາມາດຂັດຂືນ ເຊັ່ນ: ໃຊ້ວັດຖຸມີຄົມ, ຂອງແຂງ ຫຼື ແຫຼມ ຫຼື ອາວຸດເສິກທຸກປະເພດ.

**- ໃຊ້ຢາສະຫຼົບ** ໝາຍເຖິງ ການໃຊ້ຢາທີ່ມີສານເຄມີ ຫຼື ພືດໃດໜຶ່ງທີ່ເຮັດໃຫ້ຮ່າງກາຍຕົກຢູ່ໃນສະພາບບໍ່ຮູ້ສຶກຕົວ ຊຶ່ງມີທັງຊະນິດກິນ, ສີດເຂົ້າກ້າມຊີ້ນ ຫຼື ເສັ້ນເລືອດ, ດົມ ຫຼື ທາ.

**- ໃຊ້ສິ່ງມຶນເມົາ** ໝາຍເຖິງການໃຊ້ເຫຼົ້າ, ເບຍ, ຢາບ້າ, ຄັນຊາ, ນ້ຳກະທ້ອມ, ຢາກ່ອມປະສາດຕ່າງໆ ໃຫ້ກິນ, ດື່ມ, ດົມ, ສັກ ຫຼື ສີດ ແລ້ວເຮັດໃຫ້ເກີດອາການມຶນເມົາຈົນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

**- ໃຊ້ວິທີອື່ນ** ໝາຍເຖິງການໃຊ້ວິທີໃດໜຶ່ງທີ່ເຮັດບຸກຄົນອື່ນຍິນຍອມດ້ວຍຄວາມຈຳໃຈ ເຊັ່ນ: ບັງຄັບນາບຂູ່ ຫຼື ຫຼອກລວງ, ປອມຕົວ, ສວມຮອຍ, ໃຊ້ຢາກະຕຸ້ນອາລົມທາງເພດ.

2). ສວຍໂອກາດໃນເວລາເຫັນຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້

ສວຍໂອກາດໃນເວລາເຫັນຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ໝາຍເຖິງ ຜູ້ກະທຳເຫັນຄົນອື່ນຕົກຢູ່ໃນສະພາບທີ່ບໍ່ສາມາດເຄື່ອນໄຫວທາງດ້ານຮ່າງກາຍ ຫຼື ຄວບຄຸມທາງດ້ານອາລົມ ຫຼື ຈິດໃຈໄດ້ເຊັ່ນ: ພົບເຫັນຄົນອື່ນເມົານອນບໍ່ໄດ້ສະຕິໃນສະຖານທີ່ໃດໜຶ່ງ, ພົບເຫັນຄົນອື່ນກຳລັງມີອາລົມທາງເພດເນື່ອງມາຈາກຢາກະຕຸ້ນ, ພົບເຫັນຄົນອື່ນຢູ່ໃນສະພາບຈຳຍອມເນື່ອງຈາກດ້ານເສດຖະກິດແລ້ວ ຈຶ່ງສວຍໂອກາດໃນເວລານັ້ນ ຫຼື ໃນສະຖານະການນັ້ນເພື່ອທຳຊຳເລົາ. ການສວຍ ໂອກາດຍັງລວມເຖິງການເຮັດໃຫ້ຜູ້ຖືກກະທຳເຂົ້າໃຈຜິດຕໍ່ກັບການກະທຳຂອງຕົນວ່າເປັນການກະທຳຂອງຄົນອື່ນ ເຊັ່ນ: ປອມຕົວເປັນຜົວ, ປອມຕົວເປັນຄົນຮັກ ຫຼື ເປັນແຟນຂອງຜູ້ຖືກກະທຳ.

### 5.2 ທຳຊຳເລົາດ້ວຍການຂົ່ມໃຈ

ການທຳຊຳເລົາດ້ວຍການຂົ່ມໃຈ ໝາຍເຖິງການຮ່ວມເພດກັບຜູ້ອື່ນໂດຍທີ່ຜູ້ນັ້ນບໍ່ໄດ້ຍິນຍອມ ຫຼື ການຮ່ວມເພດກັບຜູ້ອື່ນໃນເວລາທີ່ບຸກຄົນນັ້ນບໍ່ສາມາດຄວບຄຸມທາງດ້ານອາລົມ ຫຼື ຈິດໃຈ, ການຮ່ວມເພດກັບບຸກຄົນອື່ນໃນເວລາທີ່ບຸກຄົນນັ້ນບໍ່ສາມາດເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະລະ, ການຮ່ວມເພດກັບບຸກຄົນອື່ນໃນເວລາທີ່ບຸກຄົນນັ້ນຕົກຢູ່ໃນສະພາບຈຳຍອມຍ້ອນຖານະທາງເສດຖະກິດ, ການຮ່ວມເພດກັບບຸກຄົນອື່ນໃນເວລາທີ່ບຸກຄົນນັ້ນຕົກຢູ່ໃນສະພາບເຂົ້າໃຈຜິດ. ຢ່າງໃດກໍຕາມ, ຈະບໍ່ຖືວ່າເປັນການຂົ່ມໃຈຖ້າຫາກຜູ້ຖືກກະທຳຍິນຍອມດ້ວຍຄວາມສະໝັກໃຈ.

### 5.3 ໂດຍເຈດຕະນາ

ໂດຍເຈດຕະນາ ໝາຍເຖິງຜູ້ກະທຳໄດ້ຮັບຮູ້ວ່າການກະທຳຂອງຕົນນັ້ນເປັນການເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້, ຮູ້ວ່າໃນສະພາບດັ່ງກ່າວນັ້ນ ບຸກຄົນຜູ້ນັ້ນບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແຕ່ກໍຍັງຈິງໃຈຮ່ວມເພດກັບບຸກຄົນດັ່ງກ່າວ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາ 1

ໃນກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ໄດ້ຊວນ A ໄປດື່ມເບຍນັ້ນໝາຍເຖິງການໃຊ້ສິ່ງມຶນເມົາ. ການທີ່ A ມີອາການມຶນເມົາແລ້ວຮູ້ສຶກເກີດມີອາລົມທາງເພດເຖິງຂັ້ນຮຸນແຮງ ແລະ ຮູ້ສຶກວ່າຕົນບໍ່ສາມາດຄວບຄຸມອາການໄດ້, ໝາຍຄວາມວ່າແມ່ນ A ບໍ່ສາມາດຄວບຄຸມທາງດ້ານຈິດໃຈ ຫຼື ເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະລະ ແລະ ການທີ່ A ມີອາການດັ່ງກ່າວນັ້ນ ກໍຍ້ອນວ່າ X ຊວນ A ດື່ມສິ່ງມຶນເມົາ ໝາຍຄວາມວ່າ X ໄດ້ເຮັດໃຫ້ A ບໍ່ສາມາດຄວບຄຸມ ຫຼື ເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະລະ ແລະ ການທີ່ X ໄດ້ມີພຶດຕິກຳດັ່ງກ່າວນັ້ນ ແມ່ນເພື່ອຫວັງຈະຮ່ວມເພດກັບ A. ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂ ການເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

ການທີ່ X ໄດ້ຮ່ວມເພດກັບ A ໃນຊ່ວງເວລາທີ່ A ເກີດມີອາລົມທາງເພດຂັ້ນຮຸນແຮງນັ້ນເທົ່າກັບວ່າເປັນການຮ່ວມເພດກັບຜູ້ອື່ນໂດຍບໍ່ໄດ້ຮັບການຍິນຍອມ

ຍ້ອນວ່າ A ບໍ່ສາມາດຄວບຄຸມທາງດ້ານຈິດໃຈ ຫຼື ເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະຫຼະ ແລະ A ເອງບໍ່ໄດ້ຍິນຍອມຕົກຢູ່ໃນສະພາບດັ່ງກ່າວ. ສະນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂການທຳຊຳເລົາດ້ວຍການຂືນໃຈ.

ການທີ່ X ໄດ້ຊວນ A ໄປດື່ມເບຍຢູ່ຮ້ານອາຫານໂດຍທີ່ຮູ້ວ່າ ຫາກມີທາດແອວກໍຮໍເຂົ້າໃນຮ່າງກາຍຂອງ A ແລ້ວຈະເກີດມີອາລົມທາງເພດ. ນີ້ສະແດງໃຫ້ເຫັນວ່າ X ມີຈຸດປະສົງຢາກຮ່ວມເພດກັບ A ແລະ X ກໍ່ຮູ້ວ່າຖ້າ A ຕົກຢູ່ໃນສະພາບດັ່ງກ່າວນັ້ນຈະເຮັດໃຫ້ A ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແຕ່ກໍຍັງຈົງໃຈເພື່ອຈະໄດ້ຮ່ວມເພດກັບ A . ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂທັງໝົດແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນຖານການຂົ່ມຂືນທຳຊຳເລົາຕາມມາດຕາ 248 ຂອງປະມວນກົດໝາຍອາຍາ.

### 6.2 ຄຳຕອບກໍລະນີສຶກສາ 2

ໃນກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X ໄດ້ຂໍເຂົ້າໄປນອນຢູ່ຫ້ອງພັກຂອງ A, ຊຶ່ງ A ກໍ່ບໍ່ໄດ້ປະຕິເສດ X ນັ້ນ ໝາຍເຖິງ A ໄດ້ອະນຸຍາດໃຫ້ X ເຂົ້າມາຫ້ອງພັກຂອງຕົນ ແລະ X ກໍ່ບໍ່ໄດ້ບັງຄັບນາບຂູ່ ຫຼື ຫຼອກລວງແຕ່ຢ່າງໃດ. ການທີ່ X ເຫັນ A ນອນຢູ່ເທິງຕຽງແລ້ວເຂົ້າໄປນອນເຕັງ ແລະ A ບໍ່ໄດ້ໂຕ້ຕອບ ຍ້ອນວ່າ A ອິດເມື່ອຍ X ແລະ A ກໍໄດ້ຝຶດອອກ A ຍັງສາມາດຄວບຄຸມ ຫຼື ເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະລະ. ການກະທຳຂອງ X ບໍ່ກົງກັບເງື່ອນໄຂ ການເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

ການທີ່ X ໄດ້ຈູບລົງມາແຜ່ນຫຼັງ A ແລະ A ໄດ້ຝຶດອອກໜ້ອຍໜຶ່ງຊຶ່ງ X ຍັງໄດ້ສືບຕໍ່ແຕ່ A ກໍບໍ່ໄດ້ຝຶດອີກແລ້ວໄດ້ຮ່ວມເພດສຳເລັດ. ໝາຍຄວາມວ່າ X ບໍ່ໄດ້ຝືນໃຈ A. ເນື່ອງຈາກວ່າ A ໄດ້ຝຶດອອກໜ້ອຍໜຶ່ງ ແລະ ໃນເວລານັ້ນ A ຍັງສາມາດຄວບຄຸມທາງດ້ານຈິດໃຈ ຫຼື ເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະລະ. ຊຶ່ງ A ກໍໄດ້ຍິນຍອມໃຫ້ X ຮ່ວມເພດນຳຕົນ. ການກະທຳຂອງ X ບໍ່ກົງກັບເງື່ອນໄຂ ທຳຊຳເລົາດ້ວຍການຂືນໃຈ.

ການທີ່ X ໄດ້ຮ່ວມເພດກັບ A ນັ້ນ. X ໄດ້ຮັບຮູ້ດີວ່າການກະທຳຂອງຕົນນັ້ນເປັນການລ່ວງລະເມີດສິດເສລີພາບທາງເພດຂອງ A ແຕ່ X ບໍ່ໄດ້ໃຊ້ວິທີການໃດ

ໜຶ່ງທີ່ເຮັດໃຫ້ A ຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ແລະ A ກໍຍິນຍອມ. ການກະທຳຂອງ X ບໍ່ກົງກັບເງື່ອນໄຂໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອປຽບທຽບກັບເງື່ອນໄຂທັງໝົດແລ້ວເຫັນວ່າການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດໃນຖານການຂົ່ມຂືນທຳຊຳເລົາຕາມມາດຕາ 248 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາ 3**

ໃນກໍລະນີສຶກສາດັ່ງກ່າວເຫັນວ່າການທີ່ X, Y, Z ໄດ້ຊວນ A ດື່ມເຫຼົ້າປົນກັບຢານອນຫຼັບນັ້ນໝາຍເຖິງການໃຊ້ສິ່ງມຶນເມົາ. ຊຶ່ງເຮັດໃຫ້ A ບໍ່ສາມາດຄວບຄຸມທາງດ້ານຈິດໃຈ ຫຼື ເຄື່ອນເໜັງຮ່າງກາຍໄດ້ຢ່າງອິດສະລະ. ການກະທຳຂອງ X, Y, Z ເປັນການກະທຳທີ່ກົງກັບເງື່ອນໄຂການເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

ການທີ່ Y, Z ໄດ້ຮ່ວມເພດກັບ A ສຳເລັດ ໝາຍເຖິງເປັນການຮ່ວມເພດກັບຄົນອື່ນໂດຍບໍ່ໄດ້ຮັບການຍິນຍອມ. ເນື່ອງຈາກວ່າ Y, Z ໄດ້ຮ່ວມເພດກັບ A ໃນເວລາທີ່ A ເມົາເຖິງຂັ້ນຮຸນແຮງ ແລະ ບໍ່ສາມາດຄວບຄຸມທາງດ້ານຈິດໃຈ ຫຼື ເຄື່ອນ ເໜັງຮ່າງກາຍໄດ້ຢ່າງອິດສະລະ. ການກະທຳຂອງ Y, Z ເປັນການທຳທີ່ກົງກັບເງື່ອນໄຂທຳຊຳເລົາດ້ວຍການຂືນໃຈ.

ການທີ່ X, Y, Z ວາງແຜນທີ່ຈະຮ່ວມເພດກັບ A. X, Y, Z ໄດ້ຮັບຮູ້ດີວ່າການກະທຳຂອງຕົນນັ້ນເປັນການລ່ວງລະເມີດສິດເສລີພາບທາງເພດຂອງ A ຊຶ່ງພວກກ່ຽວໄດ້ໃຊ້ເຄື່ອງດື່ມທີ່ເປັນເຫຼົ້າປົນກັບຢານອນຫຼັບທີ່ເປັນສິ່ງມຶນເມົາເພື່ອເຮັດໃຫ້ A ຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອຕົນເອງໄດ້. ການທີ່ X ຮູ້ສຶກອີ່ດູສົງສານ A ຈຶ່ງປ່ຽນໃຈບໍ່ຮ່ວມເພດກັບ A ນັ້ນ ໝາຍເຖິງຜົນການກະທຳຂອງ X ໃນເບື້ອງຕົ້ນກໍ່ໄດ້ເປັນການລ່ວງລະເມີດສິດເສລີພາບທາງເພດຂອງ A ແລ້ວ. ເນື່ອງຈາກວ່າການກະທຳຂອງ X ເປັນການຮ່ວມກັນກະທຳຜິດ, ຊຶ່ງ X ໄດ້ເຂົ້າຮ່ວມການກະທຳຜິດໂດຍເຈດຕະນາ ກັບ Y, Z. ການກະທຳຂອງ X, Y, Z ເປັນການກະທຳທີ່ກົງກັບເງື່ອນໄຂໂດຍເຈດຕະນາ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ຂ້າງເທິງແລ້ວເຫັນວ່າການກະທຳຂອງ X, Y, Z ເປັນການກະທຳຜິດໃນສະຖານການຂົ່ມຂືນທຳຊຳເລົາຕາມມາດຕາ 248 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການ ສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນ ຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດໃນສະຖານ ການຂົ່ມຂືນທຳຊຳເລົາຕາມມາດຕາ 248 ຂອງປະມວນກົດໝາຍອາຍາເຫັນວ່າຄວນ ກຳນົດຈະແຈ້ງກ່ຽວກັບການຍິນຍອມຂອງຜູ້ຖືກກະທຳເຊັ່ນ: ການຍິນຍອມທີ່ເກີດ ຈາກຄວາມຫຍຸ້ງຍາກທີ່ຈະຕັດສິນໃຈ, ການທີ່ບໍ່ກ້າສະແດງອອກເຖິງການປະຕິເສດ, ເຫດການເກີດຂຶ້ນກະທັນຫັນ ຊຶ່ງເຮັດໃຫ້ຜູ້ຖືກກະທຳຈຳເປັນຕ້ອງຍິນຍອມ.

### ແຜນວາດສະແດງເຖິງການກະທຳຜິດສະຖານການ ຂົ່ມຂືນທຳຊຳເລົາ



# ບົດທີ 10
# ການທ່ອງທ່ຽວທາງເພດເດັກ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ເດີນທາງໄປທ່ຽວແຂວງໜຶ່ງຢູ່ພາຍໃນປະເທດຂອງຕົນ ໂດຍມີຈຸດປະສົງເພື່ອຊອກຫາເດັກ ຈຶ່ງໄດ້ພົບກັບ B ທີ່ມີອາຍຸ 17 ປີ, X ເຂົ້າທັກທາຍໂອ້ລົມ ແລະ ສ້າງພາບພົດທີ່ດີໃຫ້ B ເຫັນເປັນຄົນດີມີນໍ້າໃຈ, ມັກຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ ເມື່ອເຫັນວ່າ B ໄວ້ວາງໃຈຕົນ, X ຈຶ່ງໄດ້ຊັກຊວນ B ໄປໂຮງແຮມທີ່ຕົນພັກ ແລ້ວທັງສອງກໍໄດ້ຮ່ວມເພດກັນ.

**ກໍລະນີສຶກສາທີ 1 ດັດແກ້ທີ 1**: ໃນກໍລະນີຫາກ X ບໍ່ມີຈຸດປະສົງເພື່ອຊອກຫາ ແຕ່ໄດ້ພົບກັບເດັກ B ທີ່ມີອາຍຸ 17 ປີດ້ວຍຄວາມບັງເອີນ ແລະ X ກໍບໍ່ໄດ້ຊັກຊວນພາໄປໂຮງແຮມ ແຕ່ໄດ້ຊັກຊວນພາໄປຮ້ານອາຫານ, ຈາກນັ້ນ X ກໍເລີ່ມສວຍໂອກາດສໍາຜັດຈັບບາຍ, ໂອບກອດ ແລະ ຫອມຈູບເດັກ.

**ກໍລະນີສຶກສາທີ 1 ດັດແກ້ທີ 2**: ໃນກໍລະນີ X ຫາກເດີນທາງໄປວຽກງານທາງລັດຖະການ, ຫຼັງຈາກນັ້ນໄດ້ຊອກຫາເດັກ ຈຶ່ງໄດ້ພົບກັບເດັກ B, ແລ້ວຊວນໄປຫຼິ້ນ, ໄປກິນຢູ່ຮ້ານອາຫານ, ຈາກນັ້ນ X ກໍໄດ້ຊວນ B ໄປໂຮງແຮມທີ່ຕົນພັກ ອ້າງວ່າມີຂອງຂວັນຈະໃຫ້ເປັນໄອໂຟນໃໝ່ລ່າສຸດ, B ເຊື່ອຈຶ່ງໄດ້ໄປນໍາ ເມື່ອມາຮອດໂຮງແຮມແລ້ວ X ບອກໃຫ້ B ຮ່ວມເພດກັບຕົນກ່ອນຈຶ່ງຈະໃຫ້ຂອງຂວັນທີ່ວ່າ, ຈາກນັ້ນ X ກໍໄດ້ຮ່ວມເພດກັບ B ສໍາເລັດ.

### 1.2 ກໍລະນີສຶກສາທີ 2

X ເດີນທາງມາທ່ຽວປະເທດລາວ ໂດຍມີຈຸດປະສົງເພື່ອຊອກຫາເດັກ ຈຶ່ງໄດ້ຮູ້ຈັກກັບ Y ເປັນພະນັກງານຕ້ອນຮັບຂອງໂຮງແຮມແຫ່ງໜຶ່ງ ແລ້ວໃຫ້ Y ຊອກເດັກໃຫ້ໂດຍຈະໃຫ້ຄ່າຕອບແທນເປັນເງິນ. ຈາກນັ້ນ Y ກໍພາເດັກ C ທີ່ມີອາຍຸ 16 ປີ ມາພົບ X ທັງສອງໄດ້ໂອ້ລົມ ແລະ ສ້າງຄວາມສະໜິດສະໜົມກັນ ເມື່ອ C ເຊື່ອໃຈ, ໄວ້ໃຈ X ຈຶ່ງໄດ້ຊັກຊວນໃຫ້ພາໄປທ່ຽວຫຼິ້ນສະຖານທີ່ຕ່າງໆທາງທໍາມະຊາດທີ່ເປັນແຫຼ່ງທ່ອງທ່ຽວ ໂດຍຈະໃຫ້ຄ່າຈ້າງນໍາທ່ຽວສູງພິເສດ ແລະ ຊື້ເຄື່ອງນຸ່ງ, ໂທລະ

ສັບໃຫ້ເດັກກໍຕົກລົງຈະພາທ່ຽວ, ໃນລະຫວ່າງການທ່ຽວນັ້ນ X ສວຍໂອກາດສຳຜັດ, ຈັບບາຍ, ເວົ້າຈາລາມົກ, ຊື່ນຊົມເດັກໄປເລື້ອຍໆ, ຈາກນັ້ນ X ກໍພາ C ມາໂຮງແຮມທີ່ຕົນພັກ ແລ້ວຮ່ວມເພດນຳ.

**ກໍລະນີສຶກສາທີ 2 ດັດແກ້**: ໃນກໍນີສຶກສາດັ່ງກ່າວ ຫາກເດັກ C ຮູ້ທັນວ່າ X ມີເຈດຕະນາບໍ່ດີຕໍ່ຕົນໃນລະຫວ່າງການເດີນທາງມາໂຮງແຮມນັ້ນ, ເມື່ອມີໂອກາດກໍໄດ້ເອົາຕົວລົບໜີ.

## 2. ມາດຕາ 262

ບຸກຄົນໃດ ຫາກໄດ້ເດີນທາງຈາກປະເທດໜຶ່ງ ໄປຍັງປະເທດອື່ນ ຫຼື ຈາກສະຖານທີ່ໃດໜຶ່ງ ໄປຍັງສະຖານທີ່ອື່ນ ເພື່ອລ່ວງລະເມີດທາງເພດເດັກ ດ້ວຍການສ້າງຄວາມຜູກພັນ, ສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກໄດ້ຈັດຫາ, ໂຄສະນາ, ອຳນວຍຄວາມສະດວກ ໃຫ້ແກ່ຜູ້ທີ່ເດີນທາງເພື່ອທ່ອງທ່ຽວ ທາງເພດເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

## 3. ເຫດຜົນການບັນຍັດມາດຕາ

ໃນສະພາບສັງຄົມໂດຍທົ່ວໄປຂອງໂລກ ລວມທັງ ສປປ ລາວ ການທ່ອງທ່ຽວທາງເພດເດັກເປັນໄພອັນຕະລາຍຕໍ່ສິດທິທາງເພດຂອງເດັກ ແລະ ພາບພົດການທ່ອງທ່ຽວຂອງປະເທດ. ດ້ວຍເຫດນີ້, ການທ່ອງທ່ຽວທາງເພດເດັກຈຶ່ງຖືກນຳມາບັນຍັດເປັນຄວາມຜິດໄວ້ໃນມາດຕາ 262 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 262 ບັນຍັດໄວ້ມີວັດຖຸປະສົງເພື່ອປົກປ້ອງສິດທິທາງເພດຂອງເດັກ ແລະ ພາບພົດການທ່ອງທ່ຽວ.

ວັດຖຸປະສົງທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາໄດ້ກຳນົດໄວ້.

## 5. ເງື່ອນໄຂມາດຕາ

ເງື່ອນໄຂທີ່ຈະເປັນການທ່ອງທ່ຽວທາງເພດເດັກ ຕ້ອງປະກອບມີ 4 ເງື່ອນໄຂຄື: 1. ເດີນທາງຈາກປະເທດໜຶ່ງໄປຍັງປະເທດອື່ນ ຫຼື ຈາກສະຖານທີ່ໃດໜຶ່ງໄປຍັງສະຖານທີ່ອື່ນ; 2. ການລ່ວງລະເມີດທາງເພດເດັກ; 3. ການສ້າງຄວາມຜູກພັນ, ສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ ແລະ 4. ເຈດຕະນາ.

ເງື່ອນໄຂໃນຂໍ້ 1, 2 ແລະ 3 ແມ່ນອົງປະກອບທາງດ້ານພາວະວິໄສ ແລະ ເງື່ອນໄຂໃນຂໍ້ 4 ແມ່ນອົງປະກອບທາງດ້ານອັດຕະວິໄສ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນ ດັ່ງນີ້:

### 5.1 ເດີນທາງຈາກປະເທດໜຶ່ງໄປຍັງປະເທດອື່ນ ຫຼື ຈາກສະຖານທີ່ໃດໜຶ່ງໄປຍັງສະຖານທີ່ອື່ນ

- **ເດີນທາງຈາກປະເທດໜຶ່ງໄປຍັງປະເທດອື່ນ** ໝາຍເຖິງການເຄື່ອນຍ້າຍຈາກດິນແດນຂອງປະເທດຕົ້ນທາງໄປຍັງປະເທດປາຍທາງ ໂດຍຜ່ານຊາຍແດນລະຫວ່າງປະເທດ ອາດແມ່ນທາງບົກ, ທາງອາກາດ ຫຼື ທາງນ້ຳ ແລະ ມີຈຸດປະສົງຕ່າງໆ ເຊັ່ນ: ທ່ອງທ່ຽວ, ສຶກສາ ຫຼື ເຮັດວຽກ.

- **ເດີນທາງຈາກສະຖານທີ່ໃດໜຶ່ງໄປຍັງສະຖານທີ່ອື່ນ** ໝາຍເຖິງການເຄື່ອນຍ້າຍຈາກຈຸດໜຶ່ງໄປຍັງອີກຈຸດໜຶ່ງ ເພື່ອຈຸດປະສົງບາງຢ່າງ ເຊັ່ນ: ໄປຮຽນ, ໄປເຮັດວຽກ, ໄປຢ້ຽມຢາມຄົນອື່ນ ຫຼື ໄປທ່ອງທ່ຽວ. ອາດຈະໃກ້ ຫຼື ໄກ ເຊັ່ນ: ຈາກເມືອງໜຶ່ງໄປອີກເມືອງໜຶ່ງ, ຈາກບ້ານໄປໃນຕົວເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ແຂວງ.

### 5.2 ການສ້າງຄວາມຜູກພັນ, ສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ

- **ການສ້າງຄວາມຜູກພັນກັບເດັກ** ໝາຍເຖິງ ການສ້າງຄວາມຮັກ, ຄວາມເຊື່ອໃຈ, ຄວາມໄວ້ວາງໃຈ ຫຼື ສ້າງພາບພົດທີ່ດີໜ້າເຊື່ອຖື, ອົບອຸ່ນ ແລະ ໝັ້ນຄົງ ເພື່ອໃຫ້ເດັກຮູ້ສຶກປອດໄພ ດ້ວຍການເຂົ້າສ້າງສຳພັນສ່ວນຕົວ ແລະ ຄອບຄົວເດັກ, ສ້າງບຸນຄຸນດ້ວຍການຊ່ວຍເຫຼືອ, ເບິ່ງແຍງດູແລຄອບຄົວ ແລະ ຕົວເດັກ;

- **ການສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ** ໝາຍເຖິງ ການຈັດ ຫຼື ເຮັດສິ່ງໃດສິ່ງໜຶ່ງຮ່ວມກັບເດັກ ໂດຍມີຈຸດປະສົງເພື່ອສ້າງຄວາມສຳພັນທີ່ດີກັບເດັກ

ດ້ວຍການຫຼິ້ນເກມ, ທ່ອງທ່ຽວ, ອອກກຳລັງກາຍ, ຍ່າງຫຼິ້ນ, ປູກຕົ້ນໄມ້, ເຮັດອາຫານ ຫຼື ອານາໄມຮ່ວມກັນ ເປັນຕົ້ນ;

- **ໃຊ້ວິທີການອື່ນ** ໝາຍເຖິງ ໃຊ້ຮູບການໃດໜຶ່ງທີ່ບໍ່ແມ່ນການສ້າງຄວາມຜູກພັນ ແລະ ສ້າງກິດຈະກຳ ແຕ່ເປັນການກະທຳໃດໜຶ່ງເພື່ອແຍກເດັກອອກຈາກສະພາບແວດລ້ອມທີ່ປອດໄພ ເປັນຕົ້ນ ຊັກຊວນໄປຫຼິ້ນ ຫຼື ໄປທ່ຽວ, ຊັກຊວນໄປທີ່ພັກ, ເຮືອນພັກ ຫຼື ໂຮງແຮມ.

**5.3 ການລ່ວງລະເມີດທາງເພດເດັກ**

ການລ່ວງລະເມີດທາງເພດເດັກ ໝາຍເຖິງ ການສຳພັດອະໄວຍະວະຕ່າງໆທີ່ບໍ່ເໝາະສົມ, ການບັງຄັບຂົ່ມຂູ່ໃຫ້ເດັກສຳພັດອະໄວຍະວະເພດ, ຕົວະຍົວະຫຼອກລວງເດັກໃຫ້ມີກິດຈະກຳທາງເພດ, ມີເພດສຳພັນກັບເດັກ ແລະ ເຜີຍແຜ່ສື່ອານາຈານໃຫ້ກັບເດັກ.

**5.3 ການສ້າງຄວາມຜູກພັນ, ສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ**

- **ການສ້າງຄວາມຜູກພັນກັບເດັກ** ໝາຍເຖິງ ການສ້າງຄວາມຮັກ, ຄວາມເຊື່ອໃຈ, ຄວາມໄວ້ວາງໃຈ ຫຼື ສ້າງພາບພົດທີ່ດີໜ້າເຊື່ອຖື, ອົບອຸ່ນ ແລະ ໝັ້ນຄົງ ເພື່ອໃຫ້ເດັກຮູ້ສຶກປອດໄພ ດ້ວຍການເຂົ້າສ້າງສຳພັນສ່ວນຕົວ ແລະ ຄອບຄົວເດັກ, ສ້າງບຸນຄຸນດ້ວຍການຊ່ວຍເຫຼືອ, ເບິ່ງແຍງດູແລຄອບຄົວ ແລະ ຕົວເດັກ;

- **ການສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ** ໝາຍເຖິງ ການຈັດ ຫຼື ເຮັດສິ່ງໃດສິ່ງໜຶ່ງຮ່ວມກັບເດັກ ໂດຍມີຈຸດປະສົງເພື່ອສ້າງຄວາມສຳພັນທີ່ດີກັບເດັກດ້ວຍການຫຼິ້ນເກມ, ທ່ອງທ່ຽວ, ອອກກຳລັງກາຍ, ຍ່າງຫຼິ້ນ, ປູກຕົ້ນໄມ້, ເຮັດອາຫານ ຫຼື ອານາໄມຮ່ວມກັນ ເປັນຕົ້ນ;

- **ໃຊ້ວິທີການອື່ນ** ໝາຍເຖິງ ໃຊ້ຮູບການໃດໜຶ່ງທີ່ບໍ່ແມ່ນການສ້າງຄວາມຜູກພັນ ແລະ ສ້າງກິດຈະກຳ ແຕ່ເປັນການກະທຳໃດໜຶ່ງເພື່ອແຍກເດັກອອກຈາກສະພາບແວດລ້ອມທີ່ປອດໄພ ເປັນຕົ້ນ ຊັກຊວນໄປຫຼິ້ນ ຫຼື ໄປທ່ຽວ, ຊັກຊວນໄປທີ່ພັກ, ເຮືອນພັກ ຫຼື ໂຮງແຮມ.

### 5.4 ໂດຍເຈດຕະນາ

ໂດຍເຈດຕະນາ ໝາຍເຖິງຜູ້ກະທຳໄດ້ຮັບຮູ້ວ່າການກະທຳຂອງຕົນເປັນການເດີນທາງໄປຍັງສະຖານທີ່ໃດໜຶ່ງ, ຮູ້ວ່າເປັນການສ້າງຄວາມຜູກພັນ, ສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ ເພື່ອຈຸດປະສົງລ່ວງລະເມີດທາງເພດເດັກ ແຕ່ກໍຍັງຈົງໃຈເຮັດ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສາດັ່ງກ່າວເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າ ການທີ່ X ເດີນທາງໄປທ່ຽວແຂວງໜຶ່ງຢູ່ພາຍໃນປະເທດຂອງຕົນນັ້ນ ໝາຍຄວາມວ່າ X ໄດ້ເຄື່ອນຍ້າຍຈາກຈຸດໜຶ່ງໄປຍັງອີກຈຸດໜຶ່ງ ເຊັ່ນ ຈາກເມືອງໜຶ່ງໄປອີກເມືອງໜຶ່ງ, ຈາກບ້ານໄປໃນຕົວເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ແຂວງ, ຈຶ່ງກົງກັບເງື່ອນໄຂຂໍ້ 5.1 ວັກສອງ ກ່ຽວກັບການການເດີນທາງຈາກສະຖານທີ່ໃດໜຶ່ງໄປຍັງສະຖານທີ່ອື່ນ;

ການທີ່ X  ໄດ້ເຂົ້າທັກທາຍໂອ້ລົມ ແລະ ສ້າງພາບພົດຕົນເອງໃຫ້ B ເຫັນວ່າເປັນຄົນດີມີນ້ຳໃຈ, ມັກຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ ເພື່ອເຮັດໃຫ້ B ເຊື່ອໃຈ ແລະ ໄວ້ວາງໃຈນັ້ນ ໝາຍຄວາມວ່າເປັນການສ້າງຄວາມຮັກ, ຄວາມເຊື່ອໃຈ, ຄວາມໄວ້ວາງໃຈ ຫຼື ສ້າງພາບພົດທີ່ດີໜ້າເຊື່ອຖື, ອົບອຸ່ນ ແລະ ໝັ້ນຄົງ ເພື່ອໃຫ້ເດັກຮູ້ສຶກປອດໄພ  ດ້ວຍການເຂົ້າສ້າງສຳພັນສ່ວນຕົວກັບເດັກ, ການກະທຳດັ່ງກ່າວຈຶ່ງກົງກັບເງື່ອນໄຂຂໍ້ 5.2 ວັກໜຶ່ງ ກ່ຽວກັບການສ້າງຄວາມຜູກພັນກັບເດັກ;

ການທີ່ X ໄດ້ເສບສົມຮ່ວມເພດກັບ B ທີ່ມີອາຍຸພຽງ 17 ປີນັ້ນ ໝາຍຄວາມວ່າ X ໄດ້ມີເພດສຳພັນກັບເດັກ, ການກະທຳດັ່ງກ່າວຈຶ່ງກົງກັບເງື່ອນໄຂຂໍ້ 5.3 ກ່ຽວກັບການລ່ວງລະເມີດທາງເພດເດັກ;

ການທີ່ X ເດີນທາງໄປທ່ຽວໂດຍມີຈຸດປະສົງ ເພື່ອຊອກຫາເດັກ ຈຶ່ງໄດ້ພົບກັບ B ທີ່ມີອາຍຸ 17 ປີນັ້ນ ກໍສະແດງໃຫ້ເຫັນວ່າ X ມີແນວຄິດເພື່ອລ່ວງລະເມີດທາງ

ເພດເດັກ ຊຶ່ງແນວຄິດດັ່ງກ່າວນີ້ເກີດຂຶ້ນກ່ອນທີ່ຈະເດີນທາງໄປຍັງສະຖານທີ່ໃດໜຶ່ງ, ການກະທຳດັ່ງກ່າວຈຶ່ງກົງກັບເງື່ອນໄຂໂດຍເຈດຕະນາ;

ດັ່ງນັ້ນ, ເມື່ອພິຈາລະນາຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ການກະທຳຂອງ X ຄົບເງື່ອນໄຂການກະທຳຜິດສະຖານການທ່ອງທ່ຽວທາງເພດເດັກ ຈຶ່ງເປັນການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ ຕາມມາດຕາ 262 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້ທີ 1**

ຈາກກໍລະນີສຶກສາ 1 ທີ່ໄດ້ດັດແກ້ທີ 1 ນີ້, ການທີ່ X ບໍ່ໄດ້ຊັກຊວນ B ໄປໂຮງແຮມທີ່ຕົນພັກ ແຕ່ໄດ້ຊັກຊວນພາໄປຮ້ານອາຫານ ນີ້ກໍສະແດງວ່າເດັກບໍ່ໄດ້ຖືກແຍກອອກຈາກສະພາບແວດລ້ອມທີ່ປອດໄພ ໝາຍຄວາມວ່າເດັກຍັງຢູ່ໃນສະພາບແວດລ້ອມທີ່ປອດໄພຢູ່, ເນື່ອງຈາກວ່າຮ້ານອາຫານຍັງຖືວ່າແມ່ນສະຖານທີ່ທີ່ເປີດເຜີຍ, ຄົນເຂົ້າອອກໄດ້ຕະຫຼອດເວລາ, ດັ່ງນັ້ນ, ການກະທຳດັ່ງກ່າວຈຶ່ງບໍ່ກົງກັບເງື່ອນໄຂຂໍ້ 5.2 ວັກສາມ ກ່ຽວກັບໃຊ້ວິທີການອື່ນ;

ການທີ່ X ບໍ່ມີຈຸດປະສົງເພື່ອຊອກຫາເດັກ ແຕ່ໄດ້ພົບກັບ B ທີ່ມີອາຍຸ 17 ປີດ້ວຍຄວາມບັງເອີນ ຈະເຫັນໄດ້ວ່າ X ບໍ່ມີແນວຄິດເພື່ອລ່ວງລະເມີດທາງເພດເດັກກ່ອນທີ່ຈະເດີນທາງໄປຍັງສະຖານທີ່ໃດໜຶ່ງ, ເຫັນວ່າແນວຄິດດັ່ງກ່າວເກີດຂຶ້ນພາຍຫຼັງຈາກການເດີນທາງໄປຍັງສະຖານທີ່ໃດໜຶ່ງ, ຈຶ່ງບໍ່ກົງກັບເງື່ອນໄຂໂດຍເຈດຕະນາຂອງການກະທຳຜິດສະຖານການທ່ອງທ່ຽວທາງເພດເດັກ;

ດັ່ງນັ້ນ, ເມື່ອພິຈາລະນາຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ເຫັນວ່າການກະທຳຂອງ X ຂາດເງື່ອນໄຂດ້ານເຈດຕະນາ ແລະ ການໃຊ້ວິທີການອື່ນຂອງການກະທຳຜິດສະຖານການທ່ອງທ່ຽວທາງເພດເດັກ, ຈຶ່ງບໍ່ເປັນການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ ຕາມມາດຕາ 262 ຂອງປະມວນກົດໝາຍອາຍາ.

ເຖິງແນວໃດກໍຕາມການທີ່ X ໄດ້ສຳພັດຈັບບາຍ, ໂອບກອດ ແລະ ຫອມຈູບເດັກ B ຢູ່ຮ້ານອາຫານຊຶ່ງຖືວ່າແມ່ນສະຖານທີ່ທີ່ເປີດເຜີຍນັ້ນ ຖືວ່າເປັນການສວຍໂອກາດ ແລະ ເປັນການກະທຳທີ່ແຕະຕ້ອງເຖິງຄວາມອັບອາຍທາງເພດຂອງ

ເດັກໂດຍຝືນໃຈ, ຊຶ່ງໄປກົງກັບເງື່ອນໄຂຂອງການກະທຳຜິດສະຖານການທຳອານາຈານ, ດັ່ງນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳຜິດທາງອາຍາໃນສະຖານການທຳອານາຈານ ຕາມມາດຕາ 259 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້ທີ 2**

ຈາກກໍລະນີສຶກສາ 1 ທີ່ໄດ້ດັດແກ້ທີ 2 ນີ້, ການທີ່ X ເດີນທາງໄປວຽກງານທາງລັດຖະການນັ້ນ ກໍໝາຍຄວາມວ່າ X ໄດ້ເຄື່ອນຍ້າຍຈາກຈຸດໜຶ່ງໄປຍັງອີກຈຸດໜຶ່ງ ເຊັ່ນ ຈາກເມືອງໜຶ່ງໄປອີກເມືອງໜຶ່ງ, ຈາກບ້ານໄປໃນຕົວເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ແຂວງ, ຈຶ່ງກົງກັບເງື່ອນໄຂຂໍ້ 5.1 ກ່ຽວກັບການເດີນທາງຈາກສະຖານທີ່ໃດໜຶ່ງໄປຍັງສະຖານທີ່ອື່ນ;

ການທີ່ X ໄດ້ຊວນ B ໄປໂຮງແຮມທີ່ຕົນພັກ ອ້າງວ່າມີຂອງຂວັນຈະໃຫ້ເປັນໄອໂຟນໃໝ່ລ່າສຸດ, B ເຊື່ອຈຶ່ງໄດ້ໄປນຳ ເມື່ອມາຮອດໂຮງແຮມແລ້ວ X ບອກໃຫ້ B ຮ່ວມເພດກັບຕົນກ່ອນຈຶ່ງຈະໃຫ້ຂອງຂວັນທີ່ວ່າ, ເມື່ອພິຈາລະນາແລ້ວເຫັນວ່າ ການກະທຳຂອງ X ເປັນການກະທຳໃດໜຶ່ງເພື່ອແຍກເດັກອອກຈາກສະພາບແວດລ້ອມທີ່ປອດໄພ ດ້ວຍການຊັກຊວນໄປໂຮງແຮມທີ່ຕົນພັກ, ຈຶ່ງກົງກັບເງື່ອນໄຂຂໍ້ 5.2 ວັກສາມ ກ່ຽວກັບໃຊ້ວິທີການອື່ນ;

ແລະການທີ່ X ໄດ້ຊອກຫາເດັກຫຼັງຈາກສຳເລັດວຽກງານນັ້ນ ຈຶ່ງໄດ້ພົບກັບເດັກ B ນີ້ສະແດງໃຫ້ເຫັນວ່າ X ມີແນວຄິດເພື່ອລ່ວງລະເມີດທາງເພດເດັກ. ແຕ່ແນວຄິດນີ້ບໍ່ໄດ້ເກີດຂຶ້ນກ່ອນທີ່ຈະເດີນທາງໄປຍັງສະຖານທີ່ໃດໜຶ່ງ ແນວຄິດດັ່ງກ່າວເກີດຂຶ້ນພາຍຫຼັງ, ຈຶ່ງບໍ່ກົງກັບເງື່ອນໄຂໂດຍເຈດຕະນາຂອງການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ;

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ເຫັນວ່າການກະທຳຂອງ X ຂາດເງື່ອນໄຂດ້ານເຈດຕະນາຂອງການກະທຳຜິດສະຖານການທ່ອງທ່ຽວທາງເພດເດັກ ຈຶ່ງບໍ່ເປັນການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ ຕາມມາດຕາ 262 ຂອງປະມວນກົດໝາຍອາຍາ.

ເຖິງແນວໃດກໍຕາມການກະທຳຂອງ X ໄດ້ໄປກົງກັບເງື່ອນໄຂການກະທຳຜິດສະຖານການທຳຊຳເລົາເດັກ ດ້ວຍການຮ່ວມເພດກັບເດັກທີ່ມີອາຍຸຕ່ຳກວ່າ 18 ປີ ດ້ວຍການຕົວະຍົວະ, ຊວນເຊື່ອ ຫຼື ຈອບອອຍ ເພື່ອໃຫ້ເດັກສົມຍອມ ແລະ ປະຕິບັດຕາມ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳຜິດໃນສະຖານການທຳຊຳເລົາເດັກ ຕາມມາດຕາ 250 ຂອງປະມວນກົດໝາຍອາຍາ.

**6.2 ຄາຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສາດັ່ງກ່າວເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າ ການທີ່ X ເດີນທາງມາທ່ຽວປະເທດລາວນັ້ນ ໝາຍຄວາມວ່າ X ໄດ້ເຄື່ອນຍ້າຍຈາກດິນແດນຂອງປະເທດຕົ້ນທາງໄປຍັງປະເທດປາຍທາງ ໂດຍຜ່ານຊາຍແດນລະຫວ່າງປະເທດ ອາດເປັນທາງບົກ, ທາງອາກາດ ຫຼື ທາງນ້ຳ ແລະ ມີຈຸດປະສົງ, ຈຶ່ງກົງກັບເງື່ອນໄຂຂໍ້ 5.1 ວັກໜຶ່ງ ກ່ຽວກັບການເດີນທາງຈາກປະເທດໜຶ່ງໄປຍັງປະເທດອື່ນ;

ການທີ່ X ໄດ້ໂອ້ລົມ ແລະ ສ້າງຄວາມສະໜິດສະໜົມກັບ C ເຮັດໃຫ້ເຊື່ອໃຈ, ໄວ້ໃຈ. ນີ້ກໍໝາຍຄວາມວ່າ ເປັນການສ້າງຄວາມຮັກ, ຄວາມເຊື່ອໃຈ, ຄວາມໄວ້ວາງໃຈ ຫຼື ສ້າງພາບພົດທີ່ດີໜ້າເຊື່ອຖື, ອົບອຸ່ນ ແລະ ໝັ້ນຄົງ ເພື່ອໃຫ້ເດັກຮູ້ສຶກປອດໄພ ດ້ວຍການເຂົ້າສ້າງສຳພັນສ່ວນຕົວກັບເດັກ, ການກະທຳດັ່ງກ່າວຈຶ່ງຖືວ່າເປັນການສ້າງຄວາມຜູກພັນກັບເດັກ. ການຊັກຊວນເດັກ C ໃຫ້ພາໄປທ່ຽວຫຼິ້ນສະຖານທີ່ຕ່າງໆທາງທຳມະຊາດທີ່ເປັນແຫຼ່ງທ່ອງທ່ຽວ ໂດຍຈະໃຫ້ຄ່າຈ້າງນຳທ່ຽວສູງພິເສດ ແລະ ຊື້ເຄື່ອງນຸ່ງ, ໂທລະສັບໃຫ້ ນີ້ກໍສະແດງໃຫ້ເຫັນວ່າ X ໄດ້ຈັດ ຫຼື ເຮັດສິ່ງໃດສິ່ງໜຶ່ງຮ່ວມກັບເດັກ ໂດຍມີຈຸດປະສົງເພື່ອສ້າງຄວາມສຳພັນທີ່ດີກັບເດັກດ້ວຍການຈັດການທ່ອງທ່ຽວ ນີ້ກໍຖືວ່າເປັນການສ້າງກິດຈະກຳຮ່ວມກັບເດັກ ແລະການທີ່ຊັກຊວນເດັກໃຫ້ພາໄປທ່ຽວຫຼິ້ນສະຖານທີ່ຕ່າງໆທາງທຳມະຊາດ ອັນນີ້ກໍເປັນການແຍກເດັກອອກຈາກສະພາບແວດລ້ອມທີ່ປອດໄພ ຈຶ່ງຖືວ່າເປັນການໃຊ້ວິທີການອື່ນ;

ການທີ່ X ສວຍໂອກາດສຳພັດ, ຈັບບາຍ, ເວົ້າຈາລາມົກ, ຊື່ນຊົມ C ໄປເລື້ອຍໆ ໃນເວລາເດີນທ່ຽວຮ່ວມກັນ, ຈາກນັ້ນກໍພາ C ມາໂຮງແຮມທີ່ຕົນພັກ ແລ້ວຮ່ວມເພດນຳ ນີ້ກໍໝາຍຄວາມວ່າ ໄດ້ມີການສຳພັດ ແລະ ມີເພດສຳພັນກັບເດັກ, ການກະທຳດັ່ງກ່າວຈຶ່ງກົງກັບເງື່ອນໄຂກ່ຽວກັບການລ່ວງລະເມີດທາງເພດເດັກ;

ແລະການທີ່ X ມາທ່ຽວປະເທດລາວ ໂດຍມີຈຸດປະສົງເພື່ອຊອກຫາເດັກ ແລະ ໄດ້ຮູ້ຈັກກັບ Y ທີ່ເປັນພະນັກງານຕ້ອນຮັບຂອງໂຮງແຮມແຫ່ງໜຶ່ງ ແລ້ວໃຫ້ Y ໄປຊອກເດັກໃຫ້ໂດຍຈະໃຫ້ຄ່າຕອບແທນເປັນເງິນ. ນີ້ກໍສະແດງໃຫ້ເຫັນແລ້ວວ່າ X ມີແນວຄິດເພື່ອລ່ວງລະເມີດທາງເພດເດັກ ຊຶ່ງແນວຄິດດັ່ງກ່າວນີ້ເກີດຂຶ້ນກ່ອນທີ່ຈະເດີນທາງມາຍັງປະເທດລາວ, ຈຶ່ງກົງກັບເງື່ອນໄຂໂດຍເຈດຕະນາ;

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ການກະທຳຂອງ X ຄົບເງື່ອນໄຂການກະທຳຜິດສະຖານການທ່ອງທ່ຽວທາງເພດເດັກ ຈຶ່ງເປັນການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ ຕາມມາດຕາ 262 ຂອງປະມວນກົດໝາຍອາຍາ.

ສ່ວນ Y ແມ່ນ ເປັນຄົນຕິດຕໍ່, ຈັດຫາ, ອຳນວຍຄວາມສະດວກ ພາ C ທີ່ມີອາຍຸ 16 ປີ ມາພົບ X ແລະ ຜູ້ກ່ຽວກໍຮັບຮູ້ຈຸດປະສົງຂອງ X. ຕໍ່ກັບການກະທຳຂອງ Y ໃນຄັ້ງນີ້ ແມ່ນເປັນການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ ຕາມມາດຕາ 262 ວັກ 02 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາທີ່ໄດ້ດັດແກ້ນີ້ ເຫັນວ່າ X ແລະ Y ແມ່ນມີເຈຕະນາຮ່ວມກັນກະທຳຜິດໃນການຈະລ່ວງລະເມີດທາງເພດເດັກ, ແຕ່ຍ້ອນເດັກຮູ້ທັນວ່າ X ມີເຈຕະນາບໍ່ດີເມື່ອມີໂອກາດກໍໄດ້ເອົາຕົວລົບໜີ. ຕໍ່ກັບການກະທຳຂອງ X ແລະ Y ໃນເຫດການຄັ້ງນີ້ແມ່ນບໍ່ເປັນການກະທຳຜິດໃນສະຖານການທ່ອງທ່ຽວທາງເພດເດັກ ຕາມມາດຕາ 262 ຂອງປະມວນກົດໝາຍອາຍາ ເນື່ອງຈາກວ່າມາດຕານີ້ ບໍ່ມີກຳນົດການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດສະຖານການທ່ອງທ່ຽວທາງເພດເດັກເຫັນວ່າມີປະເດັນບັນຫາໃນການພິຈາລະນາດັ່ງລຸ່ມນີ້:

1. ກ່ຽວກັບຜູ້ກະທຳຜິດ ໃນມາດຕານີ້ ພວກເຮົາຍັງເຫັນວ່າຄວາມເຂົ້າໃຈຂອງຜູ້ອ່ານ, ຜູ້ຄົ້ນຄວ້າຍັງເຫັນບໍ່ເປັນເອກະພາບກັນ ຍັງສົງໄສວ່າແມ່ນໃຜເປັນຜູ້ກະທຳຜິດໃນມາດຕານີ້ ຄົນຕ່າງປະເທດ ຫຼື ຄົນລາວ ຫຼື ແມ່ນທັງຄົນຕ່າງປະເທດ ແລະ ຄົນລາວ ແລະ ເປັນນັກທ່ອງທ່ຽວ ຫຼື ບໍ່ເປັນນັກທ່ອງທ່ຽວ;

2. ຢູ່ໃນປະໂຫຍກຄຳວ່າເດີນທາງຈາກສະຖານທີ່ນີ້ ໄປຫາສະຖານທີ່ອື່ນ ແມ່ນກວມເອົາທັງຄົນລາວ ແລະ ຄົນຕ່າງປະເທດບໍ ຫຼື ໝາຍຄວາມວ່າ ມີແຕ່ຄົນລາວເທົ່ານັ້ນ;

3. ກ່ຽວກັບສະຖານທີ່ນີ້ ໄປຫາສະຖານທີ່ອື່ນ ເຮົາຄວນກຳນົດມີຂອບເຂດເລີຍບໍ ເຊັ່ນ: ຈາກເມືອງໜຶ່ງໄປອີກເມືອງໜຶ່ງ, ຈາກບ້ານໄປໃນຕົວເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ແຂວງ;

4. ກ່ຽວກັບການກະທຳຕໍ່ເດັກໃນມາດຕານີ້ ເຮົາຄວນກຳນົດຂອບເຂດອາຍຸດີບໍ ເຊັ່ນ: ຫາກກະທຳຕໍ່ເດັກອາຍຸຕໍ່າກວ່າ 18 ປີລົງຫາອາຍຸ 12 ປີໃຫ້ມີຄວາມຄວາມຮັບຜິດຊອບຕາມມາດຕາ 262, ແຕ່ຖ້າຫາກກະທຳຕໍ່ເດັກອາຍຸຕໍ່າກວ່າ 12 ປີລົງມາບໍ່ຖືວ່າເປັນການກະທຳຜິດໃນມາດຕານີ້ ແຕ່ໃຫ້ເປັນການກະທຳຜິດໃນສະຖານອື່ນ ເຊັ່ນ: ສະຖານຂົ່ມຂືນທຳຊຳເລົາເດັກ ຫຼື ການທຳຊຳເລົາເດັກ ຫຼື ການທຳອະນາຈານ;

5. ການກະທຳຜິດກ່ຽວກັບການລ່ວງລະເມີດທາງເພດນີ້ກໍມີຫຼາຍມາດຕາຄາດກ່ຽວກັນທີ່ໄດ້ກຳນົດການລົງໂທດ, ຍັງຈຳເປັນບໍ ຕ້ອງມີມາດຕາ 262 ອີກໃນປະມວນກົດໝາຍອາຍາ;

ເພື່ອຄົ້ນຄວ້າພິຈາລະນາປັບປຸງແກ້ໄຂໃນອານາຄົດ ຈຶ່ງຈະສາມາດຄອບຄຸມພຶດຕິກຳໄດ້ສະເພາະເຈາະຈົງຢ່າງສອດຄ່ອງກັບວັດຖຸປະສົງການບັນຍັດມາດຕານີ້.

# ແຜ່ນວາດສະແດງເຖິງການກະທຳຜິດສະຖານທ່ອງທ່ຽວ ທາງເພດເດັກ



# ບົດທີ 11

# ການຜະລິດ, ຂາຍສິນຄ້າປອມ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

A ເປັນເຈົ້າຂອງເຄື່ອງສຳອາງຍີ່ຫໍ້ນາງຟ້າທີ່ໄດ້ຮັບຄວາມນິຍົມ, ຂາຍດີ ແລະ ເປັນທີ່ຮູ້ຈັກໃນທົ່ວສັງຄົມ. X ເຫັນວ່າສິນຄ້າດັ່ງກ່າວໄດ້ຂາຍດີ ຈຶ່ງໄດ້ຄິດຄົ້ນ ແລະ ປຸງແຕ່ງຜະລິດຕະພັນໃໝ່ຂຶ້ນມາໂດຍໃສ່ຊື່, ຍີ່ຫໍ້ ແລະ ລັກສະນະພິເສດຄືກັນກັບເຄື່ອງສຳອາງຍີ່ຫໍ້ນາງຟ້າທຸກຢ່າງ ແຕ່ສ່ວນປະກອບຂອງເນື້ອຄຣີມເປັນສູດສະເພາະທີ່ X ຄິດຂຶ້ນມາເອງແລ້ວນຳໄປໂຄສະນາຂາຍ.

**ກໍລະນີສຶກສາທີ 1 ດັດແກ້**: ກໍລະນີ X ປຸງແຕ່ງເຄື່ອງສຳອາງຂຶ້ນມາແລ້ວບັງເອີນການໃສ່ຊື່, ຍີ່ຫໍ້ ແລະ ສີ ໄປກົງກັບຜະລິດຕະພັນຂອງ A ແຕ່ສ່ວນປະກອບແຕກຕ່າງກັນ.

### 1.2 ກໍລະນີສຶກສາທີ 2

X ເປັນຊ່າງຫັດຖະກຳທີ່ມີຄວາມສາມາດໃນການເຮັດກະເປົາໜັງ, X ເຫັນວ່າ Y ແຟນຂອງຕົນມີຄວາມມັກໃນກະເປົາຍີ່ຫໍ້ດັງຂອງ A ທີ່ຫາກໍອອກຈຳໜ່າຍ, ຕົນຢາກຊື້ກະເປົາໃຫ້ແຟນ ແຕ່ເນື່ອງຈາກລາຄາກະເປົານັ້ນສູງເກີນໄປ ຈຶ່ງໄດ້ເຮັດກະເປົາຂຶ້ນມາດ້ວຍມືຂອງຕົນເພື່ອນຳໄປໃຫ້ແຟນນຳໃຊ້ໂດຍບໍ່ມີເຈດຕະນານຳໄປຂາຍແຕ່ຢ່າງໃດ ໂດຍທີ່ບໍ່ໄດ້ບອກແຟນວ່າກະເປົາດັ່ງກ່າວນັ້ນຜະລິດຂຶ້ນມາດ້ວຍຝີມືຂອງຕົນ. ຫຼັງຈາກນັ້ນ Y ຈຶ່ງໄດ້ນຳເອົາກະເປົາດັ່ງກ່າວໄປນຳໃຊ້ເພື່ອອອກງານຕ່າງໆ.

**ກໍລະນີສຶກສາທີ 2 ດັດແກ້ທີ 1**: ໃນກໍລະນີທີ່ Y ເຫັນວ່າກະເປົາທີ່ X ເອົາໃຫ້ນັ້ນມີຄວາມງາມຈຶ່ງໄດ້ເອົາກະເປົາໜ່ວຍດັ່ງກ່າວໄປຂາຍຕໍ່. ໂດຍທີ່ບໍ່ຮູ້ມາກ່ອນວ່າເປັນກະເປົາທີ່ X ເຮັດຂຶ້ນມາເອງ.

**ກໍລະນີສຶກສາທີ 2 ດັດແກ້ທີ 2**: ໃນກໍລະນີທີ່ X ໄດ້ບອກ Y ແລ້ວວ່າກະເປົາໜ່ວຍດັ່ງກ່າວນັ້ນ X ເຮັດຂຶ້ນມາເອງ ແຕ່ Y ກໍຍັງນຳໄປຂາຍຕໍ່.

**1.3 ກໍລະນີສຶກສາທີ 3**

X ໄດ້ເປີດໂຮງງານນໍ້າດື່ມ "CHANG" ເພື່ອຂາຍແຕ່ບໍ່ໄດ້ຮັບຄວາມນິຍົມເທົ່າທີ່ຄວນ, X ເຫັນວ່ານໍ້າດື່ມ "DOK CHAMPA" ຂອງ A ເປັນທີ່ນິຍົມ ແລະ ຂາຍດີ, ເພື່ອໃຫ້ນໍ້າດື່ມຂອງຕົນໄດ້ຂາຍດີຂຶ້ນ X ຈຶ່ງໄດ້ປ່ຽນບັນຈຸພັນ, ໂລໂກ, ສີ ແລະ ຊື່ນໍ້າດື່ມຈາກ "CHANG" ມາເປັນນໍ້າດື່ມ "DOK CHAMPE" ເຮັດໃຫ້ຄົນທົ່ວໄປເຂົ້າໃຈວ່າເປັນນໍ້າດື່ມຍີ່ຫໍ້ "DOK CHAMPA".

**ກໍລະນີສຶກສາທີ 3 ດັດແກ້**: ໃນກໍລະນີທີ່ X ໄດ້ປ່ຽນບັນຈຸພັນໃໝ່ໃຫ້ມີເປັນເອກະລັກຂອງຕົນ, ໃສ່ໂລໂກ, ຊື່ນໍ້າດື່ມຍັງໃສ່ຊື່ "CHANG" ຄືເກົ່າ ແຕ່ສີບັງເອີນໄປຄືກັບນໍ້າດື່ມ "DOK CHAMPA".

## 2. ມາດຕາ 288

ບຸກຄົນໃດຫາກຜະລິດ, ຂາຍສິນຄ້າປອມ ຫຼື ຮຽນແບບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

## 3. ເຫດຜົນການບັນຍັດມາດຕາ

ເມື່ອພິຈາລະນາເຖິງສະພາບສັງຄົມຂອງ ສປປ ລາວ ແລ້ວເຫັນວ່າການຜະລິດ, ຂາຍສິນຄ້າປອມສ້າງຄວາມເສຍຫາຍຕໍ່ສິດ ແລະ ຜົນປະໂຫຍດຂອງເຈົ້າຂອງສິນຄ້າ, ເຄື່ອງໝາຍການຄ້າ. ດ້ວຍເຫດນີ້, ການຜະລິດ, ຂາຍສິນຄ້າປອມຈຶ່ງຖືກນຳມາບັນຍັດໄວ້ເປັນການກະທຳຜິດໃນປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 288 ຂອງປະມວນກົດໝາຍອາຍາບັນຍັດໄວ້ເພື່ອປົກປ້ອງແນວຄວາມຄິດ, ສະຕິປັນຍາທີ່ຕິດພັນກັບຜົນປະໂຫຍດ ແລະ ຫົວຄິດປະດິດສ້າງຂອງບຸກຄົນອື່ນບໍ່ໃຫ້ຖືກລະເມີດ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທຳຜິດສະຖານການຜະລິດ ແລະ ການຂາຍສິນຄ້າປອມ ຈະຕ້ອງປະກອບດ້ວຍ 3 ເງື່ອນໄຂຄື: 1. ມີການຜະລິດ ຫຼື ຂາຍ; 2. ສິນຄ້າປອມ ຫຼື ຮຽນແບບ; ແລະ 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ແລະ ຂໍ້ທີ 2 ເປັນອົງປະກອບດ້ານພາວະວິໄສຂອງການກະທຳຜິດ ສ່ວນເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

### 5.1 ມີການຜະລິດ ຫຼື ຂາຍ

- **ມີການຜະລິດ:** ການຜະລິດໃນຄວາມໝາຍຂອງກົດໝາຍໃນມາດຕາ 288 ຕ້ອງປະກອບດ້ວຍ 2 ສ່ວນຄື: 1) ການຜະລິດ ແລະ 2) ເພື່ອຈຸດປະສົງໃດໜຶ່ງ ເຊັ່ນ: 1) ການຜະລິດ ໝາຍເຖິງການນຳເອົາວັດຖຸສິ່ງຂອງ, ວັດຖຸດິບ, ສານຕັ້ງຕົ້ນມາປຸງແຕ່ງໂດຍຜ່ານຂະບວນການ, ຂັ້ນຕອນໃນຮູບແບບຕ່າງໆ ໃຫ້ໄດ້ຜະລິດຕະພັນໃໝ່ໃດໜຶ່ງອອກມາ; 2) ເພື່ອຈຸດປະສົງໃດໜຶ່ງເຊັ່ນ: ເພື່ອຂາຍ, ຈຳໜ່າຍ, ແລກປ່ຽນ ຫຼື ນຳໃຊ້.

- **ມີການຂາຍ:** ໝາຍເຖິງການເອົາສິນຄ້າ ຫຼື ຜະລິດຕະພັນໃດໜຶ່ງທີ່ຄື ຫຼື ຄ້າຍຄືສິນຄ້າຂອງຄົນອື່ນທີ່ມີຢູ່ກ່ອນແລ້ວ ຫຼື ສິນຄ້າທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າກ່ອນແລ້ວນຳໄປຂາຍ, ຈຳໜ່າຍ, ໂຄສະນາໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິນຄ້າ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນ. ຕົວຢ່າງ: ການນຳເອົາເສື້ອຜ້າໄປວາງຈຳໜ່າຍຕາມທ້ອງຕະຫຼາດ, ການນຳເອົາກະເປົາໄປໂຄສະນາຂາຍໃນຮູບແບບຕ່າງໆ.

### 5.2 ສິນຄ້າປອມ ຫຼື ຮຽນແບບ

- **ສິນຄ້າປອມ** ໝາຍເຖິງສິນຄ້າ ຫຼື ຜະລິດຕະພັນທີ່ຜະລິດຂຶ້ນມາໃຫ້ຄືກັບສິນຄ້າຂອງຜູ້ອື່ນທີ່ມີຢູ່ກ່ອນແລ້ວ ຫຼື ໄດ້ຈົດທະບຽນເຄື່ອງໝາຍການຄ້າໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງເຄື່ອງໝາຍການຄ້າ. ສິນຄ້າປອມມັກໃຊ້ໂລໂກ, ບັນຈຸພັນ, ຊື່, ຍີ່ຫໍ້ ແລະ ການອອກແບບໃຫ້ຄືກັບສິນຄ້າທີ່ເປັນຂອງແທ້ ຊຶ່ງບໍ່ສາມາດຈຳແນກຄວາມແຕກຕ່າງຂອງສິນຄ້າໄດ້ ຫຼື ຈຳແນກຄຸນລັກສະນະສະເພາະໄດ້ຍາກ.

ຕົວຢ່າງ: ການປອມເຄື່ອງໝາຍການຄ້າປະເພດເຄື່ອງດື່ມທີ່ມີທາດເຫຼົ້າ, ນ້ຳອັດລົມ, ເຄື່ອງດື່ມຊູກຳລັງໂດຍໃຊ້ບັນຈຸພັນ, ສະຫຼາກ ຫຼື ໂລໂກທີ່ຄືກັບສິນຄ້າຂອງແທ້.




**ສິນຄ້າຂອງແທ້** **ສິນຄ້າປອມ**

- **ສິນຄ້າຮຽນແບບ** ໝາຍເຖິງສິນຄ້າ ຫຼື ຜະລິດຕະພັນທີ່ຜະລິດຂຶ້ນເພື່ອໃຫ້ມີລັກສະນະຄ້າຍຄືສິນຄ້າຂອງແທ້ທີ່ມີຢູ່ກ່ອນ ຫຼື ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວ ໂດຍການຮຽນແບບອົງປະກອບຕ່າງໆ ຂອງສິນຄ້າຂອງແທ້ ເຊັ່ນ: ການຮຽນແບບ ຮູບຊົງ, ສີສັນ, ບັນຈຸພັນ, ໂລໂກທີ່ມີສີ ຫຼື ຮູບແບບ ຄ້າຍຄືກັນ, ການໃສ່ຊື່ທີ່ມີການດັດແປງຕົວອັກສອນ ແລະ ການອອກສຽງຄ້າຍຄືກັນ. ເພື່ອສ້າງຄວາມສັບສົນໃຫ້ແກ່ຜູ້ຊົມໃຊ້ໃຫ້ເຂົ້າໃຈຜິດວ່າແມ່ນສິນຄ້າດຽວກັນ ຫຼື ມາຈາກຜູ້ຜະລິດດຽວກັນ ຕົວຢ່າງ: ນ້ຳອັດລົມ “PEPSI” ແຕ່ຮຽນແບບສິນຄ້າເປັນ “PEBSI”. ໃນນີ້ຈະສັງເກດເຫັນວ່າຊື່ຂອງນ້ຳອັດລົມຈະປ່ຽນພຽງແຕ່ຕົວອັກສອນຕົວດຽວຄືຈາກ P ເປັນ B ເທົ່ານັ້ນ.




**ສິນຄ້າຂອງແທ້** **ສິນຄ້າຮຽນແບບ**

### 5.3 ໂດຍເຈດຕະນາ

ໂດຍເຈດຕະນາ ໝາຍເຖິງເຈດຕະນາຜະລິດ, ຂາຍສິນຄ້າປອມໝາຍເຖິງຜູ້ກະທຳຜິດຮູ້ດີວ່າການກະທຳຂອງຕົນເປັນການຜະລິດ, ຂາຍສິນຄ້າ ຫຼື ຜະລິດຕະພັນທີ່ມີຢູ່ກ່ອນ ຫຼື ສິນຄ້າທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວ ແລະ ການກະທຳດັ່ງກ່າວເພື່ອໃຫ້ໄດ້ຜົນປະໂຫຍດຈາກການຜະລິດ, ຂາຍສິນຄ້າປອມນັ້ນ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສາດັ່ງກ່າວນີ້ເຫັນວ່າການທີ່ X ໄດ້ຄິດຄົ້ນ ແລະ ປຸງແຕ່ງຜະລິດຕະພັນໃໝ່ຂຶ້ນມານັ້ນ ເປັນການນຳເອົາວັດຖຸສິ່ງຂອງ, ວັດຖຸດິບ, ສານຕັ້ງຕົ້ນມາປຸງແຕ່ງຜ່ານຂະບວນການ, ຂັ້ນຕອນໃນຮູບແບບຕ່າງໆ ເພື່ອສ້າງຜະລິດຕະພັນໃໝ່ຂຶ້ນມາກໍ່ຄືຄີມຍີ່ຫໍ້ນາງຟ້າແລ້ວນຳເອົາໄປໂຄສະນາຂາຍ. ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ 5.1 ກ່ຽວກັບການຜະລິດ, ຂາຍ.

ການທີ່ X ໄດ້ປຸງແຕ່ງຜະລິດຕະພັນໃໝ່ຂຶ້ນມາດ້ວຍສູດສະເພາະຂອງຕົນແຕ່ໃສ່ຊື່, ຍີ່ຫໍ້ ແລະ ລັກສະນະຄືກັນກັບສິນຄ້າຂອງ A ທີ່ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວນັ້ນ ຖືເປັນການເຮັດໃຫ້ຜູ້ຊົມໃຊ້ບໍ່ສາມາດຈຳແນກໄດ້ເຖິງຄວາມແຕກຕ່າງ ແລະ ສ້າງຄວາມສັບສົນໃນການຈຳແນກລັກສະນະສະເພາະຂອງສິນຄ້າ. ດັ່ງນັ້ນ, ເຖິງວ່າຜະລິດຕະພັນດັ່ງກ່າວຈະເກີດຈາກການປຸງແຕ່ງດ້ວຍສູດທີ່ຕົນຄິດຄົ້ນຂຶ້ນມາກໍ່ຕາມ ແຕ່ຖືວ່າເປັນສິນຄ້າປອມ. ເມື່ອນຳປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ທີ 5.2 ວັກໜຶ່ງກ່ຽວກັບສິນຄ້າປອມ.

X ຮູ້ວ່າການປຸງແຕ່ງຜະລິດຕະພັນໃໝ່ຂຶ້ນມານັ້ນ ຄືກັນກັບຊື່, ຍີ່ຫໍ້ ແລະ ລັກສະນະຂອງສິນຄ້າບຸກຄົນອື່ນ ແຕ່ຍັງຈົງໃຈຜະລິດຂຶ້ນມາ ແລະ ການທີ່ເອົາຜະລິດຕະພັນດັ່ງກ່າວໄປໂຄສະນາຂາຍກໍເພື່ອໃຫ້ໄດ້ຜົນປະໂຫຍດໃຫ້ແກ່ຕົນ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.3 ການກະທຳຜິດໂດຍເຈດຕະນາ.

ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຜະລິດ, ຂາຍສິນຄ້າປອມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້ເຫັນວ່າການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ແລ້ວ, ການກະທຳດັ່ງກ່າວຄົບຕາມເງື່ອນ ໄຂຂໍ້ທີ 5.1 ການຜະລິດ, ຂາຍ ແລະ ຂໍ້ທີ 5.2. ສິນຄ້າປອມ ຫຼື ຮຽນແບບ. ເຖິງຢ່າງໃດກໍຕາມ, ເຫັນວ່າ X ບໍ່ຮູ້ມາກ່ອນວ່າຜະລິດຕະພັນດັ່ງກ່າວນັ້ນຄົນອື່ນໄດ້ຜະລິດຂຶ້ນມາກ່ອນແລ້ວ. ໝາຍຄວາມວ່າ X ບໍ່ໄດ້ຈົງໃຈຮຽນແບບຜະລິດຕະພັນ ຫຼື ສິນຄ້າຂອງຄົນອື່ນ. ສະນັ້ນ, ການກະທຳຂອງ X ຈຶ່ງຂາດເງື່ອນໄຂຂໍ້ 5.3 ໝາຍຄວາມວ່າ X ກະທຳໄປໂດຍບໍ່ເຈດຕະນາ.

ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂດ້ານເຈດຕະນາຂອງການກະທຳຜິດ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຜະລິດ, ຂາຍສິນຄ້າປອມຕາມທີ່ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າ X ໄດ້ເຮັດກະເປົາຂຶ້ນມາດ້ວຍຕົນເອງແລ້ວໃຫ້ແຟນໄປນຳໃຊ້ນັ້ນເປັນການນຳເອົາວັດຖຸສິ່ງຂອງ, ວັດຖຸດິບມາຜ່ານຂະບວນການ, ຂັ້ນຕອນຕ່າງໆ ເພື່ອໃຫ້ໄດ້ຜະລິດຕະພັນໃໝ່ຂຶ້ນມາກໍ່ຄືກະເປົາ ແລະ ການເຮັດກະເປົານັ້ນເພື່ອຈຸດປະສົງໃຫ້ແຟນນຳໃຊ້. ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.1 ວັກໜຶ່ງກ່ຽວກັບການຜະລິດ.

ການທີ່ X ເຮັດກະເປົາຂຶ້ນມາເອງເພື່ອໃຫ້ຄືກັບກະເປົາຍີ່ຫໍ້ຂອງ A ທີ່ເປັນສິນຄ້າທີ່ມີຢູ່ກ່ອນ ແລະ ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວ ເຮັດໃຫ້ຜູ້ຊົມໃຊ້ບໍ່ສາມາດຈຳແນກຄວາມແຕກຕ່າງຂອງສິນຄ້າໄດ້ ຫຼື ຈຳແນກຄຸນລັກສະນະສະເພາະໄດ້ຍາກ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.2 ວັກໜຶ່ງກ່ຽວກັບສິນຄ້າປອມ.

X ຮູ້ວ່າກະເປົາທີ່ຜະລິດຂຶ້ນມານັ້ນ ມີຮູບຮ່າງ ແລະ ລັກສະນະຄືກັບກະເປົາຂອງຄົນອື່ນທີ່ມີກ່ອນຢູ່ແລ້ວ ແຕ່ຍັງຈົງໃຈຜະລິດຂຶ້ນມາເພື່ອຕ້ອງການຜົນປະໂຫຍດທີ່ຕົນຜະລິດຂຶ້ນມາກໍ່ຄືການໃຫ້ແຟນນຳໄປໃຊ້. ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.3 ການກະທຳຜິດໂດຍເຈດຕະນາ.

ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ແລ້ວ ເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຜະລິດ, ຂາຍສິນຄ້າປອມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້ 1**

ຈາກກໍລະນີສຶກສາດັດແກ້ນີ້ເຫັນວ່າການກະທຳຂອງ Y ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ແລ້ວ, ການກະທຳດັ່ງກ່າວຄົບຕາມເງື່ອນໄຂຂໍ້ທີ 5.1 ກ່ຽວກັບການຜະລິດ, ການຂາຍ ແລະ ຂໍ້ທີ 5.2 ກ່ຽວກັບສິນຄ້າປອມ ຫຼື ຮຽນແບບ ແຕ່ Y ບໍ່ຮູ້ວ່າກະເປົາໜ່ວຍດັ່ງກ່າວນັ້ນ X ໄດ້ຜະລິດຂຶ້ນມາເອງ. ເຖິງຢ່າງໃດກໍຕາມ, ເມື່ອນຳມາພິຈາລະນາກັບເງື່ອນໄຂຂໍ້ທີ 5.3 ກ່ຽວກັບການກະທຳຜິດໂດຍເຈດຕະນາແລ້ວເຫັນວ່າການທີ່ Y ເອົາກະເປົາທີ່ X ຜະລິດຂຶ້ນມາແລ້ວນຳໄປຂາຍຕໍ່ນັ້ນເປັນການກະທຳທີ່ Y ບໍ່ຮູ້ວ່າເປັນກະເປົາປອມ. ສະນັ້ນ, ການກະທຳຂອງ Y ຈຶ່ງເປັນການກະທຳໂດຍບໍ່ເຈດຕະນາ.

ເມື່ອນຳມາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ Y ຂາດເງື່ອນໄຂດ້ານເຈດຕະນາ. ການກະທຳຂອງ Y ຈຶ່ງບໍ່ເປັນການກະທຳຜິດສະຖານການຜະລິດ, ຂາຍສິນຄ້າປອມຕາມທີ່ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້ທີ 2**

ຈາກກໍລະນີສຶກສາດັດແກ້ນີ້ເຫັນວ່າການທີ່ Y ນຳເອົາກະເປົາທີ່ X ໃຫ້ຕົນນຳໃຊ້ ແຕ່ເອົາໄປຂາຍຕໍ່ນັ້ນ, ຖືເປັນການເອົາສິນຄ້າ ຫຼື ຜະລິດຕະພັນໃດໜຶ່ງທີ່ຄືສິນຄ້າຂອງຄົນອື່ນທີ່ມີຢູ່ກ່ອນແລ້ວນຳໄປຂາຍ, ຈຳໜ່າຍ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນ. ດັ່ງນັ້ນ, ການກະທຳຂອງ Y ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.1 ວັກສອງກ່ຽວກັບການຂາຍ.

ການທີ່ Y ເອົາກະເປົາທີ່ເຮັດຂຶ້ນມາໃຫ້ຄືກັບກະເປົາຍີ່ຫໍ້ຂອງ A ທີ່ເປັນສິນຄ້າທີ່ມີຢູ່ກ່ອນ ແລະ ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວໄປຂາຍຕໍ່ນັ້ນ ເປັນການເຮັດໃຫ້ຜູ້ຊົມໃຊ້ບໍ່ສາມາດຈຳແນກຄວາມແຕກຕ່າງຂອງສິນຄ້າໄດ້ ຫຼື ຈຳແນກຄຸນລັກສະນະສະເພາະໄດ້ຍາກ. ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ 5.2 ວັກໜຶ່ງກ່ຽວກັບສິນຄ້າປອມ.

Y ຮູ້ວ່າກະເປົາທີ່ຕົນເອົາໄປຂາຍຕໍ່ນັ້ນ ເປັນຜະລິດຕະພັນທີ່ X ເຮັດຂຶ້ນມາໃຫ້ຄືກັບສິນຄ້າຂອງບຸກຄົນອື່ນທີ່ມີຢູ່ກ່ອນແລ້ວ ແຕ່ຍັງຈິງໃຈເອົາໄປຂາຍ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂ 5.3 ການກະທຳຜິດໂດຍເຈດຕະນາ.

ເມື່ອພິຈາລະນາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການຜະລິດ, ຂາຍສິນຄ້າປອມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

**6.3 ຄຳຕອບກໍລະນີສຶກສາທີ 3**

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ໄດ້ປ່ຽນບັນຈຸພັນ, ໂລໂກ, ສີ ແລະ ຊື່ຂອງນ້ຳດື່ມ ຖືເປັນການນຳເອົາວັດຖຸດິບ, ວັດຖຸສິ່ງຂອງມາຜ່ານຂະບວນການປຸງແຕ່ງໃນຮູບແບບຕ່າງໆໃຫ້ໄດ້ຜະລິດຕະພັນໃໝ່ຂຶ້ນມາກໍຄືນ້ຳດື່ມ "DOK CHAMPE". ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.1 ວັກໜຶ່ງກ່ຽວກັບການຜະລິດ.

ການທີ່ X ປ່ຽນບັນຈຸພັນ, ໂລໂກ, ສີ ແລະ ຊື່ນ້ຳດື່ມຈາກ “CHANG” ມາເປັນ ນ້ຳດື່ມ “DOK CHAMPE” ຈຸດປະສົງເພື່ອໃຫ້ຄ້າຍຄືກັບນ້ຳດື່ມ “DOK CHAM PA” ຖືເປັນການຮຽນແບບສິນຄ້າທີ່ມີຢູ່ກ່ອນ ແລະ ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວ ດ້ວຍການຮຽນແບບອົງປະກອບຕ່າງໆ ຂອງສິນຄ້າຂອງແທ້. ຊຶ່ງ X ໄດ້ປ່ຽນບັນຈຸພັນ, ໂລໂກ, ສີ ແລະ ຊື່ຂອງນ້ຳດື່ມດ້ວຍການປ່ຽນແປງຕົວອັກສອນບາງຕົວຄືປ່ຽນຈາກຄຳວ່າ “PA”ມາເປັນ “PE” ເຮັດໃຫ້ຜູ້ຊົມໃຊ້ເຂົ້າໃຈຜິດວ່າແມ່ນສິນຄ້າດຽວກັນ ຫຼື ມາຈາກຜູ້ຜະລິດດຽວກັນກັບນ້ຳດື່ມ “DOK CHAMPA”. ດັ່ງນັ້ນ, ການກະທຳຂອງ X ຈຶ່ງກົງກັບເງື່ອນໄຂຂໍ້ 5.2 ວັກສອງກ່ຽວກັບສິນຄ້າຮຽນແບບ.

X ຮູ້ວ່ານ້ຳດື່ມທີ່ຜະລິດຂຶ້ນມາໃໝ່ນັ້ນ ຄ້າຍຄືກັບນ້ຳດື່ມຂອງຜູ້ອື່ນທີ່ມີຢູ່ກ່ອນແລ້ວ ແລະ ໃດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວ ແຕ່ຍັງຈິງໃຈຜະລິດຂຶ້ນມາເພື່ອໃຫ້ໄດ້ຜົນປະໂຫຍດໃຫ້ແກ່ຕົນ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງເປັນການກະທຳຜິດໂດຍເຈດຕະນາ.

ເມື່ອພິຈາລະນາການກະທຳດັ່ງກ່າວໂດຍທຽບກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ແລ້ວເຫັນວ່າການກະທຳຂອງ X ເປັນການກະທຳຜິດໃນສະຖານການ

ຜະລິດ, ຂາຍສິນຄ້າປອມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 3 ດັດແກ້:**

ຈາກກໍລະນີສຶກສາດັດແກ້ນີ້ເຫັນວ່າການກະທຳຂອງ X ເມື່ອນຳມາປຽບທຽບກັບເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 5 ແລ້ວ, ການກະທຳດັ່ງກ່າວຄົບຕາມເງື່ອນ ໄຂຂໍ້ທີ 5.1 ວັກໜຶ່ງກ່ຽວກັບການຜະລິດ. ເຖິງຢ່າງໃດກໍຕາມ, ເມື່ອນຳມາພິຈາລະນາກັບເງື່ອນໄຂຂໍ້ທີ 5.2 ສິນຄ້າປອມ ຫຼື ສິນຄ້າຮຽນແບບແລ້ວ ເຫັນວ່າ X ໄດ້ປ່ຽນບັນຈຸພັນໃໝ່ໃຫ້ມີເປັນເອກະລັກສະເພາະຂອງຕົນເອງ, ໂລໂກ ແລະ ຊື່ນໍ້າດື່ມຍັງໃສ່ຊື່ "CHANG" ຄືເກົ່າ ແຕ່ສີບັງເອີນໄປຄືກັບນໍ້າດື່ມ "DOK CHAMPA". ເຫັນວ່າມີຄວາມແຕກຕ່າງກັບນໍ້າດື່ມ "DOK CHAMPA" ຢ່າງຊັດເຈນ ຊຶ່ງຜູ້ຊົມໃຊ້ກໍສາມາດຈຳແນກໄດ້ວ່າເປັນນໍ້າດື່ມຍີ່ຫໍ້ຕ່າງກັນ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງບໍ່ຖືກກັບເງື່ອນໄຂສິນຄ້າປອມ ຫຼື ສິນຄ້າຮຽນແບບ.

ດັ່ງນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ທີ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂສິນຄ້າປອມ ຫຼື ສິນຄ້າຮຽນແບບ. ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການຜະລິດ, ຂາຍສິນຄ້າປອມຕາມທີ່ກຳນົດໄວ້ໃນມາດຕາ 288 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດສະຖານການຜະລິດ, ຂາຍສິນຄ້າປອມທີ່ກຳນົດໄວ້ໃນປະມວນກົດໝາຍອາຍານັ້ນ ຄຳວ່າ " ສິນຄ້າ" ມີຄວາມໝາຍດຽວກັນກັບຄຳວ່າ "ອາຫານ, ສະບຽງອາຫານ, ຢາປິ່ນປົວພະຍາດ, ຢາປ້ອງກັນພະຍາດປອມ, ສິນຄ້າສຳລັບລ້ຽງສັດ, ຝຸ່ນ, ຢາປ້ອງກັນສັດ, ຢາປິ່ນປົວສັດ, ຢາປາບສັດຕູພືດ, ພືດປະເພດຕ່າງໆ" ແລະ ຄຳວ່າ "ການຜະລິດ" ທີ່ໄດ້ກຳນົດໄວ້ໃນມາດຕາ 288, 290 ແລະ 291 ກໍມີຮູບແບບການກະທຳລັກສະນະດຽວກັນ. ນອກຈາກນັ້ນການຜະລິດ, ການຂາຍສິນຄ້າປອມມີເຈດຕະນາ ຫຼື ຈຸດປະສົງສະແຫວງຫາຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງ ຊຶ່ງສະແດງອອກດ້ວຍການປອມແປງ, ຕົວະຍົວະຫຼອກ

ລວງກ່ຽວກັບຄຸນນະພາບຂອງສິນຄ້າ. ດັ່ງນັ້ນ, ຄະນະຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການໄຈກາ (JICA) ຈຶ່ງມີຂໍ້ສະເໜີ ດັ່ງນີ້:

1). ໂຮມເອົາມາດຕາ 290 ການຜະລິດ ຫຼື ການຂາຍອາຫານ, ສະບຽງອາຫານ, ຢາປິ່ນປົວພະຍາດ, ຢາປ້ອງກັນພະຍາດປອມ ແລະ ມາດຕາ 291 ການຜະລິດ ຫຼື ການຂາຍສິນຄ້າສຳລັບລ້ຽງສັດ, ຝຸ່ນ, ຢາປ້ອງກັນສັດ, ຢາປິ່ນປົວສັດ, ຢາປາບສັດຕູພືດ, ພືດປະເພດຕ່າງໆປອມເຂົ້າເປັນການກະທຳຜິດສະຖານຜະລິດ, ຂາຍສິນຄ້າປອມໃນມາດຕາດຽວກັນ ເນື່ອງຈາກວ່າການກຳນົດເນື້ອໃນຂອງບັນດາມາດຕາດັ່ງກ່າວລ້ວນແລ້ວແຕ່ແມ່ນ “ສິນຄ້າ”, ການກຳນົດເຫດຜົນ ແລະ ຈຸດປະສົງໃນການປົກປ້ອງຜົນປະໂຫຍດທາງກົດໝາຍກໍແມ່ນອັນດຽວກັນ.

2). ການຜະລິດ, ຂາຍສິນຄ້າປອມນອກຈາກສ້າງຄວາມເສຍຫາຍຕໍ່ສິດ ແລະ ຜົນປະໂຫຍດຂອງເຈົ້າຂອງສິນຄ້າ, ເຄື່ອງໝາຍການຄ້າແລ້ວ ຄຽງຄູ່ກັນນັ້ນຍັງແຕະຕ້ອງເຖິງຊີວິດ, ສຸຂະພາບ ແລະ ຊັບສິນຂອງຜູ້ບໍລິໂພກ. ສະນັ້ນ, ເຫັນວ່າການກະທຳຜິດກ່ຽວກັບການຜະລິດ, ຂາຍສິນຄ້າປອມ ແລະ ການກະທຳຜິດກ່ຽວກັບການປອມແປງ, ຕົວະຍົວະ ແລະ ຫຼອກລວງກ່ຽວກັບຄຸນນະພາບທີ່ກຳນົດໄວ້ໃນມາດຕາ 289 ຕາມປະມວນກົດໝາຍອາຍາ, 2 ການກະທຳຜິດນີ້ແມ່ນໄປຄຽງຄູ່ກັນ. ສະນັ້ນ, ເພື່ອບໍ່ໃຫ້ມີການເຂົ້າໃຈສັບສົນເວລາຈັດຕັ້ງປະຕິບັດບັນດາມາດຕາດັ່ງກ່າວຈຶ່ງສະເໜີໂຮມເອົາບັນດາມາດຕາທີ່ກ່ຽວຂ້ອງເຂົ້າເປັນມາດຕາດຽວກັນ.

3). ອະທິບາຍລະອຽດກ່ຽວກັບການກຳນົດເນື້ອໃນມາດຕາ 246 ຊັບສິນທາງປັນຍາ ແລະ ມາດຕາ 288 ການຜະລິດ, ຂາຍສິນຄ້າປອມ ເຫດຜົນ ແລະ ຈຸດປະສົງຂອງສອງມາດຕານີ້ກຳນົດມາເພື່ອປົກປ້ອງຫຍັງ ຕ່າງກັນແນວໃດ, ຖ້າຫາກ 2 ມາດຕາດັ່ງກ່າວປົກປ້ອງອັນດຽວກັນກໍສະເໜີໃຫ້ໂຮມເຂົ້າເປັນມາດຕາດຽວກັນ. ຖ້າຫາກປົກປ້ອງຕ່າງກັນໃຫ້ກຳນົດລະອຽດຈະແຈ້ງເພື່ອບໍ່ໃຫ້ເກີດຄວາມສັບສົນໃນເວລາການຈັດຕັ້ງປະຕິບັດ.

## ແຜນວາດສະແດງເຖິງການກະທຳຜິດສະຖານການຜະລິດ, ຂາຍສິນຄ້າປອມ

ມີການຜະລິດ + ສິນຄ້າປອມ ຫຼື ຮຽນແບບ = ເປັນຄວາມຜິດສະຖານຜະລິດ ສິນຄ້າປອມ ຫຼື ຮຽນແບບ

ມີສິນຄ້າປອມ ຫຼື ຮຽນແບບ + ມີການຂາຍ = ເປັນຄວາມຜິດສະຖານຂາຍ ສິນຄ້າປອມ ຫຼື ຮຽນແບບ

# ບົດທີ 12
# ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ

## 1. ກໍລະນີສຶກສາ

**1.1 ກໍລະນີສຶກສາທີ 1**

X ເປັນຫົວໜ້າດ່ານຊັ່ງນໍ້າໜັກແຫ່ງໜຶ່ງ ໄດ້ອະນຸຍາດໃຫ້ລົດບັນທຸກທີ່ມີນໍ້າໜັກເກີນທຸກຄັນ ຊຶ່ງເປັນລົດຍາດພີ່ນ້ອງຂອງຕົນຜ່ານໄປໂດຍບໍ່ໄດ້ປັບໃໝຕາມລະບຽບການ.

**ກໍລະນີສຶກສາ 1 ດັດແກ້**: ໃນກໍລະນີ X ໄດ້ກວດພົບລົດບັນທຸກທີ່ມີນໍ້າໜັກເກີນ ແລະ ໄດ້ປັບໃໝທຸກຄັນຕາມລະບຽບການ ແຕ່ຜູ້ກ່ຽວບໍ່ໄດ້ບັນທຶກລົງໃນບັນຊີ ແລ້ວເອົາເງິນຈຳນວນດັ່ງກ່າວໄປໃຊ້ຈ່າຍສ່ວນຕົວ.

**1.2 ກໍລະນີສຶກສາທີ 2**

X ເປັນອາຈານສອນມະຫາວິທະຍາໄລຂອງລັດແຫ່ງໜຶ່ງ ໄດ້ເອົາຄະແນນໃຫ້ນັກສຶກສາທີ່ເປັນລູກສ່ຽວຂອງຕົນ ທີ່ບໍ່ເຄີຍມາຮຽນໃນວິຊາທີ່ຕົນສອນຈັກເທື່ອ.

**ກໍລະນີສຶກສາທີ 2 ດັດແກ້:** X ເປັນອາຈານສອນວິທະຍາໄລຂອງເອກະຊົນແຫ່ງໜຶ່ງ ໄດ້ເອົາຄະແນນໃຫ້ນັກສຶກສາທີ່ເປັນລູກສ່ຽວຂອງຕົນ ທີ່ບໍ່ເຄີຍມາຮຽນໃນວິຊາທີ່ຕົນສອນຈັກເທື່ອ.

## 2. ມາດຕາ 359

ພະນັກງານຜູ້ໃດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາສະບັບນີ້ຫາກໄດ້ສໍ້ລາດບັງຫຼວງໃນສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນດ້ວຍການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງຈະຖືກລົງໂທດຕາມມູນຄ່າຄວາມເສຍຫາຍດັ່ງນີ້:

1. ແຕ່ 20.000.000 ກີບ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

2. ເກີນກວ່າ 20.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສອງປີ ຫາ ສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

3. ເກີນກວ່າ 50.000.000 ກີບ ຫາ 100.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

4. ເກີນກວ່າ 100.000.000 ກີບ ຫາ 300.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ຫົກປີ ຫາ ແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

5. ເກີນກວ່າ 300.000.000 ກີບ ຫາ 500.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ແປດປີ ຫາ ສິບປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

6. ເກີນກວ່າ 500.000.000 ກີບ ຫາ 600.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

7. ເກີນກວ່າ 600.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສອງປີ ຫາ ສິບສີ່ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າ ຄວາມເສຍຫາຍ;

8. ເກີນກວ່າ 700.000.000 ກີບ ຫາ 800.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ສິບຫົກປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

9. ເກີນກວ່າ 800.000.000 ກີບ ຫາ 1.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບຫົກ ປີ ຫາ ສິບແປດປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

10. ເກີນກວ່າ 1.000.000.000 ກີບ ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບແປດປີ ຫາ ຊາວປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ;

11. ເກີນກວ່າ 2.000.000.000 ກີບ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າຄວາມເສຍຫາຍ.

## 3. ເຫດຜົນການບັນຍັດມາດຕາ

ໃນສະພາບສັງຄົມຂອງ ສປປ ລາວ ເຫັນວ່າຍັງມີພະນັກງານລັດຈຳນວນໜຶ່ງປະຕິບັດໜ້າທີ່ບໍ່ຊອບທຳ ຊຶ່ງເປັນສາເຫດທີ່ພາໃຫ້ເກີດມີປາກົດການຫຍໍ້ທໍ້ ແລະ ມີຫາງສຽງວິພາກວິຈານຈາກສັງຄົມຢ່າງຫຼວງຫຼາຍ ໂດຍສະເພາະການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງເປັນການກະທຳທີ່ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

ດັ່ງນັ້ນ, ຈຶ່ງໄດ້ກຳນົດການກະທຳດັ່ງກ່າວໃຫ້ເປັນການກະທຳຜິດທາງອາຍາໄວ້ໃນມາດຕາ 359 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕາ 359 ຂອງປະມວນກົດໝາຍອາຍາບັດຍັດໄວ້ເພື່ອປົກປ້ອງຜົນປະໂຫຍດ ແລະ ຄວາມໜ້າເຊື່ອຖືຂອງອົງການຈັດຕັ້ງລັດ ບໍ່ໃຫ້ຖືກທຳລາຍຈາກຜູ້ມີຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ ແມ່ນອົງປະກອບທາງດ້ານວັດຖຸກຳຂອງການກະທຳຜິດທີ່ປະມວນກົດໝາຍອາຍາກຳນົດໄວ້.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທຳຜິດສະຖານສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນຈະຕ້ອງປະກອບດ້ວຍ 3 ເງື່ອນໄຂຄື: 1. ພະນັກງານຜູ້ໃດຕາມທີ່ກຳນົດໄວ້ໃນມາດຕາ 354; 2. ການອີງໃສ່ຖານະຕຳແໜ່ງ,

ສິດອຳນາດ, ໜ້າທີ່ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ແລະ 3. ໂດຍເຈດຕະນາ.

ເງື່ອນໄຂຂໍ້ທີ 1 ເປັນອົງປະກອບດ້ານເຈົ້າກຳ, ເງື່ອນໄຂຂໍ້ທີ 2 ເປັນອົງປະກອບດ້ານພາວະວິໄສ ແລະ ເງື່ອນໄຂຂໍ້ທີ 3 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ ຊຶ່ງແຕ່ລະເງື່ອນໄຂມີເນື້ອໃນດັ່ງນີ້:

**5.1 ພະນັກງານຜູ້ໃດຕາມທີ່ກຳນົດໄວ້ໃນມາດຕາ 354**

ພະນັກງານຜູ້ໃດຕາມທີ່ກຳນົດໄວ້ໃນມາດຕາ 354 ໝາຍເຖິງພະນັກງານນຳພາ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ພະນັກງານລັດວິສາຫະກິດ, ລັດຖະກອນ, ທະຫານ, ຕຳຫຼວດ, ນາຍບ້ານ ແລະ ຜູ້ໄດ້ຮັບມອບສິດ, ໜ້າທີ່ໃດໜຶ່ງຈາກທາງການ ແລະ ພະນັກງານຕ່າງປະເທດ, ພະນັກງານອົງການຈັດຕັ້ງສາກົນ.

**5.2 ການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ.**

ການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ໝາຍເຖິງການເຄື່ອນໄຫວຂອງພະນັກງານພາຍໃຕ້ຂອບເຂດຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ສະເພາະໃດໜຶ່ງ. ຕົວຢ່າງ: ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງອອກໃບອະນຸຍາດດຳເນີນທຸລະກິດໂຮງງານ ຖືວ່າເປັນການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່. ເຖິງຢ່າງໃດກໍຕາມ, ໃນກໍລະນີພະນັກງານວິຊາການເປັນຜູ້ອອກອະນຸຍາດ ຈະບໍ່ຖືວ່າເປັນການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ແຕ່ເປັນການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເກີນຂອບເຂດ.

ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ໝາຍເຖິງການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຢ່າງບໍ່ຖືກຕ້ອງເພື່ອສະແຫວງຫາຜົນປະໂຫຍດ ຊຶ່ງຜົນປະໂຫຍດດັ່ງກ່າວໝາຍເຖິງສິ່ງທີ່ໄດ້ຮັບຈາກການກະທຳນັ້ນເຊັ່ນ: ສິດອຳນາດ, ອຳນວຍຄວາມສະດວກ, ຊື່ສຽງ ແລະ ຄວາມກ້າວໜ້າໃນໜ້າທີ່ການງານທີ່ບໍ່ເປັນເງິນ ຫຼື ຊັບສິນ. ຖ້າຫາກມີຜົນປະໂຫຍດເປັນເງິນ ຫຼື ຊັບສິນຈະບໍ່ມີຄວາມຜິດໃນສະຖານນີ້ ແຕ່ຈະມີຄວາມຜິດໃນສະຖານອື່ນ.

**5.3 ໂດຍເຈດຕະນາ**

ໂດຍເຈດຕະນາ ໝາຍເຖິງຜູ້ກະທຳຮູ້ວ່າການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ນັ້ນຢູ່ໃນຂອບເຂດສິດອຳນາດຂອງຕົນ ແລະ ຮູ້ວ່າການກະທຳນັ້ນ

ເປັນການກະທຳທີ່ບໍ່ຖືກຕ້ອງ ແຕ່ກໍຍັງຈິງໃຈເຮັດ ຫຼື ປະປ່ອຍໃຫ້ເກີດຂຶ້ນ ເພື່ອສະແຫວງຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ.

## 6. ຄຳຕອບກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າ X ເປັນຫົວໜ້າດ່ານຊັ່ງນ້ຳໜັກ ຊຶ່ງເປັນລັດຖະກອນ. ດັ່ງນັ້ນ, ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ກ່ຽວກັບພະນັກງານຜູ້ໃດຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາ.

ການທີ່ X ເປັນຫົວໜ້າດ່ານຊັ່ງນ້ຳໜັກນັ້ນ ໝາຍເຖິງເປັນຜູ້ທີ່ມີສິດອຳນາດໃນການອະນຸຍາດໃຫ້ລົດບັນທຸກຜ່ານ. ການທີ່ X ອະນຸຍາດໃຫ້ລົດບັນທຸກພີ່ນ້ອງຜ່ານໄປ ຈຶ່ງຖືວ່າເປັນການເຄື່ອນໄຫວຂອງພະນັກງານພາຍໃຕ້ຂອບເຂດຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນ. ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ວັກໜຶ່ງ. ນອກຈາກນັ້ນ, ການທີ່ X ໄດ້ອະນຸຍາດໃຫ້ລົດບັນທຸກຂອງພີ່ນ້ອງທີ່ມີນ້ຳໜັກເກີນຜ່ານໄປເປັນການກະທຳໂດຍອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ໂດຍບໍ່ຖືກຕ້ອງ ຊຶ່ງການກະທຳດັ່ງກ່າວເປັນການອຳນວຍຄວາມສະດວກໃຫ້ຍາດພີ່ນ້ອງຂອງຕົນ ຈຶ່ງເປັນການກະທຳທີ່ສະແຫວງຫາຜົນປະໂຫຍດທີ່ບໍ່ເປັນເງິນ ຫຼື ຊັບສິນ. ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ວັກສອງ.

X ຮູ້ວ່າການອະນຸຍາດໃຫ້ລົດບັນທຸກທີ່ມີນ້ຳໜັກເກີນຜ່ານໄປໂດຍບໍ່ໄດ້ປັບ ໃໝຕາມລະບຽບການນັ້ນ ເປັນການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ທີ່ຢູ່ໃນຂອບເຂດສິດອຳນາດຂອງຕົນ ແລະ ຮູ້ວ່າການກະທຳນັ້ນເປັນການກະທຳທີ່ບໍ່ຖືກຕ້ອງ ແຕ່ກໍຍັງຈິງໃຈອຳນວຍຄວາມສະດວກໃຫ້ລົດພີ່ນ້ອງຂອງຕົນຜ່ານໄປ. ເມື່ອນຳມາປຽບທຽບເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຊຶ່ງເປັນການກະທຳໂດຍເຈດຕະນາ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນຕາມມາດຕາ 359 ຂອງປະມວນກົດໝາຍອາຍາ.

**ກໍລະນີສຶກສາດັດແກ້ທີ 1**

ຈາກກໍລະນີສຶກສາດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າ ການກະທຳດັ່ງກ່າວຄົບຕາມເງື່ອນໄຂຂໍ້ 5.1 ກ່ຽວກັບພະນັກງານຜູ້ໃດຕາມທີ່ກຳນົດໄວ້ໃນມາດຕາ 354. ເຖິງຢ່າງໃດກໍຕາມການທີ່ X ປັບໃໝລົດບັນທຸກທີ່ມີນ້ຳໜັກເກີນທຸກຄັນຕາມລະບຽບການ ແຕ່ຜູ້ກ່ຽວບໍ່ໄດ້ບັນທຶກລົງໃນບັນຊີ ແລ້ວເອົາເງິນຈຳນວນດັ່ງກ່າວໄປໃຊ້ຈ່າຍສ່ວນຕົວນັ້ນ ເປັນການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ໂດຍບໍ່ຖືກຕ້ອງ ເພື່ອເອົາເງິນ, ບໍ່ແມ່ນເພື່ອຜົນປະໂຫຍດກ່ຽວກັບສິດອຳນາດ, ອຳນວຍຄວາມສະດວກ, ຊື່ສຽງ ແລະ ຄວາມກ້າວໜ້າໃນ ໜ້າທີ່ການງານ. ເມື່ອນຳມາປຽບທຽບແລ້ວເຫັນວ່າບໍ່ກົງກັບເງື່ອນໄຂຂໍ້ 5.2 ວັກສອງ.

ດັ່ງນັ້ນ, ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ແລ້ວເຫັນວ່າການກະທຳຂອງ X ຂາດເງື່ອນໄຂຂໍ້ 5.2 ວັກສອງ ກ່ຽວກັບ "ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ". ການກະທຳຂອງ X ຈຶ່ງບໍ່ເປັນການກະທຳຜິດສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ຕາມມາດຕາ 359 ແຕ່ຜິດໃນສະຖານການຍັກຍອກຊັບຂອງລັດ ຫຼື ລວມໝູ່ ຕາມມາດຕາ 355 ຂອງປະມວນກົດໝາຍອາຍາ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສາດັ່ງກ່າວເຫັນວ່າ X ເປັນອາຈານສອນມະຫາວິທະຍາໄລຂອງລັດ ຊຶ່ງເປັນລັດຖະກອນ. ດັ່ງນັ້ນ, ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1 ກ່ຽວກັບພະນັກງານຜູ້ໃດຕາມທີ່ກຳນົດໄວ້ໃນມາດຕາ 354 ຂອງປະມວນກົດໝາຍອາຍາ.

ການທີ່ X ເປັນອາຈານສອນມະຫາວິທະຍາໄລຂອງລັດນັ້ນ ໝາຍເຖິງເປັນຜູ້ທີ່ມີສິດອຳນາດໃນການໃຫ້ຄະແນນ. ການທີ່ X ໃຫ້ຄະແນນນັກສຶກສານັ້ນ ຈຶ່ງຖືວ່າເປັນການເຄື່ອນໄຫວຂອງພະນັກງານພາຍໃຕ້ຂອບເຂດຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນ. ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ວັກໜຶ່ງ. ນອກຈາກນັ້ນ, ການທີ່ X ໄດ້ໃຫ້ຄະແນນນັກສຶກສາ ທີ່ບໍ່ເຄີຍມາຮຽນໃນວິຊາທີ່ຕົນສອນຈັກເທື່ອ ເປັນການກະທຳໂດຍອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ໂດຍບໍ່ຖືກຕ້ອງ ຊຶ່ງການກະທຳດັ່ງກ່າວເປັນການອຳນວຍຄວາມສະດວກໃຫ້ພັກພວກຂອງ

ຕົນ ຈຶ່ງເປັນການກະທຳທີ່ສະແຫວງຫາຜົນປະໂຫຍດທີ່ບໍ່ເປັນເງິນ ຫຼື ຊັບສິນ. ເມື່ອນຳມາປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ວັກສອງ.

X ຮູ້ວ່າໃຫ້ຄະແນນນັກສຶກສານັ້ນ ເປັນການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ທີ່ຢູ່ໃນຂອບເຂດສິດອຳນາດຂອງຕົນ ແລະ ຮູ້ວ່າການກະທຳນັ້ນເປັນການກະທຳທີ່ບໍ່ຖືກຕ້ອງ ແຕ່ກໍຍັງຈິງໃຈອຳນວຍຄວາມສະດວກໃຫ້ພັກພວກຂອງຕົນ. ເມື່ອນຳມາປຽບທຽບເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ຊຶ່ງເປັນການກະທຳໂດຍເຈດຕະນາ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ 5 ຂ້າງເທິງນີ້. ດັ່ງນັ້ນ, ຈຶ່ງຖືວ່າ ການກະທຳຂອງ X ເປັນການກະທຳຜິດໃນສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນຕາມມາດຕາ 359 ຂອງປະມວນກົດໝາຍອາຍາ.

**ກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5 ແລ້ວເຫັນວ່າ ກໍລະນີດັ່ງກ່າວບໍ່ຄົບຕາມເງື່ອນໄຂ ເນື່ອງຈາກ X ບໍ່ແມ່ນພະນັກງານຕາມທີ່ໄດ້ກຳນົດໄວ້ໃນເງື່ອນໄຂ 5.1. ດັ່ງນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂແລ້ວເຫັນວ່າ ການກະທຳຂອງ X ບໍ່ເປັນການກະທຳຜິດໃນສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ຕາມມາດຕາ 359 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ກ່ຽວກັບການກະທຳຜິດສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 359 ຂອງປະມວນກົດໝາຍອາຍາທີ່ໄດ້ໃຫ້ຄວາມໝາຍຂອງພະນັກງານທີ່ກະທຳຜິດໃນສະຖານນີ້ໄວ້ໃນມາດຕາ 354 ວ່າ "ການສໍ້ລາດບັງຫຼວງແມ່ນພຶດຕິກຳຂອງພະນັກງານນຳພາ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ພະນັກງານວິສາຫະກິດ...." ນັ້ນ ເຫັນຄຳວ່າ "ພະນັກງານວິສາຫະກິດ" ຈຶ່ງ

ໝາຍເຖິງພະນັກງານຂອງອົງການຈັດຕັ້ງເອກະຊົນ, ເນື່ອງຈາກພະນັກງານເອກະຊົນ ຫາກໄດ້ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນດ້ວຍການອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງແລ້ວ ຄວາມເສຍຫາຍທີ່ເກີດຂຶ້ນຈຶ່ງບໍ່ໜ້າຈະເປັນຜົນກະທົບຕໍ່ຜົນປະໂຫຍດ ແລະ ຄວາມໜ້າເຊື່ອຖືຂອງອົງການຈັດຕັ້ງລັດ ເພາະຄວາມເສຍຫາຍທີ່ເກີດຂຶ້ນເປັນເລື່ອງຂອງເອກະຊົນ.

ນອກຈາກນັ້ນ, ຂໍ້ຄວາມໃນມາດຕາ 359 ຂອງປະມວນກົດໝາຍອາຍາຍັງໄດ້ບັນຍັດຄຳວ່າ “ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ” ຈຶ່ງເປັນປະເດັນທີ່ໜ້າສົງໄສວ່າ: ຄຳວ່າ *“ຜົນປະໂຫຍດ”* ໃນມາດຕານີ້ຈະລວມເຖິງຜົນປະໂຫຍດທີ່ເປັນເງິນ ຫຼື ຊັບສິນອື່ນທີ່ສາມາດຈັບຕ້ອງໄດ້ ຫຼື ບໍ່. ຖ້າຫາກລວມເຖິງຜົນປະໂຫຍດດັ່ງກ່າວແລ້ວຈະເຫັນວ່າການກະທຳຜິດອາດຈະກຳກວມ ຫຼື ຄາບກ່ຽວກັບການກະທຳຜິດສະຖານອື່ນໃນໝວດການກະທຳຜິດສໍ້ລາດບັງຫຼວງ.

ດ້ວຍເຫດ ແລະ ຜົນທີ່ກ່າວມາຂ້າງເທິງນັ້ນຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງປະມວນກົດໝາຍອາຍາໃນອະນາ ຄົດວ່າ ມາດຕາ 354 ສະເໜີຄວນປ່ຽນຄຳວ່າ “ພະນັກງານວິສາຫະກິດ” ເປັນ “ພະນັກງານລັດວິສາຫະກິດ” ແລະ ມາດຕາ 359 ສະເໜີປ່ຽນຄຳວ່າ “ຜົນປະ ໂຫຍດ” ເປັນ “ຜົນປະໂຫຍດທີ່ບໍ່ເປັນເງິນ ຫຼື ຊັບສິນ” ຈຶ່ງຈະຖືກຕ້ອງ ແລະ ເໝາະສົມກັບສິ່ງທີ່ກົດໝາຍອາຍາຕ້ອງການຢາກຈະປົກປ້ອງຈາກການກະທຳຜິດໃນສະຖານດັ່ງກ່າວນີ້.

## ແຜນວາດສະແດງເຖິງການກະທຳຜິດສະຖານການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ



# ບົດທີ 13
# ການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ

## 1. ກໍລະນີສຶກສາ

### 1.1 ກໍລະນີສຶກສາທີ 1

X ເປັນຫົວໜ້າກອງບັນຊາການ ປກສ ໄດ້ຮັບສຳນວນຄະດີຈາກພະແນກ ຈະ ລາຈອນ ຄະດີອຸບປະຕິເຫດລະຫວ່າງຜູ້ຂັບຂີ່ລົດ A ແລະ B. ຕາມການ ສະຫລຸບໃນສຳນວນຄະດີວ່າ A ເປັນຜູ້ລະເມີດກົດຈະລາຈອນພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ B ເສຍຊີວິດ. ຜ່ານການໄກ່ເກ່ຍຄະດີນຳຄອບຄົວຂອງ B ແລ້ວ, A ເຫັນດີ ແລະ ຕົກລົງຊົດໃຊ້ຄ່າເສຍຫາຍທັງໝົດ ແລະ ມ້ຽນຄາບສິ່ງສະການ ຊຶ່ງຄອບ ຄົວ B ຍອມຄວາມ. X ຈຶ່ງໄດ້ພິຈາລະນາ ແລະ ຕົກລົງອອກຄຳສັ່ງຊັດມ້ຽນຄະດີໂດຍໃຫ້ເຫດຜົນວ່າ A ໄດ້ຊົດໃຊ້ຄ່າເສຍຫາຍໃຫ້ຄອບຄົວ B ແລ້ວ.

**ກໍລະນີສຶກສາທີ 1 ດັດແກ້:** ໃນກໍລະນີຫາກ B ເປັນຜູ້ລະເມີດກົດຈາລາຈອນພາໃຫ້ເກີດອຸບປະຕິເຫດ ແລ້ວເສຍຊີວິດເອງ, X ຈຶ່ງໄດ້ຕົກລົງອອກຄຳສັ່ງຊັດມ້ຽນຄະດີ.

### 1.2 ກໍລະນີສຶກສາທີ 2

ຫົວໜ້າອົງການສືບສວນ-ສອບສວນໄດ້ສະຫຼຸບສຳນວນຄະດີໃຫ້ຫົວໜ້າອົງການໄອຍະການ X ໂດຍມີຫຼັກຖານວ່າຜູ້ຖືກຫາ A ໄດ້ກະທຳຜິດໃນຂໍ້ຫາການຄາດຕະກຳ, ແຕ່ຫົວໜ້າອົງການໄອຍະການ X ໄດ້ອອກຄຳສັ່ງຊັດມ້ຽນຄະດີໂດຍໃຫ້ເຫດຜົນວ່າຖ້າຫາກສັ່ງຟ້ອງໄປແລ້ວ ຈຳເລີຍຖືກສານຕັດສິນວ່າມີຄວາມຜິດຈະສົ່ງຜົນກະທົບໃຫ້ຄອບຄົວຂອງຈຳເລີຍ ເພາະຈຳເລີຍເປັນເສົາຫຼັກຂອງຄອບຄົວ.

**ກໍລະນີສຶກສາດັດແກ້:** X ໄດ້ຮັບບົດສະຫຼຸບສຳສວນຄະດີຈາກຫົວໜ້າອົງການສືບສວນ-ສອບສວນວ່າ A ເປັນຜູ້ຖືກຫາໃນຂໍ້ຫາຄາດຕະກຳ, ແຕ່ຫົວໜ້າອົງການໄອຍະການ X ໄດ້ອອກ ຄຳສັ່ງຟ້ອງຜູ້ຖືກຫາ A ຂຶ້ນສານໃນຂໍ້ຫາການທຳຮ້າຍຮ່າງກາຍທີ່ພາໃຫ້ຜູ້ ອື່ນເສຍຊີວິດເນື່ອງຈາກວ່າບໍ່ມີຫຼັກຖານພຽງພໍທີ່ຈະພິສູດວ່າ A ມີເຈດຕະນາຄາດຕະກຳ.

## 2. ມາດຕາ 390

ບຸກຄົນໃດທີ່ມີສິດກ່ຽວຂ້ອງ ຫາກໄດ້ຕົກລົງ ຫຼື ອອກເອກະສານໃດໜຶ່ງທີ່ເປັນການຕົກລົງກ່ຽວກັບການສືບສວນ-ສອບສວນ, ການສັ່ງຟ້ອງ, ການອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງບຸກຄົນດັ່ງກ່າວ ກໍຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ ທັງເປັນການກໍ່ຄວາມເສຍຫາຍໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

## 3. ເຫດຜົນການບັນຍັດມາດຕາ

ເມື່ອພິຈາລະນາເຖິງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຂອງລັດໃນຂົງເຂດຍຸຕິທຳໃນປັດຈຸບັນເຫັນວ່າຍັງມີການຕົກລົງ ຫຼື ອອກເອກະສານທາງການທີ່ມີຜົນກະທົບ ແລະ ສ້າງຄວາມເສຍຫາຍຕໍ່ສິດ, ຜົນປະໂຫຍດ, ກຽດສັກສີ, ສຸຂະພາບຂອງບຸກຄົນ ແລະ ຍັງກະທົບຕໍ່ຄວາມໜ້າເຊື່ອຖື, ຄວາມຖືກຕ້ອງ ແລະ ຄວາມເປັນທຳຕາມຂະບວນຍຸຕິທຳ. ດ້ວຍເຫດນີ້ພຶດຕິກຳໂດຍການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ ຈຶ່ງຖືກນຳມາບັນຍັດເປັນຄວາມຜິດໄວ້ໃນ ມາດຕາ 390 ຂອງປະມວນກົດໝາຍອາຍາ.

## 4. ວັດຖຸປະສົງການບັນຍັດມາດຕາ

ມາດຕານີ້ມີວັດຖຸປະສົງເພື່ອປົກປ້ອງຄວາມຖືກຕ້ອງ ແລະ ຄວາມເປັນທຳບໍ່ໃຫ້ຖືກລະເມີດຈາກບຸກຄົນທີ່ມີສິດ ແລະ ອຳນາດໃນການຕົກລົງ ຫຼື ອອກເອກະສານໃດໜຶ່ງໃນຂະບວນການຍຸຕິທຳ ແລະ ບໍລິຫານ.

ວັດຖຸປະສົງຂອງມາດຕາທີ່ກ່າວມານີ້ແມ່ນອົງປະກອບດ້ານວັດຖຸກຳຂອງການກະທຳຜິດ.

## 5. ເງື່ອນໄຂມາດຕາ

ຈະຖືວ່າເປັນການກະທຳຜິດສະຖານຕົກລົງໂດຍບໍ່ຖືກຕ້ອງຕາມກົດໝາຍຕ້ອງປະກອບດ້ວຍເງື່ອນໄຂ ດັ່ງນີ້:

ເງື່ອນໄຂຂໍ້ທີ 1 ເປັນອົງປະກອບດ້ານເຈົ້າກຳ, ເງື່ອນໄຂຂໍ້ 2 ແລະ 3 ເປັນອົງປະກອບດ້ານພາວະວິໄສ ແລະ ເງື່ອນໄຂຂໍ້ທີ 4 ເປັນອົງປະກອບດ້ານອັດຕະວິໄສຂອງການກະທຳຜິດ.

### 5.1 ບຸກຄົນທີ່ມີສິດກ່ຽວຂ້ອງ

ບຸກຄົນທີ່ມີສິດກ່ຽວຂ້ອງ ໝາຍເຖິງບຸກຄົນດັ່ງລຸ່ມນີ້:

- ຫົວໜ້າ ຫຼື ຮອງຫົວໜ້າອົງການສືບສວນ-ສອບສວນ ເຊັ່ນ: ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ທະຫານ, ເຈົ້າໜ້າທີ່ພາສີ-ອາກອນ, ເຈົ້າໜ້າທີ່ປ່າໄມ້ ແລະ ເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ.

- ຫົວໜ້າ ຫຼື ຮອງຫົວໜ້າອົງການໄອຍະການປະຊາຊົນແຕ່ລະຂັ້ນ.

- ປະທານ ຫຼື ຮອງປະທານສານ, ປະທານຄະນະສານຕັດສິນຂອງສານປະຊາຊົນແຕ່ລະຂັ້ນ.

- ຫົວໜ້າ ຫຼື ຮອງຫົວໜ້າກົມ, ກອງ ແລະ ຫ້ອງການປະຕິບັດຄຳຕັດສິນຂອງສານແຕ່ລະຂັ້ນ.

### 5.2 ການຕົກລົງ ຫຼື ອອກເອກະສານໃດໜຶ່ງ

ການຕົກລົງ ຫຼື ອອກເອກະສານໃດໜຶ່ງ ໝາຍເຖິງການອອກເອກະສານທີ່ເປັນລາຍລັກອັກສອນຂອງບຸກຄົນທີ່ມີສິດກ່ຽວຂ້ອງກັບການສືບສວນ-ສອບສວນ, ການສັ່ງຟ້ອງ, ອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

### 5.3 ການຕົກລົງບໍ່ສອດຄ່ອງກັບກົດໝາຍ

ການຕົກລົງບໍ່ສອດຄ່ອງກັບກົດໝາຍ ໝາຍເຖິງເນື້ອໃນຂອງເອກະສານທີ່ມີຢູ່ໃນຕົວມັນເອງບໍ່ສອດຄ່ອງກັບກົດໝາຍທີ່ກຳນົດໄວ້ (ນຳໃຊ້ກົດໝາຍບໍ່ຖືກຕ້ອງ) ຫຼື ບໍ່ສອດຄ່ອງກັບຂໍ້ເທັດຈິງທີ່ກ່ຽວຂ້ອງ (ບິດເບືອນຂໍ້ເທັດຈິງ).

ຕົວຢ່າງ 1: ສານຕັດສິນລົງໂທດຈຳເລີຍມີຄວາມຜິດໃນສະຖານຄາດຕະກຳໂດຍຍັງບໍ່ທັນໄດ້ພິສູດວ່າຈຳເລີຍມີເຈດຕະນາໃນການກະທຳຜິດ ແລະ ສອດຄ່ອງກັບເງື່ອນໄຂທີ່ກົດໝາຍກຳນົດໄວ້ ຫຼື ບໍ່, ແຕ່ສານຄິດວ່າບໍ່ຈຳເປັນຈະຕ້ອງພິສູດວ່າການກະທຳຂອງຈຳເລີຍມີເຈດຕະນາຄາດຕະກຳ (ຖືວ່າເປັນການນຳໃຊ້ກົດໝາຍບໍ່ຖືກຕ້ອງ).

ຕົວຢ່າງ 2: ສານຕັດສິນລົງໂທດຈຳເລີຍໃນສະຖານການເຮັດໃຫ້ຜູ້ອື່ນເສຍຊີວິດດ້ວຍຄວາມບໍ່ລະມັດລະວັງທັງທີ່ມີພະຍານຫຼັກຖານໃນສຳນວນຄະດີເຊັ່ນຫຼັກຖານທາງດ້ານວັດຖຸ, ຄຳໃຫ້ການຂອງພະຍານທີ່ກ່ຽວຂ້ອງ ຊຶ່ງຊີ້ບອກຢ່າງຊັດເຈນວ່າຈຳເລີຍມີເຈດຕະນາຄາດຕະກຳໃນເວລາກະທຳຜິດ. ແຕ່ສານກໍ່ຍັງຕັດສິນໃຫ້ເປັນການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ (ຖືວ່າເປັນການບິດເບືອນຂໍ້ເທັດຈິງ).

### 5.4 ຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ

ຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ ໝາຍເຖິງຜູ້ກະທຳຮັບຮູ້ຢູ່ກ່ອນໜ້າແລ້ວວ່າເນື້ອໃນຂອງເອກະສານທີ່ຈະອອກ ຫຼື ຕົກລົງນັ້ນບໍ່ສອດຄ່ອງກັບກົດໝາຍ ຫຼື ຂໍ້ເທັດຈິງທີ່ມີຢູ່ໃນເວລານັ້ນ ແຕ່ກໍ່ຍັງຕັ້ງໃຈ ຫຼື ຈົງໃຈທີ່ຈະອອກ ຫຼື ຕົກລົງທີ່ອອກເອກະສານດັ່ງກ່າວ.

ການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ ຖືວ່າສຳເລັດລົງນັບຕັ້ງແຕ່ໄດ້ອອກເອກະສານດັ່ງກ່າວ ເພາະໄດ້ກໍ່ຄວາມເສຍຫາຍຕໍ່ຄວາມຖືກຕ້ອງ ແລະ ຄວາມເປັນທຳໃນຂະບວນການຍຸຕິທຳ ແລະ ບໍລິຫານ.

## 6. ຄຳຕອບຂອງກໍລະນີສຶກສາ

### 6.1 ຄຳຕອບກໍລະນີສຶກສາທີ 1

ຈາກກໍລະນີສຶກສານີ້ເຫັນວ່າການທີ່ X ເປັນຫົວໜ້າກອງບັນຊາການ ປກສ ນັ້ນເທົ່າກັບວ່າ X ເປັນບຸກຄົນທີ່ມີສິດອຳນາດຕາມຂອບເຂດກົດໝາຍທີ່ກຳນົດໄວ້. ເມື່ອປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.1. ດັ່ງນັ້ນ, ຈຶ່ງຖືວ່າ X ເປັນບຸກຄົນທີ່ມີສິດກ່ຽວຂ້ອງ.

ການທີ່ X ໄດ້ພິຈາລະນາ ແລະ ຕົກລົງອອກຄຳສັ່ງຊັດມ້ຽນຄະດີອຸບປະຕິເຫດ ນັ້ນໝາຍຄວາມວ່າ X ໄດ້ ອອກເອກະສານທີ່ເປັນລາຍລັກອັກສອນທີ່ກ່ຽວຂ້ອງກັບການສືບສວນ-ສອບສວນຕາມມາດຕາ 148, ຂໍ້ 1 ຂອງກົດໝາຍວ່າດ້ວຍ

ການດຳເນີນຄະດີອາຍາສະບັບປັບປຸງປີ 2017 ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.2 ກ່ຽວກັບການຕົກລົງ ຫຼື ອອກເອກະສານໃດໜຶ່ງ.

ການທີ່ X ບໍ່ສະຫຼຸບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນໂດຍໃຫ້ເຫດຜົນວ່າ A ໄດ້ຊົດໃຊ້ຄ່າເສຍຫາຍໃຫ້ຄອບຄົວ B ແລ້ວຈຶ່ງໄດ້ອອກຄຳສັ່ງຊັດມ້ຽນຄະດີ ໝາຍຄວາມວ່າເປັນການນຳໃຊ້ກົດໝາຍບໍ່ຖືກຕ້ອງ ຊຶ່ງການຊົດໃຊ້ຄ່າເສຍຫາຍໃນຄະດີອຸບປະຕິເຫດທີ່ມີຄົນເສຍຊີວິດບໍ່ເປັນສາເຫດທີ່ພາໃຫ້ຄວາມຮັບຜິດຊອບທາງອາຍາຕົກໄປຕາມມາດຕາ 6 ຂໍ້ 5 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2017 ຈຶ່ງກົງກັບເນື້ອໃນເອກະສານທີ່ບໍ່ສອດຄ່ອງກັບກົດໝາຍ. ເມື່ອປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.3 ກ່ຽວກັບການຕົກລົງບໍ່ສອດຄ່ອງກັບກົດໝາຍ.

ການທີ່ X ໃຊ້ເຫດຜົນຂອງການຊົດໃຊ້ຄ່າເສຍຫາຍເພື່ອຊັດມ້ຽນຄະດີຕາມກົດໝາຍນັ້ນ ໝາຍຄວາມວ່າ X ໃນຖານະຜູ້ທີ່ເປັນເຈົ້າໜ້າທີ່ໆມີຄວາມຮູ້ທາງດ້ານກົດໝາຍຄວນຮັບຮູ້ຢ່າງຊັດເຈນວ່າການຊົດໃຊ້ຄ່າເສຍຫາຍໃນກໍລະນີດັ່ງກ່າວບໍ່ເປັນສາເຫດໃຫ້ຊັດມ້ຽນຄະດີ ຊຶ່ງຂັດກັບເນື້ອໃນຂອງມາດຕາ 6 ຂໍ້ 5 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2017, ແຕ່ X ກໍ່ຍັງຈົງໃຈຕົກລົງ ແລະ ອອກເອກະສານດັ່ງກ່າວ. ເມື່ອປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.4 ກ່ຽວກັບການຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ.

ເມື່ອປຽບທຽບການກະທຳຂອງ X ເຫັນວ່າຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ທີ 5 ຂ້າງເທິງ. ດັ່ງນັ້ນ, ຈຶ່ງເຫັນວ່າການກະທຳຂອງ X ຈຶ່ງຖືວ່າເປັນການກະທຳຜິດສະຖານການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍຕາມມາດຕາ 390 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 1 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.1 ເຫັນວ່າ X ເປັນບຸກຄົນທີ່ມີສິດອຳນາດຕາມຂອບເຂດກົດໝາຍທີ່ກຳນົດໄວ້. ດັ່ງນັ້ນ, ຈຶ່ງຖືວ່າ X ເປັນບຸກຄົນທີ່ມີສິດກ່ຽວຂ້ອງ.

ການທີ່ X ໄດ້ພິຈາລະນາ ແລະ ຕົກລົງອອກຄຳສັ່ງຊັດມ້ຽນຄະດີອຸບປະຕິເຫດ ນັ້ນໝາຍຄວາມວ່າ X ໄດ້ອອກເອກະສານທີ່ເປັນລາຍລັກອັກສອນທີ່ກ່ຽວຂ້ອງກັບການສືບສວນ-ສອບສວນ ຕາມມາດຕາ 148, ຂໍ້ 1 ຂອງ ກົດໝາຍວ່າດ້ວຍ

ການດຳເນີນຄະດີອາຍາສະບັບປັບປຸງປີ 2017 ຈຶ່ງກົງກັບເງື່ອນໄຂຂໍ້ທີ 5.2 ກ່ຽວກັບການຕົກລົງ ຫຼື ອອກເອກະສານໃດໜຶ່ງ.

ການທີ່ X ໄດ້ຕົກລົງອອກຄຳສັ່ງຊັດມ້ຽນຄະດີນັ້ນ ເນື່ອງຈາກວ່າອີງຕາມການສະຫລຸບໃນສຳນວນຄະດີວ່າ B ເປັນຜູ້ລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ແລະ ຜູ້ກ່ຽວກໍ່ໄດ້ເສຍຊີວິດເອງ ໝາຍຄວາມວ່າ X ໄດ້ພິຈາລະນາຕາມຂໍ້ເທັດຈິງ ແລະ ສາເຫດທີ່ກຳນົດໄວ້ໃນມາດຕາ 6 ຂໍ້ 8 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2017 ຊຶ່ງເນື້ອໃນຂອງຄຳສັ່ງຂອງການຊັດມ້ຽນຄະດີນັ້ນສອດຄ່ອງກັບສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ ຈຶ່ງຖືວ່າບໍ່ຂັດກັບກົດໝາຍຕາມທີ່ກຳນົດໄວ້ຕາມເງື່ອນໄຂຂໍ້ທີ 5.3 ກ່ຽວກັບການຕົກລົງທີ່ບໍ່ສອດຄ່ອງກັບກົດໝາຍ.

ເມື່ອພິຈາລະນາເນື້ອໃນຂອງຄຳສັ່ງທີ່ຕົກລົງອອກນັ້ນຖືວ່າສອດຄ່ອງກັບກົດໝາຍ. ດັ່ງນັ້ນ, ການກະທຳຂອງ X ຈຶ່ງຂາດເຈດຕະນາຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍຕາມເງື່ອນໄຂຂໍ້ 5.4.

ເມື່ອພິຈາລະນາປຽບທຽບກັບເງື່ອນໄຂທັງໝົດ, ເຫັນວ່າການກະທຳຂອງ X ຈຶ່ງບໍ່ຄົບຕາມເງື່ອນໄຂຂໍ້ທີ 5. ດັ່ງນັ້ນ, ຈຶ່ງເຫັນວ່າການກະທຳຂອງ X ບໍ່ຖືວ່າເປັນການກະທຳຜິດສະຖານການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ ຕາມມາດຕາ 390 ຂອງປະມວນກົດໝາຍອາຍາ.

**6.2 ຄຳຕອບກໍລະນີສຶກສາທີ 2**

ຈາກກໍລະນີສຶກສາດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.1 ເຫັນວ່າ X ເປັນບຸກຄົນທີ່ມີສິດອຳນາດຕາມຂອບເຂດກົດໝາຍທີ່ກຳນົດໄວ້. ດັ່ງນັ້ນ, ຈຶ່ງຖືວ່າ X ເປັນບຸກຄົນທີ່ມີສິດກ່ຽວຂ້ອງ.

ການທີ່ X ໄດ້ອອກຄຳສັ່ງຊັດມ້ຽນຄະດີ ນັ້ນໝາຍຄວາມວ່າ X ໄດ້ອອກເອກະສານທີ່ເປັນລາຍລັກອັກສອນ ຂອງບຸກຄົນທີ່ມີສິດກ່ຽວຂ້ອງໃນການອອກຄຳສັ່ງອີງຕາມທີ່ກຳນົດໄວ້ໃນມາດຕາ 148, ຂໍ້ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2017. ເມື່ອນຳມາປຽບທຽບເຫັນວ່າກົງກັບເງື່ອນໄຂຂໍ້ທີ 5.2 ກ່ຽວກັບການຕົກລົງ ຫຼື ອອກເອກະສານໃດໜຶ່ງ.

ການທີ່ X ໄດ້ອອກຄຳສັ່ງຊັດມ້ຽນຄະດີ ໂດຍໃຫ້ເຫດຜົນວ່າຖ້າຫາກສັ່ງຟ້ອງໄປແລ້ວ, ຈຳເລີຍຈະຖືກສານຕັດສິນວ່າມີຄວາມຜິດຈະສົ່ງຜົນກະທົບໃຫ້

ຄອບຄົວຂອງຈຳເລີຍ ເພາະຈຳເລີຍເປັນເສົາຫຼັກຂອງຄອບຄົວ ນີ້ສະແດງໃຫ້ເຫັນວ່າເປັນການນຳໃຊ້ກົດໝາຍບໍ່ຖືກຕ້ອງ ເພາະວ່າເຫດຜົນດັ່ງກ່າວນັ້ນບໍ່ເປັນສາເຫດພາໃຫ້ອອກຄຳສັ່ງຊັດມ້ຽນຄະດີໄດ້ຕາມເງື່ອນໄຂຂອງມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2017. ດັ່ງນັ້ນ, ການໃຫ້ເຫດຜົນທີ່ກ່າວມາເພື່ອບໍ່ສັ່ງຟ້ອງຄະດີ ຖືວ່າເປັນການນຳໃຊ້ກົດໝາຍທີ່ບໍ່ຖືກຕ້ອງ ແລະ ເຮັດໃຫ້ເນື້ອໃນຂອງຄຳສັ່ງນັ້ນບໍ່ສອດຄ່ອງກັບກົດໝາຍ. ເມື່ອນຳມາປຽບທຽບເຫັນວ່າກົງກັບເງື່ອນໄຂຂໍ້ທີ 5.3 ກ່ຽວກັບການຕົກລົງທີ່ບໍ່ສອດຄ່ອງກັບກົດໝາຍ.

ການທີ່ X ໃນຖານະເປັນຫົວໜ້າອົງການໄອຍະການ ທັງເປັນຜູ້ທີ່ມີຄວາມຮູ້ ແລະ ປະສົບການທາງກົດໝາຍຄວນຮັບຮູ້ຢ່າງຈະແຈ້ງວ່າເຫດຜົນທີ່ກ່າວມາບໍ່ໄດ້ເປັນສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປຕາມມາດຕາ 6 ທີ່ກົດໝາຍກຳນົດໄວ້. ຈຶ່ງຖືວ່າ X ຮັບຮູ້ມາກ່ອນໜ້າແລ້ວວ່າເນື້ອໃນຂອງເອກະສານທີ່ຈະອອກນັ້ນບໍ່ສອດຄ່ອງກັບກົດ ໝາຍ, ແຕ່ X ກໍຈິງໃຈຕົກລົງ ແລະ ອອກຄຳສັ່ງຊັດມ້ຽນຄະດີດັ່ງກ່າວ. ເມື່ອນຳມາປຽບທຽບຈຶ່ງກົງກັບເງື່ອນໄຂຂໍ້ 5.4 ກ່ຽວກັບການຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ.

ເມື່ອປ່ຽບທຽບການກະທຳຂອງ X, ເຫັນວ່າຄົບຕາມເງື່ອນໄຂທັງໝົດທີ່ກຳນົດໄວ້ໃນເງື່ອນໄຂຂໍ້ 5 ຂ້າງເທິງ. ດັ່ງນັ້ນ, ຈຶ່ງເຫັນວ່າການກະທຳຂອງ X ຖືວ່າເປັນການກະທຳຜິດສະຖານການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ ຕາມມາດຕາ 390 ຂອງປະມວນກົດໝາຍອາຍາ.

**ຄຳຕອບກໍລະນີສຶກສາທີ 2 ດັດແກ້**

ຈາກກໍລະນີສຶກສາດັດແກ້ນີ້ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.1 ເຫັນວ່າ X ເປັນບຸກຄົນທີ່ມີສິດອຳນາດຕາມຂອບເຂດກົດໝາຍທີ່ກຳນົດໄວ້. ດັ່ງນັ້ນ, ຈຶ່ງຖືວ່າ X ເປັນບຸກຄົນທີ່ມີສິດກ່ຽວຂ້ອງ.

ການທີ່ X ເປັນຫົວໜ້າອົງການໄອຍະການ ຊຶ່ງເປັນຜູ້ມີສິດອຳນາດພິຈາລະນາ ແລະ ສັ່ງຟ້ອງຄະດີ ຕາມມາດຕາ 148 ຂໍ້ 3 ຂອງກົດໝາຍການດຳເນີນຄະດີອາຍາສະບັບປັບປຸງປີ 2017. ເມື່ອປຽບທຽບແລ້ວເຫັນວ່າກົງກັບເງື່ອນໄຂຂໍ້ 5.2 ການຕົກລົງ ຫຼື ອອກເອກະສານໃດໜຶ່ງ.

ການທີ່ X ໄດ້ຮັບບົດສະຫຼຸບຄະດີຈາກຫົວໜ້າອົງການສືບສວນ-ສອບສວນ, ໂດຍຢືນຢັນວ່າມີຂໍ້ມູນຫຼັກຖານວ່າຜູ້ຖືກຫາໄດ້ກະທຳຜິດໃນສະຖານຄາດຕະ

ກຳ. ແຕ່ເມື່ອ X ກວດກາຂໍ້ມູນຫຼັກຖານ ແລະ ພິຈາລະນາລະອຽດຖີ່ຖ້ວນແລ້ວ ຈຶ່ງເຫັນວ່າບໍ່ມີຫຼັກຖານພຽງພໍທີ່ຈະພິສູດວ່າ A ມີເຈດຕະນາຄາດຕະກຳ ແຕ່ເປັນການທຳຮ້າຍຮ່າງກາຍທີ່ພາໃຫ້ເສຍຊີວິດ. ສະນັ້ນ, ເນື້ອໃນຄຳສັ່ງຟ້ອງດັ່ງກ່າວນັ້ນຈຶ່ງຖືວ່າເປັນການກຳນົດຂໍ້ຫາທີ່ສອດຄ່ອງກັບຂໍ້ເທັດຈິງໃນຄະດີ ຊຶ່ງພິຈາລະນາບົນພື້ນຖານຂະບວນການດຳເນີນຄະດີຕາມກົດໝາຍ ແລະ ເປັນສິດອຳນາດພິຈາລະນາຂອງ X ຕາມທີ່ກຳນົດໄວ້ໃນມາດຕາ 49 ຂໍ້ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2017. ເມື່ອນຳມາປຽບທຽບຈຶ່ງຖືວ່າບໍ່ຂັດກັບກົດໝາຍຕາມທີ່ກຳນົດໄວ້ໃນເງື່ອນໄຂຂໍ້ທີ 5.3 ກ່ຽວກັບການຕົກລົງທີ່ບໍ່ສອດຄ່ອງກັບກົດໝາຍ.

ການທີ່ X ຕົກລົງອອກຄຳສັ່ງຟ້ອງຄະດີດ້ວຍເຫດຜົນທີ່ກ່າວມານັ້ນ, ເຫັນວ່າ X ຮັບຮູ້ໄດ້ຢ່າງຈະແຈ້ງແລ້ວວ່າບໍ່ຂັດກັບກົດໝາຍ. ສະນັ້ນ, ເມື່ອນຳມາປຽບທຽບກັບເງື່ອນໄຂຂໍ້ 5.4 ຈຶ່ງເຫັນວ່າການກະທຳຂອງ X ຂາດເຈດຕະນາຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ.

ການກະທຳຂອງ X ເຫັນວ່າບໍ່ຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ທີ 5 ຂ້າງເທິງ. ດັ່ງນັ້ນ, ຈຶ່ງເຫັນວ່າການກະທຳຂອງ X ຈຶ່ງບໍ່ຖືວ່າເປັນການກະທຳຜິດສະຖານການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍຕາມມາດຕາ 390 ຂອງປະມວນກົດໝາຍອາຍາ.

## 7. ຂໍ້ສະເໜີ

ຈາກການສຶກສາຂອງກຸ່ມຄົ້ນຄວ້າປະມວນກົດໝາຍອາຍາຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳໄລຍະ II (JICA J-ROL II) ເຫັນວ່າການກະທຳຜິດໃນມາດຕາ 390 ກຳນົດໃຫ້ເປັນການກະ ທຳຜິດນັບແຕ່ມີການຕົກລົງອອກຄຳສັ່ງທີ່ບໍ່ຖືກຕ້ອງຊຶ່ງບໍ່ຈຳເປັນວ່າຕ້ອງມີຄວາມເສຍຫາຍເກີດຂຶ້ນເພາະວ່າວັດຖຸປະສົງຂອງມາດຕານີ້ຕ້ອງການປົກປ້ອງຄວາມຖືກຕ້ອງ ແລະ ຄວາມເປັນທຳບໍ່ໃຫ້ຖືກລະເມີດຈາກບຸກຄົນທີ່ມີສິດອຳນາດແຕ່ຖ້າຈະກຳນົດວ່າຕ້ອງໃຫ້ມີຄວາມເສຍຫາຍເກີດຂຶ້ນກ່ອນກໍຈະເຮັດໃຫ້ເປັນການຈຳກັດພຽງກໍລະນີທີ່ພິສູດຄວາມເສຍຫາຍທີ່ເກີດຂຶ້ນຢ່າງຊັດເຈນຊຶ່ງບໍ່ສອດຄ່ອງກັບວັດຖຸປະສົງຂອງມາດຕານີ້.

ນອກຈາກນັ້ນຄຳວ່າ "ບໍ່ສອດຄ່ອງກັບກົດໝາຍ" ອາດຈະຖືກຕີຄວາມໝາຍແຄບສະເພາະແຕ່ການລະເມີດລະບຽບກົດໝາຍທີ່ກຳນົດເທົ່ານັ້ນ ແຕ່ໃນຄວາມເປັນຈິງຜູ້ມີສິດອຳນາດອາດຈະອາໄສສິດອຳນາດຂອງຕົນເພື່ອບິດເບືອນຂໍ້ເທັດຈິງທີ່ເກີດຂຶ້ນອອກຈາກເອກະສານ ຊຶ່ງຖືເປັນພຶດຕິກຳທີ່ລະເມີດລະບຽບກົດໝາຍເຊັ່ນດຽວກັນ. ສະນັ້ນ, ທັງສອງຫຼັກການຄວນຖືເປັນຄວາມບໍ່ສອດກັບກົດໝາຍຕາມເງື່ອນໄຂຂອງມາດຕາ 390.

ປະການສຸດທ້າຍຄຳວ່າ 'ຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ" ນີ້ໝາຍເຖິງເຈດຕະນາໃນລັກສະນະໃດ ຫຼື ຕ້ອງຢູ່ໃນລະດັບໃດ ເພາະວ່າການຈະພິສູດວ່າຜູ້ກະທຳຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ ຫຼື ມີເຈດຕະນາກະທຳຜິດເປັນເລື່ອງຍາກຖ້າບໍ່ມີຫຼັກການອັນໃດເພື່ອນຳມາປະເມີນວ່າຜູ້ກະທຳຄວນຮູ້ ຫຼື ບໍ່ຮູ້ແທ້ ຊຶ່ງອາດຈະອີງໃສ່ຄວາມຮູ້ຄວາມສາມາດໂດຍໜ້າທີ່ຕຳແໜ່ງ, ວິຊາຊີບ ຊຶ່ງຜູ້ກະທຳຕ້ອງຮູ້ກົດໝາຍທີ່ຕົນນຳໃຊ້ເປັນຢ່າງດີ. ການກຳນົດຫຼັກການດັ່ງກ່າວຈະຊ່ວຍໃຫ້ຕີຄວາມ ແລະ ແຍກຄວາມແຕກຕ່າງລະຫວ່າງ "ກະທຳຜິດໂດຍເຈດຕະນາ" ແລະ "ຄວາມຜິດພາດໃນການຕີຄວາມກົດໝາຍໃນເວລາຕົກລົງອອກເອກະສານ" ຊຶ່ງບໍ່ຄວນຈະຖືເປັນຄວາມຜິດທາງອາຍາຕາມມາດຕານີ້.

ດ້ວຍເຫດນີ້, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງປະມວນກົດໝາຍອາຍາໃນອະນາຄົດໄດ້ພິຈາລະນາດັ່ງນີ້:

1). ຕັດຄຳສັບຄຳວ່າ "ທັງເປັນການກໍ່ຄວາມເສຍຫາຍ" ອອກຈາກມາດຕາ 390 ນີ້;

2). ຄົ້ນຄວ້າຄືນການຕີຄວາມໝາຍຄຳວ່າ "ບໍ່ສອດຄ່ອງກັບກົດໝາຍ" ໃຫ້ກວມເອົາລັກສະນະ ຫຼື ພຶດຕິກຳທີ່ເປັນການນຳໃຊ້ກົດໝາຍບໍ່ຖືກຕ້ອງ ແລະ ເປັນການບິດເບືອນຂໍ້ເທັດຈິງ;

3). ພິຈາລະນາການຕີຄວາມຄວາມໝາຍຄຳວ່າ "ຮັບຮູ້ຢ່າງຈະແຈ້ງວ່າບໍ່ສອດຄ່ອງກັບກົດໝາຍ" ນີ້ໝາຍເຖິງເຈດຕະນາໃນລັກສະນະໃດ ຫຼື ຕ້ອງຢູ່ໃນລະດັບໃດ.

## ແຜນວາດສະແດງເຖິງການກະທຳຜິດສະຖານການຕົກລົງທີ່ບໍ່ຖືກຕ້ອງຕາມກົດໝາຍ





# ຈັດພິມເພື່ອແຈກຢາຍ ຫ້າມ ຊື້-ຂາຍ

**ສະໜັບສະໜູນໂດຍ:**

**ໂຄງການສົ່ງເສີມການພັດທະນາ ແລະ ຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ (ໄລຍະ 2)**

**The Project for Promoting Development and Strengthening of the Rule of Law (Phase II)**

ພິມຄັ້ງທີ I: ຈຳນວນ 7,000 ຫົວ